ສຽງຈາກທົ່ງໄຫຫີນ

ຊີວິດພາຍໃຕ້ສົງຄາມທາງອາກາດ



ຈັດພິມໂດຍ:

ໂຄງການ Air War Legecy ແລະ ອົງການມິດຕະພາບເມັນໂນນາຍ

2010

ສຽງຈາກທົ່ງໄຫຫີນ

ຊີວິດພາຍໃຕ້ສົງຄາມທາງອາກາດ



ຈັດພິມເປັນພາສາລາວ ໂດຍ:

ໂຄງການ Air War Legecy ແລະ ອົງການມິດຕະພາບເມັນໂນນາຍ

2010

ຄະນະຈັດທຳ

ປຶ້ມ “ ສຽງຈາກທົ່ງໄຫຫີນ ”
ຊີວິດພາຍໃຕ້ສົງຄາມທາງອາກາດ

ຮຽບຮຽງ ໂດຍ:
ເຟຼດ ແມນແມນ

ຈັດພິມເປັນພາສາອັງກິດ ໂດຍ:
ຣາບເປີ ແອນ ໂຣ

ແປເປັນພາສາລາວ ໂດຍ:
ສີລິ ສຸວັນນະສີ

ພິສູດອັກສອນ ໂດຍ:
ສົນສະຫວັນ ເຄື່ອງເທພາລິດ
ຂີວໄຊ ແສງສຸກ

ອອກແບບ-ຈັດໜ້າ ໂດຍ:
ທອງເດືອນ ທຳມະວົງ

ພິມເປັນພາສາລາວຄັ້ງທີ I
ພິມທີ່ໂຮງພິມປານຄຳຈຳປາ
ຈຳນວນພິມ: 2.000 ຫົວ
ຂະໜາດພິມ: 15 x 21 ຊມ
ທະບຽນພິມ: 088 ພຈ 25052010
ISBN : 987-9932-01-067-7

ຄຳນຳ ໂດຍທ່ານ ທຽມ ພິມມະຈັນ

"ທົ່ງໄຫຫີນ" ... ຮູ້ຈັກກັນທົ່ວໄປວ່າ ເປັນເຂດທີ່ມີອະລິຍາທຳ ເກົ່າ ແກ່ ເພາະເປັນບ່ອນທີ່ຄົ້ນພົບໄຫຫີນທີ່ມີອາຍຸກວ່າ 2000 ປີ. ທົ່ງໄຫຫີນ ຕັ້ງຢູ່ເຂດສູງ ແລະ ເປັນທາງຜ່ານຈາກພາກເໜືອສູ່ພາກໃຕ້. ທົ່ງໄຫຫີນ ຈຶ່ງກາຍເປັນຈຸດຍຸດທະສາດທີ່ສຳຄັນທາງດ້ານການທະຫານ.

ສະຫະລັດ ອາເມລິກາ ໄດ້ກໍ່ສົງຄາມ "ຫວຽດນາມ" ຊຶ່ງຕາມ ຄວາມຈິງແລ້ວ ກໍແມ່ນສົງຄາມຮຸກຮານຕໍ່ທັງສາມປະເທດໃນອິນດູຈີນ ເພື່ອ ສະກັດກັ້ນການແຜ່ຂະຫຍາຍຂອງ ລັດທິກອມມູຍນິດ ລົງສູ່ອາຊີອາຄະເນ ໂດຍຕ້ອງດັບມອດ ຫວຽດນາມເໜືອ ຊຶ່ງເວລານັ້ນມີຊື່ວ່າ: "ສາທາລະ ນະລັດ ປະຊາທິປະໄຕ ຫວຽດນາມ" ແລະ "ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ" ໃນປະຈຸບັນ. ນັບແຕ່ກາງທົດສະວັດ 60, ອາເມລິກາ ໄດ້ ນຳໃຊ້ຄວາມເຂັ້ມແຂງດ້ານການທະຫານທາງອາກາດ ໂດຍຖິ້ມລະເບີດ ໃສ່ເມືອງຫລວງ ຮ່າໂນ້ຍ, ສູນບັນຊາການທາງການເມືອງ ແລະ ການ ທະຫານຂອງຫວຽດນາມ, ແຕຫວຽດນາມບໍ່ໄດ້ຍອມຈຳນົນ, ກົງກັນຂ້າມ ຍັງໄດ້ຂະຫຍາຍລົງສູ່ພາກໃຕ້.

ອາເມລິກາ ໄດ້ປົດບັງປະຊາຊົນອາເມລິກາ ແລະ ປະຊາຄົມໂລກ ໃນການກໍ່ສົງຄາມຢູ່ລາວ ຈຶ່ງເປັນທີ່ຮູ້ກັນວ່າ ເປັນ "ສົງຄາມປົດລັບ" (Secret War), ອາເມລິກາ ໄດ້ຖິ້ມລະເບີດທຳລາຍຮ້າຍກາດໃສ່ເຂດ ປົດປ່ອຍຂອງກຳລັງປະຕິວັດທີ່ພາກເໜືອຂອງລາວ. ທົ່ງໄຫຫີນ ກໍແມ່ນ ສ່ວນໜຶ່ງຂອງເຂດປົດປ່ອຍ,ຈຶ່ງເປັນເຂດຍຸດທະສາດສຳຄັນສຳລັບ ອາເມ ລິກາ ເພື່ອດັບມອບກຳລັງປະຕິວັດລາວ. ສົງຄາມອາກາດ (Air War) ຂອງອາເມລິກາ ຈຶ່ງໄດ້ເລີ່ມຕົ້ນໃນທ້ອງຟ້າຢູ່ພາກເໜືອຂອງລາວ ແລະ ເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ ຈົນເຮັດໃຫ້ຈຳນວນລະເບີດທີ່ຖິ້ມໃສ່ລາວສູງ ທີ່ສຸດໃນໂລກ ເມື່ອແບ່ງໃສ່ຫົວຄົນຄື ສາມລ້ານໂຕນ, ໝາຍຄວາມວ່າ

ປະຊາຊົນລາວ ເວລານັ້ນມີ 3 ລ້ານຄົນ ໄດ້ຮັບລະເບີດຜູ້ລະໜຶ່ງໂຕນ.

ການປະຕິບັດທິດສະດີ "ສາມກ້ຽງ" ຂອງປະທານາທິບໍດີ ນິກສັນ ຄື ຂ້າກ້ຽງ, ທຳລາຍກ້ຽງ ແລະ ຈູດກ້ຽງ, ໄດ້ເຮັດໃຫ້ທົ່ງໄຫຫີນຖືກ ທຳລາຍກ້ຽງຈົນບໍ່ເຫລືອເຮືອນພໍຫລັງ ລວມທັງວັດວາອາຮາມ ກໍຖືກລະ ເບີດທາງອາກາດທຳລາຍໝົດ. ກຳລັງຝ່າຍອຽງຈັນຮ່ວມກັບກຳລັງພິ ເສດຂອງວັງປາວ ແລະ ທະຫານຮັບຈ້າງຂອງໄທ ໄດ້ບຸກໂຈມຕີເຂດ ທົ່ງໄຫຫີນດ້ວຍຫລາຍບັ້ນຮົບ ໃນນັ້ນ ກໍມີ "ບັ້ນຮົບກູ້ກຽດ" ເພື່ອຢຶດ ຄອງເຂດທົ່ງໄຫຫີນ, ແຕ່ກໍປະລາໄຊ. ຫລັງຈາກນັ້ນ, ຈຶ່ງປະຕິບັດທິດສະດີ "ເອົານ້ຳອອກຈາກປາ" ຂອງປະທານາທິບໍດີ ນິກສັນ ຄື ເອົາປະຊາຊົນ ອອກຈາກກຳລັງກອງທັບປະຕິວັດ, ປະຊາຊົນເຂດທົ່ງໄຫຫີນ ໄດ້ຖືກບັງ ຄັບໃຫ້ຂຶ້ນຍົນອາເມລິກາໄປອຽງຈັນ ແບບບໍ່ມີການເລືອກເຟັ້ນ, ແຍກຜົວ ແຍກເມຍ, ແຍກລູກ ແຍກພໍ່-ແມ່ ແລ້ວເອົາເຕົ້າໂຮມໄວ້ບ້ານອົບພະຍົບ ຕ່າງໆ ໃນເຂດອຽງຈັນ.

"ສຽງຈາກທົ່ງໄຫຫີນ" ແມ່ນປະຊາຊົນ ລວມທັງນັກຮຽນທີ່ຖືກບັງ ຄັບມາອຽງຈັນ ໃນຊຸມປີທ້າຍທິດສະວັດ 60 ເປັນຜູ້ແຕ້ມຮູບ ແລະ ອະທິບາຍຕາມທີ່ພວກເຂົາເຈົ້າໄດ້ເຫັນຕົວຈິງ, ທັງໝົດແມ່ນສະແດງໃຫ້ ເຫັນຄວາມໂຫດຫ້ຽມຂອງ "ສົງຄາມອາກາດ" ຂອງສະຫະລັດ ອາເມ ລິກາ ຕໍ່ປະຊາຊົນລາວ ເວົ້າລວມ ແລະ ຕໍ່ປະຊາຊົນທົ່ງໄຫຫີນ ເວົ້າ ສະເພາະ.

ໃນປີ 1971, ຂ້າພະເຈົ້າ ຍັງເປັນນັກສຶກສາຢູ່ ເມືອງມົງເຣອານ, ປະເທດ ການາດາ. ໃນການເຂົ້າຮ່ວມການຊຸມນຸມຫລາຍໆ ຄັ້ງຂອງນັກ ເຄື່ອນໄຫວຕ້ານສົງຄາມທີ່ການາດາ, ຂ້າພະເຈົ້າ ໄດ້ມີໂອກາດພົບ ທ່ານ Fred Branfman, ທ່ານ Fred ໄດ້ເອົາຮູບແຕ້ມຂອງປະຊາຊົນ ທີ່ ຖືກບັງຄັບໃຫ້ອົບພະຍົບຈາກ ທົ່ງໄຫຫີນ ເປັນຫລາຍໆ ສິບໃບມາໃຫ້ ຂ້າພະເຈົ້າເບິ່ງ ແລະ ສະເໜີໃຫ້ຂ້າພະເຈົ້າຊ່ວຍໃນການແປຈາກພາສາ ລາວເປັນພາສາອັງກິດ ເພື່ອເອົາລົງພິມໃນວາລະສານຕ້ານສົງຄາມຮຸກ ຮານຂອງອາເມລິກາຕໍ່ສາມປະເທດໃນອິນດູຈີນ. ຂ້າພະເຈົ້າໄດ້ຍາດເອົາ

ເວລາພັກຮຽນປະຈຳປີ ເພື່ອຊ່ວຍ ທ່ານ Fred ຢູ່ເມືອງຫລວງ ວໍຊິງຕັນ.

ຮູບພາບ ແລະ ບົດອະທິບາຍ ທີ່ເຜີຍແຜ່ເວລານັ້ນ ໄດ້ເຮັດໃຫ້ ປະຊາຊົນ ກໍຄືຜູ້ແທນ ອາເມລິກາ ຮູ້ຄວາມເປັນຈິງ ແລະ ຄວາມໂຫດ ຮ້າຍຂອງ ລັດຖະບານ ອາເມລິກາ ທີ່ກະທຳຕໍ່ປະຊາຊົນລາວ. ການແປ ຄຳອະທິບາຍຂອງຮູບແຕ້ມເຫລົ່ານັ້ນ ໄດ້ເຮັດໃຫ້ຂ້າພະເຈົ້າ ຮູ້ສຶກຄຽດແຄ້ນ ແທນປະຊາຊົນລາວຜູ້ບໍ່ມີຄວາມຜິດຫຍັງ ແລະ ຜູ້ບໍ່ເຄີຍໄດ້ກໍ່ຄວາມບໍ່ ສະຫງົບຕໍ່ ສະຫະລັດ ອາເມລິກາ ແຕ່ຢ່າງໃດ, ແຕ່ພັດໄດ້ຮັບເຄາະຮ້າຍ ຢ່າງບໍ່ມີມະນຸດສະທຳ. ແນວຄິດຮັກຊາດຂອງໄວໜຸ່ມຂອງຂ້າພະເຈົ້າ ໄດ້ເພີ່ມຄວາມແຮງຂຶ້ນຕື່ມຢ່າງເດັ່ນຊັດ.

ມາຮອດປະຈຸບັນນີ້, ເວລາໄດ້ຜ່ານໄປແລ້ວກວ່າ 40 ປີ, ຂຸມ ລະເບີດຂະໜາດຕ່າງໆ ແບບຮູບໜັ່ງເສືອດາວໃນເຂດທົ່ງໄຫຫີນເກືອບ ບໍ່ເຫລືອຮ່ອງຮອຍແລ້ວ, ເຮືອນຊານບ້ານຊ່ອງ ໄດ້ມີການປຸກສ້າງຂຶ້ນ ໃໝ່ທົດແທນຮູບພາບທີ່ເຕັມໄປດ້ວຍການມ້າງເພ ແລະ ເຜົາຜານ ດ້ວຍ ລະເບີດຂອງອາເມລິກາ ໃນເມື່ອກ່ອນ, ຍັງເຫລືອແຕ່ລະເບີດທີ່ບໍ່ທັນ ແຕກຖືກດິນຖົມໄວ້ທີ່ສືບຕໍ່ທຳລາຍຊີວິດປະຊາຊົນລາວ ແລະ ຕ້ອງໃຊ້ ເວ ລາອີກຫລາຍສິບປີ ຈຶ່ງຈະເກັບກູ້ໝົດ.

ການຮີບໂຮມເອົາຮູບແຕ້ມ ແລະ ຄຳອະທິບາຍຕ່າງໆເຫລົ່ານັ້ນ ມາພິມເປັນປຶ້ມຫໍ່ນີ້ ເຫັນວ່າ ມີຄວາມສຳຄັນ ເພື່ອໃຫ້ຄົນຮຸ່ນຫລັງຮູ້ ຄວາມໂຫດຮ້າຍຂອງສົງຄາມ, ຮູ້ຄວາມຂາດມະນຸດສະທຳຂອງພວກກະ ທາຍສົງຄາມ ທີ່ມີຕໍ່ປະຊາຊົນລາວ.

ມີແຕ່ໂລກທີ່ມີສັນຕິພາບອັນໝັ້ນຄົງ ແລະ ປະຊາຊາດເປັນມິດກັນ ເທົ່ານັ້ນ, ຈຶ່ງຈະມີການພັດທະນາທີ່ຍືນຍົງ ແລະ ຊີວິດການເປັນຢູ່ຂອງ ມວນມະນຸດ ຈຶ່ງຈະວັດທະນາຖາວອນ.

ນະຄອນຫລວງວຽງຈັນ, ມັງກອນ 2010

ຄຳນຳ ຂອງ ທ່ານ ເຟຼດ ແບຼນຟແມນ

ຂ້າພະເຈົ້າໄດ້ຈາກສະຫະລັດອາເມລິກາມາປະເທດລາວ ໃນ ເດືອນ ມີນາ ປີ 1967 ແລະ ໄດ້ເຮັດວຽກເປັນທີ່ປຶກສາດ້ານການສຶກສາ ຂອງອົງການອາສາສະໝັກສາກົນ. ຂ້າພະເຈົ້າອາໄສຢູ່ນຳຄອບຄົວຂອງ ພໍ່ຕູ້ດວງ ເຊິ່ງເປັນປະຊາຊົນບ້ານສະພັງເມິກ. ພໍ່ຕູ້ດວງເປັນຄົນທີ່ສະ ຫຼາດ, ໃຈດີ, ມີຄວາມສຸກ, ອ່ອນໂຍນ ແລະ ຂ້າພະເຈົ້າຮັກເພິ່ນຄືກັບພໍ່ ແທ້ໆ ຂອງຕົນ.

ຢູ່ມາມື້ໜຶ່ງ ໃນເດືອນ ກັນຍາ ປີ 1969 ເຊິ່ງເປັນວັນທີເຮັດໃຫ້ ຊີວິດຂອງຂ້ອຍປ່ຽນແປງຕະຫຼອດມາ. ມີນັກຂ່າວຄົນໜຶ່ງເວົ້າວ່າ ມີປະ ຊາຊົນຢູ່ເຂດທົ່ງໄຫຫີນ ອົບພະຍົບມາຢູ່ເຂດພະທາດຫຼວງ ແລະ ລາວຂໍ ໃຫ້ຂ້ອຍຊ່ວຍແປພາສາໃຫ້ລາວ. ມື້ນັ້ນ ພວກເຮົາໄດ້ສຳພາດປະຊາຊົນ ຈຳນວນຫຼວງຫຼາຍ, ເຂົາເຈົ້າເລົ່າໃຫ້ຟັງວ່າ ບ້ານເຮືອນຂອງເຂົາເຈົ້າຖືກ ຍິນມາຖິ້ມລະເບີດທຳລາຍ ເຊິ່ງເຮັດໃຫ້ປະຊາຊົນຈຳນວນບໍ່ໜ້ອຍ ເສຍ ຊີວິດ ແລະ ໄດ້ຮັບບາດເຈັບ. ຕອນນັ້ນ ຂ້ອຍຮູ້ສຶກຕົກໃຈຫຼາຍ ທີ່ໄດ້ ເຫັນປະຊາຊົນ ຊາວໄຮ່ ຊາວນາທຳມະດາ ທີ່ບໍ່ໄດ້ມີຄວາມຜິດຫຍັງ ແລະ ກໍບໍ່ຮູ້ຊ້ຳວ່າ ປະເທດອາເມລິກາຢູ່ໃສ ມາເລົ່າເຫດການທີ່ລັດຖະບານ ອາເມລິກາມາຖິ້ມລະເບີດທຳລາຍເຮືອນຊານບ້ານຊ່ອງຂອງເຂົາເຈົ້າເປັນ ເວລາຍາວນານເຖິງ 5 ປີ ເຊິ່ງຂ້າພະເຈົ້າບໍ່ຢາກເຊື່ອເລີຍ. ນັບຈາກນັ້ນ ມາ ຂ້າພະເຈົ້າກໍໄດ້ຕັດສິນໃຈອຸທິດຕົນ ເພື່ອປະກອບສ່ວນເຮັດໃຫ້ສິ່ງ ຕ່າງໆ ກັບຄືນສູ່ສະພາບປົກກະຕິ.

ຂ້າພະເຈົ້າ ໄດ້ພາຜູ້ສື່ຂ່າວ ໄປຍັງຄ້າຍອົບພະຍົບ ເພື່ອໃຫ້ຜູ້ກ່ຽວ ນຳເອົາເລື່ອງການຖິ້ມລະເບີດທຳລາຍຂອງອາເມລິກາໄປຂຽນ ຫຼື ອອກ ຂ່າວ. ຂ້າພະເຈົ້າເອງກໍ່ໄດ້ສົ່ງຮູບຂອງຊາວອົບພະຍົບ ພ້ອມທັງເລື່ອງ ລາວຂອງເຂົາເຈົ້າໄປໃຫ້ຜູ້ນຳຂັ້ນສູງຂອງສະຫະລັດ ເພື່ອຂັດຄ້ານການ

ເຮັດສົງຄາມ. ຂ້າພະເຈົ້າໄດ້ສຳພາດທະຫານອາກາດຂອງອາເມລິກາ ທີ່ປະຈຳຢູ່ປະເທດໄທ ແລະ ໄດ້ຂຽນບົດຄວາມທຳອິດ ທີ່ໄດ້ເປີດເຜີຍລາຍ ລະອຽດໃນການຖິ້ມລະເບີດຂອງອາເມລິກາ ໃນລາວອອກໜ້າສື່ພິມ.

ຈາກການສຳພາດຊາວອີບພະຍົບ, ຂ້າພະເຈົ້າໄດ້ຮູ້ວ່າ ຜູ້ທີ່ເສຍ ຊີວິດ ສ່ວນໃຫຍ່ແມ່ນແມ່ຍິງ, ເດັກນ້ອຍ ແລະ ຜູ້ເຖົ້າ ເພາະເປັນພົນ ລະເຮືອນທຳມະດາ ທີ່ຕ້ອງອາໄສຢູ່ໃກ້ເຮືອນ ເພື່ອທີ່ຈະເອົາຕົວລອດ, ສ່ວນທະຫານແມ່ນພາກັນເຄື່ອນໄຫວຢູ່ຕາມປ່າ ເຊິ່ງຝ່າຍກົງກັນຂ້າມບໍ່ ສາມາດເຫັນໄດ້. ຕະຫຼອດເວລາ 5 ປີ, ຂ້າພະເຈົ້າເຫັນວ່າ ຜູ້ນຳ ອາເມລິກາ ໄດ້ເຜົາຜານເດັກນ້ອຍທັງເປັນ ດ້ວຍລະເບີດນາປານ, ທຳ ລາຍຊີວິດຜູ້ເຖົ້າຜູ້ແກ່ດ້ວຍລູກບົມ ແລະ ຝັງໝົດຄອບຄົວທັງເປັນ ດ້ວຍ ລູກບົມທີ່ມີນ້ຳໜັກກວ່າ 200 ກິໂລ, ເຊິ່ງເປັນການລະເມີດກົດໝາຍສາ ກົນ.

ໃນຊ່ວງນັ້ນ ຂ້າພະເຈົ້າໄດ້ເປັນໝູ່ກັບຊາຍຄົນໜຶ່ງທີ່ຊື່ວ່າ ທ້າວ ບົວເງິນ ຫຼວງປະເສີດ ຫຼື ເອີ້ນຊື່ຫຼິ້ນວ່າ ທ້າວ ເງິນ. ພວກເຮົາໄດ້ໃຫ້ ຊາວອີບພະຍົບ ຂຽນເລື່ອງກ່ຽວກັບຊີວິດຂອງເຂົາເຈົ້າ ພາຍໃຕ້ຫ່າລະ ເບີດວ່າມັນເປັນແນວໃດ ແລະ ໃຫ້ ເງິນ ເປັນຜູ້ຮວບຮວມເອົາເລື່ອງ ແລະ ຮູບແຕ້ມຈາກເຂົາເຈົ້າ ເພາະວ່າ ເຂົາເຈົ້າຮູ້ ແລະ ໄວ້ໃຈລາວ. ເງິນ ມີຄວາມກ້າຫານຫຼາຍ ເພາະວ່າ ຕຳຫຼວດທີ່ຍາມຢູ່ປ້ອມຈະກວດລາວຕະ ຫຼອດ ໃນເວລາທີ່ລາວກັບມາຈາກຄ້າຍອີບພະຍົບ, ແຕ່ລາວຈະເຊື່ອງ ບົດເລື່ອງ ແລະ ຮູບແຕ້ມ ໄວ້ໃນເສື້ອຂອງລາວ.

ໃນເດືອນກຸມພາ ປີ 1971 ຫຼັງຈາກທີ່ຂ້າພະເຈົ້າຖືກທະຫານ ທີ່ເປັນນັກສືບສອດແນມຂອງອາເມລິກາຈັບ ແລະ ຂັບໄລ່ອອກຈາກ ປະເທດລາວ, ຂ້າພະເຈົ້າໄດ້ກັບຄືນໄປເມືອງຫຼວງວໍຊິງຕັນ ແລະ ໄດ້ ເອົາເລື່ອງ ພ້ອມດ້ວຍຮູບແຕ້ມທີ່ໄດ້ມານັ້ນໄປນຳ ແລະ ສ້າງຕັ້ງອົງການ ຈັດຕັ້ງໜຶ່ງທີ່ມີຊື່ວ່າ " ໂຄງການຕ້ານສົງຄາມອາກາດ" ເພື່ອເຄື່ອນໄຫວ ໃຫ້ມີການຢຸດເຊົາການຖິ້ມລະເບີດ. ທຸກບ່ອນທີ່ຂ້າພະເຈົ້າໄປ, ຂ້າພະ ເຈົ້າໄດ້ເອົາຮູບນັ້ນໃຫ້ຄົນເບິ່ງ ແລະ ອ່ານເລື່ອງໃຫ້ເຂົາເຈົ້າຟັງ. ຂ້າງ

ລຸ່ມນີ້ ແມ່ນເລື່ອງທີ່ຂ້ອຍເຄີຍໄດ້ອ່ານ:

"ຍົນມາຖິ້ມລະເບີດໃສ່ພວກເຮົາທຸກມື້ ທັງເວັນ ແລະ ຄືນ. ພວກເຮົາອາໄສຢູ່ໃນຂຸມພື້ນດິນ ເພື່ອປ້ອງກັນຊີວິດ. ມີລະເບີດຫຼາຍຊະນິດ. ຂ້ອຍເຫັນພີ່ນ້ອງຖືກຍິງຕາຍຢູ່ທົ່ງນາ. ຂ້ອຍຕົກໃຈຫຼາຍ ແລະ ຮ້ອງຂຶ້ນ ພ້ອມທັງຟ້າວແລ່ນໄປໃນເຮືອນ. ຂ້ອຍເຫັນຫຼາຍຄົນເສຍຊີວິດຍ້ອນຍົນຍິງ. ພວກເຂົາຍິງກວາດລ້າງຈົນບໍ່ມີເຮືອນຊານຫຼົງເຫຼືອຢູ່, ງົວຄວາຍຕາຍໝົດ ທຸກຢ່າງຖືກທຳລາຍຢ່າງຮາບກ້ຽງ ເຫັນແຕ່ພື້ນດິນທີ່ເປັນສີແດງ. ເວົ້າມາຮອດເລື່ອງນີ້ແລ້ວ ຂ້ອຍຍັງຢ້ານຢູ່."

ໃນຊ່ວງພັກພາກຮຽນ ໃນປີ 1971, ຂ້າພະເຈົ້າໄດ້ຂໍໃຫ້ນັກສຶກສາລາວຄົນໜຶ່ງ ທີ່ກຳລັງສຶກສາຢູ່ເມືອງມິງເຫຼອານ ມາເມືອງຫຼວງວໍຊິງຕັນ ເພື່ອຊ່ວຍແປບົດເລື່ອງທັງໝົດທີ່ຂ້າພະເຈົ້າເອົາໄປນຳ ແລ້ວຮຽບຮຽງໃຫ້ເປັນປຶ້ມ ເຊິ່ງເພິ່ນຜູ້ນັ້ນຄື ທ່ານ ທຽມ ພິມມະຈັນ. ເພິ່ນເປັນຄົນທີ່ເປັນຫ່ວງເປັນໃຍນຳປະຊາຊົນລາວຫຼາຍ ແລະ ຂ້າພະເຈົ້າກໍ່ດີໃຈທີ່ໄດ້ເຮັດວຽກຮ່ວມກັບເພິ່ນ.

ໃນປີ 1972, ປຶ້ມ " ສຽງຈາກທົ່ງໄຫຫີນ " ໄດ້ຖືກພິມຈຳໜ່າຍໃນປະເທດອາເມລິກາ ເຊິ່ງໄດ້ຮັບຄວາມສົນໃຈ ຈາກໜັງສືພິມ, ວາລະສານ ແລະ ລາຍການສົນທະນາທາງໂທລະພາບ ຢ່າງຫຼວງຫຼາຍ ເພາະມັນເປັນປຶ້ມກ່ຽວກັບການເຮັດສົງຄາມຂອງອາເມລິກາ ຫົວທຳອິດ ທີ່ເນື້ອໃນແມ່ນຂຽນໂດຍຊາວນາ ແລະ ເປັນປຶ້ມຫົວດຽວທີ່ບອກໃຫ້ຮູ້ເຖິງຊີວິດພາຍໃຕ້ຫ່າລະເບີດວ່າເປັນແນວໃດ.

ເປັນຫຍັງພວກເຮົາຈຶ່ງອ່ານປຶ້ມຫົວນີ້ ໃນເມື່ອສົງຄາມໄດ້ສິ້ນສຸດໄປແລ້ວ 35 ກວ່າປີ? ກ່ອນອື່ນໝົດແມ່ນຍ້ອນວ່າ ການຮັບຮູ້ເຖິງຄວາມທຸກຍາກທໍລະມານຂອງປະຊາຊົນເຫຼົ່ານີ້ ສາມາດເປັນສິ່ງບັນດານໃຫ້ພວກເຮົາທຸກຄົນຕ້ອງສ້າງສັງຄົມປະຈຸບັນໃຫ້ມີຄວາມຍຸຕິທຳ.

ປະການທີສອງ, ຈາກການອ່ານບົດຄວາມເຫຼົ່ານີ້ ເຮັດໃຫ້ພວກເຮົາລະນຶກເຖິງຄວາມເຂັ້ມແຂງ, ຄວາມສວຍງາມ ແລະ ຄວາມເມດຕາກະລຸນາຂອງຄົນສາມັນທຳມະດາ. ປະຊາຊົນ ຊາວໄຮ່ນາເຫຼົ່ານີ້ ກໍ່ເໝືອນ

ກັນກັບຢູ່ບ່ອນອື່ນໆ ທີ່ມີຄວາມຄິດ, ອາລົມຈິດ, ຄວາມຮູ້ສຶກເປັນຫ່ວງ ນຳຜືນແຜ່ນດິນ ແລະ ຄອບຄົວຂອງເຂົາເຈົ້າ ແລະ ກໍ່ແມ່ນອນວ່າ ບໍ່ຄວນ ຖືກຂ້າຕາຍຍ້ອນສົງຄາມ. ຄວາມຈິງແລ້ວ ເຂົາເຈົ້າຍັງເປັນຕົວແທນຂອງ ຄວາມເປັນມະນຸດທີ່ດີອີກຊ້ຳ.

ປະການທີສາມ, ສຽງຈາກປະຊາຊົນເຫຼົ່ານີ້ ຊ່ວຍໃຫ້ພວກເຮົາ ລະນຶກເຖິງ ຄວາມຈຳເປັນທີ່ຈະສືບຕໍ່ດຳເນີນການເກັບກູ້ລະເບີດ ທີ່ຍັງ ຕົກຄ້າງຢູ່ຜືນແຜ່ນດິນລາວ.

ສຸດທ້າຍ, ມັນມີຄວາມສຳຄັນທີ່ຈະຈົດຈຳປະຊາຊົນທີ່ມີຄວາມ ເມດຕາ ແລະ ອ່ອນໂຍນເຫຼົ່ານີ້. ຫາກພວກເຮົາໄດ້ຟັງຈາກສຽງເຫຼົ່ານີ້ ກ່ອນນີ້, ປະຊາຊົນທົ່ງໄຫຫີນໃນເວລານັ້ນ ກໍ່ຈະບໍ່ລົ້ມຕາຍແບບໄຮ້ສາ ລະເຊັ່ນນີ້. ເຂົາເຈົ້າກໍ່ຈະດຳລົງຊີວິດເໝືອນກັນກັບພວກເຮົາ. ຂ້າພະ ເຈົ້າ ຢາກມ້ວນທ້າຍດ້ວຍຄຳເວົ້າຂອງແມ່ຍິງໄວ 30 ປີ ຈາກທົ່ງໄຫຫີນ, ລາວເປັນຄົນທີ່ໄດ້ຮັບຄວາມທຸກທໍລະມານຢ່າງຫຼວງຫຼາຍ ແຕ່ລາວກໍ່ຍັງ ນັບວ່າໂຊກດີ ທີ່ຍັງເອົາຊີວິດລອດ.

“ໃນເວລານັ້ນ, ຊີວິດຂອງພວກເຮົາເປັນເໝືອນສັດ ທີ່ພະຍາຍາມ ເອົາຊີວິດລອດ ຈາກນັກລ່າ. ເປັນຫຍັງຄົນເຮົາຈຶ່ງບໍ່ຮັກກັນ? ເປັນຫຍັງ ພວກເຮົາຈຶ່ງບໍ່ດຳລົງຊີວິດນຳກັນຢ່າງເທົ່າທຽມ? ເປັນຫຍັງພວກເຮົາ ຈຶ່ງບໍ່ພ້ອມກັນສ້າງຄວາມສຸກ ແລະ ກ້າວໜ້ານຳກັນ?

“ການຂ້າກັນເຊັ່ນນີ້ ມະນຸດທີ່ພໍ່ແມ່ໃຫ້ກຳເນີດ ແລະ ລ້ຽງດູ ຢ່າງ ເອົາໃຈໃສ່ ດ້ວຍຄວາມຮັກ ເຖິງແມ່ນຈະມີຄວາມຫຍຸ້ງຍາກຫຼາຍປານໃດ ກໍ່ຕາມ ຕ້ອງມາຕາຍຍ້ອນລະເບີດພຽງລູກດຽວ ນອນຕາຍຢ່າງບໍ່ມີວັນ ຈະຟື້ນຄືນ.”

“ແລະ ມີໃຜທີ່ຄິດເຖິງຢາດເລືອດ, ເນື້ອໜັງ, ເຫື່ອແຮງຂອງພໍ່ ແມ່ເຂົາເຈົ້າ ແລະ ໃຜເດຈະມີຄວາມເມດຕາ ແລະ ສົງສານເຂົາເຈົ້າ? ຄວາມເປັນຈິງແລ້ວ ບໍ່ວ່າສິ່ງໃດຈະເກີດຂຶ້ນ, ຜູ້ທີ່ໄດ້ຮັບຄວາມທຸກຍາກ ລຳບາກ ກໍ່ລ້ວນແຕ່ແມ່ນຄົນທີ່ບໍລິສຸດ ແລະ ຄົນອື່ນເດ ເຂົາເຈົ້າຮູ້ຈັກເຖິງ ທຸກຢ່າງທີ່ບໍ່ສາມາດຈິນຕະນາການອອກໄດ້ ດັ່ງທີ່ມັນເກີດຂຶ້ນໃນສົງ

ดามນີ້ບໍ? ເຂົາເຈົ້າຮູ້ບໍ?"

ຄັ້ງທຳອິດທີ່ຂ້າພະເຈົ້າໄດ້ຍິນສຽງຈາກທົ່ງໄຫຫີນ ນີ້ແມ່ນປີ 1969. ດຽວນີ້ຮອດປີ 2010 ແລ້ວ, ຂ້າພະເຈົ້າກໍ່ຍັງບໍ່ເຄີຍລືມສຽງເຫຼົ່ານີ້ເລີຍ ແລະ ກໍ່ຍັງຄິດເຖິງມັນຢູ່ທຸກວັນ.

ຂ້າພະເຈົ້າຫວັງວ່າ ຫຼັງຈາກອ່ານປຶ້ມຫໍນີ້ແລ້ວ ທ່ານກໍ່ຈະເປັນເໝືອນກັນກັບຂ້າພະເຈົ້າ.

ເຟດ ແມນຟແມນ

ສາລະບານ

ໜ້າ

1. ພາກສະເໜີ 2

ພາກທີໜຶ່ງ
ການສູນເສຍຂອງທີ່ງໄຫຫີນ

2. ສົງຄາມຂອງຜູ້ອື່ນ 4
3. ເສັ້ນທາງພົບ ແລະ ສະໝໍລະພູມ 1250 - 1964 7
4. ສະໜາມຮົບແບບອັດຕະໂນມັດ 1964-1969 13
5. ຜູ້ລອດຕາຍແຕ່ 1969 ຮອດປະຈຸບັນ 18
6. ...ແລະ ນອກເໜືອຈາກນີ້ 20

ພາກທີສອງ
ສຽງຄວນຈາກທີ່ງໄຫຫີນ

7. "ຈັ່ງແມ່ນແສນເສົ້າ" ໝໍລຳພື້ນເມືອງ 29
8. ຈົ່ງສົງສານຜູ້ຖືກເຄາະຮ້າຍຈາກສົງຄາມແດ່ທ້ອນ! 32
9. ຂໍໃຫ້ດວງວິນຍານຂອງອະດີດນາງແພດຊຽງຂວາງ ໄປສູ່ສຸຄະຕິເທີ້ນ 35
10. ເປັນຫຍັງຍິນຈົ່ງມາຖິ້ມລະເບີດໃສ່ພວກເຮົາ? 42
11. ບໍ່ມີວັນທີ່ຈະບໍ່ມີວັນລືມລົງໄດ້ 45
12. ຍິນອາຍພົ່ນມາຖິ້ມລະເບີດ 51
13. ທັງສອງຜົວເມຍຕາຍພ້ອມກັນໃນທີ່ງນາຍ້ອນຍິນມາຍິງ 55

14. ພວກເຮົາພາກັນຮ້ອງເພງດ້ວຍຄວາມກ້າຫານ 61
15. ຍິນ ແອຟ 105 ຍິງກວາດລ້າງ ແລະ ຖິ້ມລະເບີດ 150 ກິໂລ ໃສ່ບ້ານ ແລະ ປະຊາຊົນຢ່າງບໍ່ຢຸດເຊົາ 63
16. "...ລະເບີດຕົກລົງມາຫ່າງຈາກບ່ອນທີ່ພໍ່ຂ້ອຍກຳລັງ ໄຖນາ 15 ແມັດ..." 64
17. ຈາກນັ້ນ ພວກເຂົາກໍມາຖິ້ມລະເບີດລົງໃສ່ບ້ານ ໃສ່ເຮືອນ ໃສ່ວັດວາອາຮາມ ໃສ່ໂຮງຮຽນ ທຳລາຍ ທົ່ງໄຮ່ ທົ່ງນາ ແລະ ເຮັດໃຫ້ງົວ ຄວາຍລົ້ມຕາຍ 68
18. ສານພິດທີ່ປ່ອຍລົງມາຈາກຍົນ 72
19. ພວກເຮົາພາກັນລີ້ຢູ່ໃນຂຸມຄອງຕະຫຼອດເວລາ 74
20. ພວກເຮົາຍ້າຍບ່ອນລີ້ຈາກບ່ອນໜຶ່ງໄປຫາບ່ອນ ໜຶ່ງເລື້ອຍໆ ຢູ່ໃນປ່າດົງ 80
21. ຄົນເຂົ້າຕາຍຄືກັນກັບສັດ ຢູ່ໃນປ່າ 85
22. ນີ້ແມ່ນເຮືອນຂອງຂ້ອຍທີ່ເຮັດດ້ວຍໄມ້ ປຸກມາໄດ້ 26 ປີແລ້ວ ແລະ ຖືກຍິນທຳລາຍ. 87

ພາກສະເໜີ

ໜຶ່ງໃນບັນດາສິ່ງຜິດປົກກະຕິຂອງສົງຄາມອິນດູຈີນ ແມ່ນມີຄົນຈຳນວນໜ້ອຍທີ່ສຸດ ທີ່ຮູ້ກ່ຽວກັບຜູ້ທີ່ໄດ້ຮັບຄວາມທຸກທໍລະມານຈາກສົງຄາມຄັ້ງນີ້.

ສ່ວນໃຫຍ່ຂອງບັນດາຄຳເວົ້າຫຼາຍລ້ານຄຳ ທີ່ນຳລົງມາຂຽນ ແລະ ພິມເຜີຍແຜ່ກ່ຽວກັບສົງຄາມແມ່ນຂຽນໂດຍນັກຂຽນ ແລະ ນັກໜັງສືພິມຕາເວັນຕົກ ສຳລັບຊາວອາຊີແລ້ວ ແມ່ນບໍ່ໄດ້ຂຽນຫຍັງ ເພື່ອໃຫ້ໂລກພາຍນອກໄດ້ຮັບຮູ້. ເທົ່າທີ່ມີແມ່ນຂຽນໂດຍ ຜູ້ນຳທາງລັດຖະບານ, ເຈົ້າໜ້າທີ່ທະຫານ ແລະ ນັກປັນຍາຊົນຈຳນວນໜຶ່ງເທົ່ານັ້ນ.

ແນວໃດກໍຕາມ ບັນດານາຍພົນ, ນັກການເມືອງ ແລະ ນັກປາດອາຈານ ແມ່ນມີສ່ວນໃນການຕໍ່ສູ້ ຫຼື ຕາຍໃນສົງຄາມນີ້. ຕາມການຄາດຄະເນຂອງອະນຸກຳມະການສະພາສູງສະຫະລັດແລ້ວ ມີຊາວອິບພະຍິບກວ່າ 10 ລ້ານຄົນ ໃນອິນດູຈີນທີ່ຕາຍ ບາດເຈັບ ຫຼື ກາຍເປັນອິບພະຍິບໃນໄລຍະເວລາພຽງ 7 ປີເທົ່ານັ້ນ. ເຂົາເຈົ້າເຫຼົ່ານັ້ນ ສ່ວນຫຼາຍແມ່ນຊາວນາ.

ສ່ວນປະຊາຊົນໃນຕົວເມືອງຂອງຫວຽດນາມ, ລາວ ແລະ ກຳປູເຈຍແລ້ວ ແມ່ນບໍ່ຄ່ອຍໄດ້ຮັບຜົນກະທົບພໍເທົ່າໃດ. ຈຳນວນ 90% ຂອງຜູ້ທີ່ຫາລ້ຽງຊີບດ້ວຍການປູກຝັງ ແລະ ລ້ຽງສັດ ກາຍເປັນທະຫານ, ຊາວອິບພະຍິບ ແລະ ກອງກຳລັງພິເສດ.

ບັນດາຄວາມຮູ້ສຶກ, ຄວາມຝັນ ແລະ ຄວາມປາຖະໜາຂອງຊາວນາອິນດູຈີນ ແມ່ນຍັງບໍ່ທັນເປັນທີ່ຮູ້ຈັກຢ່າງກວ້າງຂວາງຈາກໂລກພາຍນອກ. ຊາວຕາເວັນຕົກສ່ວນໃຫຍ່ ບໍ່ຮູ້ຈັກເລື່ອງລາວທີ່ແທ້ຈິງຂອງຊາວບ້ານ ເຊິ່ງເປັນເໝືອນສະຖິຕິ ທີ່ມີແຕ່ຈຳນວນ ແຕ່ບໍ່ມີລາຍຊື່ ແລະ ບໍ່ຮູ້ໜ້າຕາຂອງຄົນທີ່ໄດ້ຮັບຜົນກະທົບຈາກສົງຄາມ.

ເວລາໄດ້ຜ່ານມາດົນນານແລ້ວ ທີ່ຊາວນາອິນດູຈີນບໍ່ໄດ້ປາກົດຕົວອອກ ມາຈາກເງົາມືດ ເພື່ອມາບັນຍາຍກ່ຽວກັບຕົນເອງ ດ້ວຍຄວາມເວົ້າຂອງ ເຂົາເຈົ້າເອງ.

ປຶ້ມຫົວນີ້ ເປັນຕົວແທນໃນເບື້ອງຕົ້ນໃນຄວາມພະຍາຍາມທີ່ຈະ ເຮັດໃຫ້ຊາວໂລກໄດ້ຮັບຮູ້. ພວກເຮົາໄດ້ນຳສະເໜີຫຼາຍເລື່ອງ ແລະ ຮູບແຕ້ມຂອງຊາວນາ ແລະ ຄົນລ້ຽງງົວ ລ້ຽງຄວາຍ. ໃນເບື້ອງຕົ້ນ ເລື່ອງ ຕ່າງໆ ແມ່ນຂຽນເປັນພາສາລາວ ແລ້ວແປເປັນພາສາອັງກິດ ແລະ ສ່ວນ ຜູ້ຂຽນເປັນພາສາອັງກິດ ໄດ້ເພີ່ມຄຳເຫັນໃສ່ບາງບ່ອນເທົ່ານັ້ນ.

ເລື່ອງຂອງພວກເຂົາແມ່ນມີລັກສະນະພິເສດແທ້ໆ. ພວກເຂົາມາ ຈາກທົ່ງໄຫຫີນ ພາກຕາເວັນອອກສຽງເໜືອຂອງປະເທດລາວ. ເລື່ອງ ຕ່າງໆ ໄດ້ເວົ້າກ່ຽວກັບຊີວິດຂອງພວກເຂົາໃນໄລຍະ 5 ປີ ຂອງການ ຖິ້ມລະເບີດທຳລາຍຂອງອາເມລິກາ ນັບແຕ່ປີ 1964 ຈົນຮອດ ປີ 1969. ສັງຄົມຂອງພວກເຂົາໄດ້ຖືກທຳລາຍຈົນໝົດກ້ຽງ ມັນບໍ່ແມ່ນການທຳ ລາຍຂອງກອງທະຫານລາບ ແຕ່ມາຈາກຍົນອາກາດ ແລະ ກົນຈັກທຳ ລາຍ. ສົງຄາມທັນສະໄໝ ທີ່ສ້າງຂຶ້ນເພື່ອຕ້ານກັບພວກເຂົາ ໄດ້ຖືກປິດ ລັບຈາກໂລກຕາເວັນຕົກຈົນມາຮອດປະຈຸບັນນີ້.

ໃນພາບກວ້າງ ບົດຂຽນ ແລະ ບັນດາພາບຕ່າງໆ ຂອງຊາວຂຽງ ຂວາງ ໄດ້ກາຍເປັນກະບອກສຽງ ແລະ ເປັນຕົວແທນໃຫ້ປະຊາຊົນເປັນ ຈຳນວນລ້ານໆຄົນ ໃນທົ່ວອິນດູຈີນ.

ຄົນສ່ວນຫຼາຍແມ່ນເກີດຢູ່ໃນບ້ານນ້ອຍໆ ທີ່ອ້ອມຮອບດ້ວຍທົ່ງ ໄຮ່ ທົ່ງນາ, ປ່າດົງ ແລະ ຫ້ວຍນ້ຳ ລຳເຊ. ໃນໄລຍະລະດູຝົນພວກ ເຂົາພາກັນເຮັດນາ, ປູກຜັກ ແລະ ໝາກໄມ້. ພໍຮອດຍາມແລ້ງມາ ກໍມີການເກັບກ່ຽວ ແລະ ຕັດຟືນໃນປ່າ, ຈັດຫາເຄື່ອງມືທຳການຜະລິດ, ເຂົ້າວັດຟັງທຳ, ຮັກສາສິນ, ລ້ຽງງົວ ລ້ຽງຄວາຍ, ລ້ຽງໝູ, ລ້ຽງໄກ່, ລ້ຽງມ້າ ແລະ ເບິ່ງແຍງຄອບຄົວ. ວຽກສ່ວນໃຫຍ່ແມ່ນສຸມໃສ່ການຫາ ລ້ຽງຊີບ ແລະ ເບິ່ງແຍງບ້ານເຮືອນ ດ້ວຍຄວາມສະຫງົບສຸກ ແລະ ຄວາມ ສວຍງາມ.

ແຕ່ແລ້ວ ປະຊາຊົນເຂດທົ່ງໄຫຫີນ ພັດມາທຸກທໍລະມານຈາກສະພາບທີ່ອັນຕະລາຍ ພວກເຂົາບໍ່ມີໂອກາດໃນການຮັກສາສຸຂະພາບ, ທໍລະມານຈາກການຂາດອາຫານ, ເປັນພະຍາດ, ມີອັດຕາການຕາຍຂອງເດັກສູງຫຼາຍ, ເກນອາຍຸກໍສັ້ນ ແລະ ມີຊາວນາທຸກຍາກຈຳນວນຫຼາຍໄປເຮັດນາ ໃນພື້ນທີ່ຂອງຊາວນາທີ່ຮັ່ງມີ ເຊິ່ງໄດ້ຮັບຜົນຕອບແທນພຽງແຕ່ເຄິ່ງໜຶ່ງຂອງຜົນຜະລິດ. ພວກເຂົາໄດ້ຮັບການສຶກສາພຽງເລັກນ້ອຍ ແລະ ເກືອບບໍ່ມີຄວາມຫວັງ ທີ່ຈະໃຫ້ລູກຫຼານໄດ້ໃຊ້ຊີວິດຢ່າງມີຄວາມສຸກ. ໃຜໆ ກໍບໍ່ມີຄວາມຫວັງວ່າ ຈະມີຊີວິດທີ່ດີຂຶ້ນກວ່າເກົ່າ ຈົນກວ່າມີຄົນຈຳນວນໜຶ່ງມາເວົ້າກ່ຽວກັບການປະຕິວັດ, ນຳເອົາຄວາມເປັນເຈົ້າຕົນເອງມາສູ່ການຳມື ແລະ ປ່ຽນແປງວິຖີຊີວິດໃໝ່.

ບໍ່ຕ່າງຫຍັງກັບຄົນຫຼາຍລ້ານຄົນທົ່ວອິນດູຈີນ, ຊາວຊຽງຂວາງໄດ້ສູນເສຍທຸກຢ່າງຍ້ອນສົງຄາມອິນດູຈີນ ຊຶ່ງຜ່ານມາຍມາແລ້ວກວ່າໜຶ່ງສ່ວນສີ່ຂອງສະຕະວັດ.

ບັນດາສຽງຄວນຈາກທົ່ງໄຫຫີນ ບໍ່ຕ່າງຫຍັງກັບສຽງຄວນຄາງຂອງຄົນເຈັບຊ້ຳຈາກ ເບັນສຸກ ແລະ ກະແຈະ ຊຳເໜືອ, ກວ້າງຫງ້າຍ, ສະນູນ, ມີໄລ ແລະ ຊຸມຊົນອີກຫຼາຍພັນແຫ່ງ ທີ່ມີຜູ້ທີ່ຢູ່ອາໄສບ່ອນລະເລັກລະໜ້ອຍ ຊຶ່ງໄດ້ພົບກັບສິ່ງທີ່ບໍ່ເຄີຍຄາດຄິດມາກ່ອນ.

ພາກທີ ໜຶ່ງ
ການສູນເສຍຂອງທົ່ງໄຫຫີນ

ຂ້ອຍຍັງຈື່ໄດ້ວ່າ ໄດ້ໂອ້ລົມກັບອົບພະຍົບຊາວເມືອງຊຽງຂວາງ ແລະ ພວກເຂົາໄດ້ບອກວ່າ ບໍ່ເຄີຍຮູ້ວ່າ ມີພົນລະເຮືອນບາດເຈັບ ໃນຂະນະທີ່ມີການໂຈມຕີ...ຂ້ອຍຄິດວ່າ ມັນເປັນເລື່ອງທຳມະດາ ທີ່ບັນດາບ້ານຕ່າງໆ ແມ່ນແຕ່ໃນເຂດເສລີໃນການຖິ້ມລະເບີດກໍ່ມີການຈຳກັດ ບໍ່ໃຫ້ມີການຖິ້ມລະເບີດທຳລາຍ.

ພັນອາກາດເອກ ວິນລຽມ ໄຫແຮນ, ຮອງຄະນະກຳມະການ ພິສູດຫຼັກຖານ ໄຊມິງຕັນ, ຂອງສະຫະລັດອາເມລິກາ ຕຸລາ 1969

ການສືບຕໍ່ຖິ້ມລະເບີດຢ່າງລຽນຕິດ...ເປັນການບັງຄັບໃຫ້ພວກເຂົາຈຳເປັນຕ້ອງໜີເຂົ້າໄປລີ້ຢູ່ໃນຖ້ຳ... ເພາະຖ້າເຫັນຫຍັງມີການເໜັງຕີງແມ່ນຈະຖືກທຳລາຍໂລດ... ຮອດປີ 1969 ການໂຈມຕີຖິ້ມລະເບີດໄດ້ເພີ່ມຄວາມຮຸນແຮງຈົນເຖິງຂັ້ນສູງສຸດ... ເຮັດໃຫ້ປະຊາຊົນຕ້ອງໜີປະບ້ານເຮືອນ . . . ຊາວບ້ານຜູ້ໜຶ່ງເລົ່າວ່າ " ຫ່າລະເບີດທີ່ເທລົງມາ ບໍ່ຕ່າງຫຍັງກັບການຫວ່ານເມັດເຂົ້າໃສ່ນາ." ນີ້ຄືກັບວ່າ ຄວາມພະຍາຍາມຂອງອະເມລິກາ ຈັດຕັ້ງຂຶ້ນເພື່ອຫວັງທຳລາຍອີກຝ່າຍໜຶ່ງໂດຍກົງ".

ອຸນ ອະຣາຍທ໌ ໜັງສືພິມ ແມັນແຈສະເຕີ ກາດຽນ, 14 ມີນາ 1970

ການສູນເສຍຂອງທົ່ງໄຫຫີນ

1. ສົງຄາມຂອງຜູ້ອື່ນ

" ເສົ້າແທ້ເດ! ເມື່ອກ່ອນກີ້ ຍາມນີ້ມາຈະມີເຂົ້າສຸກເຫຼືອງເຮືອງເຮື່ອຫອມຫວນທົ່ວທົ່ງນາ, ຢູ່ປ່າດົງ ດອກໄມ້ກໍ່ເບ່ັງບານໄປທົ່ວອານາຈັ່ງແມ່ນງາມແທ້ໜາເມືອງລາວນີ້ເອີ່ຍ"

ສຸງຂັບລຳຂອງໝໍລຳ ຊຶ່ງເປັນຊາວອົບພະຍົບຈາກທົ່ງໄຫຫີນ, ປະເທດລາວ.

ມາຮອດ ເດືອນ ກັນຍາ ປີ 1969, ປະຫວັດສາດອັນຍາວນານມາກວ່າ 700 ປີຂອງທົ່ງໄຫຫີນ ໄດ້ຖືກຈາງຫາຍໄປຈາກຄວາມຊົງຈຳຢ່າງບໍ່ມີວັນກັບມາ.

ໃນໜ້າຕໍ່ໆ ໄປທ່ານຜູ້ອ່ານຈະໄດ້ຮັບຮູ້ກ່ຽວກັບເຫດການຈາກບົດເລື່ອງຂອງຊາວມາລາວ ທີ່ເຄີຍໃຊ້ຊີວິດຜ່ານເຫດການອັນສະຫຍອງຂວັນມາເລົ່າສູ່ຟັງ.

ກ່ອນປີ 1964 ເພິ່ນເຄີຍໃຊ້ຊີວິດທີ່ທົ່ງແຫ່ງນີ້ ຊຶ່ງຕັ້ງຢູ່ທາງຕາເວັນອອກສຸງເໜືອຂອງປະເທດລາວ ຊຶ່ງມີທິວທັດອັນສວຍງາມ ແລະ ມີປະຊາຊົນປະມານ ຫ້າສິບພັນຄົນ. ເຂດນີ້ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ເມື່ອກອງທັບປະເທດລາວເຂົ້າມາຢຶດຄອງ ໃນເດືອນ ພຶດສະພາ ປີ 1964 ກໍມີການຫັນປ່ຽນອັນໃຫຍ່ຫຼວງຕາມມາ. ຈາກນັ້ນ ຍົນອາກາດຈາກແດນໄກ ຊຶ່ງບໍ່ມີໃຜເຄີຍຮູ້ມາກ່ອນ ກໍ່ມາຖອກເທລະເບີດລົງໃສ່ແດນແຫ່ງນີ້ ຈົນພາໃຫ້ມີຄວາມເສຍຫາຍຕໍ່ເຮືອນຊານບ້ານຊ່ອງ, ຍ້ວງສາງ, ໂຮງຮຳໂຮງຮຽນ, ວັດວາອາຮາມ ແລະ ຕູບໄມ້ເຮ້ຍ ໄມ້ພາງ ຊຶ່ງປຸກຢັ່ງຢາຍໄປຕາມປາດົງ; ເຮັດໃຫ້ປະຊາຊົນ ຕ້ອງໄດ້ເຄື່ອນຍ້າຍອອກຈາກບ່ອນພັກເຊົາ ເຂົ້າໄປອາໄສຢູ່ໃນປ່າຊື່ອຄາວ, ເມື່ອທົນຕໍ່ການທຳລາຍບໍ່ໄດ້ ກໍຕ້ອງໄດ້ຂຸດຂຸມຄອງ ແລະ ບ່ອນລີ້ໄພ. ປະຊາຊົນໄດ້ພາກັນແຫຍ້ກັນແອອັດຢູ່ໃນບ່ອນປອດໄພ, ຢູ່ເທິງໜ້າດິນຈະເປັນທົ່ງນາຮ້ອສອນ, ສອນໄມ້ກິນໝາກກໍຖືກທຳລາຍກ້ຽງ, ແມ່ນແຕ່ງົວ, ຄວາຍ, ໝູ, ໝາ, ເປັດໄກ່ ກໍບໍ່ມີເຫຼືອຈາກໝາກແຕກ ໝາກບຶ້ມ. ເດັກເລັກເດັກແດງ, ພໍ່ແມ່, ພໍ່ຕູ້, ແມ່ນາຍ, ອາວ ອາ, ປ້າ ລຸງ ແລະ ພີ່ປ້າ ນ້າອາ ກໍ່ຖືກລະເບີດທຳລາຍເຖິງຕາຍ ຫຼື ໄດ້ຮັບບາດເຈັບ.

ເພິ່ນຍັງຈື່ໄດ້ວ່າ ໃນເດືອນ ກັນຍາ ປີ 1969 ທົ່ງໄຫຫີນ ໄດ້ຖືກປະໃຫ້ຮ້າງ ແລະ ບໍ່ມີໃຜຫຼົງເຫຼືອຢູ່ເລີຍຈັກຄົນ. ຍ້ອນສົງຄາມອັນທີ່ເອີ້ນວ່າ "ສົງຄາມທາງອາກາດ" ປະຊາຊົນຕ້ອງໄດ້ອົບພະຍົບ

ໄປຢູ່ໃນຄ້າຍອົບພະຍົບຕ່າງໆ ຊຶ່ງຢູ່ຫ່າງໄກຈາກບ້ານເກີດເມືອງນອນຂ ອງບັນພະບຸລຸດຂອງພວກເຂົາ ຊຶ່ງເປັນທີ່ມາຂອງການຂຸນບັນທຶກ ບົດ ເລື່ອງນີ້ ຈົນມາຮອດທຸກວັນນີ້.

ບົດບັນທຶກຂອງການທາຍສາບສູນຂອງບ້ານເກີດເມືອງນອນນີ້ ຍັງເປັນການບອກເລົ່າກ່ຽວກັບການລົ້ມຕາຍ ແລະ ຄວາມທາຍະນະຈາກ ສົງຄາມທຳລາຍ ທີ່ຍາວນານມາກວ່າ 26 ປີ ຂອງສົງຄາມອິນດູຈີນ. ດ້ວຍເຫດນີ້ ສົງຄາມທາງອາກາດ ໄດ້ກາຍເປັນຂີດໝາຍທາງປະຫວັດ ສາດ ແຫ່ງການຂັດແຍ້ງທາງທະຫານສະໄໝໃໝ່ ເນື່ອງຈາກວ່າ ເປັນ ສົງຄາມທີ່ບໍ່ໃຊ້ຄົນ ແຕ່ໃຊ້ເຄື່ອງຈັກຕໍ່ສູ້ກັນ; ເປັນສົງຄາມທຳລາຍລ້າງ ອັນມະຫາສານ ແລະ ທຳລາຍເຜົ່າຊົນທີ່ຢູ່ອີກບ່ອນໜຶ່ງ ຊຶ່ງຜູ້ມາທຳ ລາຍຮອດບໍ່ຮູ້ຊ້ຳວ່າ ພວກເຂົາເປັນໃຜ ແລະ ສົງຄາມກໍ່ຖືກປິດມິດລັບ ຈາກໂລກພາຍນອກຢ່າງບໍ່ມີຮ່ອງຮອຍ.

ນັບແຕ່ເດືອນ ພຶດສະພາ ປີ 1964 ຮອດເດືອນ ກັນຍາ ປີ 1969 ມີການຖິ້ມລະເບີດໃສ່ທົ່ງໄຫຫີນ ກວ່າ 25.000 ຄັ້ງ ມີລະເບີດໜັກກວ່າ 75.000 ໂຕນ ຖອກເທລົງມາທຳລາຍ, ມີນັກບິນກວ່າ 50.000 ເທື່ອຄົນ ຈາກຖານທັບອາກາດຂອງປະເທດອື່ນ ເຂົ້າຮ່ວມໃນການຖິ້ມລະເບີດ. ຢູ່ໜ້າດິນ ມີປະຊາຊົນຜູ້ບໍລິສຸດເປັນພັນໆ ຄົນຖືກຂ້າຕາຍ ແລະ ໄດ້ ຮັບບາດເຈັບ, ອີກຈຳນວນເປັນສິບໆ ພັນຄົນຖືກບັງຄັບໃຫ້ລົງໄປລີ້ຢູ່ຂຸມ ຫຼົບໄພໃຕ້ດິນ ປ່ອຍໃຫ້ເບື້ອງເທິງໜ້າດິນຖືກທຳລາຍຢ່າງຮາບຄາບ ປານໜ້າກອງໄຊ.

ຄວາມໂຫດຫ້ຽມອັນມະຫາສານຂະໜາດນີ້ ດຳເນີນໄປເປັນເວລາ ຫ້າປີເຄິ່ງ ແຕ່ໂລກພາຍນອກບໍ່ຮູ້ຫຍັງເລີຍກ່ຽວກັບການທຳລາຍລ້າງ ແບບນີ້.

ໃນໄລຍດັ່ງກ່າວ ໄດ້ມີການລາຍງານຢ່າງລຸງນຕິດ ກ່ຽວກັບການ ຕໍ່ສູ້ຢູ່ພາກພື້ນດິນ ທີ່ແຜ່ລາມໄປທົ່ວທຸກແຫ່ງຂອງລາວ. ແຕ່ເມື່ອຊອກ ຫາຈາກໜັງສືພິມ ຫຼື ວາລະສານຂອງຕາເວັນຕົກ ແມ່ນແຕ່ຄຳດຽວ ກໍ່ບໍ່ເຄີຍເອີ່ຍເຖິງເລີຍ ກ່ຽວກັບການທຳລາຍລ້າງ ດ້ວຍການຖິ້ມລະເບີດ

ໃສ່ທົ່ງໄຫຫີນ.

ສິ່ງເຫຼົ່ານີ້ ບໍ່ເຄີຍຖືກຍົກຂຶ້ນມາກ່າວໃນສະພາສູງສະຫະລັດ ຫຼື ການຖືກຖຽງກັນໃນສະຫະປະຊາຊາດ ຫຼື ແມ່ນແຕ່ໃນກອງປະຊຸມວ່າດ້ວຍ ການຕໍ່ຕ້ານການເຮັດສົງຄາມ ກໍ່ຍັງບໍ່ປາກົດມີການກ່າວເຖິງການໃຊ້ ອາ ວຸດທັນສະໄໝມາທຳລາຍລ້າງທົ່ງໄຫຫີນຈັກໜ້ອຍ.

ໃນໄລຍະເວລາຫ້າປີເຄິ່ງຂອງການທຳລາຍລ້າງ ເຮັດໃຫ້ບັນດາ ບ້ານໃຫຍ່ນ້ອຍໄດ້ຖືກທຳລາຍຢ່າງຮາບກ້ຽງ, ປະຊາຊົນຜູ້ບໍລິສຸດນັບບໍ່ ຖ້ວນຖືກຝັງທັງເປັນດ້ວຍແຮງລະເບີດ ຫຼື ຖືກຈູດທັງເປັນດ້ວຍລະເບີດ ນາປານ ແລະ ຟົດສະຟໍຣັດສີຂາວ ຫຼື ຖືກສະເກັດຂອງໝາກບອມບ. ແຕ່ ບັນດາຜູ້ນຳຂອງປະເທດມະຫາອຳນາດຂອງໂລກ ຜູ້ເຮັດສົງຄາມຄັ້ງນີ້ ກໍ່ຍັງຮັກສາເລື່ອງນີ້ເປັນຄວາມລັບ.

ພວກເຂົາປະຕິເສດຢ່າງເປັນທາງການວ່າ ບໍ່ມີການຖິ້ມລະເບີດ ໃສ່ພາກເໜືອຂອງປະເທດລາວ ດ້ວຍການເກືອດຫ້າມນັກຂ່າວ ບໍ່ໃຫ້ໄປ ລົງພາກສະໜາມຮົບທີ່ມີການຕໍ່ສູ້ກັນ ແລະ ບໍ່ອະນຸຍາດໃຫ້ນັກຂ່າວ ສຳ ພາດພວກນັກບິນ ທີ່ໄປປະຕິບັດການໃນສະໜາມຮົບ.

ສຸດທ້າຍ ຕົກມາຮອດເດືອນ ຕຸລາ ປີ 1969 ການນຳຂອງມະ ຫາອຳນາດສະຫະລັດ ອາເມລິກາ ກໍອອກມາກ່າວວ່າ ພວກເຂົາໄດ້ຖິ້ມລະ ເບີດໃສ່ພາກເໜືອຂອງລາວແທ້ ນັບແຕ່ເດືອນ ພຶດສະພາ 1964 ແຕ່ ກໍ່ຍັງສືບຕໍ່ປິດບັງວ່າ ການທຳລາຍທົ່ງໄຫຫີນ ແມ່ນບໍ່ໄດ້ມີເປົ້າໝາຍທຳ ລາຍພົນລະເຮືອນ.

ສຸດທ້າຍ ມາຮອດເດືອນ ຕຸລາ 1969 ຜູ້ຖືກເຄາະຮ້າຍຈຳນວນ ຫຼວງຫຼາຍຈາກການຖິ້ມລະເບີດລົງໃສ່ທົ່ງໄຫຫີນ ໄດ້ຖືກກວາດຕ້ອນເຂົ້າ ຄ້າຍອົບພະຍົບຕ່າງໆທີ່ສ້າງຂຶ້ນ, ພ້ອມດຽວກັນນັ້ນ ເອກອັກຄະລັດ ຖະທູດສະຫະລັດ ທ່ານ ວິນລຽມ ຮ. ສຸລິວັນ ໄດ້ສາລະພາບໃນກອງ ປະຊຸມລັບ ຂອງສະມາຊິກວຸດທິສະພາວ່າ ... ການຖິ້ມລະເບີດແມ່ນຈຳ ກັດ ບໍ່ໃຫ້ເຂົ້າໃກ້ເຂດປະຊາຊົນຢູ່. ກອງທັບອາກາດສະຫະລັດພຽງແຕ່ ໂຈມຕີເສັ້ນທາງລຳລຽງ, ຈຸດກວດກາ, ຫຼື ບ່ອນທີ່ເປັນຈຸດສຸມ ທີ່ເປັນເສັ້ນ

ທາງເຂົ້າໄປສູ່ສະໜາມຮົບເທົ່ານັ້ນ ຊຶ່ງເປັນນະໂຍບາຍບໍ່ໃຫ້ທຳລາຍເຂດປະຊາຊົນອາໄສຢູ່.

ທູດການທະຫານ ທ່ານ ພັນເອກ ວິນລຸມ ຕີແຮນ ຍັງເວົ້າຕື່ມອີກວ່າ ແມ່ນແຕ່ໃນເຂດເສລີ ໃນການຖິ້ມລະເບີດ ກໍມີການຈຳກັດໃນການຖິ້ມລະເບີດ.

ໃນຄັ້ງທຳອິດທີ່ປະທານາທິບໍດີອາເມລິກາ ກ່າວກັບປະຊາຊົນໃນວັນທີ 6 ມີນາ 1970 ວ່າ ອາເມລິກາ ໄດ້ຖິ້ມລະເບີດໃສ່ປະເທດລາວໃນໄລຍະ 6 ປີຜ່ານມາ ແຕ່ກໍຍັງຫຼີກລ່ຽງທີ່ຈະກ່າວວ່າ ໄດ້ມີການທຳລາຍພົນລະເຮືອນ: "ພວກເຮົາຍັງສືບຕໍ່ປະຕິບັດການຖິ້ມລະເບີດຢູ່. ບູລິມະສິດອັນທີໜຶ່ງ ແມ່ນຖິ້ມໃສ່ເສັ້ນທາງໂຮ່ຈີມິນ ນອກຈາກນີ້ ພວກເຮົາຍັງສືບຕໍ່ສົ່ງຍົນສອດແນມເຂົ້າພາກເໜືອຂອງປະເທດລາວ ເພື່ອສະໜັບສະໜູນການປະຕິບັດງານຂອງກອງກຳລັງທະຫານລາວ.

ນະໂຍບາຍທີ່ຍາມໃດກໍປະຕິເສດການຖິ້ມລະເບີດໃສ່ເປົ້າໝາຍພົນລະເຮືອນ ພ້ອມກັບການຄວບຄຸມຂ່າວສານ ແມ່ນຍັງສືບຕໍ່ມາຮອດທຸກມື້ນີ້. ພວກເຂົາເກືອດຫ້າມນັກຂ່າວໜັງສືພິມ ບໍ່ໃຫ້ບິນຜ່ານພາກເໜືອຂອງປະເທດລາວ ພ້ອມທັງບໍ່ອະນຸຍາດໃຫ້ສຳພາດນັກບິນ ກ່ຽວກັບການຖິ້ມລະເບີດຢູ່ທີ່ນັ້ນ. ນອກນີ້ ຍັງບໍ່ອະນຸຍາດໃຫ້ພວກນັກຂ່າວໄປຢ້ຽມຢາມເຂດທີ່ມີການຖິ້ມລະເບີດ ທີ່ຄວບຄຸມໂດຍ ກຳລັງພັນທະມິດ. ແມນແຕ່ໃນກອງປະຊຸມນັກຂ່າວ, ຄຳໃຫ້ການຕໍ່ໜ້າຄະນະກຳມະການສະພາສູງ ຫຼື ບົດຖະແຫຼງຂ່າວຂອງສະພາສູງ, ບົດຄວາມທີ່ສອດເຂົ້າໃນບົດບັນທຶກກອງປະຊຸມສະພາສູງ, ຂອງບັນດາເອກອັກຄະລາຖະທູດ ແລະ ບັນດານາຍພົນຂອງກອງເລຂາກະຊວງປ້ອງກັນປະເທດ ກໍຍັງສືບຕໍ່ຢືນຢັນສະເໝີວ່າ ບໍ່ມີການຖິ້ມລະເບີດໃສ່ເຂດບ້ານທີ່ມີປະຊາຊົນອາໄສຢູ່. ນະໂຍບາຍແບບນີ້ ປາກົດວ່າ ໄດ້ຮັບຜົນສຳເລັດດີຕະຫຼອດມາ.

ມາຮອດປະຈຸບັນນີ້ ປະຊາຊົນສ່ວນໃຫຍ່ໃນສະຫະລັດ ອາເມລິກາ ແລະ ໃນໂລກ ແມ່ນບໍ່ຮູ້ຫຍັງຈັກໜ້ອຍວ່າ ມີຫຍັງເກີດຂຶ້ນໃນເຂດທົ່ງໄຫຫີນ ໃນລະຫວ່າງ 1964 ຫາ 1969.

ໃນເດືອນເມສາ 1971 ທ່ານ ສຸລິວັນ ອະດີດເອກອັກຄະລັດຖະທູດ ສະຫະລັດ ອາເມລິກາປະຈຳລາວຍັງກ່າວວ່າ ສົງຄາມໃນພາກເໜືອຂອງ ປະເທດລາວ ແມ່ນບໍ່ມີຫຍັງກ່ຽວຂ້ອງກັບການປະຕິບັດການ ທີ່ກະທຳກັບ ປະເທດຫວຽດນາມ ແລະ ປະເທດກຳປູເຈຍ ເຊິ່ງຖືວ່າ ແມ່ນສົງຄາມ ຢູ່ອີກບ່ອນໜຶ່ງ. ໃນຖະແຫຼງການກ່ຽວກັບການຖິ້ມລະເບີດທຳລາຍ ເພີ່ນ ໄດ້ປະກາດວ່າ "ການສູ້ຮົບກັນໃນພາກເໜືອຂອງປະເທດລາວ ພວກ ເຮົາພິຈາລະນາແລ້ວວ່າ ບໍ່ມີສ່ວນກ່ຽວພັນກັບການປະຕິບັດງານໃນພາກ ໃຕ້ຫວຽດນາມ ຫຼື ໃນກຳປູເຈຍ" ນີ້ກໍໝາຍຄວາມວ່າ ສົນທິສັນຍາ ອ່າວຕົງແກ້ງ ໄດ້ອະນຸຍາດໃຫ້ບັນດາຜູ້ນຳອາເມລິກາ ສາມາດປົກປ້ອງ ກອງກຳລັງທະຫານບົກ ແຕ່ສົນທິສັນຍາດັ່ງກ່າວບໍ່ໄດ້ນຳໄປໃຊ້ກັບການ ຖິ້ມລະເບີດຖະຫຼົ່ມລົງພາກເໜືອຂອງປະເທດລາວ ດັ່ງນັ້ນ ເຈົ້າໜ້າທີ່ ຂອງອາເມລິກາ ບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກສະພາສູງ ຫຼື ປະ ຊາມະຕິ ໃນການຖິ້ມລະເບີດໃສ່ທົ່ງໄຫຫີນ ແຕ່ປີ 1964 ຮອດ 1969; ແຕ່ໃນຄວາມເປັນຈິງແລ້ວ ມັນເປັນຄັ້ງທຳອິດໃນປະຫວັດສາດ ທີ່ຜູ້ນຳ ອາເມລິກາກຸ່ມໜຶ່ງ ທີ່ກຳອຳນາດສັ່ງການໃນການທຳລາຍລ້າງປະຊາຊົນ ຜູ້ຢູ່ທ່າງໄກ ເຊິ່ງບໍ່ແມ່ນເພື່ອປົກປ້ອງປິຕຸພູມອາເມລິກາ ຫຼື ເພື່ອປົກປ້ອງ ກອງກຳລັງທະຫານອາເມລິກາ ທີ່ສູ້ຮົບໃນຕ່າງປະເທດ.

ໃນຄວາມເປັນຈິງແລ້ວ, ການສູນເສຍຂອງທົ່ງໄຫຫີນ ແມ່ນ " ສົງ ຄາມຢູ່ອີກບ່ອນໜຶ່ງ" ທີ່ເປັນສົງຄາມທັນສະໄໝ ໂດຍຜູ້ທີ່ມີສ່ວນໃນການ ສູ້ຮົບ ບໍ່ໄດ້ປະເຊີນໜ້າກັນ ແຕ່ມັນເປັນສົງຄາມທາງອາກາດ ທີ່ທະຫານ ພາກພື້ນດິນເປັນພຽງກຳລັງເສີມ ນີ້ມັນແມ່ນສົງຄາມທີ່ສ້າງຂຶ້ນເພື່ອລ້າງ ຜານທຸກຄົນທີ່ຢູ່ພື້ນດິນຢ່າງຫຼີກລ່ຽງບໍ່ໄດ້; ເປັນສົງຄາມປິດລັບໃນການ ລ້າງຜານສັງຄົມມະນຸດ ແບບບໍ່ມີຮ່ອງຮອຍໃຫ້ເຫັນອີກເລີຍ.

II. ເສັ້ນທາງຜ່ານ ແລະ ສະໜາມຮົບ: ປະມານປີ 1250 - 1964

"ເຫດຜົນທີ່ຂ້ອຍຮັກປະເທດນີ້ ຍ້ອນວ່າສິ່ງທີ່ພົບເຫັນຍັງມີຄວາມ

ມະຫັດສະຈັນຢູ່ ຄືມີສາຍນ້ຳລຳທານ, ປ່າດົງພົງໄພ, ພູຜາ ຮ່ອມທ້ອຍ ທີ່ຫ່າງໄກ. ພາຍໃຕ້ທ້ອງຟ້າສີຄາມເທິງຖິ່ນສູງ ມີເຜົ່າມົ້ງ, ພູພຽງ ຕຣັນນິນ (ທົ່ງໄຫຫີນ-ພູພຽງຊຽງຂວາງ) ເປັນຖິ່ນທີ່ມີທົ່ງດອກໄມ້ອັນ ກວ້າງໃຫຍ່. ຂ້ອຍໄດ້ພົບເຫັນຜູ້ຄົນທີ່ໃຊ້ຊີວິດໃນທ່າມກາງຄວາມສົດສະ ອາດ, ອ້ອມຮອບໂດຍສິ່ງແວດລ້ອມທີ່ບໍລິສຸດ, ບໍ່ເຄີຍຖືກທຳລາຍມາ ກ່ອນ. ມັນຍາກທີ່ຈະບັນລະຍາຍ ແຕ່ຂ້ອຍຮູ້ສຶກວ່າ ຂ້ອຍເກືອບຈະ ກ່າວໄດ້ວ່າ ປະເທດນີ້ໄດ້ໃຫ້ຄວາມເອື້ອເຟື້ອ, ກະຕັນຍູ ແລະ ຄວາມ ມ່ວນຊື່ນ ຄືກັບແດນສະຫວັນ. ພວກຜູ້ຍິງຜິວຂາວນວນ ນຸ່ງເຄື່ອງ ສີຄຳ ສີເງິນ, ໄດ້ຍິນສຽງແຄນ ແລະ ສຽງດົນຕີ. ພວກຜູ້ຍິງລ້ຽງອາບນ້ຳ ໃນແມ່ ນ້ຳ ຍາມມີງານບຸນ ມີການແອ່ວເວົ້າກັນແບບຊູ້ສາວ ແລະ ມີ ຄູບາ . . . .”

ສຽງກອງຄູບາ (Gibelin, in The Bronze Drums)
ບົດກະວີຂອງ **ຊອງ ລາຕິກຸຍ**

ທົ່ງໄຫຫີນຕັ້ງຢູ່ ແຂວງຊຽງຂວາງ ຊຶ່ງຕັ້ງຢູ່ພາກຕາເວັນອອກ ສຽງເໜືອຂອງ ປະເທດລາວ ເປັນໜຶ່ງໃນດິນແດນທີ່ມີຕຳນານອັນຍາວ ນານໃນດ້ານການຕໍ່ສູ້ ແລະ ເປັນດິນແດນທີ່ອຸດົມສົມບູນທີ່ສຸດຂອງອາ ຊີຕາເວັນອອກສຽງໃຕ້.

ແຂວງຊຽງຂວາງມີເນື້ອທີ່ຫຼາຍກວ່າ 19,700 ກິໂລຕາແມັດ ຊຶ່ງ ຍາວຢຽດຈາກຊາຍແດນທາງພາກເໜືອທີ່ຕິດກັບປະເທດຫວຽດນາມ ໄປ ເຖິງສາຍພູທາງທິດໃຕ້ທີ່ຕິດກັບລ້ອງແມ່ນ້ຳຂອງ. ເຂດນີ້ເປັນດິນແດນ ທີ່ສວຍງາມ ແລະ ອຸດົມຮັ່ງມີ ຢັ່ງຢາຍໄປດ້ວຍພູພຽງນ້ອຍໃຫຍ່ເດຍລະ ດາດ, ມີປ່າດົງພົງໄພອັນຕຶບໜາ, ມີພູຜາທີ່ອຸດົມສົມບູນດີ, ອາກາດ ສົດຊື່ນ ແລະ ສະພາບດິນຟ້າອາກາດກໍ່ແຈ່ມໃສດີ.

ໃນໄລຍະທ້າຍຊຸມປີ 1950 ແຂວງນີ້ ມີປະຊາກອນປະມານ 130.000 ຫາ 170.000 ຄົນ ຊຶ່ງກວມເອົາຫຼາຍສິບຊົນເຜົ່າ ແບ່ງອອກ ເປັນສີ່ໝວດໃຫຍ່ຄື: ລາວເທິງປະມານ 30.000 ຫາ 40.000 ຄົນ, ລາວສູງ ປະມານ 30.000 ຫາ 40.000 ຄົນ, ຊາວຈີນ ແລະ

ຊາວຫວຽດນາມປະມານ 5.000 ຫາ 6.000 ຄົນ ແລະ ລາວລຸ່ມ 65.000 ຫາ 80.000 ຄົນ.

ລາວເທິງເປັນໜຶ່ງໃນຊົນເຜົ່າ ທີ່ເຂົ້າມາຕັ້ງຖິ່ນຖານກ່ອນໝູ່ ຊຶ່ງມີບັນພະບູລຸດມາຈາກກຸ່ມ ມອນ-ຂະແມ ມີຖິ່ນຖານຢູ່ຕາມເຈ້ຍພູ ລະຫວ່າງ ລາວສູງທີ່ຢູ່ຈອມພູ ແລະ ລາວລຸ່ມຢູ່ເຂດລຸ່ມລົງມາ.

ພວກມົ້ງ ແລະ ຢ້າວ ແມ່ນຊາວພູເຂົາ ທີ່ອົບພະຍົບມາຈາກພາກໃຕ້ຂອງປະເທດຈີນ ແລະ ເລີ່ມມາຕັ້ງຖິ່ນຖານຢູ່ໃນເຂດແຂວງຊຽງຂວາງ ໃນໄລຍະທ້າຍຂອງຊຸມປີ 1850 ນີ້ເອງ. ເນື່ອງຈາກມາລຸນຫຼັງພວກຊົນເຜົ່າອື່ນ ພວກເຂົາຈຶ່ງເລືອກຢູ່ເທິງພູພຽງເຂດຊຽງຂວາງເປັນສ່ວນໃຫຍ່. ດ້ວຍເຫດນີ້ເອງ ພວກເຂົາຈຶ່ງມັກຊອດແບບເລືອນລອຍ ດ້ວຍການຖາງປ່າເຮັດໄຮ່ໝູນວຽນ ໂດຍກຳນົດເອົາປະມານຫ້າ ຫາເຈັດປີ ກໍຍ້າຍໄປຫາບ່ອນໃໝ່ ເມື່ອດິນມີຝຸ່ນໜ້ອຍລົງ. ນອກຈາກນີ້ ພວກເຂົາກໍຍັງມີວິທີການສະສົມຄວາມຮັ່ງມີດ້ວຍການປູກຝິ່ນເປັນສິນຄ້າ. ພວກເຂົາມີວິທີການຮັກສາຮີດຄອງປະເພນີບໍ່ໃຫ້ຈາງຫາຍໄປຢ່າງເດັ່ງຄັດ ດ້ວຍການຢູ່ຫ່າງຈາກຊຸມຊົນອື່ນ.

ຊາວຈີນ ແລະ ຊາວຫວຽດນາມ ແມ່ນກຸ່ມຊົນທີ່ມາຕັ້ງຖິ່ນຖານນຳຫຼັງຊົນເຜົ່າອື່ນ ຊຶ່ງຍ້າຍເຂົ້າມາໃນໄລຍະສະຕະວັດທີຊາວນີ້ເອງ. ພວກເຂົາເຈົ້າປະກອບເປັນປະຊາກອນສ່ວນໃຫຍ່ ທີ່ມາຕັ້ງຖິ່ນຖານຢູ່ໃນຕົວເມືອງໃຫຍ່ ແລະ ເປັນພື້ນຖານໃຫ້ແກ່ການຄ້າຂາຍ ແລະ ການປົກຄອງ.

ເຜົ່າລາວລຸ່ມ ເປັນຊົນເຜົ່າສ່ວນໃຫຍ່ ຊຶ່ງເປັນຕະກຸນປາກພາສາໄຕ ເປັນຊົນເຜົ່າທີ່ຢັ່ງຍາຍຈາກພາກໃຕ້ຂອງປເທດຈີນ ລາມໄປຮອດອ່າວໄທ ຊຶ່ງມີການເຊື່ອກັນວ່າ ເປັນຜູ້ທີ່ອົບພະຍົບມາຈາກປະເທດຈີນ ເຂົ້າມາສູ່ພາກເໜືອຂອງປະເທດລາວ ໃນສະຫະສະວັດທີໜຶ່ງ ຫຼັງຈາກຊົດຕະສັງກະລາດ. ພວກເຂົາໄດ້ຍ້າຍມາຕັ້ງຖິ່ນຖານຢູ່ຕາມຮ່ອມພູທີ່ອຸດົມສົມບູນ ດ້ວຍການຈັດຕັ້ງຊຸມຊົນກະເສດ ທີ່ປູກເຂົ້າເປັນຕົ້ນຕໍ. ເມື່ອການເວລາຜ່ານໄປ ພວກເຂົາກໍເລີ່ມປູກພືດຫຼາຍຊະນິດເຊັ່ນ ຜັກ, ໝາກໄມ້

ພ້ອມດ້ວຍລ້ຽງສັດຫຼາຍຊະນິດ. ປະຫວັດສາດຂອງຊົນເຜົ່ານີ້ ແມ່ນເລີ່ມຕົ້ນປະມານປີ 1250. ໃນລະຫວ່າງກາງສະຕະວັດທີ 20 ຊາວຊຽງຂວາງໄດ້ສ້າງຕັ້ງສູນກາງທາງດ້ານການເມືອງ, ວັດທະນະທຳ ແລະ ເສດຖະກິດຂອງຂົງເຂດຂຶ້ນ. ໃນໂຮງຮຽນໄດ້ມີການສອນພາສາລາວ ໃຫ້ແກ່ລູກຫຼານ ແລະ ໄດ້ປະກອບລັດຖະກອນເຂົ້າໃນຂະແໜງການປົກຄອງ.

ລາວພວນ ເປັນຊື່ທີ່ຮູ້ກັນພາຍໃນທ້ອງຖິ່ນ ຊຶ່ງເປັນຊົນເຜົ່າທີ່ແຕກຕ່າງກັບບັນດາລາວລຸ່ມໃນລ້ອງນ້ຳຂອງ ອັນເປັນທີ່ຮູ້ຈັກກັນດີຂອງຊາວຕ່າງດ້າວ. ໂດຍທົ່ວໄປແລ້ວ ລາວພວນມີຄວາມສາມາດຫຼາຍດ້ານແບບຊາວພູດອຍ ຊຶ່ງລ້ຽງເຄີຍກັບອາກາດທີ່ເຢືອກເຢັນ. ພວກເຂົາເປັນຄົນດຸໝັ່ນ, ແຂງແຮງ ແລະ ສະຫຼາດສະຫຼຽວກວ່າ. ທາງດ້ານສິລະປະ, ສະຖາປານິກ, ວັນນະຄະດີ, ສີໄມ້ລາຍມື ແລະ ດົນຕີ ກໍ່ເປັນທີ່ເລື່ອງລືກັນວ່າ ມີຄວາມຈະເລີນຮຸ່ງເຮືອງໃນປະຫວັດສາດລາວ.

ທົ່ງໄຫຫີນມີທີ່ຕັ້ງຢູ່ໃຈກາງແຂວງຊຽງຂວາງ ຊຶ່ງເປັນສູນກາງແຫ່ງຄວາມຈະເລີນຂອງລາວພວນ. ທ້ອງຖິ່ນນີ້ ມີຊື່ມາຈາກໄຫຫີນທີ່ຖືກຄົ້ນພົບໃນຖິ່ນນີ້ ຊຶ່ງເຊື່ອກັນວ່າເປັນທີ່ເກັບກະດູກຂອງຊາວມອນ-ຂະແມ ຊຶ່ງຖືກຫຼົງລືມຜ່ານມາດົນນານແລ້ວ. ພູພຽງແຫ່ງນີ້ເປັນຖິ່ນສູງ ຊຶ່ງມີປະຊາກອນເບົາບາງ, ກະແຈກກະຈາຍ ຕາມທົ່ງຫຍ້າທີ່ຮາບພຽງ ຊຶ່ງນຳໃຊ້ເພື່ອເປັນທົ່ງລ້ຽງສັດ ແລະ ເປັນເຂດທາງຜ່ານໄປສູ່ພາກສ່ວນອື່ນຂອງແຂວງນີ້. ເມື່ອລາວພວນກ່າວເຖິງທົ່ງໄຫຫີນ ມັນໝາຍເຖິງສະເພາະແຕ່ທົ່ງໄຫຫີນເທົ່ານັ້ນ ແຕ່ຄົນອື່ນອາດຄິດວ່າ ແມ່ນພາກກາງຂອງແຂວງຊຽງຂວາງ ຊຶ່ງມີຂອບເຂດຮອດເມືອງແປກ ແລະ ເມືອງຄູນ. ທົ່ງນີ້ ເປັນເຂດທົ່ງຮາບສູງ ຊຶ່ງມີພູຜານ້ອຍໃຫຍ່ຢັ່ງຢາຍຢ່າງງົດງາມກວ້າງຂວາງ, ມີປ່າດົງອັນຕຶບໜາ, ທົ່ງນາຮາບພຽງ ແລະ ໃນທົ່ງນີ້ ກໍມີທົ່ງໄຫຫີນຢູ່ນຳ. ໃນຊຸມປີ 1950 ທົ່ງແຫ່ງນີ້ ມີປະຊາກອນປະມານຫ້າສິບຫາ ຫົກສິບພັນຄົນ ຊຶ່ງລາວພວນກວມ 80 ສ່ວນຮ້ອຍ 10 ເປີເຊັນ ເປັນຊາວຈີນ, ຫວຽດນາມ ແລະ ອີກປະມານ 10 ເປີເຊັນ ແມ່ນມົ້ງ ແລະ ຂະມຸ.

ເຂດທົ່ງໄຫຫີນເປັນຈຸດໃຈກາງຂອງແຂວງ ຊຶ່ງກວມເອົາບັນດາຕົວເມືອງໃຫຍ່ຫຼາຍເມືອງເຊັ່ນ: ເມືອງຊຽງຂວາງ, ຄັງໄຂ ແລະ ໂພນສະຫວັນ. ຍ້ອນເງື່ອນໄຂ ທີ່ເປັນທົ່ງຮາບກວ້າງແປນ ທ່າມກາງບັນດາພູຜາສູງຊັນອ້ອມຂ້າງ ຈຶ່ງພາໃຫ້ກາຍເປັນເສັ້ນທາງຜ່ານຈາກຫວຽດນາມໄປສູ່ລ້ອງແມ່ນ້ຳຂອງຈີນກາຍເປັນສູນກາງທາງການຄ້າ. ສິນຄ້າຫຼາກຫຼາຍຊະນິດນັບແຕ່ ຝິ່ນ, ຄຳ ແລະ ແຜ່ນແພ ໄດ້ຖືກສົ່ງຜ່ານເຂດນີ້ ໄປສູ່ເຂດອາຊີຕາເວັນອອກສຽງໃຕ້ ແລະ ຂົງເຂດອື່ນໆ. ຍ້ອນວ່າເຂດນີ້ມີພູມອາກາດທີ່ເຢືອກເຢັນ, ມີທົ່ງຫຍ້າທີ່ສົມບູນ, ຫຍ້າດົກໜາ ແລະ ມີຊັບພະຍາກອນທຳມະຊາດສົມບູນ ຈຶ່ງເຮັດໃຫ້ເຂດນີ້ ມີຄວາມສຳຄັນອັນລ້ຳຄ່າທາງເສດຖະກິດ. ເຂດນີ້ເຄີຍເປັນຖິ່ນທີ່ມີການຜະລິດໝາກໄມ້ ແລະ ລ້ຽງສັດ ທີ່ຫຼາຍທີ່ສຸດຂອງປະເທດລາວ. ນອກຈາກນີ້ ກໍມີການຂຸດຄົ້ນເກືອ ແລະ ແຮ່ເຫຼັກ ແລະ ເປັນທີ່ເຊື່ອກັນວ່າ ມີບໍ່ຄຳ, ບໍ່ທອງແດງ ແລະ ຍັງມີຂີ້ຊີ ຂີ້ຄ່ັງ ຢ່າງຫຼວງຫຼາຍ. ປ່າດົງໃນຕອນນັ້ນ ແມ່ນຕຶບໜາຄືກັບໃນທົ່ວທຸກພາກຂອງເມືອງລາວ. ຍ້ອນມີມົນສະເໜ ອັນສວຍງາມ ຈຶ່ງພາໃຫ້ແຂກຄົນລາວ ແລະ ຕ່າງປະເທດ ໃຜໆ ກໍຢາກມາຢ້ຽມຢາມ. ນັກຂ່າວສະຫະລັດຊື່ ໂຮເບີດ ຊັບແລນ ເຄີຍໄດ້ມາຢາມທົ່ງໄຫຫີນພາຍຫຼັງ ທີ່ມີການທຳລາຍແລ້ວ ໃນເດືອນ ກັນຍາ 1969 ແລະ ໄດ້ຂຽນບັນຍາຍກ່ຽວກັບຄວາມສວຍງາມ ທ່າມກາງເສດຫາຍະນະວ່າ :

ທົ່ງໄຫຫີນມີຄວາມງົດງາມອັນເຫຼືອເຊື່ອ ຊຶ່ງຕັ້ງຢູ່ໃນລະດັບ 1,000 ແມັດ ເໜືອນ້ຳທະເລ. ເຖິງວ່າ ອາກາດຈະອົບເອົ້າໃນກາງລະດູແລ້ງ ເຮັດໃຫ້ຫຍ້າກາຍເປັນສີເຫຼືອງ ແຕ່ໃນວັນທີ່ມີແສງແດດພາຍຫຼັງຝົນຕົກ ໃນເວລາທີ່ຂ້າພະເຈົ້າຢູ່ທີ່ນັ້ນ ມັນກໍຍັງເປັນຖິ່ນທີ່ແສນສວຍງາມປະທັບໃຈ ຊຶ່ງເຕັມໄປດ້ວຍທົ່ງຫຍ້າອັນຂຽວງາມເໝືອນມໍລະກົດ. ນອກຈາກມີບາງບ່ອນຈະມີຮ່ອມຫ້ວຍ ແລະ ສາຍນ້ຳທີ່ມີກຸ່ມພືດພັນ ຫຼື ຕົ້ນໄມ້ນ້ອຍໃຫຍ່ທີ່ສວຍງາມ ເຫຼື້ອມລະຫຍິບ ລະຫຍັບ ຕ້ອງຜິວນ້ຳເບື້ອງລຸ່ມ. ໜອງນ້ຳສົ່ງແສງຄ້າຍກັບແວ່ນແຍງທີ່ສ່ອງໃສ ພາໃຫ້ສວຍງາມແທ້ໆ. ນອກນີ້ ກໍມີຝູງງົວ ຄວາຍ, ຝູງມ້າ ແລະ ລໍ ພາກັນກິນຫຍ້າ ເລາະລຽບ

ຕາມທ ິ ່ ງ ໄ ປ ທ ິ ່ ວ ແ ລ ະ ມ ີ ຄ ້ າ ຍ ອ ິ ບ ພ ະ ຍ ິ ບ ບ ່ ອ ນ ດ ຽ ວ ນ ອ ກ ນ ັ ້ ນ ກ ໍ ແ ມ ່ ນ ບ ໍ ່ ມ ີ ຫ ຍ ັ ງ ເ ລ ີ ຍ . ຊ ຽ ງ ຂ ວ າ ງ ກ າ ຍ ເ ປ ັ ນ ເ ສ ດ ທ ີ ່ ສ ະ ຫ ຼ ັ ກ ຫ ັ ກ ພ ັ ງ ຍ ົ ກ ເ ວ ັ ້ ນ ວ ັ ດ ວ າ ອ า ร า ม ท ี ่ ถ ู ก ท ำ ล า ย แ ล ะ ท ่ า ม ก ล า ง เ ส ด ส ะ ห ล ั ก ห ั ก พ ั ง ย ั ง ม ี พ ะ พ ุ ด ท ะ ร ู ป อ ิ ฐ ใ ห ญ ่ แ ล ะ น ้ อ ย ย ั ง ป ะ ใ ห ้ เ ห ็ น ใ น บ า ง บ ่ อ ม แ ล ะ ท ี ่ ค ั ง ไ ข ก ็ ม ี แ ต ่ เ ส ด ข อ ง เ ร ื อ น ร ้ า ง ท ี ่ ย ั ง ห ล ื ง เ ห ื อ อ ย ู ่ .

ข อ ง ข ว ั ญ จ า ก ท ำ ม ะ ช า ด ข อ ง ท ิ ่ ง ไ ห ป ่ ว ย แ ต ่ เ ร ั ด ใ ห ้ เ ข ด ด ั ่ ง ก ่ า ว ก า ย เ ป ็ น ท า ง ผ ่ า น ท า ง เ ส ด ถ ะ ก ิ ด . ค ว า ม อ ุ ด ม ส ม บ ู น , ท ิ ่ ง ท ี ่ ร า บ ส ู ง ก ็ ย ั ง เ ป ็ น ส ะ ถ า น ท ี ่ เ ห ม ะ ส ม ท ี ่ ส ุ ด เ พ ื ่ อ ใ ช ้ เ ป ็ น ท า ง ผ ่ า น ใ น ก า ร บ ุ ก ล ุ ก จ า ก เ ห ื อ ท า ใ ต ้ . โ ด ย ม ี ท ี ่ ต ั ้ ง ท า ง ย ุ ด ท ะ ส า ด ล ะ ห ว ่ า ง ก า ง พ า ก เ ห ื อ ข อ ง ห ว ่ ง ด น า ม แ ล ะ ล ้ อ ง แ ม ่ น ้ ำ ข อ ง , ท ิ ่ ง ไ ห ห ิ น จ ึ ่ ง เ ป ็ น เ ข ด ท ี ่ ม ี ก า น ย า ด แ ย ่ ง เ พ ื ่ อ ย ึ ด ค อ ง ห ล า ย ท ี ่ ส ุ ด แ ห ่ ง ห ึ ่ ง ใ น เ ข ด อ า ซ ิ ต า เ ว ั น อ อ ก ส ่ ง ใ ต ้ .

ส ำ ล ั บ ห ว ่ ง ด น า ม แ ล ้ อ เ ข ด ด ั ่ ง ก ่ า ว ส า ม า ด ก า ย เ ป ็ น ถ า น ท ั บ ท ี ่ บ ุ ก โ จ ม ต ี ไ ด ้ ย า ก จ า ก พ า ก ใ ต ้ , ใ น ท ำ น อ ง ด ย ั ก น ั เ ข ด ล ้ อ ง แ ม ่ น ้ ำ ข อ ง ถ ื อ ว ่ า เ ข ด ท ิ ่ ง ไ ห ห ิ น ส า ม า ด ใ ช ้ เ ป ็ น ถ า น ท ั บ ส ำ ล ั บ บ ุ ก เ ข ้ า พ า ก ใ ต ้ . จ า ก ป ะ ห ว ั ด ส า ด อ ั น ย า ว น า น เ ห ็ น ว ่ า ท ิ ่ ง ไ ห ห ิ น เ ค ี ย เ ป ็ น ส ะ ห ม ่ ำ ล ะ พ ู ม ก า น ต ่ ำ ส ู ้ อ ั น ย ิ ่ ง ใ ห ญ ่ เ ช ิ ่ ง ท ำ อ ิ ด แ ม ่ น ก า น ต ่ ำ ส ู ้ ก ั บ ส ั ด ต ู จ า ก ป ะ เ ห ด ใ ก ้ ย ง ๆ แ ล ะ ต ่ ม า เ ป ็ น ก า น ต ่ ำ ส ู ้ ก ั บ ม ะ ห า อ ำ น า ด ท ี ่ จ า ก ต ่ า ง ท ะ อ ิ บ .

จ า ก ก า น บ ั น ท ึ ก ท า ง ป ะ ห ว ั ด ส า ด เ ข ด ท ิ ่ ง ไ ห ห ิ น ถ ู ก แ บ ่ ง อ อ ก เ ป ็ น ส า ม ไ ล ย ะ ด ั ่ ง น ี ้ :

1. ส ะ ไ ห ส ั ก ด ิ น า แ ต ่ ป ี 1250 - 1893

ป ะ ห ว ั ด ส า ด ใ น ไ ล ย ะ ส ั ก ด ิ น า แ ม ่ น ป ะ ห ว ั ด ส า ด ท ี ่ แ ส ม เ ส ้ า ส ำ ล ั บ ช า ว ล า ว พ อ ม จ า ก ร ุ ่ น ห ึ ่ ง ต ่ ร ุ ่ น ห ึ ่ ง เ ป ็ น เ อ ล า ห ล า ย เ ช ั ่ น ค ื น . ใ น ไ ล ย ะ น ี ้ จ ะ ม ี แ ต ่ ส ิ ง ค า ม ค ั ้ ง แ ล ้ อ ค ั ้ ง อ ี ก เ ป ็ น เ อ ล า น า น ห ล า ย ป ี แ ล ะ จ า ก น ั ้ น ก ็ เ ป ็ น โ อ ก า ด ใ ห ้ พ อ ก ร ุ ก ร า น แ บ บ ห ม ่ ะ โ ด ด เ ข ้ า ม า แ ท น ท ี ่ . ม ั น เ ป ็ น ป ะ ห ว ั ด ส า ด ท ี ่ พ อ ก ส ั ก ด ิ น า ต ่ า ง ๆ เ ข ้ า ม า ก ่ อ ม

ເຊັ່ນ ພວກຂະແມ, ພະມ້າ, ຈີນຫໍ້ ລາວຈາກພາກເໜືອ, ຈາກພາກໃຕ້ ແລະ ສຸດທ້າຍກໍແມ່ນພວກສັກດິນາໄທ ເຂົ້າມາມີອຳນາດປົກຄອງເປັນ ເວລາດົນນານ.

2. ສະໄໝອານານິຄົມ 1893-1945

ນັບແຕ່ປີ 1893 ພວກຝະລັ່ງກໍເຂົ້າມາປົກຄອງ ຊຶ່ງເປັນຂີດ ໝາຍວ່າທິ່ງໄຫຫີນ ໄດ້ມີຜູ້ຮຸກຮານໃໝ່ຈາກແດນໄກທີ່ມີທັ້ງອຳນາດ ແລະ ເປັນຊາດທີ່ກ້າວໜ້າກວ່າເຂົ້າມາຄອບຄອງແທນ. ໃນໄລຍະທີ່ພວກ ຝະລັ່ງປົກຄອງ ໄດ້ມີຂະບວນການລຸກຮື້ຂຶ້ນຂອງປະຊາຊົນ ທີ່ກ່ຽດຊັ່ງ ການກົດຂີ່ຂົ່ມເຫັ່ງຂອງພວກເຂົາ ໃນການຊູ່ເຂັ່ນໃຊ້ແຮງງານ ແລະ ການ ເກັບພາສີແບບຂູດຮີດຈາກພວກຝະລັ່ງ. ນອກນີ້ ກໍມີການຂັດແຍ້ງກັນ ລະຫວ່າງພວກແມ້ວ ແລະ ພວກລາວ ແຕ່ພວກຝະລັ່ງກໍຍັງຮັກສາອຳນາດ ໄວ້ໄດ້ຈົນມາຮອດການເຂົ້າມາຢຶດຄອງ ຂອງຈັກກະພັດຍີ່ປຸ່ນໃນໄລຍະ ສົງຄາມໂລກຄັ້ງທີ 2.

3. ສະໄໝຫຼັງອານານິຄົມ 1946 - 1964

ໃນໄລຍະນີ້ ແມ່ນໄລຍະທີ່ພວກຝະລັ່ງຖອນອອກຈາກ ທິ່ງໄຫ ຫີນໃນປີ 1945, ຈາກນັ້ນມາ ພວກອາເມລິກາກໍໂດດເຂົ້າມາຄອບຄອງ ແທນ ທັ້ງນີ້ເພື່ອເປັນການໜູນຫຼັງໃຫ້ພວກແມ້ວ ເພື່ອເຮັດໃຫ້ເກີດສະໜໍ ລະພູມສົງຄາມເຢັນໃນທິ່ງໄຫຫີນ.

ໃນປີ 1946 ພວກຝະລັ່ງໄດ້ກັບຄືນມາຄອບຄອງຂົງເຂດນີ້ອີກ ແລະ ໄດ້ນຳໃຊ້ເປັນຖານທັບອາກາດ ແລະ ເປັນບ່ອນສະໜອງສຳພາລະ ແລະ ເປັນຖານບັນຊາການຈົນເຖິງປີ 1954 ຈຶ່ງຖືກໂຈມຕີໃຫ້ປະລາໄຊ ຈາກກອງທັບຂອງລາວ ແລະ ຫວຽດນາມ. ຈາກປີ 1954 ຮອດ 1960 ທິ່ງໄຫຫີນ, ໄດ້ຕົກຢູ່ພາຍໃຕ້ການຄຸ້ມຄອງຂອງພວກນິຍົມຕ່າງດ້າວ ຊຶ່ງ ມີສູນບັນຊາການຢູ່ທີ່ວຽງຈັນ ນຳໂດຍຄົນລາວ ຜູ້ຊຶ່ງຂຶ້ນກັບຝະລັ່ງຕ້ານ ກັບແນວລາວ ແລະ ຫວຽດນາມ ຊຶ່ງເປັນຂະບວນການເຄື່ອນໄຫວເພື່ອ ເອກະລາດ ໃນໄລຍະສົງຄາມອິນດູຈີນຄັ້ງທີໜຶ່ງ.

ໄລຍະນີ້ ແມ່ນໄລຍະທີ່ມີການແຕກພັກແຍກພວກກັນຢ່າງຮ້າຍແຮງໃນບັນດາຜູ້ນຳລາວ. ໃນຊຸມປີ 1940 ບັນດາຜູ້ນຳດັ່ງກ່າວ ເປັນສ່ວນໜຶ່ງຂອງແນວລາວອິດສະຫຼະ ເຄື່ອນໄຫວຕ້ານກັບຍີ່ປຸ່ນ ແຕ່ພໍມາຮອດທ້າຍປີ 1945 ເມື່ອພວກຝະລັ່ງໂດດເຂົ້າມາຄອບຄອງລາວເທື່ອໃໝ່, ພວກຂວາຈັດ ກໍໄດ້ຫັນມາຕໍ່ຕ້ານແນວລາວອິດສະຫຼະ. ໃນປີ 1949 ຝ່າຍຂວາ (ນຳພາໂດຍ ເຈົ້າສຸວັນນະພູມາ) ໄດ້ຈັດຕັ້ງລັດຖະບານພາຍໃຕ້ສະຫະພັນຝະລັ່ງ. ພວກເພິ່ນໄດ້ກັບມາລາວ ເພື່ອຮ່ວມກັບຝະລັ່ງ ທີ່ຕໍ່ຕ້ານພວກຫວຽດມິນ. ໃນປີ 1950 ໄດ້ມີການປະກາດສ້າງຕັ້ງເປັນປະເທດລາວ (ແຕ່ສ່ວນຫຼາຍແລ້ວ ຍັງຖືວ່າ ເປັນລາວອິດສະຫຼະ ຫຼື ມີຊື່ຕາມພັກການເມືອງແມ່ນ ແນວລາວຮັກຊາດ).

ໃນປີ 1954 ພວກເປັນກາງ ແລະ ຝ່າຍຂວາ ໄດ້ຈັດຕັ້ງລັດຖະບານແຫ່ງຊາດຂຶ້ນທີ່ວຽງຈັນ ສ່ວນພວກປະເທດລາວ ໄດ້ຍ້າຍໄປຕັ້ງສູນບັນຊາການທີ່ຊຳເໜືອ ພາກຕາເວັນອອກສຽງເໜືອຂອງລາວ. ທ.ງ.ໄ.ທ.ຫ.ນ ຊຶ່ງມີທີ່ຕັ້ງລະຫວ່າງກາງຂອງສອງຝ່າຍການເມືອງ ຈຶ່ງກາຍມາເປັນສະໜາມຮົບທາງດ້ານການເມືອງ ແລະ ຕໍ່ມາກໍເປັນສະໜາມຮົບທາງການທະຫານ.

ໃນປີ 1958 ພັກປະເທດລາວ ແລະ ພັກເປັນກາງຝ່າຍຊ້າຍ ໄດ້ຕົກລົງຮ່ວມກັນ ເພື່ອເຂົ້າຮ່ວມການເລືອກຕັ້ງສະພາແຫ່ງຊາດ ທັງນີ້ ເພື່ອເປັນການປະກອບສ່ວນໃຫ້ເປັນຕົວແທນຂອງລັດຖະບານແຫ່ງຊາດ. ໃນເມື່ອຊະນະການເລືອກຕັ້ງ ດ້ວຍຈຳນວນ 13 ບ່ອນນັ່ງຕໍ່ 21 ບ່ອນນັ່ງໃນສະພາ ພວກພັກຝ່າຍຂວາທີ່ສະໜັບສະໜູນໂດຍ ຊີ.ໄ.ອ.ເອ ພາຍໃຕ້ການບັນຊາຂອງນາຍພົນ ພູມີ ໜໍ່ສະຫວັນ ປົດຕຳແໜ່ງ ທ່ານ ສຸວັນນະພຸມມາ ແລະ ຈັບທ່ານ ສຸພານຸວົງ ແລະ ຜູ້ນຳຈຳນວນຫຼາຍຂອງປະເທດລາວເຂົ້າຄຸກ (ພວກເພິ່ນໂຕນຈາກຄຸກໃນ ວັນທີ 23 ພຶດສະພາ 1960 ແລະ ກັບໄປເຂດທີ່ໝັ້ນທີ່ຊຳເໜືອ).

ຜູ້ເປັນເຈົ້າການຕົ້ນຕໍຈາກຕາເວັນຕົກແມ່ນ ສະຫະລັດອາເມລິກາ ຊຶ່ງມີພາລະໃນການອູ້ມຊູ ລະບອບວຽງຈັນ (ກຸ່ມຝ່າຍຂວາຍຶດອຳນາດ)

ແຕ່ປີ 1955 ຮອດ 1963 ເປັນຈຳນວນເງິນ 480,7 ລ້ານດອນລາ ໂດຍໄດ້ເພີ່ມກຳລັງກອງທັບຂອງຝ່າຍຂວາຈາກຈຳນວນ ສອງສາມພັນ ໃນເມື່ອກ່ອນ ມາເປັນ ສາມສິບພັນກວ່າຄົນໃນປີ 1960. ໃນເວລານັ້ນ ພວກຊີໄອເອ ໄດ້ແຍກພວກແມ້ວອອກມາເປັນກອງທັບຕ່າງຫາກ ໃນ ແຂວງຊຽງຂວາງ ແລະ ພວກຊີໄອເອ ໄດ້ເປັນເຈົ້າການນຳເອົາຍານອາ ກາດ ແອ ອາເມລິກາ ເຂົ້າມາໃນລາວ ທັງນີ້ ເພື່ອເຮັດໃຫ້ສະຫະລັດ ອາເມລິກາ ມີຄວາມສາມາດຄວບຄຸມ ແລະ ບັນຊາໃນທຸກສະພາບການ ໃນເຂດຊຽງຂວາງດ້ວຍຕົນເອງ.

ການສ້າງຕັ້ງກອງທັບແມ້ວເປັນວຽກສຳຄັນຫຼາຍ. ໃນຊຸມປີ 1930 ພວກຝະລັ່ງ ໄດ້ແຕ່ງຕັ້ງ ຕູບີ ລີຟຸ ເປັນເຈົ້າເມືອງຂອງພວກແມ້ວ ແທນ ໄຟດ່າ ຜູ້ເປັນລູກອ້າຍລຸກນ້ອງກັບ ຕູບີ. ເພື່ອເປັນການຕອບແທນ ຕູບີ ໄດ້ເຂົ້າຂ້າງກັບຝະລັ່ງ ຫັນມາຕ້ານພວກປະເທດລາວ. ໃນປີ 1949 ພວກແມ້ວໄດ້ແບ່ງອອກເປັນສອງພັກຕໍ່ຕ້ານກັນ ຊຶ່ງ ທ່ານ ໄຟດ່າ ທີ່ ເປັນຜູ້ນຳອີກຝ່າຍໜຶ່ງ ແມ່ນເປັນຮອງ ປະທານຝ່າຍປະເທດລາວ. ພາຍ ຫຼັງປີ 1954 ສະຫະລັດ ອາເມລິກາ ໂດຍສົມທົບກັບ ຕູບີ ແລະ ຮ້ອຍ ເອກ ວັງປາວ ເຊິ່ງໃນເວລານັ້ນ ຍັງບໍ່ເປັນທີ່ຮູ້ຈັກ, ໄດ້ພາກັນສ້າງຕັ້ງ ກອງທັບໂດດຈ້ອງເອກະລາດພິເສດ ເພື່ອຕໍ່ສູ້ກັບຝ່າຍປະເທດລາວ. ໃນ ເດືອນ ກໍລະກົດ 1961 ທ່ານ ພັນເອກ ເອດວາດ ແລນສະເດນ ໄດ້ ລາຍ ງານເຖິງເອກອັກຄະລັດຖະທູດອາເມລິກາ ທ່ານ ມັກສະແວນ ເທເລີ ທີ່ຫວງດນາມວ່າ: ມີທະຫານແມ້ວປະມານເກົ້າພັນຄົນ ໄດ້ຮັບການປະ ກອບອາວຸດ ເພື່ອການປະຕິບັດງານ ເປັນກອງໂຈນ ຊຶ່ງກຳລັງດຳເນີນ ການຢູ່ຢ່າງມີປະສິດທິຜົນສູງ ໃນເຂດແດນຂອງຄອມມຸຍນິດ ໃນດິນແດນ ລາວ. ຜູ້ນຳທາງການເມືອງຂອງພວກແມ້ວ ແມ່ນຢູ່ພາຍໃຕ້ການຄວບ ຄຸມຂອງ ຕູບີ ລີຟຸ ຊຶ່ງດຳເນີນການເອກະລາດ ຕັດອອກຈາກການຊີ້ ນຳຂອງຝ່າຍວຽງຈັນ; ສ່ວນຜູ້ນຳທາງທະຫານແມ່ນ ພັນໂທ ວັງປາວ ເປັນ ຜູ້ບັນຊາການທະຫານຢູ່ສະໜາມຮົບ. ຫົວໜ້າ ຊີໄອເອ ທີ່ວຽງຈັນເປັນ ຜູ້ ບັນຊາການປະຕິບັດງານຂອງກອງທັບແມ້ວ ໂດຍການ ຊີ້ນຳຂອງຫົວໜ້າ

M A A G ໃນລາວ.

ໃນເດືອນມັງກອນປີ 1961 ຝ່າຍຕາເວັນຕົກໄດ້ເສຍການຄວບຄຸມເກືອບທັງໝົດ ໃນເຂດທົ່ງໄຫຫີນ ໃຫ້ພັນທະມິດຂອງຝ່າຍປະເທດລາວ ເຊິ່ງແມ່ນກອງທັບຝ່າຍເປັນກາງຄື ທ່ານ ກອງແລ ຊຶ່ງເຄີຍເປັນຮ້ອຍເອກ ກອງທັບໂດດຈ້ອງ ຜູ້ທີ່ເຄີຍເຂົ້າຢຶດອຳນາດຢູ່ວຽງຈັນໃນເດືອນສິງຫາ 1960. ກອງແລຮ່ວມມືກັບຝ່າຍປະເທດລາວ ພາຍຫຼັງທີ່ສະຫະລັດ ອາເມລິກາ ປະຕິເສດໃຫ້ສະໜັບສະໜູນການເຮັດລັດຖະປະຫານຂອງກອງແລ. ພາຍໃນແຂວງຊຽງຂວາງ ອິດທິພົນຂອງສະຫະລັດ ອາເມລິກາ ໄດ້ຫຼຸດລົງຫຼາຍ ຊຶ່ງຍັງເຫຼືອແຕ່ພາກສ່ວນຕາເວັນຕົກສຽງໃຕ້ຂອງທົ່ງໄຫຫີນ ຊຶ່ງເປັນເຂດຖານທັບທາງທະຫານ ນັ້ນຄື ເຂດລ່ອງແຈ້ງ ຊຶ່ງແມ່ນກອງທັບທະຫານແມ້ວ ທີ່ຊີ້ນຳໂດຍກົງຈາກ ຊີໄອເອ ແລະ ກອງທັບແມ້ວອິດສະຫຼະປະຈຳຢູ່ທີ່ນັ້ນ.

ທ່ານ ກອງແລ ໄດ້ຈັດຕັ້ງເຂດການປົກຄອງທີ່ເມືອງ ຄັງໄຂ ໂດຍການເປັນນາຍົກລັດຖະມົນຕີຂອງ ທ່ານ ສຸວັນນະພູມາ. ທັງຝ່າຍກອງແລ ແລະ ຝ່າຍປະເທດລາວ ແມ່ນໄດ້ຮັບການສະໜັບສະໜູນຈາກສະຫະພາບໂຊວຽດ ໄດ້ສືບຕໍ່ ຕໍ່ສູ້ຕ້ານກັບກອງທັບລາວ ແລະ ແມ້ວ ທີ່ອຸ້ມຊູໂດຍກົງ ຈົນຮອດເດືອນ ກໍລະກົດ 1962 ຈຶ່ງເກີດມີສັນຕິພາບ. ຈາກນັ້ນ ທ່ານ ສຸວັນນະພູມາ ກໍກັບມາວຽງຈັນ ເພື່ອເປັນຜູ້ນຳຂອງລັດຖະບານແຫ່ງຊາດ ຊຶ່ງຖືກສ້າງຕັ້ງຂຶ້ນຕາມສົນທິສັນຍາ ເຈເນວາ ກ່ຽວກັບປະເທດລາວ ປີ 1962.

ໃນໄລຍະປີ 1963 ສາຍສຳພັນຂອງ ກອງແລ ກັບຝ່າຍປະເທດລາວເລີ່ມມີການແຕກແຍກ. ເຖິງແມ່ນວ່າ ກອງແລ ຫັນກັບໄປຂໍຄວາມຊ່ວຍເຫຼືອຈາກສະຫະລັດອາເມລິກາ ແຕ່ສິ່ງທີ່ກອງແລໄດ້ຮັບກໍ່ຍັງບໍ່ພຽງພໍເພື່ອໃຫ້ກອງທັບສາມາດສືບຕໍ່ໄປໄດ້. ພາກສ່ວນໜຶ່ງຂອງກອງທັບ ກອງແລ ຊຶ່ງນຳພາ ໂດຍ ພັນເອກ ເດືອນ ໄດ້ເຂົ້າຮ່ວມກັບຝ່າຍປະເທດລາວ ດັ່ງນັ້ນ ກອງແລ ຈຶ່ງຕ້ອງໄດ້ເປີດເສີກັບສອງຝ່າຍຄື ຝ່າຍໜຶ່ງແມ່ນກັບຝ່າຍຂວາ ແລະ ທ່ານ ເດືອນ ແລະ ອີກຝ່າຍໜຶ່ງແມ່ນ ປະເທດ

ລາວ. ໃນທີ່ສຸດ ຝ່າຍທ່ານ ເດືອນ ແລະ ປະເທດລາວ ກໍສາມາດຂັບໄລ່ ກອງແລ ອອກຈາກທົ່ງໄຫຫີນ ໃນເດືອນ ພຶດສະພາ 1964.

ຝ່າຍຕາເວັນຕົກໄດ້ສືບຕໍ່ຕັ້ງທີ່ໝັ້ນ ໃນເຂດລ່ອງແຈ້ງ ແລະ ບັນ ດາຈອມພູສູງຕ່າງໆ ຊຶ່ງເປັນເຂດບ້ານແມ້ວໃນແຂວງຊຽງຂວາງທັ້ງໝົດ ຊຶ່ງສ່ວນໃຫຍ່ແມ່ນໄດ້ຮັບການສະໜັບສະໜູນຈາກແອ ອາເມລິກາ. ເລີ່ມ ແຕ່ຊຸມປີ 1960 ເຖິງວ່າ ຈຳນວນຂອງພວກແມ້ວ ໄດ້ເພີ່ມຂຶ້ນ ແຕ່ກໍ່ມີ ການຍົກຍ້າຍ ຈາກເຂດບ້ານຕ່າງໆ ລົງມາສູ່ເຂດລ່ອງແຈ້ງ ແລະ ບາງສ່ວນ ກໍ່ໄດ້ລີ້ໄພຢູ່ເຂດດັ່ງກ່າວ ຍ້ອນເກີດການຕໍ່ສູ້ອັນຮ້າຍແຮງເພີ່ມຂຶ້ນ. ຝ່າຍປະເທດລາວ ໄດ້ເຂົ້າຄວບຄຸມ 80 ເປີເຊັນ ຂອງເຂດທົ່ງຮາບຊຽງ ຂວາງ ຈາກທາງພາກໃຕ້ ແລະ ຕາເວັນຕົກສຽງໃຕ້ຂອງທົ່ງໄຫຫີນ ລວມ ທັງເຂດຊຽງຂວາງ ທີ່ມີຊາຍຕິດກັບ ຊຳເໜືອ ແລະ ຫວຽດນາມ. ມາຮອດ ນີ້ ຍຸກການປົກຄອງທົ່ງໄຫຫີນຂອງພວກລ່າເມືອງຂຶ້ນໄດ້ສ້ຽງສຸດລົງ.

III. ສະໜາມຮົບແບບອັດຕະໂນມັດ ແຕ່ປີ 1964-1969

ສະຫະລັດອາເມລິກາໄດ້ເປີດສົງຄາມທາງອາກາດຂະໜາດໃຫຍ່ ທົ່ວປະເທດລາວ ເພື່ອຫວັງທຳລາຍພື້ນຖານໂຄງລ່າງທາງກາຍະພາກ ກໍ່ຄືທາງສັງຄົມ ໃນເຂດປົກຄອງຂອງຝ່າຍປະເທດລາວ.... ຕະຫຼອດ ເວລາທີ່ເຮັດສົງຄາມ ແມ່ນມີການນຳໃຊ້ນະໂຍບາຍແບບປິດລັບ.... ການ ຖິ້ມລະເບີດໄດ້ເຮັດໃຫ້ເກີດມີການບາດເຈັບ ແລະ ລົ້ມຕາຍຈຳນວນຫຼວງ ຫຼາຍແກ່ພົນລະເຮືອນ.

(ລາຍງານຂອງອະນຸກຳມະການສະພາສູງ ຂອງສະຫະລັດ ກ່ຽວ ກັບຜູ້ລີ້ໄພ)

ວັງປາວ ເຄື່ອນກຳລັງອອກໄປສູ່ສະໜາມຮົບ, ຊີ້ຈຸດທີ່ຕັ້ງຂອງ ຝ່າຍກົງກັນຂ້າມ ແລ້ວຖອນກັບ ແລະ ຈາກນັ້ນ ກຳລັງທາງອາກາດ ກໍ່ ເຂົ້າມາຖະຫຼີ່ມແທນທີ່.

(ຄຳໃຫ້ການຂອງນາຍພົນ ໂຮເບີດ ພີທິດ, ຮອງຜູ້ບັນຊາການ ຖານທັບອາກາດ ທີ່ອຸດອນ ປະເທດໄທ)

ການປົກຄອງທົ່ງໄຫຫີນຂອງຝ່າຍປະເທດລາວ ໄດ້ເລີ່ມຂຶ້ນໃນ ເດືອນ ພຶດສະພາ 1964 ແລະ ໄດ້ນຳພາປະຊາຊົນເຂົ້າສູ່ຍຸກຫຼັງອານາ ນິຄົມ. ເປັນຄັ້ງທຳອິດ ທີ່ປະຊາຊົນໄດ້ຖືກສອນໃຫ້ມີຄວາມພູມໃຈໃນ ປະເທດຊາດ ແລະ ປະຊາຊົນລາວ ແທນທີ່ຈະໃຫ້ມີຄວາມນິຍົມຊົມຊອບ ວັດທະນະທຳຕ່າງປະເທດ, ໄດ້ມີການໂຄສະນາເຜີຍແຜ່, ຈັດຕັ້ງເປັນ ໂຮງຮຽນ ແລະ ລົບລ້າງການກົກໜ້າສືໃຫ້ປະຊາຊົນຫຼາຍຂຶ້ນ ໂດຍມີການ ສອນເປັນພາສາລາວ ແທນການສອນເປັນພາສາຝະລັ່ງ ແລະ ເລີ່ມເຂົ້າສູ່ ການປະຕິວັດທາງສັງຄົມຮອບດ້ານເທື່ອລະກ້າວ ໂດຍເລີ່ມຈາກການປະ ຕິຮູບທີ່ດິນ ໄປສູ່ຄວາມສະເໝີພາບລະຫວ່າງຍິງ-ຊາຍເພີ່ມຂຶ້ນ. . .

ໃນໄລຍະນີ້ ຝ່າຍຫວຽດນາມເໜືອ ແມ່ນມີສ່ວນຮ່ວມພຽງເລັກ ໜ້ອຍ ໂດຍມີທີ່ປຶກສາທາງເສດຖະກິດ ແລະ ການທະຫານມາປະຈຳ ການນັບແຕ່ 1964 - 1968 ແຕ່ເມື່ອທຽບໃສ່ກັບການຊ່ວຍເຫຼືອທາງດ້ານ ອຸປະກອນຈາກອາເມລິກາໃຫ້ແກ່ລັດຖະບານວຽງຈັນ ຖືວ່າ ມີພຽງເລັກ ໜ້ອຍ. ອີງຕາມການບອກເລົ່າຂອງພວກອົບພະຍົບແລ້ວ ທີ່ປຶກສາ ຫວຽດນາມ ແມ່ນແຍກຕົວຢູ່ຕ່າງຫາກ ແລະ ບໍ່ຄ່ອຍເຂົ້າມາຫຍຸ້ງກ່ຽວກັບ ປະຊາຊົນເຂດທົ່ງໄຫໂດຍກົງ.

ເພື່ອເປັນການຕໍ່ຕ້ານກັບຝ່າຍຫວຽດນາມເໜືອຢ່າງເດັດດ່ຽວ ນັ້ນ ພະນັກງານທີ່ເຮັດວຽກໃຫ້ກອງທຶນຊ່ວຍເຫຼືອຂອງອາເມລິກາ ໄດ້ ຂຸນລົງໃນເອກະສານ ທີ່ມີການເຜີຍແຜ່ຢ່າງກວ້າງຂວາງ ໂດຍສະຖານ ທູດອາເມລິກາໃນລາວວ່າ "ພວກພະນັກງານຫວຽດນາມເໜືອ ຢູ່ແຍກ ກັບຄົນລາວແບບໂດດດ່ຽວ... ລ້ຽງສັດ ແລະ ປູກຝັງກິນເອງ ແລະ ຮັກ ສາລະບຽບວິໄນຢ່າງເຄັ່ງຄັດພາຍ ...."

ຕົກມາໃນທ້າຍປີ 1969 ມີກອງກຳລັງຂອງຫວຽດນາມເໜືອ ປະ ມານພັນຫາສອງພັນຄົນ ເຄື່ອນເຂົ້າມາສູ່ຊຽງຂວາງ. ໄດ້ມີການຕອບ ໂຕ້ດ້ວຍການຖິ້ມລະເບີດຢ່າງໜັກໜ່ວງ ແລະ ໄດ້ມີການເພີ່ມຈຳນວນ ທະຫານໄທ ແລະ ອາເມລິກາ ເຂົ້າໃນການຕໍ່ສູ້ຢູ່ທົ່ວພາກເໜືອຂອງ ລາວ. ພ້ອມກັນນັ້ນ ອາເມລິກາກໍ່ຍັງນຳໃຊ້ພາກເໜືອຂອງລາວ ເພື່ອຕິດ

ຕັ້ງຖານເຮດາ ແລະ ສອດແນມ ແລະ ປະຕິບັດການລອບສັງຫານ ໃນຫວຽດນາມເໜືອ. ໃນໄລຍະນີ້ ກອງທັບຂອງຫວຽດນາມເໜືອ ກໍຍັງ ຮັກສາສະພາບເດີມ ໂດຍການຢູ່ແຍກຈາກປະຊາຊົນລາວ ຕາບໃດທີ່ ກອງທັບປະເທດລາວ ຍັງຮັກສາສະພາບຕົນເອງໄດ້.

ເດືອນ ພຶດສະພາ 1964 ນອກຈາກຈະກາຍເປັນຂີດໝາຍຂອງ ຍຸກສະໄໝໃໝ່ ແຫ່ງລະບອບປົກຄອງຂອງແມວລາວຮັກຊາດ ສຳລັບປະ ຊາຊົນທົ່ງໄຫຫີນແລ້ວ, ມັນຍັງເປັນຈຸດເລີ່ມຕົ້ນຂອງການຖິ້ມລະເບີດ ເທື່ອທຳອິດ.

ສຳລັບນັກການເມືອງອາເມລິກາ ເຫັນວ່າ ພວກເຂົາກຳລັງປະເຊີນ ໜ້າກັບສະພາບການອັນໃໝ່ ເນື່ອງຈາກໄຊຊະນະຂອງຝ່າຍປະເທດລາວ ຢູ່ເຂດທົ່ງໄຫຫີນ. ອີກດ້ານໜຶ່ງ ຝ່າຍຕາເວັນຕົກຍັງສືບຕໍ່ ມຸ່ງໝັ້ນໃນ ການຮັກສາເຂດລ່ອງແມ່ນ້ຳຂອງ ດ້ວຍການເຮັດໃຫ້ຝ່າຍປະເທດລາວ ໃນພາກເໜືອຂອງລາວອ່ອນແອລົງໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ເພື່ອຫວັງ ໃຊ້ເຂດດັ່ງກ່າວເປັນຖານການປະຕິບັດການຕ້ານກັບຫວຽດນາມເໜືອ. ອີກດ້ານໜຶ່ງ ພວກເຂົາກໍບໍ່ສາມາດເອື່ອຍອີງໃສ່ຄວາມເຂັ້ມແຂງຂອງ ກຳລັງພາກພື້ນດິນ ໃນການຮັກສາທີ່ໝັ້ນໃນພາກເໜືອຂອງລາວອີກຕໍ່ ໄປ. ເຫັນຈະແຈ້ງວ່າ ກອງກຳລັງຝ່າຍຂວາລາວ ແລະ ແມ້ວ ທີ່ສະໜັບ ສະໜູນໂດຍສະຫະລັດ ອາເມລິກາ ອ່ອນແອກວ່າກຳລັງຂອງປະເທດ ລາວ ແລະ ກອງທະຫານພາກພື້ນດິນຂອງອາເມລິກາ (ທະຫານບົກ) ທີ່ມີຈຳນວນຫຼວງຫຼາຍ ກໍບໍ່ສາມາດນຳເຂົ້າມາສູ້ຮົບໄດ້ຢ່າງເປີດເຜີຍ ເພາະຢ້ານວ່າ ຈະເກີດມີບັ້ນຮົບທີສອງໃນສົງຄາມຫວຽດນາມ ທີ່ກຳລັງ ເພີ່ມຄວາມຮຸນແຮງຂຶ້ນ ແລະ ເພາະຜູ້ນຳອາເມລິກາບໍ່ຢາກຖືກກ່າວຫາວ່າ ຝ່າຝືນສົນທິສັນຍາເປັນກາງຂອງລາວ ປີ 1962.

ດ້ວຍເຫດນີ້ ການຕັດສິນໃຈເຮັດສົງຄາມຢູ່ທົ່ງໄຫຫີນ ຈຶ່ງດຳເນີນ ແບບລັບໆ ໂດຍການໂຈມຕີທາງອາກາດເປັນສ່ວນໃຫຍ່. ອຸປະກອນຮັບ ໃຊ້ສົງຄາມແບບໃໝ່ ຊຶ່ງບໍ່ມີໃຜໃນປະຫວັດສາດເຄີຍເຫັນກໍໄດ້ນຳມາໃຊ້ ໃນບ່ອນນີ້.

ໃນເມື່ອກ່ອນ ສົງຄາມໃນຊ່ຽງຂວາງ ແມ່ນຕໍ່ສູ້ກັນດ້ວຍທະຫານບົກ ແຕ່ມາຕອນນີ້ ນອກຈາກກຸ່ມທະຫານແມ້ວຈຳນວນໜ້ອຍທີ່ທຳການສອດແນມ, ມ້າງເພທຳລາຍ ແລະ ລອບສັງຫານ ແລະ ຍິງປືນຄົກໃນພາກຕາເວັນຕົກຂອງທົ່ງໄຫແລ້ວ ເກືອບເວົ້າໄດ້ວ່າ ບໍ່ມີການຕໍ່ສູ້ກັນທາງພາກພື້ນດິນເລີຍ ນັບແຕ່ປີ 1964 ຮອດ 1969.

ແຕ່ກ່ອນ ສັດຕູຈາກພາຍນອກຫວັງແຕ່ຈະມາຄອບຄອງທົ່ງໄຫ ແຕ່ມາຕອນນີ້ ສະຫະລັດອາເມລິກາບໍ່ໄດ້ມີແຜນການຈະເອົາທົ່ງໄຫຫີນຄືນຈີນຮອດປີ 1969 ແຕ່ເປົ້າໝາຍອັນສຳຄັນຂອງສົງຄາມທາງອາກາດແມ່ນເພື່ອທຳລາຍໂຄງສ້າງທາງສັງຄົມ ແລະ ເສດຖະກິດ ຂອງເຂດທີ່ຝ່າຍປະເທດລາວຢຶດຄອງຢູ່. ໃນສົງຄາມຄັ້ງນີ້ ບໍ່ໄດ້ແນໃສ່ເອົາຊະນະປະເທດລາວ ແຕ່ເພື່ອເຮັດໃຫ້ຝ່າຍປະເທດລາວເຈັບແສບດ້ວຍການຕັດຮອນການສະໜອງດ້ານສະບຽງອາຫານ ທຳລາຍເສັ້ນທາງຂົນສົ່ງ ແລະ ການຄົມມະນາຄົມ, ຂ້າພະນັກງານ ແລະ ຜູ້ຂົນສົ່ງເຂົ້າປາອາຫານ, ຂູ່ຂວັນປະຊາຊົນພົນລະເຮືອນ ແລະ ໃນທີ່ສຸດກໍ່ກາຍເປັນສາເຫດເຮັດໃຫ້ມີການອົບພະຍົບຫຼັ່ງໄຫຼອອກຈາກເຂດທົ່ງໄຫຫີນຈີນໝົດ.

ໃນເມື່ອກ່ອນ ປະຊາຊົນສາມາດຮ້ອງຂໍທີ່ພັກອາໄສຈາກຜູ້ມາເຮັດສົງຄາມໃນດິນແດນຂອງເຂົາເຈົ້າໄດ້ ແຕ່ມາຄາວນີ້ ແມ່ນບໍ່ມີທາງເລີຍທີ່ຈະມາອ້ອນວອນ ຫຼື ຕໍ່ລອງກັນກັບເຄື່ອງຈັກໄດ້.

ທຸກວັນ ເປັນເວລາຫ້າປີເຄິ່ງ ທີ່ພາຫະນະສົງຄາມອັນທັນສະໄໝໄດ້ຖືກສົ່ງເຂົ້າມາເວີ່ນເປັນຫຼາຍຊັ້ນທົ່ວເຂດທົ່ງໄຫຫີນ, ເມືອງ ແລະ ບ້ານຕ່າງໆ ເຊັ່ນ ຍົນສອດແນມ ບົນລະດັບສູງ 600 ແມັດ, ຍົນຖິ້ມລະເບີດສະໜັບສະໜູນ, ຍົນປືນກົນ ແລະ ຍົນຍິງຈ້ອງແສງບົນໃນລະດັບສູງ 1,500 ແມັດ, ຍົນອາຍພົ່ນຖິ້ມລະເບີດ, ຍົນສອດແນມ ແລະ ຍົນເອເລັກໂຕນິກ ລະດັບສູງ 3000 ແມັດ, ຍົນເຕີມນ້ຳມັນກາງອາກາດ ບົນລະດັບສູງ 6,000 ແມັດ, ຍົນບັນຊາ ແລະ ຄວບຄຸມທີ່ໃຊ້ລະບົບຄອມພິວເຕີບົນລະດັບສູງ 10,000 ແມັດ ເພື່ອປະສານການຖິ້ມລະເບີດ ແລະ ຍິງປືນໃຫຍ່ຢູ່ພາກພື້ນດິນ.

ທຸກວັນເປັນເວລາຫ້າປີເຄິ່ງ ທີ່ຍົນສອດແນມ ແລະ ຍົນເອເລັກໂຕນິກ ໄດ້ຖ່າຍຟິມ ແລະ ຕິດຕາມການເຄື່ອນໄຫວຂອງຄົນທາງເບື້ອງລຸ່ມ, ຈາກນັ້ນ ບັນດາຍົນຖິ້ມລະເບີດຈະຖິ້ມລະເບີດລົງມາໃສ່ ພ້ອມດ້ວຍ ຟິດສະຟໍຣັດສີຂາວ, ລະເບີດດາວກະຈາຍ, ໝາກບົມບີ່ ແລະ ລະເບີດ ແຮງສູງແບບແຕກທັນທີ ຫຼື ແບບນານແຕກ ນອກນັ້ນ ບັນດາຍົນປືນກົນ ກໍຈະກວາດຍິງທຳລາຍ.

ໃນໄລຍະຕົ້ນປີ 1964 ການຖິ້ມລະເບີດມີປະມານຫ້າຫົກເທື່ອ ຕໍ່ວັນ ແລະ ເພີ່ມຂຶ້ນເປັນຊາວ-ສາມສິບຄັ້ງຕໍ່ວັນ ແລະ ຮອດ 1969 ເປັນຮ້ອຍໆ ຄັ້ງຕໍ່ວັນ. ໃນເດືອນ ພຶດສະພາ 1964 ການຖິ້ມລະເບີດ ແມ່ນໃຊ້ແຕ່ຍົນເຕ 28 ໃນການຖິ້ມລະເບີດໃສ່ປ່າດົງ. ມາຮອດ 1967 ຍົນອາຍພົ່ນມີຫຼາຍກວ່າຍົນແບບໃບພັດ ແລະ ໝູ່ບ້ານກໍ່ຖືກຖິ້ມລະເບີດ ໃສ່ຖີ່ຂຶ້ນ ຈົນເຮັດໃຫ້ປະຊາຊົນຕ້ອງໜີເຂົ້າປ່າດົງ. ຫຼັງຈາກເດືອນ ພະຈິກ 1968 ມີການຢຸດຍິງທີ່ຫວຽດນາມເໜືອ ຍົນທີ່ເຄີຍໃຊ້ຍິງຫວຽດນາມ ກໍພາກັນມາຍິງທີ່ງໄຫໜັກຂຶ້ນ ແລະ ທຸກຢ່າງຖືກທຳລາຍຈົນບໍ່ມີເຫຼືອ.

ການຖິ້ມລະເບີດ ແມ່ນມີລັກສະນະເພື່ອທຳລາຍປະຊາຊົນພົນລະ ເຮືອນໃຫ້ໜັກຂຶ້ນກວ່າເກົ່າ. ຈາກການສຳພາດຊາວອົບພະຍົບຈາກທົ່ງ ໄຫຫີນກວ່າພັນຄົນ ພວກເຮົາໄດ້ບັນທຶກພາບ ແລະ ບັນທຶກສຽງ ຫຼາຍ ສິບກໍລະນີ ກ່ຽວກັບຊາວບ້ານທີ່ຖືກຂ້າຕາຍ ຫຼື ຖືກບາດເຈັບຈາກລະເບີດ.

ຊາວອົບພະຍົບເຫຼົ່ານີ້ໄດ້ເວົ້າວ່າ ສາເຫດຂອງການເສຍຫາຍ ແມ່ນມາຈາກພວກເດັກນ້ອຍ ທີ່ບໍ່ຮູ້ວິທີການຫຼົບຫຼີກ ແລະ ຜູ້ໃຫຍ່ກໍ ບໍ່ຄ່ອຍໄດ້ບອກວິທີໃຫ້ໄປຫາບ່ອນປອດໄພໄດ້ທັນນັ້ນເອງ. ສະເພາະ ພວກທະຫານແລ້ວ ແມ່ນມີໜ້ອຍທີ່ຈະຖືກລະເບີດແບບນີ້ ພວກອົບ ພະຍົບເວົ້າວ່າ ພວກກອງທັບໄດ້ລີ້ຊ່ອນຢູ່ໃນປ່າເລິກ ແລະ ມີການ ເຄື່ອນຍ້າຍເລື້ອຍໆ ຊຶ່ງແບ່ງອອກເປັນກຸ່ມນ້ອຍໆ. ຜູ້ໄດ້ຮັບເຄາະກຳ ສ່ວນຫຼາຍ ແມ່ນພວກປະຊາຊົນ ເພາະຄອບຄົວທັ້ງໝົດແລ່ນໜີບໍ່ທັນ ແລະ ຕ້ອງພາກັນລີ້ຢູ່ໃກ້ກັບບ້ານຂອງເຂົາເຈົ້າ ເຊິ່ງແມ່ນເປົ້າໝາຍໃນ ການຖິ້ມລະເບີດໃສ່ຫຼາຍທີ່ສຸດ.

ບໍ່ມີໃຜອະທິບາຍລັກສະນະຂອງການຖິ້ມລະເບີດຈະແຈ້ງກວ່າ ທ່ານ ຈອກຊ໌ ຊາເປີລີເອ (George Chapelier) ທີ່ປຶກສາຈາກແບນຊຶກ ຂອງສະຫະປະຊາຊາດ. ທ່ານໄດ້ສຶກສາລາຍລະອຽດຢ່າງເລິກເຊິ່ງກ່ຽວ ກັບຊາວອົບພະຍົບຈາກທົ່ງໄຫຫີນ ຊຶ່ງມີດັ່ງນີ້ :

ກ່ອນປີ 1967 ການຖິ້ມລະເບີດກໍມີເບົາບາງ ແລະ ຫ່າງຈາກ ເຂດຊຸມຊຶນຢູ່. ມາຮອດ 1968 ການຖິ້ມລະເບີດກໍເພີ່ມຂຶ້ນຫຼາຍ ແລະ ຖິ້ມຊະຊາຍໄປທຸກບ່ອນ ຊຶ່ງຍາກທີ່ຊາວບ້ານຈະເອົາຊີວິດລອດ. ດັ່ງນັ້ນ ປະຊາຊົນຈຶ່ງຍ້າຍອອກຈາກຕົວເມືອງໄປຢູ່ແຄມປ່າ ແລະ ເຂົ້າປ່າເລິກ. ຈົນມາຮອດ1969ການຖິ້ມລະເບີດກ້າວຂຶ້ນສູ່ຂີດສູງສຸດ ເມື່ອຍົນອາຍພົ່ນ ທຳລາຍໂຄງສ້າງທຸກຢ່າງລົງ ຈົນບໍ່ມີຫຍັງໃຫ້ເຫຼືອຊີ້ຟ້າອີກ. ປະຊາຊົນ ຕ້ອງໄປລີ້ຢູ່ຕາມຂຸມຄອງ, ໃນຖ້ຳ ໃນຮູ ແລະ ສາມາດອອກມາເຮັດນາ ຍາມກາງຄືນເທົ່ານັ້ນ. ເຮືອນຊານບ້ານຊ່ອງຖືກທຳລາຍລ້າງບໍ່ມີຫຍັງ ເຫຼືອ. ໃນໄລຍະສຸດທ້າຍ ການຖິ້ມລະເບີດແມ່ນແນໃສ່ທຳລາຍລະບົບ ໂຄງລ່າງພື້ນຖານສຳລັບການດຳລົງຊີວິດຂອງປະຊາຊົນພົນລະເຮືອນ ແມ່ນແຕ່ໄຮ່ນາ ເຂົ້າໃນນາກໍບໍ່ເຫຼືອ ຈຶ່ງພາໃຫ້ມີການຂາດແຄນເຂົ້າກິນ ສ່ວນການຖິ້ມລະເບີດແມ່ນຖີ່ເຂົ້າເລື້ອຍໆ ...

ຈາກການສຳຫວດຢ່າງເປັນທາງການຂອງສູນຂໍ້ມູນ ສະຫະລັດ ອາເມລິກາ ພົບວ່າ ເຫດການດັ່ງກ່າວ ເປັນຄວາມຈິງ ແລະ ຈາກການ ສຳພາດຊາວອົບພະຍົບ 96 ຄົນ ຈາກທົ່ງໄຫ ພົບວ່າ: ເກົ້າສິບເຈັດເປີເຊັນ ໄດ້ເຫັນວ່າ ມີການຖິ້ມລະເບີດທຳລາຍ... ສີ່ສິບເກົ້າເປີເຊັນເວົ້າວ່າ ບໍ່ ສາມາດນັບຈຳນວນເທື່ອທີ່ມາຖິ້ມລະເບີດ ແລະ ອີກ 43% ກ່າວວ່າ ເຫັນການຖິ້ມລະເບີດເລື້ອຍໆ. 68% ໃນຈຳນວນ 168 ຄົນ ທີ່ໃຫ້ສຳ ພາດເວົ້າວ່າ ເຫັນຄົນຕາຍໜຶ່ງຄົນ ຈາກການຖິ້ມລະເບີດ ຊຶ່ງເປັນການ ສ້າງຄວາມເສຍຫາຍອັນໃຫຍ່ຫຼວງ ຕໍ່ກັບຊີວິດຂອງປະຊາຊົນໃນເຂດທົ່ງ ໄຫຫີນ ໂດຍບໍ່ມີໃຜຈະປະຕິເສດຕໍ່ສິ່ງນີ້ໄດ້. 99% ຈາກ 212 ຄົນ ທີ່ຕອບສຳພາດກ່າວວ່າ ການຖິ້ມລະເບີດ ເຮັດໃຫ້ຊີວິດການເປັນຢູ່ຂອງ ເຂົາເຈົ້າຫຍຸ້ງຍາກ. 87% ຂອງພວກເຂົາເຈົ້າ ຕ້ອງໄດ້ຍ້າຍໄປຕັ້ງຖິ່ນ

ຖານຢູ່ໃນປ່າ ພາຍຫຼັງທີ່ເຫັນການຍິງທຳລາຍ ເຊິ່ງເຫດຜົນຕົ້ນຕໍກໍແມ່ນ ມາຈາກການຖິ້ມລະເບີດ.

ກະຊວງການຕ່າງປະເທດ ຂອງສະຫະລັດສະຫຼຸບຄ້າຍຄືກັນຕື່ມ ວ່າ: " 95% ຂອງຜູ້ຖືກສຳພາດ 169 ຄົນ ທີ່ຕອບຄຳຖາມເວົ້າວ່າ ບ້ານ ເຮືອນຂອງພວກເຂົາຖືກລະເບີດທຳລາຍ". ການສະຫຼຸບດັ່ງກ່າວ ຍັງໄດ້ ກ່າວອີກວ່າ "ສອງສ່ວນສາມຂອງຜູ້ໃຫ້ສຳພາດເວົ້າວ່າ ເຫັນຄົນໄດ້ຮັບ ບາດເຈັບຈາກການຖິ້ມລະເບີດ ໃນນີ້ 80% ແມ່ນປະຊາຊົນຊາວບ້ານ ແລະ 20% ແມ່ນຝ່າຍປະເທດລາວ."

ໃນເດືອນ ເມສາ 1969 ພາຍຫຼັງຈາກການຖິ້ມລະເບີດຢ່າງໜັກ ກອງທັບຝ່າຍປະເທດລາວ ຈຳເປັນຕ້ອງໄດ້ຖອຍຈາກເຂດຕົວເມືອງຊຽງ ຂວາງ ພາກຕາເວັນອອກສຽງໃຕ້ຂອງທົ່ງໄຫຫີນ. ຈາກນັ້ນ ປະຊາຊົນ ຊາວຊຽງຂວາງ ຈຶ່ງໄດ້ເຫັນກອງກຳລັງພາກພື້ນດິນ ທີ່ສະໜັບສະໜູນ ໂດຍສະຫະລັດເປັນຄັ້ງທຳອິດ ໃນຫ້າປີທີ່ຜ່ານມາ ເພາະພວກທະຫານ ກອງໂຈນແມ້ວໄດ້ເຂົ້າມາຕົວເມືອງຊຽງຂວາງ ແລະ ຢຶດຄອງໄວ້ສອງ ສາມອາທິດ ຈາກນັ້ນກໍມີການຂົນຍ້າຍປະຊາຊົນປະມານສິບຫາສິບຫ້າ ພັນຄົນອອກໄປນຳເວລາ ທີ່ພວກເຂົາຖອນກັບ ຫຼັງຈາກໂຈມຕີເອົາຊະນະ ຝ່າຍປະເທດລາວ.

ເດືອນສິງຫາ 1969 ສ່ວນທີ່ເຫຼືອຂອງເຂດທົ່ງໄຫຫີນ ກໍຖືກທຳ ລາຍຢ່າງໜັກເປັນປະຫວັດສາດ ຍ້ອນເຫດນີ້ ຝ່າຍປະເທດລາວຈຳຕ້ອງ ຖອຍອອກຈາກທີ່ໝັ້ນເຂດນີ້ ແລະ ໄດ້ນຳພາປະຊາຊົນຊາວໜຸ່ມ ຈຳນວນ ຫຼາຍອອກໄປນຳ. ຈາກນັ້ນ ກອງໂຈນທະຫານແມ້ວ ກໍເຂົ້າມາຄວບຄຸມ ທົ່ງໄຫຫີນທັງໝົດ ແລະ ນຳເອົາປະຊາຊົນທີ່ຍັງເຫຼືອປະມານສິບຫ້າຫາ ຊາວພັນຄົນ ໄປສູ່ເຂດລ່ອງແຈ້ງ.

ມາຮອດເດືອນກັນຍາ ປະຊາຊົນປະມານຫ້າສິບພັນຄົນ ທີ່ເຄີຍຢູ່ ອ້ອມແອ້ມເຂດທົ່ງໄຫຫີນ ແມ່ນບໍ່ຍັງຫຼົງເຫຼືອອີກຈັກຄົນ. ປະຫວັດສາດ ໄດ້ຈາລຶກວ່າ ສົງຄາມແຫ່ງທົ່ງໄຫຫີນເປັນແຫ່ງທຳອິດ ທີ່ໄດ້ທຳຍສາບສູນ ຍ້ອນສົງຄາມທັນສະໄໝທຳລາຍ.

IV ຜູ້ລອດຕາຍນັບແຕ່ ປີ 1969 ຮອດປະຈຸບັນ

ຊາວອົບພະຍົບຍອມຮັບວ່າ ຖ້າຫາກເຂົາເຈົ້າຍັງສືບຕໍ່ອາໄສຢູ່ກັບບ້ານເຮືອນໃນທົ່ງໄຫອີກຕໍ່ໄປ ພວກເຂົາ ຈະຕ້ອງຖືກລະເບີດທຳລາຍມຸ່ນແບບບໍ່ມີຫຍັງເຫຼືອ. ພວກເຂົາສັງເກດເຫັນວ່າ ທ້ອງຂອງລູກເຂົາເຈົ້າໃຄ່ພອງ, ຮ່າງກາຍຈ່ອຍຜອມ, ເກີດພະຍາດຕຸ່ມແດງລະບາດຈາກຕູບໜຶ່ງຫາອີກຕູບອື່ນ, ຕົນໂຕເດັກນ້ອຍເກືອບທັງໝົດເຕັມໄປດ້ວຍບາດແຜ ແລະ ຕາມໜັງຫົວ ກໍ່ເຕັມໄປດ້ວຍແຜເປັນ ແລະ ມີໜອງໄຫຼອອກຈາກແຜເປັນ ບໍ່ວ່າເດັກນ້ອຍກໍ່ຄືຜູ້ໃຫຍ່, ມີນ້ຳຢາງເຫຼືອງໄຫຼອອກຈາກດັງແບບບໍ່ຢຸດ, ຮິມສີບ ແລະ ດັງລອກ, ຂົນຕາຂອງເດັກນ້ອຍສ່ວນໃຫຍ່ເຕັມໄປດ້ວຍຂີ້ຕາ ຍ້ອນຕິດເຊື້ອພະຍາດ. ພວກເຂົາຮູ້ກ່ຽວກັບສິ່ງເຫຼົ່ານີ້ ແຕ່ວ່າ ເຂົາເຈົ້າບໍ່ສາມາດຫຼີກລ່ຽງມັນໄດ້. ພວກເຂົາຮູ້ວ່າ ພວກເຂົາກຳລັງຈະຕາຍຢູ່ບ່ອນນີ້.

ດອນ ຣິງ, ວຽງຈັນ, ສ.ປ.ປ.ລາວ, 13/06/1970.

ຜົນກະທົບຈາກສົງຄາມທຳລາຍທົ່ງໄຫຫີນ ໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທີ່ລອດຕາຍຫຍຸ້ງຍາກມາຕະຫຼອດ ຊາວໜຸ່ມຈຳນວນ 15,000-20,000 ຄົນ ທີ່ໄປກັບຝ່າຍປະເທດລາວ ແມ່ນດຳເນີນຊີວິດພາຍໃຕ້ຫ່າລະເບີດຢ່າງຄັບຂັນ. ສ່ວນພວກຈີນ ແລະ ພວກຫວຽດປະມານຫ້າພັນຄົນ ທີ່ຈົ່ງຮັກພັກດີຕໍ່ ຊີໄອເອ ໄດ້ຂຶ້ນຍົນບິນກັບມາວຽງຈັນ ແລະ ຖືກບັງຄັບໃຫ້ມາຕັ້ງຕົ້ນຊີວິດໃໝ່ ດ້ວຍການເປັນຊາວຄ້າຂາຍ, ເປັນຄົນຮັບໃຊ້, ເປັນກຳມະກອນ ແລະ ອື່ນໆ. ຊາວໜຸ່ມຈຳນວນປະມານສອງພັນຄົນ ສ່ວນຫຼາຍແມ່ນພວກທີ່ຖືກຝ່າຍປະເທດລາວປະໄວ້ໃຫ້ ເພື່ອຊ່ວຍເຫຼືອພໍ່ແມ່ ແລະ ເບິ່ງແຍງເອື້ອຍນ້ອງນັ້ນ ໄດ້ຖືກບັງຄັບໃຫ້ເຂົ້າເປັນທະຫານນຳພວກແມ້ວ ເພື່ອກັບຄືນມາຕໍ່ສູ້ກັບພີ່ນ້ອງຂອງເຂົາເຈົ້າ ທີ່ຢູ່ຝ່າຍກົງກັນຂ້າມ. ພວກແມ້ວຄິດຄຽດແຄ້ນຫຼາຍ ຈົ່ງສັ່ງໃຫ້ທະຫານໜຸ່ມນີ້ອອກແຖວໜ້າ ເພື່ອເປັນເປົ້າບັງກະສຸນປືນ ແລະ ເຮັດໃຫ້ເຂົາເຈົ້າມີການບາດເຈັບ ແລະ ລົ້ມຕາຍຫຼາຍກວ່າໜຸ່ມໃນຈຳນວນທະຫານເລອຣັບຈ້າງ.

ປະຊາຊົນທີ່ຍັງເຫຼືອອີກປະມານ 20,000 - 30,000 ຄົນ ທີ່ເປັນຊາວພວນ ຊຶ່ງມີທັງເດັກນ້ອຍ ແລະ ຜູ້ໃຫຍ່ ໄດ້ຖືກນຳເຂົ້າຄ້າຍອົບພະຍົບຕາມພູຜາອ້ອມແອ້ມເຂດລ່ອງແຈ້ງ. ໃນຄ້າຍອົບພະຍົບມີການເກີດໂລກລະບາດ ແລະ ມີຜູ້ລົ້ມຕາຍຈຳນວນຫຼາຍ ຊຶ່ງສ່ວນໃຫຍ່ແມ່ນເດັກນ້ອຍ. ດັ່ງໃນຄ້າຍແຫ່ງໜຶ່ງ ຊຶ່ງມີຜູ້ອົບພະຍົບຕາຍຮອດ 300 ຄົນ ໃນຈຳນວນ 1,200 ຄົນ. ໃນເດືອນ ພະຈິກ 1969 ພວກ ຊີໄອເອ ໄດ້ເຄື່ອນຍ້າຍປະຊາຊົນປະມານ 15,000 ຄົນ ຂຶ້ນມາເຂດທົ່ງໄຫຫີນຄຶນ ເພື່ອສ້າງເປັນເຂດບ້ານຍຸດທະສາດສອງແຫ່ງ. ໃນເມື່ອພວກເຂົາຮູ້ວ່າ ຝ່າຍປະເທດລາວຈະເຂົ້າມາຕີເຂດທົ່ງໄຫຫີນອີກ ພວກເຂົາໄດ້ເອົາປະຊາຊົນສອງເຂດບ້ານດັ່ງກ່າວນີ້ ຂຶ້ນຍົນມາເຂດທົ່ງພຽງວຽງຈັນ ໃນເດືອນກຸມພາ 1970. ທີ່ວຽງຈັນ ປະຊາຊົນດັ່ງກ່າວ ໄດ້ຖືນຳໄປໄວ້ຢູ່ຕາມຄ້າຍຕ່າງໆ ຫຼາຍກວ່າ 20 ແຫ່ງ ແຈກຢາຍອ້ອມແອ້ມວຽງຈັນ ໃນລັດສະໝີ 80 ກິໂລແມັດ. ໃນປີຖັດມາ ພວກທີ່ຍັງເຫຼືອຢູ່ເຂດລ່ອງແຈ້ງອີກ 10,000-15,000 ຄົນ ໄດ້ພາກັນມາວຽງຈັນ ບາງພວກກໍຍ່າງ ແລະ ບາງພວກກໍຂີ່ລົດມາ ຊຶ່ງໄດ້ເພີ່ມປະຊາກອນຂອງຄ້າຍອົບພະຍົບຂຶ້ນເປັນ 25,000 - 30,000 ຄົນ.

ຊີວິດການເປັນຢູ່ໃນຄ້າຍອົບພະຍົບແມ່ນຫຍຸ້ງຍາກຫຼາຍ ເນື່ອງຈາກວ່າ ໃນເດືອນ ເມສາ ແລະ ເດືອນ ສິງຫາ 1969 ເວລາພວກທະຫານແມ້ວຕີຢຶດທົ່ງໄຫຫີນໄດ້ ພວກເຂົາໄດ້ແກ້ແຄ້ນຊາວບ້ານ ນອກຈາກການລວມລາມພວກຜູ້ຍິງແລ້ວ ພວກເຂົາໄດ້ຈູດເຜົາເຮືອນຊານບ້ານຊ່ອງ ແລະ ສິ່ງຂອງ ຂອງປະຊາຊົນ ທີ່ຍັງຫຼົງເຫຼືອຢູ່ ນອກນັ້ນ ພວກເຂົາຍັງເຊັ່ນຂ້າສັດສາວາສິ່ງເຊັ່ນ ງົວ, ຄວາຍ, ໝູ ແລະ ເປັດ ໄກ່ ຕໍ່ໜ້າປະຊາຊົນນຳອີກ. ດັ່ງນັ້ນ ເມື່ອປະຊາຊົນມາຮອດຄ້າຍອົບພະຍົບ ຈຶ່ງບໍ່ມີຫຍັງຕິດໂຕ.

ເມື່ອບໍ່ມີຫຍັງຕິດຕົວ ພວກເຂົາກໍບໍ່ສາມາດຊື້ເຂົ້າປາອາຫານ, ສັດລ້ຽງ, ເຄື່ອງມື ຫຼື ແມ່ນແຕ່ຢາປົວພະຍາດ ເພາະພວກເຂົາມີແຕ່ເງິນຂອງຝ່າຍປະເທດລາວຕິດຕົວມາ. ເຖິງແມ່ນວ່າ ທາງການສັນຍາວ່າ

ຈະປ່ຽນເງິນປະເທດລາວເປັນເງິນອຽງຈັນ ແຕ່ສັນຍານີ້ ກໍບໍ່ມີໃຜປະຕິບັດອີກ.

ເມື່ອມາຮອດວຽງຈັນແລ້ວ ພວກເຂົາກໍໄດ້ຮັບດິນແບ່ງປັນຕອນນ້ອຍໆ ແຕ່ເປັນດິນບ່ຽງາມ ໃຫ້ປະຊາຊົນທຳການປູກຝັ. ດິນສ່ວນຫຼາຍຍັງເປັນປ່າ ແລະ ເມື່ອປະຊາຊົນບໍ່ມີງົວ ຄວາຍຊ່ວຍ ກໍຈຳເປັນຕ້ອງສັບຊ່າວດ້ວຍມື ແຕ່ກໍໄດ້ຮັບຜົນໜ້ອຍທີ່ສຸດ. ສະມັດຕະພາບຜົນຜະລິດ ທີ່ໄດ້ຮັບຈາກດິນທີ່ເຂົາເຈົ້າສັບຊ່າວ ແມ່ນຕ່ຳທີ່ສຸດ.

ໃນເຂດພູພຽງຊຽງຂວາງ ພວກເຂົາເຄີຍເຮັດແຕນານຳຟ້າ ແຕ ເມື່ອມາຮອດວຽງຈັນ ພວກເຂົາສາມາດເຮັດແຕ່ໄຮ່ ຊຶ່ງນ້ຳກໍຂາດເຂີນ. ນອກນີ້ ແມງໄມ້ກໍລົບກວນຫຼາຍ ແລະ ເມື່ອທຽບກັບການເຮັດນາຢູ່ບ້ານເກົ່າເມືອງເດີມແລ້ວ ຜົນຜະລິດແມ່ນໄດ້ພຽງເລັກໜ້ອຍເທົ່ານັ້ນ. ໃນເມື່ອບໍ່ມີເງິນ ບໍ່ມີສັດລ້ຽງ ພວກເຂົາກໍບໍ່ສາມາດທຳການຜະລິດ ແລະ ບໍ່ມີເງິນຊື້ອາຫານການກິນ ມີແຕ່ອາໄສເຂົ້າອັດຕາ ແລະ ເກືອທີ່ອາເມລິກາແບ່ງໃຫ້. ນອກນີ້ ພວກເຂົາກໍອາໄສປູ ປາໃນຫ້ວຍຮ່ອງ ແລະ ຜັກຕາມປ່າດົງມາກິນ ພໍປະຄອງຊີວິດໄປແຕ່ລະມື້.

ເມື່ອຂາດອາຫານການກິນ ແລະ ບວກກັບອາກາດຮ້ອນ ຂອງທົ່ງພຽງວຽງຈັນແລ້ວພາໃຫ້ພວກເຂົາເຈົ້າເກີດບັນຫາດ້ານສຸຂະພາບ ເຊິ່ງມີຕັ້ງແຕ່ເປັນໂລກຂາດອາຫານ ຈົນເຖິງຂັ້ນຕິດເຊື້ອພະຍາດ. ໂຮງໝໍກໍມີບໍ່ພຽງພໍ ແລະ ອົງການຊ່ວຍເຫຼືອຂອງອາເມລິກາ ກໍໄດ້ຕັ້ງສຸກສາລາຂຶ້ນຈຳນວນໜຶ່ງ ແຕ່ຢຸກຢາກໍຂາດໆ ເຂີນໆ ມາຕະຫຼອດ. ພວກນາຍໝໍກໍພາກັນສວຍໂອກາດເກັບເງິນຄ່າຢາຢ່າງຜິດກົດໝາຍ ທັງໆ ທີ່ຢາກໍແມ່ນຢາທີ່ໃຫ້ລ້າ ແລະ ກໍບໍ່ເອົາໃຈໃສ່ປິ່ນປົວຄົນເຈັບແຕ່ຢ່າງໃດ. ທິມງານແພດເອກະຊົນຕາເວັນຕົກຈຳນວນໜຶ່ງ ກໍໄດ້ໄປຢ້ຽມຢາມຄ້າຍອົບພະຍົບ ແຕ່ກໍບໍ່ສາມາດຕອບສະໜອງກັບຄວາມຕ້ອງການຂອງປະຊາຊົນໄດ້ພໍປານໃດ.

ພາກສ່ວນທີ່ຮັບຜິດຊອບຂອງລັດຖະບານ ໄດ້ຖືກສົ່ງໄປຢາມຄ້າຍອົບພະຍົບ ໂດຍອະນຸກຳມະການ ເພື່ອຊາວອົບພະຍົບຂອງສະຫະລັດ

ໃນເດືອນ ກັນຍາ 1970 ແລະ ໄດ້ລາຍງານວ່າ ອັດຕາການລົ້ມຕາຍ ຂອງຊາວອົບພະຍົບ ທີ່ມາຈາກທົ່ງໄຫຫີນແມ່ນສູງ ແຕ່ກໍບໍ່ມີທ່າທີວ່າ ຈະມີການແກ້ໄຂໃດໆ.

ດ້ວຍເຫດນີ້ ຜູ້ທີ່ລອດຕາຍຈາກການຖິ້ມລະເບີດ ແລະ ການຍິງ ທຳລາຍທົ່ງໄຫຫີນ ບໍ່ມີຈຸດປະສົງທີ່ຈະຢູ່ຕໍ່ໄປ ພວກເຂົາຈຶ່ມວ່າ ອາກາດກໍ ຮ້ອນຫຼາຍ ພ້ອມທັງຂາດທີ່ດິນເຮັດກິນທີ່ອຸດົມສົມບູນ ແລະ ສິ່ງຈຳ ເປັນຕໍ່ການດຳລົງຊີວິດ ຊຶ່ງເປັນສິ່ງທີ່ເຂົາເຈົ້າສູນເສຍ ແລະ ຢາກໄດ້ກັບ ຄືນມາ.

ພວກເຮົາໄດ້ໄປຢ້ຽມຢາມຄ້າຍອົບພະຍົບສິບກວ່າແຫ່ງ ຊຶ່ງກວມ ເອົາ 60% ຂອງຊາວອົບພະຍົບທັງໝົດຈາກທົ່ງໄຫຫີນ. ພວກເຮົາໄປ ຢ້ຽມຢາມຄ້າຍລີ້ໄພດັ່ງກ່າວເກືອບຮ້ອຍຄັ້ງ ແລະ ໄດ້ໂອ້ລົມກັບຊາວ ອົບພະຍົບກວ່າພັນຄົນ.

ໃນແຕ່ລະຄ້າຍ ທຸກເທື່ອທີ່ພວກເຮົາໄປຢາມ ແຕ່ລະຄົນກໍກ່າວ ຢ່າງໝັ້ນໃຈ ແລະ ຕັ້ງໃຈວ່າ ສິ່ງດຽວທີ່ຕ້ອງການ ແມ່ນການກັບຄືນໄປ ບ້ານເກີດເມືອງນອນຂອງຕົນເອງ.

V. ... ແລະ ນອກເໜືອຈາກນີ້ ...

" ສົງຄາມບໍ່ເປັນພຽງແຕ່ການທຳລາຍລ້າງແບບກະເສືອກກະ ສົນ ດັ່ງທີ່ເຄີຍເປັນມາ ມັນແມ່ນສົງຄາມທີ່ມີເປົ້າໝາຍຈຳກັດ...ນີ້ກໍ ບໍ່ໝາຍຄວາມວ່າ ການເຮັດສົງຄາມຈະມີຄວາມກະທາຍເລືອດໜ້ອຍລົງ ຫຼື ມີກຽດສັກສີຫຼາຍຂຶ້ນ. ໃນທາງກົງກັນຂ້າມ... ທາງດ້ານຮູບປະທຳ ສົງ ຄາມແມ່ນມີຄົນຈຳນວນໜ້ອຍເຂົ້າຮ່ວມ ໂດຍເກືອບທັງໝົດແມ່ນຜູ້ທີ່ ຜ່ານການຝຶກໃຫ້ກາຍເປັນຊ່ຽວຊານ. ການຕໍ່ສູ້ແມ່ນດຳເນີນໄປໃນແນວ ໜ້າ ທີ່ບ່ຈະແຈ້ງ ແຕ່ເປັນສະຖານທີ່ທີ່ຄົນສາມັນທຳມະດາຈະເດົາອອກ ໄດ້ວ່າ ມັນຢູ່ບ່ອນໃດ."

ຈອດ ອໍແວ, 1984

ມີຄົນຈຳນວນໜ້ອຍທີ່ສຸດ ທີ່ຮັບຮູ້ການສູນເສຍຂອງທົ່ງໄຫຫີນ ຊຶ່ງມັນເປັນເຫດການທີ່ເປັນສັນຍາລັກແຫ່ງຍຸກສະໄໝ ທີ່ມີຄວາມໝາຍ ຄືກັນກັບສົງຄາມຂອງມານ, ການຖິ້ມລະເບີດນິວເຄຼຍໃສ່ ຮິໂຣຊິມາ, ການສັງຫານໝູ່ ຢູ່ບ້ານມີໄລ. ນີ້ບໍ່ໄດ້ໝາຍຄວາມວ່າ ເປັນເຫດການບ້າເອີນ ເພາະໃນຕົວຈິງ ມັນກໍບໍ່ແມ່ນແນວນັ້ນ. ໃນຂະນະທີ່ເຫດການຂອງບ້ານມີໄລ ໄດ້ຖືກລົງຂ່າວຢ່າງກວ້າງຂວາງວ່າ ເປັນສົງຄາມພາກພື້ນດິນຂອງມະຫາອຳນາດ ແຕ່ສົງຄາມທົ່ງໄຫຫີນ ກໍ່ແມ່ນສີມືຂອງມະຫາອຳນາດຄືກັນ ທີ່ເຂົ້າມາຫຍຸ້ງກ່ຽວ ແຕ່ພັດເຮັດແບບປິດລັບດ້ວຍການໃຊ້ຮູບແບບສົງຄາມທາງອາກາດ.

ສິ່ງສຳຄັນອັນໜຶ່ງໃນສົງຄາມແບບໃໝ່ນີ້ ບໍ່ພຽງແຕ່ແມ່ນການຖິ້ມລະເບີດ ແຕ່ປະເທດມະຫາອຳນາດ ໄດ້ໃຊ້ສົງຄາມກົນຈັກເປັນເຄື່ອງມືໃນການທຳລາຍ ໂດຍບໍ່ໄດ້ໃຊ້ທະຫານພາກພື້ນດິນ ແລະ ທະຫານພາກພື້ນດິນໃນທ້ອງຖິ່ນ ເພື່ອສະໜັບສະໜູນເຄື່ອງຈັກທຳລາຍ.

ການຖິ້ມລະເບີດຄັ້ງທີ່ຜ່ານມາ ບໍ່ວ່າຈະຢູ່ປະເທດເຢຍລະມັນ, ຍີ່ປຸ່ນ ຫຼື ຫວຽດນາມກໍ່ລ້ວນແຕ່ ເພື່ອເປັນການສະໜັບສະໜູນກອງກຳລັງທີ່ທຳການສູ້ຮົບໃນຕ່າງປະເທດ. ຕົວຢ່າງ: ການຖິ້ມລະເບີດໃສ່ຫວຽດນາມເໜືອ ກໍໂຄສະນາວ່າ ເປັນຍຸດທະສາດຕ້ານກັບເປົ້າໝາຍທາງການທະຫານ ເພື່ອປົກປ້ອງກອງທັບບົກ ຊຶ່ງມີຈຳນວນມະຫາສານໃນຫວຽດນາມໃຕ້. ການຖິ້ມລະເບີດໃສ່ເສັ້ນທາງໂຮ່ຈິມິນ ແລະ ສ່ວນໃຫຍ່ຂອງພາກໃຕ້ຫວຽດນາມ ກໍເພື່ອສະກັດກັ້ນການຂົນສົ່ງອາວຸດຂອງຝ່າຍສັດຕູ ແລະ ເພື່ອປົກປ້ອງທະຫານສະຫະລັດ ແລະ ສ່ວນທີ່ເຫຼືອ ກໍເພື່ອເປັນຍຸດທະສາດການສະໜັບສະໜູນທາງອາກາດແກ່ທະຫານ ອາເມລິກາ ຕ້ານກັບກອງທັບຕໍ່ສູ້ຂອງຫວຽດນາມເໜືອ.

ການຖິ້ມລະເບີດໃສ່ທົ່ງໄຫຫີນ ແມ່ນສົງຄາມຢູ່ອີກບ່ອນໜຶ່ງ ທີ່ແມ່ນແນວຄວາມຄິດ ທີ່ແຕກຕ່າງຂອງກຳລັງທາງອາກາດ ຊຶ່ງເຈດຕະນາອັນຕົ້ນຕໍແມ່ນສ້າງຄວາມເຂັ້ມແຂງໃຫ້ສະຖານະພາບຂອງອາເມລິກາ ຕາມລ່ອງແມ່ນ້ຳຂອງ ແຕ່ບໍ່ແມ່ນເພື່ອສະໜັບສະໜູນກອງທັບອາເມລິກາ

ໃນຫວຽດນາມ.

ພ້ອມນັ້ນ ມັນກໍ່ບໍ່ແມ່ນການສະໜອງຍຸດທະການທາງອາກາດແກ່ ກອງທະຫານອາຊີ ທີ່ໄດ້ການສະໜັບສະໜູນໂດຍອາເມລິກາ. ເຖິງວ່າ ໃນເບື້ອງຕົ້ນກໍມີວິໄສທັດວ່າ ເປັນແນວນັ້ນ ແຕ່ເຫດຜົນທີ່ເຮັດໃຫ້ສົງຄາມ ເຂດທີ່ງໄຫຫີນເພີ່ມຄວາມຮຸນແຮງຢ່າງຕໍ່ເນື່ອງ ກໍແມ່ນວ່າ ກອງກຳລັງ ພັນທະມິດອາຊີຂອງອາເມລິກາ ມີກຳລັງອ່ອນແອກວ່າຝ່າຍກົງກັນຂ້າມ. ດັ່ງນັ້ນ ບົດບາດຂອງກຳລັງທາງອາກາດ ແລະ ກຳລັງພາກພື້ນດິນແບບ ດັ້ງເດີມແມ່ນບໍ່ຄືເກົ່າ. ກຳລັງທາງອາກາດຖືກນຳໃຊ້ເພື່ອເຮັດສົງຄາມ ໂດຍມີກອງກຳລັງພື້ນດິນສະໜັບສະໜູນການຖິ້ມລະເບີດ.ກອງທັບແມ້ວ ແລະ ທະຫານໄທ ທີ່ສະໜັບສະໜູນໂດຍອາເມລິກາ ເຮັດໜ້າທີ່ພື້ນຖານ ເປັນເຫຍື່ອລໍ້ໃຫ້ຝ່າຍສັດຕູຍິງ ເພື່ອໃຫ້ຍົນຖິ້ມລະເບີດຮູ້ຈຸດທີ່ຈະຍິງທຳ ລາຍ ແລ້ວເປີດເສັ້ນທາງໃຫ້ທະຫານພວກເຂົ້າເຂົ້າຢຶດ ແລະ ເຮັດໃຫ້ ຝ່າຍກົງກັນຂ້າມລ່າຖອຍ ແລ້ວກໍ່ຈະມີໂອກາດໄປເກັບສິນເສີກ ແລະ ນຳເອົາພວກອົບພະຍົບອອກມາ. ອີກດ້ານໜຶ່ງ ກໍເພື່ອເປັນຍຸດທະການ ປ້ອງກັນຖານທັບໃຫຍ່ເບື້ອງຫຼັງ ແລະ ເປັນການຮັກສາບັນດາຕົວເມືອງ ອ້ອມຂ້າງນຳອີກ. ນີ້ແມ່ນເຫດຜົນທີ່ເຮັດໃຫ້ເຊື່ອວ່າ ມີການກຳເນີດສົງ ຄາມແບບໃໝ່ໃນທົ່ງໄຫຫີນ.

ມັນເປັນອັນຈະແຈ້ງແລ້ວວ່າ ຖ້າບັນດາຜູ້ນຳຂອງປະເທດມະຫາ ອຳນາດເລືອກທີ່ຈະເຂົ້າຫຍຸ້ງກ່ຽວ ໃນສະໜ່ລະພູມທີ່ບໍ່ຈະແຈ້ງຂອງໂລກ ທີສາມອີກເທື່ອໜຶ່ງ ພວກເຂົາກໍຈະບໍ່ໃຊ້ກອງທະຫານພາກພື້ນດິນຈຳ ນວນຫຼາຍເຂົ້າມາກ່ຽວພັນ. ຄືດັ່ງໃນຫວຽດນາມ ທີ່ໄດ້ສະແດງໃຫ້ເຫັນ ແລ້ວວ່າ ການກະທຳແບບນີ້ ນຳໃຊ້ເງິນຄຳມະຫາສານ ໃນການໃຊ້ເຕັກ ໂນໂລຊີໃນລະດັບຕ່ຳ ຊຶ່ງພາໃຫ້ມີການແຕກແຍກພາຍໃນກອງທັບ ແລະ ເປັນການຈູດສະນວນ ທີ່ບໍ່ຮັບປະກັນວ່າ ຈະມີໄຊຊະນະແຕ່ຢ່າງໃດ.

ບັນຫາແບບນີ້ຫຼີກລ່ຽງໄດ້ ດ້ວຍການໃຊ້ສົງຄາມທັນສະໄໝ ຄືກັບ ໃຊ້ຢູ່ທົ່ງໄຫຫີນ ເພາະມູນຄ່າໃຊ້ຈ່າຍກໍບໍ່ແພງ ແລະ ເຕັກໂນໂລຊີທີ່ໄດ້ຮັບ ການພັດທະນາມາແມ່ນນຳມາໃຊ້ກັບສິ່ງອື່ນໄດ້ ແລະ ພວກນາຍຊ່າງທີ່

ນຳໃຊ້ມັນກໍບໍ່ຄ່ອຍຈະເກີດມີການກະບົດ ແລະ ສິ່ງສຳຄັນແມ່ນປະຊາຊົນຂອງປະເທດມະຫາອຳນາດເອງແມ່ນບໍ່ຄ່ອຍມີຄວາມຮັບຮູ້ ຫຼື ບໍ່ຮູ້ກ່ຽວກັບເລື່ອງດັ່ງກ່າວ ຈຶ່ງເຮັດໃຫ້ຜູ້ນຳໃນປະເທດມະຫາອຳນາດ ຍູທ່າງເຮັດສົງຄາມໄດ້ຕາມໃຈມັກ.

ສົງຄາມປະເພດນີ້ ແນ່ນອນວ່າ ມີລັກສະນະປ່ຽນແປງໂດຍພື້ນຖານທາງດ້ານຂໍ້ຂັດແຍ້ງທາງການທະຫານ ຄືທີ່ພວກເຮົາເຄີຍໄດ້ຮູ້ກັນມາແລ້ວ.

ການປ່ຽນແປງທີ່ສຳຄັນມີຢູ່ວ່າ ຄວາມແຕກຕ່າງລະຫວ່າງເປົ້າໝາຍຂອງທະຫານ ແລະ ປະຊາຊົນ ແມ່ນບໍ່ມີອີກແລ້ວ. ໄດ້ມີການໂຕ້ຖຽງກັນກ່ຽວກັບປະເດັນເຫຼົ່ານີ້ວ່າ ນະໂຍບາຍຂອງສະຫະລັດອາເມລິກາ ໃນການຖະຫຼົ່ມບ້ານເຮືອນປະຊາຊົນໃນລາວ ເປັນການເຈດຕະນາ ແລະ ບໍ່ສອດຄ່ອງ. ເຕັກໂນໂລຊີຂອງອຳນາດຍັກໃຫຍ່ທີ່ຖອກເທໃສ່ຊຸມຊົນຊາວຊົນນະບົດຂອງທົ່ງໄຫຫີນ ແມ່ນບໍ່ມີຄວາມແຕກຕ່າງລະຫວ່າງກອງທະຫານ ແລະ ພົນລະເຮືອນເລີຍ. ພວກກອງໂຈນໄດ້ລີ້ຊ່ອນຢູ່ໃນປ່າ ແລະ ມີການເຄື່ອນຍ້າຍເປັນກຸ່ມນ້ອຍໆ ໃນຍາມກາງຄືນ. ອາວຸດ, ລູກປືນ ແລະ ລົດຂົນສິ່ງແມ່ນແຊມຟິດໄມ້, ແລ່ນຕາມໜ້າດິນ ເລິກເຂົ້າໄປໃນປ່າ. ພວກຍິນຖິ້ມລະເບີດບໍ່ສາມາດຈັບໄດ້ ແລະ ການຍິງທຳລາຍກໍຍາກທີ່ຈະຖືກເປົ້າໝາຍ. ດັ່ງນັ້ນ ນັກບິນຈຶ່ງບິນວົນວຽນ ແລະ ຖິ້ມລະເບີດໃສ່ອ້ອມແອ້ມບ້ານຕ່າງໆ ທີ່ເຫັນວ່າ ມີສິ່ງທີ່ມີຊີວິດເຄື່ອນໄຫວຢູ່ ແລະ ທີ່ແນມເຫັນໄດ້ຈາກທາງອາກາດ.

ໃນທຳນອງດຽວກັນນີ້ ຄວາມແຕກຕ່າງລະຫວ່າງສົງຄາມທີ່ຖືກກົດໝາຍ ຫຼື ບໍ່ຖືກກົດໝາຍ ແມ່ນບໍ່ສາມາດໃຊ້ໄດ້ອີກແລ້ວ. ມາດຕາ 25 ຂອງສົນທິສັນຍາ ກຸງເຮກ 1907 ມາດຕາ 3 ຂອງສົນທິສັນຍາ ກຸງເຈເນວາ ປີ 1949 ແລະ ອັນທີ່ຈະແຈ້ງ ກໍແມ່ນຫຼັກການທີ 6 ຂອງ ກຸງ ນູຣຳບວກ ຊຶ່ງໄດ້ກຳນົດວ່າ ບໍ່ໃຫ້ທຳລາຍຕົວເມືອງໃຫຍ່, ຕົວເມືອງນ້ອຍ ແລະ ບ້ານ ແມ່ນລ້ວນແຕ່ອີງໃສ່ແນວຄວາມຄິດ ທີ່ມີການຂີດໝາຍເສັ້ນເຂດຢ່າງຈະແຈ້ງ ລະຫວ່າງທະຫານ ແລະ ພົນລະເມືອງ

ໃນພາວະສົງຄາມ. ມັນເປັນອັນຈະແຈ້ງແລ້ວວ່າ ການຖະຫຼີ່ມດ້ວຍລະເບີດຂອງກຳລັງມະຫາອຳນາດ ໃນຊຸມຊົນຊົນນະບົດຂອງລາວ ແມ່ນບໍ່ສາມາດຈຳແນກລະຫວ່າງເປົ້າໝາຍກອງທະຫານ ແລະ ພົນລະເຮືອນ. ດັ່ງນັ້ນ ທຸກການກະທຳດັ່ງກ່າວ ດ້ວຍການໃຊ້ກົນຈັກເຮັດສົງຄາມ ແມ່ນລ້ວນແຕ່ເປັນອາດສະຍາກຳ. ເມື່ອມັນເລີ່ມຂຶ້ນແລ້ວ ມັນກໍບໍ່ມີທາງທີ່ຈະປ້ອງກັນໃຫ້ແກ່ພົນລະເຮືອນທີ່ຢູ່ເບື້ອງລຸ່ມ.

ຈິດຕະສາດພື້ນຖານຂອງສົງຄາມກໍມີການປ່ຽນແປງໄປຄືກັນ. ແຕ່ນີ້ຕໍ່ໄປ ຄວາມຄຽດຊັງສັດຕູ ແລະ ຄວາມຄິດຮັກແພງປະເທດຊາດ ຈະເປັນຄວາມຈິງ ຫຼື ສ້າງຂຶ້ນ ກໍເປັນເງື່ອນໄຂໃຫ້ມີການສົ່ງຄົນເຂົ້າສູ່ສົງຄາມ. ແນວໃດກໍຕາມ ເມື່ອນາຍຊ່າງຈຳນວນຫຼາຍສິບພັນຄົນຖືກຮຽກຮ້ອງໃຫ້ເຮັດສົງຄາມກັບປະເທດໜຶ່ງ ແລະ ປະຊາຊົນທີ່ເຂົາເຈົ້າບໍ່ເຄີຍເຫັນແຮງຈູງໃຈດັ່ງກ່າວກໍໝົດໄປ. ເມື່ອຍົນຈຳນວນໜ້ອຍໜຶ່ງ ທີ່ເຂົ້າໄປໃນເຂດສັດຕູ ຍັງບິນດ້ວຍຄວາມສູງ ໜຶ່ງພັນຫ້າຮ້ອຍແມັດ ແລະ ເຮັດສົງຄາມດ້ວຍການບີບປຸ່ມ ແລະ ດຶງຄານ ເພື່ອປ່ອຍລູກລະເບີດລົງມາຫາຄົນທີ່ແນມບໍ່ເຫັນຢູ່ເບື້ອງລຸ່ມ, ແມ່ນແຕ່ກະດູກຂອງມະນຸດ ທີ່ເປັນຝ່າຍສັດຕູກໍ່ຍັງບໍ່ຫຼົງເຫຼືອ. ສົງຄາມໄດ້ກາຍເປັນການປະຕິບັດການທາງເຕັກນິກ, ເປັນການມຸ່ງທຳລາຍ ຫຼື ເຮັດໃຫ້ຫາຍແຄ້ນ, ນຳຄວາມເຈັບແສບອອກຈາກຄວາມຮູ້ສຶກຂອງຜູ້ຕໍ່ສູ້ ແລະ ສົງຄາມທີ່ເຮັດແບບຈຳກັດແມ່ນບໍ່ມີເຫດຜົນອີກແລ້ວ.

ຄວາມພະຍາຍາມໃນການສະໜັບສະໜູນ ທີ່ຈຳເປັນຈາກລັດຖະບານໃຫ້ແກ່ປະຊາຊົນ ແມ່ນເກືອບບໍ່ມີເລີຍ ເພາະຜູ້ນຳໃນລັດຖະບານອີງໃສ່ເງິນຈາກການເກັບພາສີ ແລະ ການໃຊ້ຈ່າຍຂອງປະຊາຊົນ ກໍ່ບໍ່ມີຫຼາຍ. ຄວາມຈິງແລ້ວ ຜູ້ທີ່ເຮັດສົງຄາມກົນຈັກ ຕ້ອງການເກັບເລື່ອງນີ້ໃຫ້ເປັນຄວາມລັບ ບໍ່ໃຫ້ສາທາລະນະຊົນຮັບຮູ້ ເພື່ອພວກເຂົາຈະເຮັດໄດ້ຕາມໃຈມັກ. ສິ່ງທີ່ສາທາລະນະຊົນຮັບຮູ້ ກໍມີພຽງວ່າ ເປັນການກະທຳເພື່ອປ້ອງກັນຕົວ ແລະ ການເຂົ້າແຊກແຊງກໍ່ມີພຽງວ່າ ເປັນການໂຈມຕີແບບຍຸດທະການ ເພື່ອເຮັດໃຫ້ສົງຄາມ ເບິ່ງແລ້ວຄືວ່າ ບໍ່ມີ

ຂໍ້ຂັດແຍ້ງ.

ສິ່ງສຳຄັນສະເພາະໜ້າຂອງປະຊາຊາດໂລກທີສາມແມ່ນ ການປ່ຽນສົງຄາມທີ່ມີຂອບເຂດແບບເກົ່າ ມາເປັນສົງຄາມກົນຈັກ. ປະເທດມະຫາອຳນາດເຮັດສົງຄາມ ຈະບໍ່ມີທາງຜ່າຍແພ້ ຄືກັບສົງຄາມແບບເກົ່າອີກຕໍ່ໄປ ແລະ ແຫຼ່ງສະໜັບສະໜູນກໍບໍ່ມີບົກແຫ້ງຄືແຕ່ກ່ອນ. ໃນສົງຄາມແບບນີ້ ຖ້າຫາກມີການຢຸດຕິ ກໍແມ່ນມາຈາກເຫດຜົນທາງການເມືອງເທົ່ານັ້ນ ຫຼື ການຕຳນິຈາກສາກົນ ຊຶ່ງເຮັດໃຫ້ການຖິ້ມລະເບີດຂອງອາເມລິກາ ຢູ່ຫວຽດນາມເໜືອຢຸດຊົ່ວຄາວໃນເດືອນ ພະຈິກ 1968.

ໃນຂະນະທີ່ມີການຢຸດຍິງຊົ່ວຄາວທີ່ຫວຽດນາມເໜືອ ບັນດາຍົນຖິ້ມລະເບີດກໍປ່ຽນມາຖິ້ມລົງໃສ່ ປະເທດລາວແທນ ແລະ ໂລກພາຍນອກກໍບໍ່ສາມາດປະທ້ວງການກະທຳນີ້ໄດ້ ເພາະບໍ່ທັນເປັນທີ່ຮູ້ຈັກເທື່ອ. ດັ່ງນັ້ນ ພາຍຫຼັງແປດເດືອນຂອງການຍິງທຳລາຍຂັ້ນສຸດທ້າຍຢູ່ທົ່ງໄຫຫີນ ສົງຄາມກົນຈັກທາງອາກາດ ກໍແຜ່ລາມລົງໄປປະເທດກຳປູເຈຍ, ຈົນມາຮອດ ເດືອນ ທັນວາ 1971 ທີ່ງານສະຖິຕິຂອງລັດຖະບານ ສະຫະລັດອາເມລິກາ ໄດ້ພົບວ່າ ປະຊາຊົນຂະເໝນກ່ວາສອງລ້ານຄົນ ເທົ່າກັບເກືອບສອງໃນສາມຂອງປະຊາກອນ ໄດ້ກາຍເປັນຊາວອົບພະຍົບ ທັງນີ້ ແມ່ນມາຈາກການຖິ້ມລະເບີດຂອງອາເມລິກາ ເປັນເຫດໃຫ້ພົນລະເຮືອນມີການອົບພະຍົບ ແລະ ບາດເຈັບ ລົ້ມຕາຍເປັນຈຳນວນຫຼວງຫຼາຍ.

ແມ່ນແຕ່ການຖິ້ມລະເບີດໃສ່ຫວຽດນາມເໜືອເລີ່ມຂຶ້ນໃໝ່ໃນທ້າຍເດືອນ ທັນວາ 1971 ອາເມລິກາ ກໍມີການລ່ວງລະເມີດສັນຍາໄປແລ້ວ 203 ຄັ້ງ ຕັ້ງແຕ່ມີສັນຍາການຢຸດຍິງ ລວມທັງການຮົບ 9 ຄັ້ງຂະໜາດໃຫຍ່ ຊຶ່ງໃຊ້ຍົນເປັນຮ້ອຍໆ ລຳໃນການຖະຫຼົ່ມ ຊຶ່ງໃຊ້ເວລາຫຼາຍວັນຕິດຕໍ່ກັນ.

ອາເມລິກາ ໄດ້ຖິ້ມລະເບີດກ່ວາພັນໂຕນໃນແຕ່ລະວັນລົງໃສ່ທົ່ວອິນດູຈີນ. ໃນຂະນະທີ່ທະຫານພາກພື້ນດິນຖອນອອກໄປແລ້ວ, ດັ່ງມີການຖະແຫຼງການໃນວັນທີ 13 ພະຈິກ 1971, ທ່ານ ແລັດ ລັດຖະມົນຕີກະຊວງປ້ອງກັນປະເທດປະກາດວ່າ: ໃນບົດປ້ອງກັນ ຊຶ່ງຂ້າພະເຈົ້າໄດ້

ສະເໜີຕໍ່ສະພາສູງໃນປີນີ້ ຂ້າພະເຈົ້າໄດ້ຊີ້ແຈງວ່າ ພວກເຮົາຈະສືບຕໍ່ນຳໃຊ້ກຳລັງທາງອາກາດ ແລະ ທາງທະເລຕໍ່ໄປເລື້ອຍໆ ທັງນີ້ ແມ່ນອີງໃສ່ທິດສະດີ ນິກສັນ ທີ່ວ່າ ຖ້າພວກເຮົາບໍ່ມີກຳລັງທາງອາກາດ ແລະ ທາງທະເລແລ້ວ ມັນກໍແມ່ນຄວາມຜິດອັນໃຫຍ່ຫຼວງ.

ທົ່ງໄຫຫີນ ຊຶ່ງມີຄົນຢູ່ປະມານຫ້າສິບພັນຄົນໃນເມື່ອກ່ອນ ແລະ ຖືກທຳລາຍຮາບຄາບ ບໍ່ແມ່ນເລື່ອງບັງເອີນ ແຕ່ມັນແມ່ນສັນຍາລັກແຫ່ງຊາຕາກຳທີ່ຈະເກີດກັບປະຊາຄົມຂອງໂລກທີສາມ ໃນທົ່ວໂລກ ເວັ້ນເສຍແຕ່ອຳນາດຂອງຜູ້ນຳປະເທດມະຫາອຳນາດ ທີ່ເຮັດສົງຄາມຖືກກວດສອບຈາກຫຼາຍຝ່າຍ. ຄວາມເປັນໄປໄດ້ທີ່ຈະເກີດເຫດແບບນີ້ຂຶ້ນອີກ ກໍ່ຍັງເປັນທີ່ສົງໄສຢູ່.

ພາຍໃນສະຫະລັດອາເມລິກາເອງ ບັນດາທ່າອ່ຽງຕ່າງໆ ກໍມີທ່າທີວ່າ ມີການຮວມສູນຫຼາຍຂຶ້ນ ທາງດ້ານອຳນາດພາຍໃນຄະນະບໍລິຫານລະດັບສູງ. ພາຍຫຼັງສົງຄາມໂລກຄັ້ງທີສອງ ມະຫາຊົນ ແລະ ສະພາສູງໄດ້ວາງຂໍ້ຈຳກັດ ແລະ ເຮັດໃຫ້ອຳນາດຕັດສິນໃຈໃນການເຮັດສົງຄາມຫຼຸດລົງເທື່ອລະກ້າວ. ສິ່ງທີ່ເກີດຂຶ້ນໃນອິນດູຈີນ ບໍ່ວ່າ ຈະເປັນປັດໄຈດ້ານເສດຖະກິດກໍ່ຄືດ້ານການເມືອງທີ່ພາໃຫ້ສະຫະລັດ ອາເມລິກາເຂົ້າມາແຊກແຊງ ແມ່ນຈະຍັງສືບຕໍ່ມີຕໍ່ໄປຢ່າງບໍ່ຈາງຫາຍ. ຄວາມຈິງແລ້ວ ການເຂົ້າແຊກແຊງໃນເຂດອື່ນໆ ຍັງສືບຕໍ່ແຜ່ລາມອອກໄປຢ່າງກວ້າງຂວາງ ໂດຍສະເພາະແມ່ນການນຳໃຊ້ສົງຄາມກົນຈັກ ຍັງຈະມີຕໍ່ໄປອີກ.

ມັນເປັນເລື່ອງທີ່ກ້າຫານ ຖ້າມີຜູ້ພະຍາກອນລ່ວງໜ້າວ່າ ຈະມີສົງຄາມແບບດຽວກັນນີ້ເກີດຂຶ້ນບ່ອນໃດອີກໃນຕໍ່ໜ້າ. ແຕ່ມີສິ່ງໜຶ່ງທີ່ປາກົດແຈ້ງກໍ່ຄື ເຕັກໂນໂລຊີແບບໃໝ່ທີ່ນຳມາປະຫັດປະຫານ ປະຊາຊົນທົ່ງໄຫຫີນ ກາຍເປັນໄພຂົ່ມຂູ່ ບໍ່ພຽງແຕ່ປະຊາຊົນເປັນລ້ານຄົນໃນໂລກທີສາມ ແຕ່ມັນເປັນການຂົ່ມຂູ່ ຕໍ່ມວນມະນຸດຊາດທັງໝົດອີກດ້ວຍ.

ຄວາມເປັນຈິງທີ່ເກີດຂຶ້ນຢູ່ທົ່ງໄຫຫີນ ສາມາດເວົ້າໄດ້ວ່າ ເປັນການເຊື່ອມໂຍງໄປສູ່ຍຸກນິວເຄຼຍຢ່າງເຫັນໄດ້ຈະແຈ້ງ.

ມັນເປັນອັນຈະແຈ້ງແລ້ວວ່າ ໃນວັນທີ 10 ເດືອນ ສິງຫາ 1945 ມະນຸດໄດ້ຜ່ານເຂົ້າສູ່ສະຫະສະວັດທີ່ເຂັ້ມຂຸ້ນທີ່ສຸດແລ້ວ ໃນການຕໍ່ສູ້ເພື່ອຄວບຄຸມທຳມະຊາດ ແຕ່ນັ້ນມັນແມ່ນການຄວບຄຸມແບບຜິວເຜີນ ແຕ ທີ່ສຳຄັນແມ່ນ ຈະເຮັດແນວໃດຈະຄວບຄຸມຄວາມສາມາດໃນການທຳ ລາຍໃຫ້ສິ້ນສຸດໄດ້.

ຝຸ່ນເຖົ່າຖ່ານຂອງ ຮິໂຣຊິມາ ແມ່ນຄວາມຮັບຜິດຊອບຂອງຜູ້ທີ່ ຄວບຄຸມເຕັກໂນໂລຊີທີ່ກ້າວໜ້າແບບໃໝ່ຂອງມວນມະນຸດ ແຕ່ພວກເຂົາ ຕ້ອງນຳໃຊ້ໃຫ້ເປັນປະໂຫຍດ ບໍ່ແມ່ນຈະນຳໃຊ້ເພື່ອທຳລາຍລ້າງ ຊຶ່ງມັນ ຈະເປັນຜົນຮ້າຍບໍ່ພຽງແຕ່ສະເພາະສິ່ງທີ່ມີຊີວິດ ແຕ່ມັນຈະເປັນຜົນຮ້າຍ ແກ່ຄົນຮຸ່ນຫຼັງ ທີ່ຍັງບໍ່ທັນເກີດ.

ຈາກຈຸດນີ້ ມັນໝາຍຄວາມວ່າແນວໃດ ທີ່ຜູ້ນຳຂອງປະເທດທີ່ຮັ່ງ ມີທີ່ສຸດ ແລະ ມີຄວາມກ້າວໜ້າທາງດ້ານເຕັກໂນໂລຊີທີ່ສຸດ ໃນປະຫວັດ ສາດ ຈະມານຳໃຊ້ອາວຸດນິວເຄຼຍຕ້ານກັບຜູ້ທີ່ມີອາຊີບເຮັດນາ ເພື່ອລ້ຽງ ປາກລ້ຽງທ້ອງທຳມະດາໄດ້? ເຮັດແນວໃດ ຈຶ່ງບໍ່ມີຈິດສຳນຶກໃນຄວາມ ເປັນຄົນ ທີ່ຂົນເງິນເປັນຕື້ໆ ດອນລາ ຈາກປະຊາຊົນຂອງຕົນເອງ ເພື່ອ ເຮັດສົງຄາມແບບປິດລັບ, ບິນຂ້າມທະວີບຈາກເຄິ່ງໂລກໜຶ່ງ ມາຖິ້ມລະ ເບີດໃສ່ຊຸມຊົນເຂດຊົນນະບົດທີ່ມີປະຊາຊົນເບົາບາງ ໂດຍທີ່ພວກເຂົາ ບໍ່ຮູ້ຫຍັງຊ້ຳລົງໄດ້ ? ມີແຕ່ປະຊາຊົນຊາວທົ່ງໄຫຫີນ ເປັນຜູ້ທີ່ໄດ້ປະ ສົບມາ ແລະ ພວກເຂົາກໍບໍ່ແມ່ນຜູ້ສຸດທ້າຍທີ່ປະເຊີນກັບເຫດການແບບ ນີ້ ຍັງຈະມີຕໍ່ໄປອີກ.

ບົດຄຳເຫັນ (Textual Note)

ບັນດາບົດເລື່ອງ ແລະ ຮູບພາບທີ່ນຳມາປະກອບເປັນປຶ້ມເລື່ອງ ຫີວນີ້ ແມ່ນມາຈາກຜູ້ທີ່ລອດຕາຍຈາກທ່າລະເບີດ ການຍິງທຳລາຍ ຂອງສົງຄາມທົ່ງໄຫຫີນ. ເລື່ອງລາວຕ່າງໆ ແມ່ນຮົບໂຮມຈາກການໄປສຳ ພາດ ມາຈາກຊາວອົບພະຍົບທີ່ກະແຈກກະຈາຍຢູ່ຕາມຄ້າຍອົບພະຍົບ ທ້າ-ຫົກແຫ່ງ ໃນເຂດທົ່ງພຽງວຽງຈັນ ນັບແຕ່ ເດືອນ ທັນວາ 1970 ແລະ

ເດືອນມີນາ 1971.

ມັນບໍ່ແມ່ນເຫດການບັງເອີນເລີຍ ທີ່ບໍ່ມີບົດຂຽນຂອງຊາວນາອິນດູຈີນປາກົດໃນສາຍຕາຊາວຕາເວັນຕົກ ໃຫ້ໄດ້ເຫັນຈົນຮອດປະຈຸບັນນີ້. ເຫດຜົນແມ່ນມາຈາກອຸປະສັກສີ່ປະການໃຫຍ່ດັ່ງນີ້:

ເຫດຜົນທີໜຶ່ງ ແມ່ນພາສາ ເພາະມີຊາວຕາເວັນຕົກໜ້ອຍຄົນໄດ້ຮຽນພາສາລາວ ດັ່ງນັ້ນ ພວກເຂົາຈຶ່ງຖືກຕັດຂາດຈາກຊາວນາຢ່າງສິ້ນເຊີງ. ຖ້າຫາກວ່າ ພວກເຮົາບໍ່ຮູ້ພາສາລາວແລ້ວ ໂຄງການນີ້ ກໍຈະບໍ່ມີທາງເກີດຂຶ້ນໄດ້ ນັບແຕ່ເລີ່ມຕົ້ນພຸ້ນແລ້ວ.

ສິ່ງກີດຂວາງທີສອງ ກໍແມ່ນດ້ານການເມືອງ ເພາະຊາວອົບພະຍົບເກືອບທັງໝົດ ແມ່ນພ່າຍໜີຈາກອຳນາດການທຳລາຍລ້າງຂອງອາເມລິກາໃນຮູບການຕ່າງໆ ຍ້ອນເຫດນີ້ ຈຶ່ງເຮັດໃຫ້ພວກເຂົາບໍ່ເຊື່ອ, ຢ້ານ ຫຼື ຊັງອາເມລິກາ. ໃນໄລຍະທຳອິດ ພວກອົບພະຍົບສ່ວນຫຼາຍແມ່ນບໍ່ມັກ ຫຼື ຄຽດໃຫ້ອາເມລິກາ. ຕາມທຳມະດາແລ້ວ ຄົນລາວຢູ່ເກືອບທຸກບ່ອນເປັນຄົນທີ່ເປີດເຜີຍ, ຈິດໃຈເອື້ອເຟື້ອເພື່ອແຜ່ ແລະ ກວ້າງຂວາງ. ເມື່ອພວກເຮົາໄປຢາມຄ້າຍອົບພະຍົບ ແລະ ໂອ້ລົມກັນກັບຄົນຜູ້ເກົ່າຄັ້ງແລ້ວຄັ້ງເລົ່າ ກໍເຮັດໃຫ້ເຂົາເຈົ້າເຊື່ອໝັ້ນ ແລະ ອຸປະສັກກໍ່ຄ່ອຍໆ ຫຼຸດລົງ ແລະ ເມື່ອເວລາຜ່ານໄປ ເຂົາເຈົ້າກໍ່ຄ່ອຍໆ ເປີດເຜີຍໃຫ້ພວກເຮົາຮູ້ຫຼາຍຂຶ້ນ

ບັນຫາທີສາມ ແມ່ນທາງດ້ານການທະຫານ ຊາວອົບພະຍົບມີຄວາມສົງໃຈຕໍ່ການທຳຮ້າຍຮ່າງກາຍຫຼາຍ ຖ້າຫາກບອກຄວາມລັບແກ່ຄົນພາຍນອກ ກ່ຽວກັບສິ່ງທີ່ກົງກັນຂ້າມກັບແນວທາງຂອງຝ່າຍອາເມລິກາ ແລະ ຖ້ານຳເລື່ອງຕ່າງໆ ໄປຂຽນລົງໜັງສືພິມແລ້ວ ຍິ່ງມີຄວາມອັນຕະລາຍຫຼາຍ. ຖ້າເຮັດແນວນັ້ນ ພວກເຂົາຈະຖືກກ່າວຫາວ່າ ເປັນຄອມມຸຍນິດ ແລະ ຜິນຕາມມາກໍຄື ການຂົ່ມຂູ່, ການຈັບກຸມ, ທໍລະມານ ແລະ ອື່ນໆ ທີ່ຮ້າຍກາດກວ່ານີ້.

ສຳລັບພວກເຮົາແລ້ວ ແມ່ນຍັງໂຊກດີຢູ່ ທີ່ໄດ້ລົ້ງເຄີຍກັບຊາວອົບພະຍົບຫຼາຍຄົນ ຊຶ່ງພວກເຂົາແມ່ນເຊື່ອໝັ້ນພວກເຮົາ ແລະ ພວກເຂົາກໍເຕັມໃຈຮັບຄວາມສ່ຽງໃນການເກັບກຳຂໍ້ມູນເຫຼົ່ານີ້. ພວກເຂົາເຈົ້າເຮັດ

ເຊັ່ນນັ້ນ ເພາະເຂົ້າໃຈດີວ່າ ພວກເຮົາຈະບໍ່ນຳເອົາຊື່ແທ້ ແລະ ລາຍລະ ອຽດຂອງພວກເຂົາອອກເຜີຍແຜ່ໃຫ້ຄົນອື່ນຮູ້.

ບັນຫາທີສີ່ ແມ່ນວັດທະນະທຳ ຊຶ່ງເປັນບັນຫາສຳຄັນທີ່ສຸດ. ຊາວ ຕາເວັນຕົກໄດ້ຖືກສິດສອນໃຫ້ມີແນວຄວາມຄິດວ່າ ຊາວບ້ານໃນແຫຼມ ອິນດູຈີນເປັນພຽງຊາວນາທີ່ໂງ່ຈ້າ, ຫຼ້າຫຼັງ ແລະ ບໍ່ມີຫົວຄິດ ມັນສະ ໝອງຫຍັງ. ພວກເຮົາກໍມີແນວຄິດຄ້າຍໆກັນ. ເຖິງແມ່ນວ່າ ພວກເຮົາ ຈະເຄີຍໃຊ້ຊີວິດທ່າມກາງຊາວນາລາວມາເປັນເວລາຫຼາຍປີ ແລະ ມີໂອ ກາດໄດ້ໂອ້ລົມກັບຊາວອົບພະຍົບ ເຂດທົ່ງໄຫຫີນ ໂດຍໃຊ້ເວລາຫຼາຍ ຊົ່ວໂມງຈົນນັບບໍ່ຖ້ວນ ນັບແຕ່ເດືອນ ກັນຍາ 1969 ກໍບໍ່ມີວິທີແຈວ່າ ຈະເກັບກຳບົດຂຽນເຫຼົ່ານີ້ໄດ້. ຈົນໄດ້ສິບຫ້າເດືອນ ພາຍລຸນມາ ຈຶ່ງສາ ມາດເກັບກຳໄດ້.

ພາຍໃຕ້ສະພາບການເຫຼົ່ານີ້ ພວກເຮົາຮູ້ສຶກວ່າ ບົດເລື່ອງ ແລະ ຮູບແຕ້ມທີ່ນຳມາປະກອບໃນເລື່ອງ ສະແດງໃຫ້ເຫັນຄວາມເປັນຈິງ ແລະ ຖືກຕ້ອງ ກັບລັກສະນະສົງຄາມ ທີ່ໄດ້ເກີດຂຶ້ນກັບຊາວນາ ອິນດູຈີນ ແລະ ຈະເກີດຂຶ້ນອີກໃນບໍ່ຊ້ານີ້. ເວົ້າແຈ້ງໆ ແລ້ວ ພວກເຮົາກໍປະຫຼາດໃຈໃນ ຄວາມຮູ້ສຶກ, ຮູບແບບ ແລະ ປະສົບການທີ່ໄດ້ຖືກຖ່າຍທອດຜ່ານສິ່ງ ກີດກັ້ນທາງພາສາ.

ແນ່ນອນວ່າ ບັນຫາເຫຼົ່ານີ້ ກາຍເປັນຂໍ້ຈຳກັດຂອງການຂຽນລົງ ໃນປຶ້ມຫົວນີ້. ຜູ້ຂຽນບໍ່ເຄີຍຖືກຮຽກຮ້ອງໃຫ້ນຳເອົາແນວຄິດທີ່ແທ້ຈິງ ຂອງພວກເຂົາມາຂຽນລົງເປັນເລື່ອງ ແຕ່ເພື່ອເປັນການຕອບສະໜອງຕໍ່ ການຮ້ອງຂໍ ພວກເຮົາຈຶ່ງໄດ້ສະເໜີໃຫ້ແບ່ງບົດເລື່ອງອອກເປັນໄລຍະ ຕ່າງໆຄື ໄລຍະກ່ອນ, ໃນໄລຍະເກີດສົງຄາມ ແລະ ໄລຍະພາຍຫຼັງ ສົງຄາມປີ 1964-1969. ພວກເຮົາແນະນຳວ່າ ບົດເລື່ອງຕ່າງໆ ແມ່ນ ກວມເອົາທັງຫົວຂໍ້ກ່ຽວກັບເສດຖະກິດ, ການສຶກສາ ແລະ ກະສິກຳ. ຫຼາຍ ຄົນກໍມີຫຼາຍຄຳເຫັນ ແລະ ມີການທັບຊ້ອນກັນຫຼາຍປະເດັນ ຈາກຂໍ້ມູນທີ່ ເກັບມາໄດ້ເບື້ອງຕົ້ນ. ຍ້ອນເຫດນີ້ ໃນ 30 ເລື່ອງທີ່ເກັບໄດ້ ພວກເຮົາ ຈຶ່ງໄດ້ຄັດຈ້ອນນຳມາຂຽນຕົວຈິງພຽງ 16 ເລື່ອງ ທີ່ເດັ່ນໆ.

ບັນຫາທາງພາສາ ແລະ ວັດທະນະທຳແມ່ນສຳຄັນຫຼາຍ ໃນເວລານຳມາແປອອກເປັນເລື່ອງ. ເລື່ອງລາວຕ່າງໆ ທີ່ນຳມາຂຽນບໍ່ພຽງແຕ່ເປັນພາສາລາວເທົ່ານັ້ນ ແຕ່ຍັງເປັນເລື່ອງຊີວິດຈິງຂອງຊາວນາ ຊຶ່ງບາງຄັ້ງການໃຊ້ຄຳສັບ ເພື່ອສະແດງຄວາມຄິດເຫັນແມ່ນບໍ່ສາມາດແປໃຫ້ມີຄວາມໝາຍເປັນພາສາອັງກິດໄດ້. ເມື່ອພົບກັບບັນຫາທາງດ້ານພາສາ ແລະບັນຫາອື່ນອີກກໍ່ແມ່ນນັກແປພາສາທີ່ເປັນຄົນລາວກໍ່ພະຍາຍາມຄົ້ນຫາຄຳສັບພາສາອັງກິດທີ່ເໝາະສົມ ເພາະພວກເຮົາຕ້ອງການຄວາມເປັນຈິງ ແລະ ແປໃຫ້ໃກ້ຄຽງກັບຄວາມໝາຍເດີມ ໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້. ສິ່ງເຫຼົ່ານີ້ ໄດ້ນຳໄປສູ່ບັນຫາທີ່ຫຍຸ້ງຍາກ ກໍ່ຄືການໃຊ້ຄຳສັບສຳຄັນຈຳນວນໜຶ່ງທີ່ຊ້ຳກັນ.

ຄວາມຫຍຸ້ງຍາກໃນບາງປະເດັນກໍ່ແມ່ນ ການແປກ່ຽວກັບບົດລຳ ແລະ ການກອນຂອງໝໍລຳ ແລະ ນັກກະວີຂອງລາວ ເພາະໃນປະເພນີລາວແລ້ວ ເລື່ອງລາວ ແລະ ເຫດການຕ່າງໆ ແມ່ນເລື່ອງເລົ່າຈາກພໍ່ສູ່ລູກໂດຍປາກ ແລະ ໃນແຕ່ລະບ້ານ ຈະມີຄົນຈຳນວນໜຶ່ງຖືກຝຶກໃຫ້ມີຄວາມຊຳນານໃນການເລົ່າເລື່ອງແບບປາກເປົ່າ. ໝໍລຳພື້ນເມືອງ ທີ່ໄປລຳໃນງານແຕ່ງດອງ, ງານເຮືອນດີ ແລະ ໃນພິທີທາງສາສະໜາຕ່າງໆ ກໍໄດ້ແຕ່ງບົດລຳ ໃຫ້ເຂົ້າກັບສະພາບການທີ່ເກີດຂຶ້ນ ແລະ ໄດ້ຖ່າຍທອດໃຫ້ຮຸ່ນຕໍ່ມາ. ບັນດາການກອນ ແລະ ກອນລຳຕ່າງໆ ເມື່ອບໍ່ໄດ້ຂຽນເປັນລາຍລັກອັກສອນ ກໍ່ສາມາດລຳໄດ້ຢ່າງເສລີ.

ເລື່ອງລາວເຫຼົ່ານີ້ ຕໍ່ມາກໍ່ໄດ້ກາຍມາເປັນສຽງຄວນຈາກທົ່ງໄຫຫີນ ຊຶ່ງປະຊາຊົນກ່າວວ່າ ພວກເຂົາມາຈາກຊຽງຂວາງ ຊຶ່ງເປັນຊື່ແຂວງທີ່ທົ່ງໄຫຫີນຕັ້ງຢູ່. ບາງຄັ້ງພວກເຂົາກໍໝາຍເຖິງ ເມືອງຊຽງຂວາງ ຊຶ່ງເປັນເມືອງໃຫຍ່ຂອງແຂວງ ໃນແຕ່ລະແຂວງຈະແບ່ງອອກເປັນຫຼາຍເມືອງ, ຫຼາຍຕາແສງ ແລະ ຫຼາຍບ້ານ.

ບັນດາທ່ານຜູ້ອ່ານອາດສະຫຼຸບສັງລວມໄດ້ວ່າ ຜູ້ຂຽນມີທັດສະນະກ່ຽວກັບດ້ານການເມືອງ ທີ່ບໍ່ເຂົ້າຂ້າງອອກຂາ ເພື່ອຊຸກຍູ້ໃຫ້ພວກເຂົາໄດ້ຂຽນຢ່າງມີເສລີພາບ ແລະ ບໍ່ໄດ້ຈຳກັດຄວາມວ່າ ພວກເຂົາຈະເຫັນ

ດີນຳຝ່າຍປະເທດລາວ ຫຼື ເຫັນດີກັບຝ່າຍລັດຖະບານ.

ບາງຄັ້ງ ບັນດາທ່ານຜູ້ອ່ານອາດຈະບໍ່ເຫັນດີ ກ່ຽວກັບສິ່ງທີ່ຂຽນລົງໃນພາກນີ້ ເພາະອາດຈະຄິດວ່າ ເປັນການເວົ້າຫຼາຍເກີນໄປ ຫຼື ເປັນການໂຄສະນາຂອງພວກອົບພະຍົບ ຫຼື ຜູ້ຂຽນເອງ. ພວກເຮົາໃນນາມທີ່ເປັນນັກແປ ບໍ່ສາມາດຮັບຮອງໄດ້ວ່າ ເຫດການເກີດຂຶ້ນ ທີ່ໄດ້ບັນທຶກລົງໃນເລື່ອງລາວນີ້ ຈະເປັນຄວາມຈິງທັງໝົດ. ຍົກຕົວຢ່າງ ພວກເຮົາຮູ້ວ່າ ບັນດາຍົນທີ່ບັນຍາຍໂດຍຊາວອົບພະຍົບ ຊຶ່ງເລີ່ມຕົ້ນດ້ວຍຕົວອັກສອນ "F" ແມ່ນໝາຍເຖິງອາຍພົ່ນ ແລະ ຍົນທີ່ ໝາຍດ້ວຍ "T" "A" ແມ່ນຍົນຖິ້ມລະເບີດແບບໃບພັດ ແລະ ຍົນໝາຍດ້ວຍຕົວອັກສອນຂຶ້ນໜ້າ "L" ແມ່ນຍົນສອດແນມ. ພວກເຮົາບໍ່ສາມາດຢັ້ງຢືນໄດ້ວ່າ ບັນດາຍົນ ທີ່ຊາວອົບພະຍົບກ່າວເຖິງ ເຮັດໜ້າທີ່ຄືດັ່ງທີ່ເຂົາເຈົ້າກ່າວແທ້ຫຼືບໍ່ ໃນເວລາເຂົ້າສຳພາດພວກອົບພະຍົບ.

ເຖິງຢ່າງໃດກໍ່ຕາມ ຍັງມີລາຍລະອຽດຈຳນວນໜຶ່ງ ທີ່ພວກເຮົາຮູ້ ເຊັ່ນ ທາງການສະຫະລັດອາເມລິກາ ຍອມຮັບວ່າ ມີການຖິ້ມລະເບີດໃສ່ທົ່ງໄຫຫີນເປັນເວລາຫ້າປີເຄິ່ງ ນັບແຕ່ເດືອນ ພຶດສະພາ 1964 ຮອດເດືອນ ກັນຍາ 1969 ຕາມຕົວເລກທີ່ໄດ້ຄຳນວນໄວ້ ແມ່ນມີຢ່າງໜ້ອຍ 25,000 ຖ້ຽວບິນ ທີ່ບິນເຂົ້າທົ່ງໄຫຫີນ ແລະ ມີລະເບີດເທລົງໃສ່ທົ່ງໄຫຫີນປະມານ 75,000 ໂຕນ. ນອກນີ້ ການສຳຫຼວດຂອງໜ່ວຍຂ່າວສານສະຫະລັດ ຍັງໄດ້ໃຫ້ຍອມຮັບຫຼັກຖານຂອງຊາວອົບພະຍົບທີ່ວ່າບ້ານເຮືອນຂອງຊາວອົບພະຍົບ 95% ຖືກທຳລາຍດ້ວຍລະເບີດ, ສອງໃນສາມຂອງຊາວອົບພະຍົບພົບເຫັນຄົນລົ້ມຕາຍ ແລະ ໄດ້ຮັບບາດເຈັບ ແລະ 80 ເປີເຊັນຂອງກໍລະນີດັ່ງກ່າວ ຜູ້ໄດ້ຮັບເຄາະຮ້າຍ ແມ່ນປະຊາຊົນພົນລະເຮືອນ ບໍ່ແມ່ນທະຫານແຕ່ຢ່າງໃດ.

ມັນບໍ່ມີຄວາມຈຳເປັນຫຍັງ ສຳລັບປະຊາຊົນຜູ້ທີ່ຂຽນເລື່ອງນີ້ ແລະ ແຕ້ມຮູບປະກອບ ທີ່ຈະເວົ້າແບບນ້ຳຖ້ວມທົ່ງ ກ່ຽວກັບເຫດການທີ່ເກີດຂຶ້ນກັບພວກເຂົາ ເພາະມັນແມ່ນຄວາມຈິງທຸກຢ່າງ.

1. ຕົວເລກທີ່ໄດ້ຈາກສູນຂໍ້ມູນຂ່າວສານຈາກຫ້ຳປຽບຫ້ຳແຈ ແຈ້ງ ວ່ຳ ໄດ້ຖິ້ມລະເບີດກວ່ຳ 6 ລ້ຳນໂຕນ ລົງໃສ່ເຂດອິນດູຈີນ. ຈຳກກຳນ ສຶກສຳຈຳກທີມມະຫຳວິທະຍຳໄລ ຄໍແນວ ກ່ຳວ່ຳ ໜຶ່ງໃນສີ່ຂອງຈຳນວນ ນີ້ ແມ່ນໄດ້ຖິ້ມລົງໃສ່ ປະເທດລຳວ ໂດຍສະເພຳະ. ໝຳຍຄວຳມວ່ຳ ປະ ມຳນສຳມ ຫຳສີ່ໂຕນຕໍ່ຖົ້ງວບິນ ໝຳຍຄວຳມວ່ຳ ມີປະມຳນ 375.000 ຫຳ ກວ່ຳ 500.000 ຖົ້ງ ໄດ້ບິນມຳຖິ້ມໃສ່ປະເທດລຳວ.

ພາກທີສອງ
ສຽງຄວນຈາກທົ່ງໄຫ

"ຊີວິດຂອງພວກຂ້ອຍບໍ່ຕ່າງຫຍັງກັບສັດທີ່ດິ້ນຮົນປົບຕາຍແບບ ກະເສືອກກະສົນ ເພື່ອປົບໜີຈາກນັກລ່າ. ການເກີດມາເປັນຄົນ ທີ່ພໍ່ແມ່ ໃຫ້ກຳເນີດສູ່ໂລກ ຖືກລ້ຽງເກືອຢ່າງທະນຸຖະໜອມ ເຖິງວ່າຈະມີຄວາມ ຫຍຸ້ງຍາກນາໆ ປະການ ແຕ່ສັດພວກນີ້ຕ້ອງມາຕາຍຢ່າງອາໜາດ ຈາກ ແຮງລະເບີດພຽງສ້ຽວວິນາທີ ຕາຍແບບຢຽດຄ້ຽນ້ຽບໍ່ມີວັນກັບຄືນອີກ. ມີໃຜແດ່ຈະອີ່ຕົນສົງສານແຮງງານ, ເລືອດເນື້ອເຫື່ອໄຄ ທີ່ພໍ່ແມ່ພວກ ເຂົາລ້ຽງມາດ້ວຍຄວາມເມື່ອຍຍາກອີກ? ໃນຄວາມເປັນຈິງແລ້ວ, ສິ່ງທີ່ ເກີດຂຶ້ນແລ້ວ ແມ່ນຜູ້ທີ່ບໍລິສຸດທີ່ໄດ້ຮັບເຄາະກຳອັນນີ້. ບັນດາຄົນ ອື່ນໆເດ ພວກເຂົາຈະຄິດເຫັນຊາຕາກຳ ອັນແສນອາໜາດໃນສົງຄາມ ນີ້ແດ່ບໍ ?"

ສຽງຈາກຍິງອົບພະຍົບຈາກທົ່ງໄຫໄວ 30 ປີ



ແຕ້ມໂດຍ : ນັກແຕ້ມ ອາຍຸ 27 ປີ

ສຳລັບຊາວຊຽງຂວາງແລ້ວ ມັນແມ່ນຍ້ອນສົງຄາມນີ້ລະ ທີ່ນຳເອົາຄວາມຕາຍມາສູ່ປະຊາຊົນ ແລະ ສ້າງສາທຳມາຫາກິນກໍບໍ່ໄດ້. ການປູກເຂົ້າ ແລະ ການຫາລ້ຽງຊີບກໍຫຍຸ້ງຍາກສັບສົນ. ໃນຮູບນີ້ ຈະເຫັນມີປະຊາຊົນກຳລັງເຮັດວຽກຢູ່ໃນທົ່ງນາ, ໃນຮົ້ວສວນ, ໃນບ້ານເຮືອນ ທັງໝົດແມ່ນຖືກຍິນຍິງທຳລາຍ ນອກຈາກນີ້ ບັນດາງົວ ຄວາຍ, ມ້າ ແລະ ເປັດໄກ່ກໍຕາຍກັນລະເນລະນາດ ເມື່ອທ່າລູກປືນຍິງກວາດລົງມາຈາກເທິງອາກາດ.

“ ຈັ່ງແມ່ນແສນເສົ້າ ”

ກອນລຳຂອງໝໍລຳພື້ນເມືອງ ອາຍຸ 20 ປີ

ແສນເສົ້າແທ້ເດ ຍາມກ່ອນກີ້ ທ້ອງທົ່ງນາເຮົາ
ງາມເບັ່ງບານໂດຍດວງ ດອກຫອມເຕັມດ້າວ
ຕາມໄຮ່ນາຮວງເຂົ້າ ເຫຼືອງຫອມເຕັມທົ່ງ
ຈັ່ງແມ່ນງາມອາດເອ້ ສະອອນໄອ້ຊື່ນຊົມ ເມືອງລາວເອີຍ

ເຮົາພາກັນໄອ່ຮ້ອງ ເພງມ່ວນລາວສອນ
ຍາມອອກໄປໃນດົງ ປ່າເຂົາຂຽວຂັ້ນ
ພວກເຮົາພາກັນຮ້ອງ ທຳນອງຮວມໝູ່
ເພງທີ່ຮ້ອງ ດັງກ້ອງຕໍ່ໄປ ນີ້ແລ້ວ

ແສນເສົ້າແທ້ເດ ຍາມກ່ອນກີ້ ທ້ອງທົ່ງນາຈະເບັ່ງບານໄປດ້ວຍເຂົ້າສຸກຫອມເຕັມນາ ດອກໄມ້ປ່າເບັ່ງບານທົ່ວປ່າດົງ ຈັ່ງແມ່ນງາມແທ້ເດ ເມືອງລາວເຮົາເອີຍ.

ພວກເຮົາພາກັນຮ້ອງເພງທີ່ປະເທດລາວສອນໃຫ້ດ້ວຍຄວາມເບີກບານມ່ວນຊື່ນ. ຍາມຂ້ອຍອອກໄປດົງ ໄປປ່າ ພວກຂ້ອຍກໍ່ພາກັນຮ້ອງເພງກັບໝູ່ເພື່ອນ: ເພງທີ່ພວກເຮົາຮ້ອງແມ່ນເພງ

ປະເທດລາວສວຍງາມ (ເພງຮັກເມືອງລາວ)

ແຜ່ນດິນຖິ່ນລາວ
ປະຊາຊົນຊາວລາວ
ອຸດົມ ແລະ ຮັ່ງມີ
ພູຜາປ່າໄມ້ຂຽວດີ
ນີ້ເປັນບ່ອນ
ຊາວລາວ ຮັກເມືອງລາວ
ພວກເຮົາຊາວໜຸ່ມລາວ
ຫ້າວຫັນເກັ່ງກ້າ
ເຖິງຄາວຊາດຕ້ອງການ
ດ້ວຍນ້ຳໃຈ
ສາບານການຕໍ່ສູ້
ພວກເຮົາຍາດເອົາ
ພວກເຮົາພ້ອມກັນ

ປະເທດຂອງລາວ
ສ້າງມາຫຼາຍປີ
ເປັນສະຫງ່າລາສີ
ງົດງາມແທ້ນາ
ລ້ຽງຊີບຊາວລາວ
ປຽບດັ່ງແກ້ວໃນຕາ
ຊາຍສະກັນທ່ວໜ້າ
ເພື່ອຊາດຂອງເຮົາ
ກໍເບີກບານຮັບໃຊ້
ຮັກດິນແດນຂອງລາວ
ກູ້ຊາດຢ່າງຟັ່ງຟ້າວ
ສັນຕິພາບເອກະລາດສົມບູນ
ສຳພັນອັນດຽວເອີຍ

ຜູ້ແຕ່ງເພງຂ້າງເທິງ ແມ່ນຜູ້ຍິງອາຍຸ 16 ປີຈາກບ້ານໜ້ວ.

ຂ້ອຍເປັນຊາວນາໜຸ່ມທີ່ຍາມໃດ ກໍຍັງຄິດຮອດຄວາມເກົ່າຄາວຫຼັງ ເຖິງແມ່ນວ່າ ຍິນອາກາດຈະມາຖິ້ມລະເບີດໃສ່ບ້ານພວກຂ້ອຍ ແຕ່ພວກເຮົາກໍຍັງພາກັນຮ້ອງເພງຮ່ວມກັນ. ມີຄົນຂອງພວກເຮົາຈຳນວນໜຶ່ງ ແມ່ນພາກັນຕາຍຄືໝູ ຄືໝາ ເພາະພວກໂຈນອາກາດມາຖິ້ມລະເບີດໃສ່ທຸກບ່ອນທຸກທີ່ ໂດຍທີ່ພວກເຮົາບໍ່ຮູ້ຕົວ. ຂ້ອຍມີຄວາມຂັດເຄືອງໃຈເມື່ອຄິດເຖິງເຫດການນີ້ ເຊິ່ງເປັນເຫດການທີ່ຂ້ອຍຈະບໍ່ມີວັນລືມລົງໄດ້.

ເປັນເວລາຍາວນານ
ນັບແຕ່ໄກຈາກກ້ຳ
ຜ່ານກາຍມາດິນລ້ຳ
ຖານຖິ່ນເກີດເມືອງນອນ

ເຊິ່ງເປັນບ່ອນ
ອົບພະຍົບຈາກເຈົ້າ
ຂາດທີ່ຢູ່ອາໄສ
ໂຫຍຫາບ້ານເກີດເຮົາ
ບ່ອນທີ່ເຄີຍຢູ່
ບ້ານເກີດທີ່ເຄີຍເຮືອງຮອງ
ທັງເຮືອນທີ່ສວຍງາມ
ທຸກຢ່າງລົ້ມຕາຍ
ຍ້ອນຍົນອາກາດໄດ້ປ່ອຍ
ເມືອງຊຽງຖືກຍົນຍິງຈາກຟ້າ
ບັງຄັບໃຫ້ຂ້ອຍໜີ
ຂ້ອຍຕ້ອງອາຍອຸ່ນ
ໄກຈາກທົ່ງໄຮ່ທົ່ງນາ
ຂ້ອຍຕ້ອງຈາກໄກ
ໃນລະດູບານໃໝ່
ຮ່ວມສ້າງຮ່ວມສາ
ພວກເຮົາບ່າວສາວຍິງ-ຊາຍ
ພວກເຮົາໄດ້ພາ
ເຖິງຍົນບິນມາອື່ນໆ
ພວກເຮົາກໍຕ້ອງກ້າ
ດວງໃຈເຢືອກເຢັນປານ
ຄິດເຖິງງົວຄວາຍ
ຫົວໃຈໂຫຍຫາ
ຈົດຈຳຍາມພວກເຮົາ
ພາກັນເກັບກ່ຽວເຂົ້າ
ເມື່ອຍົນອາກາດຕ່າວມາ
ຍາມຍົນບໍ່ຢູ່

ບັນພະບຸລຸດຂອງພວກເຮົາ
ມາຮອດວຽງຈັນແດນໄກ
ຫົວໃຈຂ້ອຍແສນໂສກເສົ້າ
ທົ່ງນາ ແລະ ປ່າພູ
ເຄີຍສ້າງມາດ້ວຍມືທັງສອງ
ດ້ວຍວັດວາອາຮາມ
ໄຮ່ນາຮົ້ວສວນງົວຄວາຍ
ຫາຍສາບສູນໄຮ້ຮ່ອງຮອຍ
ລະເບີດຍິງທຳລາຍທຸກຍ່ອມຫຍ້າ
ພາຂ້ອຍເສຍຫາຍທຸກຢ່າງທີ່ຂ້ອຍມີ
ເຂົ້າປ່າໝົ້ນຮູປານໂຕໜູໂຕຕຸ່ນ
ຈຳຈາກຄົນຮັກພີ່ປ້ານ້າອາ
ທີ່ແສນສວຍງາມກວ້າງໃຫຍ່
ທຸກຢ່າງທີ່ສ້າງມາແຕ່ນ້ອຍຈົນໃຫຍ່
ພວກຂ້ອຍເຄີຍອອກແຮງກາງນາ
ຈົນສຳເລັດຜືນດັ່ງໃຈ
ພ້ອມກັນດຳນາ
ກັນຮ້ອງເພງມ່ວນຊື່ນ
ຫວ່ານລະເບີດລົງມາ
ສຳເລັດວຽກງານໂດຍບໍ່ຢ້ານ
ຈະແຕກສະຫຼາຍ
ໄຮ່ນາ ແລະ ທົ່ງຫຍ້າ
ຖິ່ນຖານລຳເນົາ
ເຖົ້າແກ່ບ່າວສາວ
ດຸໝັ່ນຢູ່ກາງນາ
ພວກເຮົາແລ່ນເຂົ້າຖ້ຳເຂົ້າຮູ
ພວກເຮົາປ່ອນຫົວອອກຮູເຮັດວຽກງານ

ສຽງຈາກທົ່ງໄຫຫີນ

ພວກເຮົາເບີກບານ ຮ້ອງເພງມ່ວນຊື່ນ
ສຽງດັງຟົດຟື້ນ ດັງກ້ອງທົ່ວທົ່ງນາ
ແສນແສບເສົ້າແທ້ນາ ເມື່ອປະຊາຕ້ອງລົ້ມຕາຍກ່າຍກອງ
ພວກເຮົາຈຳຕ້ອງ ຈຳໃຈຈາກບ້ານ
ເພາະຍິນມາຫວ່ານ ລະເບີດປານຫ່າຝົນ
ຈຳໃຈຕ້ອງທົນ ຈາກໄກບ້ານເກີດເຮົາມາ
ຈຳໃຈຈາກຮົ້ວສວນທົ່ງນາ ທີ່ກວ້າງໃຫຍ່ມຸ່ນເປັນຝຸ່ນລະອອງ

ຂ້ອຍເປັນເດັກນ້ອຍພາຍໃນບ້ານ ຄັ້ງໜຶ່ງຂ້ອຍໄດ້ເຫັນມ້າໂຕນີ້ ທັ້ງໃຫຍ່ ທັ້ງດີ. ເຈົ້າຂອງມັນມັກຂີ່ໄປນາ ແຕ່ເມື່ອຖືກຍິນຍິງ ເຫັນມີແຕ່ມ້າແລ່ນກັບຄືນມາບ້ານ ພວກເຮົາຮູ້ວ່າລາວຖືກຍິນຍິງ. ຂ້ອຍໄປນຳພວກຜູ້ໃຫຍ່ ເພື່ອຊອກຫາລາວ ແຕ່ເມື່ອໄປພົບ ລາວກໍຕາຍຢູ່ທົ່ງນາແລ້ວ. ເມື່ອຂ້ອຍເຫັນແລ້ວ ສຸດທີ່ສົງສານລາວ ເຫັນລູກໆ ແລະ ເມຍຂອງລາວພາກັນຮ້ອງໄຫ້ນຳລາວ ແລ້ວສົງສານຫຼາຍ ຫຼາຍຄົນກໍພາກັນຄິດຮອດລາວ.



24 / VII

ແຕ້ມໂດຍ: ເດັກອາຍຸ 14 ປີ

ຈົ່ງສົງສານ ຜູ້ທີ່ຖືກເຄາະກຳຈາກສົງຄາມແດ່ທ້ອນ

ໂດຍ: ແມ່ຍິງອາຍຸ 30 ປີ

ຊື່ຂ້ອຍ ແມ່ນ ນາງ..... ຊຽງຂວາງ ເປັນບ້ານເກີດເມືອງນອນ ຂອງຄອບຄົວຂ້ອຍມາແຕ່ສະໄໝບັນພະບູລຸດ. ຕອນນີ້ຂ້ອຍ ໄດ້ມາຢູ່ວຽງ ຈັນ ຊຶ່ງເປັນເມືອງຫຼວງຂອງປະເທດລາວ. ຂ້ອຍສາມາດສົມທຽບສອງ ເຂດນີ້ຂອງປະເທດລາວ ເພາະຂ້ອຍຮູ້ວ່າ ມັນມີຄວາມແຕກຕ່າງກັນຫຼາຍ ບໍ່ພຽງແຕ່ທາງດ້ານການພັດທະນາເສດຖະກິດ ມັນຍັງມີຄວາມແຕກຕ່າງ ກັນທາງດ້ານສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະ ແມ່ນຊີວິດຂອງຜູ້ຍິງ.

ຂ້ອຍເກີດ ແລະ ເຕີບໂຕມາເປັນເວລາ 30 ປີແລ້ວ ພາຍໃຕ້ການ ລ້ຽງດູ ແລະ ການອົບຮົມບົ່ມສອນຂອງພໍ່ແມ່. ຂ້ອຍໄດ້ເຂົ້າໂຮງຮຽນແຕ່ ສະໄໝຽງຂວາງຢູ່ພາຍໃຕ້ການປົກຄອງຂອງລັດຖະບານ.

ຮອດປີ 1956- 1957 ຂ້ອຍກໍເລີ່ມເປັນສາວ ແລະ ຮຽນຈົບຊັ້ນ ປະຖົມ ແລະ ມີຄວາມຮັກກັບ ທ້າວ..... ແລະ ແຕ່ງງານກັນໃນປີ 1959. ຊີວິດກ່ອນການແຕ່ງງານສຸດທີ່ມີຄວາມສົດໃສ ແລະ ມີຄວາມສຸກຫຼາຍ ໃນຊີວິດ. ພາຍຫຼັງການແຕ່ງງານ ຂ້ອຍພົບແຕ່ຄວາມອຸກໃຈຫຼາຍ ໂດຍບໍ່ ມີວັນສິ້ນສຸດ. ຜົວຂອງຂ້ອຍເປັນຄົນໃຈແຄບ ແລະ ມາລະຍາດກໍ່ບໍ່ຄ່ອຍ ດີປານໃດ. ໃນເວລາທີ່ພວກເຮົາໂອ້ລົມກັນ ລາວໄດ້ເຊື່ອງຊ້ອນຈຸດອ່ອນ ຂອງລາວໄວ້. ເມື່ອມາຢູ່ຮ່ວມກັນແລ້ວ ສິ່ງທີ່ບໍ່ດີທີ່ມີຢູ່ກໍຖືກໄຂອອກ ມາເທື່ອລະໜ້ອຍ. ສຳລັບຂ້ອຍແລ້ວ ເປັນຄົນທີ່ມັກຄິດແບບບູຮານ ເມື່ອ ເກີດມາເປັນຜູ້ຍິງແລ້ວ ກໍຕ້ອງໄດ້ສູ້ທົນ ກັບເຫດຮ້າຍຕ່າງໆ ຈົນກວ່າ ຜົວຈະເຫັນໃຈ ແລະ ເຮັດໃຫ້ເມຍມີຄວາມສຸກ. ຂ້ອຍບໍ່ເຄີຍຄິດເລີຍວ່າ ຜົວຂ້ອຍຈະເປັນຄົນທີ່ຊົ່ວຮ້າຍຄືແນວນີ້.

ໃນປີ 1960 ຂ້ອຍໄດ້ເກີດລູກຜູ້ຊາຍເປັນຜູ້ທຳອິດ ແຕ່ຜົວຂ້ອຍ ເມີນເສີຍຕໍ່ຂ້ອຍ ແລະ ອອກໄປຫຼິ້ນກັບສາວນ້ອຍຄົນອື່ນຕະຫຼອດເວລາ. ເທົ່ານີ້ຍັງບໍ່ພໍ ລາວຍັງຂົ່ມຂູ່ຂ້ອຍອີກ ແລະ ພໍ່ແມ່ລາວກໍເຂົ້າຂ້າງລູກຊາຍ

ເຮັດໃຫ້ຂ້ອຍມີຄວາມເຈັບຊ້ຳນ້ຳໃຈຫຼາຍ. ໃນຄວາມຮູ້ສຶກຂ້ອຍແມ່ນວ່າ ຈະຕ້ອງໄດ້ອຶດທົນຕໍ່ສິ່ງໂຫດຮ້າຍຕ່າງໆ ເພື່ອອະນາຄົດຂອງລູກຊາຍ ທີ່ຈະໃຫຍ່ຂຶ້ນມາ. ຍາມໃດຂ້ອຍກໍພະຍາຍາມອຶດທົນຕໍ່ໄປ. ປີ 1963-1964 ຝ່າຍປະເທດລາວເຂົ້າມາປົກຄອງຊຸງຂວາງ ແລະ ໄດ້ຈັດຕັ້ງກອງຊົນຂວາຍເພື່ອສຶດສອນປະຊາຊົນຂຶ້ນໃນຫຼາຍບ້ານ. ພວກເພິ່ນໄດ້ຈັດຕັ້ງໂຮງຮຽນປະຊາສຶກສາ ແລະ ຮັບເອົາແມ່ຍິງ, ຮັບເອົາຜູ້ສູງອາຍຸ ແລະ ບັນດາຜູ້ທີ່ບໍ່ມີໂອກາດໄດ້ຮຽນອ່ານ-ຂຽນເຂົ້າມາຮຽນ. ພວກເພິ່ນໄດ້ ຮັບເອົາຜູ້ທີ່ມີຄວາມສາມາດໃນການສຶດສອນມາເປັນນາຍຄູ ແລະ ເປັນຫົວໜ້າໜ່ວຍເພດຍິງ. ພວກເພິ່ນໄດ້ອອກຄຳເຫັນວ່າ ຖ້າຜູ້ຊາຍຄິດວ່າຕົນເອງເປັນໃຫຍ່ເປັນໂຕ ເປັນຜູ້ປົກຄອງຄອບຄົວແມ່ນຜິດພາດ. ຖ້າບໍ່ເອົາໃຈໃສ່ເມຍແລ້ວ ຍັງໄປຫາຍິງຄົນໃໝ່ ໂດຍບໍ່ມີເຫດຜົນໃດໆ ກໍແມ່ນຜິດພາດຫຼາຍ. ຫຼັງຈາກທີ່ພວກເພິ່ນກ່າວປາໄສຄືແນວນີ້ແລ້ວ ຜົວຂ້ອຍກໍບໍ່ກ້າກະທຳສິ່ງໃດທີ່ບໍ່ດີຄືແຕ່ກ່ອນ. ເມື່ອພວກເພິ່ນຮູ້ວ່າ ພວກເຮົາຍັງຢ້ານຜົວ ຍ້ອນມີແນວຄວາມຄິດແບບເດີມຢູ່ ພວກເພິ່ນກໍຊຸກຍູ້ພວກເຮົາໃຫ້ມີຄວາມກ້າຫານ ແລະ ລຸກຂຶ້ນຕໍ່ສູ້ກັບຜົວ ແລະ ບໍ່ອະນຸຍາດໃຫ້ເຮັດແນວບໍ່ດີ ແລະ ບໍ່ໃຫ້ຕີເມຍອີກ. ແຕ່ຂ້ອຍກໍບໍ່ມີຄວາມກ້າ ແລະ ມີວຸກເຮືອນຫຼາຍ ແລະ ອີກຢ່າງໜຶ່ງກໍຢ້ານຜົວຈະບໍ່ດີໃຈ. ຂ້ອຍຈຶ່ງຫາຂໍ້ອ້າງບໍ່ເຂົ້າຮ່ວມການຝຶກອົບຮົມທີ່ພວກເພິ່ນຈັດຂຶ້ນ. ສຸດທ້າຍພວກເພິ່ນກໍເອົາຊະນະຈິດໃຈຂ້ອຍໄດ້ ພວກເພິ່ນໃຫ້ໝູ່ເພື່ອນມາເບິ່ງແຍງ ແລະ ເອົາຢາມາໃຫ້ໃນເວລາທີ່ຂ້ອຍອຶດເມື່ອຍ ແລະ ເຈັບເປັນ ຊຶ່ງສະແດງຄວາມເປັນຫ່ວງ ເປັນໃຍ ແລະ ສົ່ງສານຂ້ອຍ ເຖິງແມ່ນວ່າ ສົ່ງຄາມຈະຍັງແກ່ຍາວໄປທຸກບ່ອນ ພວກເພິ່ນກໍຍັງພົວພັນຄືເກົ່າ.


ໃນຄວາມເປັນຈິງແລ້ວ ສິ່ງທີ່ໄດ້ບັນຍາຍຂ້າງເທິງຍັງຫຼາຍຢ່າງທີ່ບໍ່ໄດ້ກ່າວເຖິງ ເພາະຊີວິດແມ່ນພົບກັບຄວາມຫຍຸ້ງຍາກ ໃນການເອົາຊີວິດລອດ. ມັນມີຄວາມອັນຕະລາຍຫຼາຍ ເມື່ອສົ່ງຄາມໃກ້ເຂົ້າມາມີສຽງປືນໃຫຍ່, ສຽງລະເບີດ ແລະ ສຽງຍົນກຶກກ້ອງທົ່ວທ້ອງຟ້າ ເຮັດໃຫ້ມີຄວາມຢ້ານຕາຍ. ໃນຕອນນັ້ນ ຊີວິດຂອງພວກເຮົາບໍ່ຕ່າງຫຍັງກັບສັດ

ທີ່ກຳລັງປົບຕາຍຈາກນາຍພານ. ຊີວິດມອບໃຫ້ແຕ່ພະພຸດທະເຈົ້າປົກປັກຮັກສາ ທຸກເມື່ອທຸກຍາມພວກເຮົາມີແຕ່ໄຫວ້ວອນໃຫ້ພະພຸດພະທຳເພິ່ນຊ່ວຍ ພວກເຮົາບໍ່ຮູ້ວ່າ ຍາມໃດຈະຕາຍ. ຫຼຽວເບິ່ງໜ້າພວກເດັກນ້ອຍແລ້ວ ເປັນໜ້າສົງສານ ທີ່ພວກເຂົາໄດ້ສູນເສຍຊີວິດອັນມີຄວາມສຸກໃນໄວເດັກ ເພາະແຕ່ລະວັນ ພວກເຮົາພາກັນປົບຕາຍເຂົ້າປ່າ ເຂົ້າດົງ. ແຕ່ລະມື້ມີແຕ່ຄວາມທຸກທໍລະມານ ແລະ ກຽດຊັງສົງຄາມຂຶ້ນທຸກວັນ. ເປັນຫຍັງຄົນເຮົາຈຶ່ງບໍ່ມີຄວາມຮັກແພງກັນໄວ້? ເປັນຫຍັງຈຶ່ງບໍ່ພາກັນມີຊີວິດຢູ່ຢ່າງສະເໝີພາບ? ເປັນຫຍັງພວກເຮົາຈຶ່ງບໍ່ສ້າງແຕ່ຄວາມສຸກ ແລະ ຄວາມກ້າວໜ້າດ້ວຍກັນ? ເປັນຫຍັງ ຈຶ່ງມາເຂັ່ນຂ້າຮາວີກັນ! ມະນຸດຊາດທີ່ພໍ່ແມ່ໄດ້ໃຫ້ກຳເນີດອອກມາສູ່ໂລກແລ້ວ ແລະ ລ້ຽງດູດ້ວຍຄວາມເອົາໃຈໃສ່ ໃຫ້ຄວາມຮັກແພງອັນອົບອຸ່ນ ເຖິງວ່າ ຈະພົບກັບຄວາມຫຍຸ້ງຍາກລຳບາກກໍ່ຕາມ ແຕ່ແລ້ວກໍມາຕາຍດ້ວຍລະເບີດ ທີ່ແຕກໝຸ່ງສ້ຽວວິນາທີ. ມີໃຜແດ່ທີ່ຄິດເຖິງເລືອດເນື້ອ, ເຫື່ອໄຄ ແລະ ພາລະກຳລັ້ງຂອງພໍ່ແມ່ພວກເຂົາທີ່ລ້ຽງມາ ເປັນຫຍັງຈຶ່ງບໍ່ອີ່ຕົນ ແລະ ມີຄວາມສົງສານພວກເຂົາແດ່? ບໍ່ຄິດເຖິງຄວາມແຕກແຍກສາແຫຼກຂາດຂອງຄອບຄົວ ທີ່ຕ່າງຄົນຕ່າງພັດພາກຈາກກັນໄປຄົນລະທິນລະແຫ່ງ ຍ້ອນສົງຄາມ ? ມີໃຜເຫັນໃຈພວກເຂົາແດ່ ? ໃນຄວາມເປັນຈິງແລ້ວ ຜູ້ທີ່ໄດ້ຮັບຄວາມທຸກທໍລະມານ ແມ່ນຜູ້ທີ່ບໍລິສຸດ. ສ່ວນຜູ້ອື່ນໆ ເດ ເຂົາເຈົ້າຮູ້ບໍ່ວ່າມີຫຍັງເກີດຂຶ້ນໃນສົງຄາມ? ຫຼື ຈະເວົ້າວ່າ ສົງຄາມໄດ້ນຳພົນປະໂຫຍດມາໃຫ້ພວກເຂົາ ດັ່ງນັ້ນ ຈຶ່ງບໍ່ຢາກເຊົາເຮັດສົງຄາມບໍ ?

ປີຜ່ານມາດ້ວຍຄວາມພະຍາຍາມຂອງລັດຖະບານ ອັນທີ່ເອີ້ນວ່າກອງທັບແຫ່ງຊາດພວກເຮົາຈຶ່ງໜີພົ້ນຈາກແປວໄຟຂອງສົງຄາມ. ລັດຖະບານໄດ້ເອົາພວກເຮົາມາຕັ້ງຖິ່ນຖານໄວ້ ທີ່ເຂດວຽງຈັນ ແລະ ໃຫ້ການຊ່ວຍເຫຼືອພວກເຮົາໃນຊີວິດປະຈຳວັນ. ພວກເພິ່ນໄດ້ພາພວກເຮົາໃຫ້ມາເຫັນເຂດທີ່ມີການພັດທະນາແລ້ວ ຊຶ່ງບໍ່ມີສົງຄາມ ປະຊາຊົນມີຊີວິດຢູ່ໂດຍບໍ່ມີຄວາມທຸກທໍລະມານໃດໆ ພວກເພິ່ນພາພວກເຮົາມາເບິ່ງທ້ອງຟ້າ ແລະ ແຜ່ນດິນທີ່ຄົນອື່ນໆເຫັນ.

ອີກດ້ານໜຶ່ງ ພັດມີແຕ່ຄວາມໂສກເສົ້າເສຍໃຈ ທີ່ສູນເສຍເຮືອນຊານບ້ານຊ່ອງ ແລະ ສິ່ງຂອງໄປໝົດໃນສົງຄາມ. ການມາອາໄສເຂດໃໝ່ນີ້ ແມ່ນບໍ່ຄືກັບຢູ່ບ້ານເຮົາ ເຖິງແມ່ນວ່າ ເປັນເຂດຊົນນະບົດ, ບໍ່ກວ້າງໃຫຍ່ ແຕ່ພວກເຮົາແມ່ນລ້ຽງເຄີຍກັບການດຳລົງຊີວິດຢູ່ບ່ອນນັ້ນມາກ່ອນແລ້ວ. ມັນແຕກຕ່າງກັນຢູ່ບ່ອນວ່າ ຢູ່ບ່ອນນີ້ ທີ່ທຸກສິ່ງຢ່າງລ້ວນແຕ່ມີເຈົ້າຂອງ. ພວກອົບພະຍົບເປັນຄົນທີ່ທຸກຍາກຢູ່ແລ້ວ ເຖິງແມ່ນວ່າ ລັດຖະບານຈະໃຫ້ການຊ່ວຍເຫຼືອເທົ່າທີ່ມີຄວາມສາມາດ ແຕ່ພວກເຮົາກໍຍັງມີອັນຂາດເຂີນຢູ່. ເຊິ່ງຖືວ່າ ມັນເປັນເລື່ອງປົກກະຕິ. ບັນດາຄົນອົບພະຍົບທີ່ມາອາໄສບ່ອນນີ້ ພາກັນຄິດວ່າ ຂໍພາວະນາໃຫ້ສົງຄາມສິ້ນສຸດລົງໄວໆ, ຂໍໃຫ້ພໍ່ແມ່ພີ່ນ້ອງທີ່ພັດພາກຈາກກັນ ໄດ້ມາພົບໜ້າກັນອີກ ແລະ ໃຫ້ພວກເຮົາໄດ້ກັບຄືນໄປເຮັດນາດ້ວຍຄວາມເປັນສຸກ ແລະ ດຳລົງຊີວິດຕາມທີ່ພວກເຮົາປາຖະໜາ. ນີ້ຄືຄວາມຕ້ອງການຂອງພວກເຮົາ.

ສົງຄາມເຮັດໃຫ້ມີແຕ່ນອງໄປດ້ວຍທະເລເລືອດ. ພວກເຮົາບໍ່ຕ້ອງການສົງຄາມ ! ພວກເຮົາຮັກແຕ່ສັນຕິພາບ, ມາຊ່ວຍກັນສ້າງສັນຕິພາບ, ມວນມະນຸດທົ່ວທັງໂລກເອີຍ ! ຈົ່ງສົງສານຜູ້ເຄາະຮ້າຍຈາກສົງຄາມແດ່ທ້ອນ !



ແຕ້ມໂດຍ: ເດັກອາຍຸ 13 ປີ

ບ້ານຂອງຂ້ອຍຕັ້ງຢູ່ແຄມທາງ ລະຫວ່າງ ຊຽງຂວາງ ແລະ ທົ່ງໄຫຫີນ. ຕໍ່ຈາກທາງໄປກໍແມ່ນທົ່ງນາ. ໃນຕອນທຳອິດເວລາຍົນມາຍິງ ກໍຍິງແຕ່ຕາມແຄມທາງ ບໍ່ໄດ້ຍິງບ້ານ. ໃນຕອນນັ້ນ ຊີວິດຂອງຂ້ອຍເຕັມປ່ຽມໄປດ້ວຍຄວາມສຸກອັນໃຫຍ່ຫຼວງ ເພາະມີພູຜາ, ປ່າດົງອັນສວຍງາມ, ດິນ, ນ້ຳ ແລະ ອາກາດ ກໍເໝາະສົມດີ ແລະ ພາຍໃນບ້ານກໍມີເຮືອນຫຼາຍຫຼັງຕັ້ງຢູ່.

ຢູ່ໄດ້ບໍ່ດົນຄວາມສຸກເຫຼົ່ານີ້ກໍໝົດໄປ ເພາະຍົນມາຖິ້ມລະເບີດລົງໃສ່ທົ່ງນາ ເຮັດໃຫ້ທົ່ງນາເຕັມແຕ່ຂຸມລະເບີດ ຈົນບໍ່ສາມາດເຮັດນາໄດ້ ສ່ວນບ້ານເຮືອນກໍຖືກລະເບີດທຳລາຍ. ມີພີ່ນ້ອງຈຳນວນໜຶ່ງທີ່ກຳລັງເຮັດນາຢູ່ ພາກັນແລ່ນໄປຫາທາງເພື່ອຄືນໄປບ້ານ ແຕ່ເມື່ອຍົນເຫັນ ມັນກໍຍິງສຸມລົງໃສ່ ເຮັດໃຫ້ຊາວນາເຫຼົ່ານີ້ຕາຍຢ່າງອາໜາດ. ພວກເຮົາໄດ້ຍິນສຽງຄວນຄາງພວກເຂົາ ແຕ່ບໍ່ສາມາດອອກໄປຊ່ວຍພວກເຂົາໄດ້. ເມື່ອຍົນໜີໄປແລ້ວ ພວກເຮົາ ຈຶ່ງອອກໄປຊ່ວຍ ແຕ່ເມື່ອໄປຮອດພວກເຂົາກໍຕາຍໝົດແລ້ວ.

"ຂໍໃຫ້ດວງວິນຍານຂອງອະດີດນາງແພດຊຽງຂວາງ ຈົ່ງໄປສູ່ສຸຄະຕິເທີ້ນ"

ພະຍາບານ ອາຍຸ 26 ປີ

ໃນປີ 1967-1968 ຂ້ອຍເປັນແພດຢູ່ຊຽງຂວາງ ພາຍຫຼັງທີ່ໄດ້ຝຶກອົບຮົມມາໄດ້ສາມເດືອນ ແລະ ລົງຝຶກງານພາຍໃຕ້ການຊີ້ນຳຂອງໜ່ວຍແພດແນວລາວ. ຈາກນັ້ນ ຂ້ອຍກໍຖືກແຕ່ງຕັ້ງໃຫ້ອອກຮັບໃຊ້ຕາມບ້ານຕ່າງໆ ບໍ່ວ່າໃກ້ ຫຼືໄກ ຕ້ອງປະຕິບັດໜ້າທີ່ຕາມການມອບໝາຍຂອງແນວລາວ. ຍ້ອນວ່າ ຂ້ອຍມີຄວາມດຸໝັ່ນ ແລະ ທ້າວທັນໃນໜ້າທີ່ ຈຶ່ງໄດ້ຮັບຄວາມໄວ້ວາງໃຈຈາກພວກເພິ່ນ ແລະ ປະຊາຊົນ ທີ່ຂ້ອຍອອກໄປສຶດສອນ ແລະ ເບິ່ງແຍງ. ເມື່ອຫວນຄືນຫຼັງ ຂ້ອຍຍັງຈື່ໄດ້ດີກ່ຽວກັບ

ຊີວິດການເປັນແພດທີ່ຊຸງຊວາງ ດັ່ງນັ້ນ ຂ້ອຍຈຶ່ງຂໍບັນຍາຍປະສົບການ ສອງປີ ທີ່ໄດ້ປະສົບມາໃຫ້ທ່ານທີ່ສົນໃຈ ໄດ້ຍິນ ໄດ້ຟັງ ແລະ ໄດ້ຮູ້.

ໃນໄລຍະລະດູບານໃໝ່ ປີ 1960 ຂ້ອຍເປັນສາວອາຍຸ 16 ປີ ແລະ ບໍ່ສົນໃຈໃນການສຶກສາຈັກໜ້ອຍໃນເວລານັ້ນ. ຂ້ອຍບໍ່ຮູ້ວ່າ ໂລກ ມັນໃຫຍ່ ຫຼື ນ້ອຍປານໃດ ສິ່ງທີ່ຂ້ອຍພໍຮູ້ແມ່ນ ບ້ານຂອງຂ້ອຍ ຊຶ່ງມີ ເຮືອນປະມານສິບກວ່າຫຼັງຕັ້ງຢູ່ກາງປ່າ. ບ້ານນີ້ອ້ອມຮອບດ້ວຍພູຜາປ່າ ດົງທີ່ຊຸ່ງວງາມດີ ນອກນີ້ ກໍຍັງມີທົ່ງນາທີ່ພີ່ນ້ອງຊ່ວຍກັນສັບຊ່າວດ້ວຍ ຢາດເຫື່ອແຮງງານມາແຕ່ປາງບູຮານ. ໄຫບ້ານໃກ້ຄຽງກໍ່ແມ່ນຊາວໄຮ່ ນາທັງໝົດ, ທຸກຄົນລ້ວນແຕ່ເປັນຄົນຊື່ສັດ ແລະ ດຸໝັ່ນ. ພວກເຮົາມີ ແຕ່ຄວາມສະໜຸກສະໜານ ແລະ ພູມໃຈໃນຊີວິດຂອງພວກເຮົາ ເຖິງວ່າ ຈະຢູ່ໃນປ່າດົງພົງໄພກໍຕາມ. ພວກເຮົາເຊື່ອວ່າ ມີໜ້ອຍຄົນດອກຈະພໍ ໃຈກັບຊີວິດແບບນີ້ ສ່ວນຫຼວງຫຼາຍແລ້ວ ແມ່ນມີແຕ່ຫົວໃຈທີ່ຂີ້ໂຫດສາ ມານ ຫວັງແຕ່ຢາກລ້ຳລວຍ ກອບໂກຍໃສ່ຕົນເອງຢ່າງບໍ່ສິ້ນສຸດ. ພວກ ເຂົາບໍ່ເຄີຍພໍໃຈກັບຊີວິດ ແລະ ບໍ່ມີຄວາມສຸກ ຫຼື ຄວາມມ່ວນຊື່ນເລີຍ. ສ່ວນຊີວິດຂອງຂ້ອຍແມ່ນຜ່ານໄປຄືໄດ້ບັນຍາຍນັບຕັ້ງແຕ່ເກີດຈົນໃຫຍ່ ສູງຂຶ້ນມາ.

ຂ້ອຍອາໄສຢູ່ກັບດິນດອນຕອນຫຍ້າ, ອາກາດ ແລະ ໄຮ່ ນາ ຮົ້ວ ສວນຂອງບ້ານຂ້ອຍຕະຫຼອດມາ. ແຕ່ລະວັນ ແຕ່ລະຄືນ ພາຍໃຕ້ແສງ ແດດ ຫຼື ແສງເດືອນ ຂ້ອຍ ແລະ ໝູ່ເພື່ອນໃນບ້ານ ຈະອອກໄປຍ່າງຫຼິ້ນ, ພາກັນຮ້ອງລຳທຳເພງໄປຕາມປ່າດົງ ທົ່ງໄຮ່ ທົ່ງນາ ທ່າມກາງສຽງຂອງ ນົກນາໆຊະນິດ. ໃນລະດູເກັບກ່ຽວ ແລະ ລະດູເຮັດໄຮ່ ເຮັດນາ ກໍພາ ກັນມາຊ່ວຍເຮັດວຽກເຮັດງານນຳກັນ ພາຍໃຕ້ແສງແດດ ຫຼື ຝົນຕົກ ເພື່ອສູ້ຢັນກັບຄວາມທຸກຍາກ ແລະ ສະພາບທີ່ຫຍຸ້ງຍາກ ແລະ ເພື່ອສືບ ຕໍ່ດຳເນີນຊີວິດເຮັດນາເປັນອາຊີບຄືກັບບັນພະບູລຸດທີ່ພາເຮັດມາ.

ໃນປີ 1964-1965 ທົ່ວທັງບ້ານກໍມີສຽງອາວຸດ ແລະ ລະເບີດ ແຕກເນືອງນັນຂຶ້ນ. ໄດ້ຍິນສຽງຍົນບິນເວີ່ນເທິງທ້ອງຟ້າ ຈາກນັ້ນມັນ ກໍສັກຫົວລົງມາເທລະເບີດ ແລ້ວບິນອອກໄປ ເຮັດໃຫ້ມີແປວໄຟ ແລະ

ຄວັນໄຟກຸ້ມໄປທົ່ວຈົນແນມບໍ່ເຫັນຫຍັງ. ແຕ່ລະມື້ ພວກເຮົາຈະລົມກັນ ກັບເພື່ອນບ້ານໃກ້ຄຽງກ່ຽວກັບ ເຫດລະເບີດທີ່ເກີດຂຶ້ນ ລົມກັນເລື່ອງ ຄວາມເສຍຫາຍ, ການບາດເຈັບ ແລະ ການລົ້ມຕາຍ ແລະ ການຂຸດ ຂຸມຝັງຄົນເສຍຊີວິດ, ຂຸມລະເບີດນ້ອຍໃຫຍ່ທີ່ມີ. ເຫດການເຫຼົ່ານີ້ ໄດ້ຝັງ ເລິກຢູ່ໃນໃຈຂອງປະຊາຊົນ ທີ່ປະສົບກັບມັນ. ພວກເຂົາເຈົ້າຍັງໄດ້ລົມ ກັນເລື່ອງຄວາມມ່ວນຊື່ນຢູ່ໃນບ້ານທີ່ຜ່ານມາ ຊຶ່ງຮອດຕອນນີ້ ແມ່ນບໍ່ມີ ຫຍັງເຫຼືອໃຫ້ເຫັນອີກແລ້ວ.

ຂຸມ ! ຂຸມ ! ສິ່ງທີ່ພວກເຮົາຕ້ອງການທີ່ສຸດ ແມ່ນຂຸມຫຼົບໄພ ເພື່ອເອົາຊີວິດລອດ.ພວກເຮົາຊາວໜຸ່ມໄດ້ອອກເຫື່ອເທແຮງຂຸດຂຸມ ເພື່ອ ປ້ອງກັນຕົນເອງ ແທນທີ່ຈະໄດ້ອອກແຮງໃນການສ້າງສາພັດທະນາ ປູກ ຝັງ ເພື່ອໃຫ້ໄດ້ອາຫານມາລ້ຽງຊີບ. ເປັນເວລາຫຼາຍມື້ຫຼາຍຄືນແລ້ວ ທີ່ ພວກເຮົາອົດຫົວຈະຫາອາຫານມາອີ່ມທ້ອງແມ່ນຍາກແສນຍາກ ເຮັດໃຫ້ ໜັກໃຈຫຼາຍ. ໄຮ່ນາ ແລະ ຮົ້ວສວນເຕັມໄປດ້ວຍຂຸມລະເບີດ. ສ່ວນ ຊັບສົມບັດ ກໍ່ແມ່ນສູນຫາຍໄປກັບສົງຄາມຈົນໝົດ. ສິ່ງທີ່ປະຊາຊົນ ຍັງເຫຼືອ ກໍມີແຕ່ໃບໜ້າໂສກເສົ້າໜ່ວມເຫງົາ, ອົດອ່ອນໂຮຍແຮງ, ເບື່ອ ໜ່າຍສົງຄາມເປັນທີ່ສຸດ ຄືກັນກັບມີຂີ້ຫີນໃຫຍ່ມາເຕັງໜ້າເອົາ. ພວກ ເຮົາບໍ່ເຂົ້າໃຈ ແລະ ບໍ່ເຄີຍຄິດວ່າ ສິ່ງໂຫດຮ້າຍເຫຼົ່ານີ້ ຈະເກີດຂຶ້ນກັບ ພວກເຮົາ. ເມື່ອສຽງລະເບີດງຽບລົງ ພວກເຮົາກໍສວຍໂອກາດອອກມາ ແປງບ້ານແປງເຮືອນ ແລະ ສືບຕໍ່ເຮັດນາ ເພື່ອໃຫ້ໄດ້ອາຫານມາລ້ຽງ ຊີວິດຄືກັນກັບມະນຸດທົ່ວໄປ.

ໃນໄລຍະນີ້ ບາງຄັ້ງຈະມີກອງຊົນຂວາຍເຂົ້າມາບ້ານພວກເຮົາ ເພື່ອຖາມນັ້ນ ຖາມນີ້ ບາງຄັ້ງພວກເພິ່ນກໍເຂົ້າຂຸມນຳພວກເຮົາ ເມື່ອ ມີຍິນມາຍິ. ພວກເພິ່ນສະແດງຄວາມສຸພາບຮຽບຮ້ອຍ ແລະ ສົນໃຈ ນຳພວກເຮົາ.ບາງຄັ້ງ ເວລາພວກເພິ່ນເຫັນປະຊາຊົນສ້າງເຮືອນ, ປູກຜັກ ແລະ ປູກຕົ້ນໄມ້ ພວກເພິ່ນກໍ່ຈະມາຊ່ວຍເຫຼືອ. ເມື່ອເວລາຜ່ານໄປ ໄລຍະໜຶ່ງ ພວກເຮົາກໍຮູ້ກັນດີຂຶ້ນກວ່າເກົ່າ ພວກເຮົາຈຶ່ງໄດ້ເວົ້າລົມສົນ ທະນາກັບພວກເພິ່ນ ແລະ ຖາມບັນຫາຕ່າງໆ ແລະ ເພິ່ນກໍຕອບຢ່າງເປັນ

ທີ່ພໍໃຈຫຼາຍ. ຖ້າວ່າພວກເຮົາບໍ່ເຂົ້າໃຈ ພວກເພິ່ນກໍຈະພະຍາຍາມອະທິບາຍຈົນໃຫ້ເຂົ້າໃຈແຈ້ງ. ຍ້ອນມີພວກເພິ່ນ ຈຶ່ງເຮັດໃຫ້ພວກເຮົາໄດ້ຮູ້ຫຼາຍສິ່ງຫຼາຍຢ່າງ ທີ່ບໍ່ເຄີຍໄດ້ຮູ້ໄດ້ເຫັນມາກ່ອນ. ມີຕົວຢ່າງໜຶ່ງ: ເພິ່ນເວົ້າວ່າ ບ້ານພວກເຮົາແມ່ນໄກຈາກຊຽງຂວາງແຕ່ 30 ຫຼັກ ຖ້າວ່າຍ່າງແມ່ນຈະໃຊ້ເວລາໝົດມື້ຈຶ່ງຮອດ. ພວກເພິ່ນຍັງເວົ້າກ່ຽວກັບເມືອງຊຽງຂວາງວ່າ ມີຕະຫຼາດ ແລະ ມີການຊື້ຂາຍສິ່ງຂອງຢູ່ບ່ອນນັ້ນທຸກໆມື້ ຊຶ່ງຕ່າງກັບບ້ານພວກເຮົາ ທີ່ມີແຕ່ແລກປ່ຽນສິ່ງຂອງນຳກັນ. ບາງຄັ້ງ ເພິ່ນກໍເອົາຮູບເງົາມາສາຍໃຫ້ເບິ່ງລ້າ. ພວກເຮົາໄດ້ຊັກຖາມເພິ່ນກ່ຽວກັບຫຼາຍເລື່ອງ ທີ່ພວກເຮົາສົນໃຈ ແລະ ພວກເຮົາຢາກພາກັນໄປໃນເມືອງ ເພື່ອໄປຮຽນຮູ້ສິ່ງຕ່າງໆ ຢູ່ທີ່ນັ້ນ.

ຕໍ່ມາເພິ່ນຖາມພວກຊາວໜຸ່ມວ່າ ມີໃຜອ່ານອອກຂຽນໄດ້ແດ່ ພວກເຮົາຕອບວ່າ ບໍ່ມີໃຜຮູ້ໜັງສື ພວກເພິ່ນຖາມວ່າ ຢາກຮຽນບໍ ? ພວກເຮົາກໍມີຄວາມສົນໃຈຂຶ້ນມາ ພວກເຮົາຖາມວ່າ ໜັງສືເປັນແນວໃດ. ເມື່ອຟັງເພິ່ນອະທິບາຍ ເບິ່ງຄືກັບວ່າ ຖ້າພວກເຮົາຮູ້ໜັງສືແມ່ນຈະມີແນວດີຫຼາຍຢ່າງ. ພວກເຮົາສົນໃຈຢາກຮຽນຂຶ້ນມາທັນທີ ແລະ ບອກເພິ່ນວ່າ ພວກເຮົາຢາກຮຽນ. ເພິ່ນກໍ່ຕອບວ່າ ດີໃຈຫຼາຍທີ່ພວກເຮົາຢາກຮຽນ.

ຈາກນັ້ນ ພວກເພິ່ນໄດ້ສົ່ງຜູ້ຍິງທີ່ສະຫຼາດຄົນໜຶ່ງມາຢູ່ກັບພວກເຮົາ ເພິ່ນໄດ້ກາຍເປັນນາຍຄູ ແລະ ພາພວກເຮົາອ່ານ ແລະ ຂຽນໜັງສື. ເມື່ອມີຄົນເຈັບນາງກໍເອົາຢາມາປິ່ນປົວ ນອກນີ້ ນາງຍັງໄດ້ອອກໄປເຮັດນາຊ່ວຍພວກເຮົາ. ພວກເຮົາເຫັນວ່າ ນາງເປັນຄົນດີແທ້ໆ. ທຸກຄົນພາຍໃນບ້ານແມ່ນຮັກແພງນາງຫຼາຍ. ຢູ່ໃນປ່າ ແລະ ກາງທົ່ງນາ ນາງໄດ້ສອນຮ້ອງເພງໃຫ້ພວກເຮົາ. ຈາກນັ້ນມາຫຼາຍວັນ ພວກເຮົາກໍສາມາດຮ້ອງເພງໄດ້.ບໍ່ວ່າພວກເຮົາຈະຢູ່ໃສ,ຈະເຮັດຫຍັງ ເຖິງວ່າຈະໄດ້ຍິນແຕ່ສຽງປືນ, ສຽງຍິນ, ສຽງລະເບີດ ຖ້າພວກເຮົາຢູ່ນຳກັນ ພວກເຮົາຈະຮ້ອງເພງ. ຂອຍຍັງຈື່ເພງບົດໜຶ່ງໄດ້ດີ ຊຶ່ງພວກເຮົາມັກຮ້ອງພ້ອມກັນ:

ສຸດງາມຍາມແລງ
ພູຜາປ່າດົງ
ດອກໄມ້ສັບຊ້ອນ
ຊົນຊາດທັງມວນ
ຄວາມສາມັກຄີ
ຕໍ່ສູ້ເດັດດ່ຽວ
ເມກມືດຜ່ານໄປ
ດິນແດນແຫ່ງນີ້
ເລືອດນັກຮົບໄດ້ທາ
ເສຍສະຫຼະສູ້ທົນ
ເຂດປົດປ່ອຍນີ້
ແຜ່ລັດສະໝີ

ແດນແຫ່ງອິດສະຫຼະ
ພົ້ງພະນາເປັນໜ້າອອນຊອນ
ແສນສະອອນສິ່ງກິ່ນຫອມຫວນ
ມີສິດເສລີ
ເປັນພີ່ນ້ອງດຽວ
ສ້າງຊີວິດໃໝ
ສີສິດໃສເຂົ້າມາແທນທີ່
ສຸດທີ່ລ້ຳຄ່າ
ແດງທົ່ວແຫ່ງຫົນ
ພາບແພ້ໄພລີ
ຈະຮັກສາສັກສີ
ໄປໃນທົ່ວແດນລາວ

ເພງນີ້ ແມ່ນເພງແດນແຫ່ງອິດສະຫຼະ ແລະ ອີກເພງໜຶ່ງທີ່ພວກເຮົາຮ້ອງ ແມ່ນ ເພງຊີວິດໃໝ່:

ຊີວິດໃໝ່
ເໝືອນຈັນທະລາ
ຄວາມທຸກລະທົມ
ໄດ້ຊີວິດໃໝ່
ເຮົາຈະເຊີດຊູ
ຈະບໍ່ເຫັນ
ສິ່ງທີ່ໜອງມົວ
ເອົາສິ່ງທີ່ດີ
ຊົ່ວເຊັ່ນຊາດລາວນີ້
ຊີວິດໃໝ່ນັ້ນ
ຍ້ອນວ່າໄດ້ມີ
ຊີວິດໃໝ່

ສົດໃສສ່ອງມາ
ສ່ອງມາໃຫ້ຊົມ
ເພື່ອນລົມກາຍໄປ
ມາສູ່
ໃຫ້ຊາດບັນລຸໄດ້ໄປສູ່ຄວາມຮົ່ມເຢັນ
ປະໂຫຍດແກ່ໃນຕົວ
ອັນຊົ່ວຈະກວາດໜີ
ໃຫ້ມີປະໂຫຍດໄປທົ່ວ
ໃຫ້ເປັນດີເລື້ອຍໄປ
ບໍ່ມີໃຜຮາວີ
ການນຳອັນສະຫຼາດສ່ອງໃສ
ເຮົາໄດ້ຄືນມາ

ຍ້ອນເລືອດປະຊາ ໄຫຼລົນທາທົ່ວແຫ່ງ
ຕ້ອງຮັກຕ້ອງແພງ ເທື່ອແຮງປະຊາ
ຊີວິດຜ່ານມາ ລະທົມ
ຮັກສາໃຫ້ສົມ ເລືອດເນື້ອເທື່ອລົມທີ່ໄດ້ຖົມຖອກໄຫຼ
ຮັກສາໄວ້ ລາວໃຫ້ສົມຊື່
ຮັກສາຕະຫຼອດຕື ຍອດຄວາມປາຖະໜາ
ຂອງປວງປະຊາ ທີ່ວ່າໃຫ້ຊາດໄປສູ່
ຢູ່ໃນສຸກສົມບູນ ທ້ອງຟ້າຕະກຸນລາວ
ຄາວເບື້ອງໜ້າ ຊີວິດຜາສຸກສຳລານ
ພ້ອມກັນພົ້ນຜ່ານ ຄວາມສຳລານຈິ່ງໄດ້ດັ່ງໝາຍ

ນອກຈາກບົດເພງຕ່າງໆແລ້ວ ກໍຍັງມີບົດຟ້ອນຫຼາຍແບບນຳອີກ. ຊີວິດຂອງພວກເຮົາມີການຫັນປ່ຽນ ເຖິງຈະຢູ່ທ່າມກາງຄວາມຮ້ອນແຮງຂອງສົງຄາມ ພວກເຮົາກໍ່ຍັງມີຄວາມມ່ວນຊື່ນແບບໄວໜຸ່ມ. ຫຼັງຈາກທີ່ພວກເຮົາຮຽນໄດ້ດີພໍໃຊ້ແລ້ວ ພວກເຮົາກໍ່ອາສາສະໝັກອອກຮັບໃຊ້ ແລະ ຮຽນຮູ້ອາຊີບຄືກັບ ນາງຄູ ທີ່ມາສິດສອນພວກເຮົາໃນເບື້ອງຕົ້ນ. ພວກເຮົາຢາກເປັນຄືກັນກັບລາວ ເພື່ອຈະມີອະນາຄົດອັນແຈ່ມໃສ ໃນພາຍຄັ້ງໜ້າ. ທັງໝົດນີ້ ແມ່ນຍ້ອນຄວາມເອົາໃຈໃສ່ ແລະ ນຳພາຂອງແນວລາວ ກໍ່ຄືຄວາມຝັນອັນຍິ່ງໃຫຍ່ຂອງພວກເຮົາເອງ.

ຫຼັງຈາກນັ້ນ ຂ້ອຍ ແລະ ໝູ່ສາມຄົນ ກໍເຂົ້າໄປຮຽນທີ່ເມືອງຊຽງຂວາງ. ຫຼັງຈາກພິທີສູ່ຂວັນ ພວກເຮົາ ກໍອຳລາພໍ່ແມ່ ແລະ ຊາວບ້ານ ເຂົ້າໄປຊຽງຂວາງ ເພື່ອສ້າງຊີວິດໃໝ່ ແລະ ອະນາຄົດໃໝ່.

ເມື່ອພວກເຮົາໄປຮອດ ພວກເຮົາກໍສຸດທີ່ພໍໃຈຫຼາຍ ຄືກັບວ່າ ຄວາມຝັນຂອງພວກເຮົາທີ່ມີມາດົນ ຈະເປັນຄວາມຈິງຂຶ້ນມາແລ້ວ. ຈາກນັ້ນ ຄະນະຮັບຕ້ອນກໍພາພວກເຮົາໄປໂຮງໝໍທີ່ເພິ່ນໄດ້ກະກຽມບ່ອນພັກໄວ້ໃຫ້ແລ້ວ ພວກເພິ່ນຕ້ອນຮັບພວກເຮົາຢ່າງອົບອຸ່ນ ເຖິງວ່າ ພວກເຮົາຈະຈາກບ້ານມາໄກກໍຕາມ ພາຍຫຼັງທີ່ພວກເຮົາໄດ້ພັກເຊົາມີແຮງແລ້ວ ສອງສາມວັນຕໍ່ມາ ພວກເພິ່ນກໍຈັດພິທີຕ້ອນຮັບພວກເຮົາ.

ໃນພິທີຮັບຕ້ອນ ກໍມີໝູ່ເພື່ອນທີ່ມາຈາກຫຼາຍບ້ານ ມານັ່ງນຳກັນ ແລະ ຮ້ອງເພງ ແລະ ຟ້ອນລຳວົງ ຫຼັງຈາກທີ່ຫົວໜ້າໂຮງໝໍໃຫ້ຄຳປາໄສຈົບລົງໄປແລ້ວ. ຜູ້ອຳນວຍການ ຫຼື ເອີ້ນວ່າ ຜູ້ຊີ້ນຳໂຮງໝໍ ໄດ້ສະແດງຄວາມດີອົກດີໃຈທີ່ພວກເຮົາມີຄວາມກ້າຫານມາຮຽນເປັນແພດເປັນໝໍ ເພື່ອອອກຮັບໃຊ້ປະຊາຊົນ. ເພິ່ນໄດ້ຍ້ອງຍໍຊົມເຊີຍພວກເຮົາໃນຄວາມດຸໝັ່ນ ແລະ ຊຸກຍູ້ໃຫ້ພວກເຮົາຕັ້ງໜ້າຮຳຮຽນ ເພື່ອເສີມຂະຫຍາຍຄວາມຮູ້ ເພື່ອເຮັດໃຫ້ວຽກງານກ້າວໜ້າ ແລະ ດຳເນີນໄປໄດ້ຢ່າງສະໝ່ຳສະເໝີ. ການເຮັດແບບນີ້ ຈະເຮັດໃຫ້ປະຊາຊົນຮູ້ເຫັນວ່າ ລູກເຕົ້າພວກເຂົາໄດ້ປົກປັກຮັກສາ ແລະ ປັບປຸງມູນເຊື້ອອັນດີງາມ ໃຫ້ຍືນຍົງກວ່າເກົ່າ. ນີ້ແມ່ນເປົ້າໝາຍຂອງໂຮງໝໍ ແລະ ເພິ່ນກໍຫວັງວ່າ ພວກເຮົາຈະກ້າວໜ້າຢ່າງບໍ່ມີສິ້ນສຸດ.

ຫຼັງຈາກຄືນມື້ນັ້ນແລ້ວ ພວກເຮົາກໍເລີ່ມຮຽນ. ໃນໝົດໂຮງຮຽນໝໍມີນຳກັນກວ່າ 30 ຄົນ ແລະ ໄດ້ແບ່ງອອກເປັນສອງກຸ່ມ. ກຸ່ມໜຶ່ງຮຽນເປັນແພດ ແລະ ອີກກຸ່ມໜຶ່ງແມ່ນຮຽນວັດທະນະທຳ. ເນື່ອງຈາກວ່າ ພວກເຮົາມາຈາກຊົນນະບົດ ຈຶ່ງເຮັດໃຫ້ລະດັບວັດທະນະທຳຂອງພວກເຮົາຍັງຕ່ຳ. ມີບາງຄົນແມ່ນຍັງບໍ່ທັນຮູ້ຮອດຕົວໜັງສືຊ້ຳ. ນອກຈາການສຶກສາຮ່ຳຮຽນແລ້ວ ພວກເຮົາຍັງໃຊ້ເວລາໃນການປູກຜັກ ແລະ ຈຳນວນໜຶ່ງກໍລ້ຽງເປັດ ລ້ຽງໄກ່ ທີ່ພວກເຂົາພາກັນຖືມານຳ. ໃນຕອນນັ້ນ ສະພາບການກໍແມ່ນເຄັ່ງຕຶງ ແຕ່ຊີວິດພວກເຮົາແມ່ນມີການຈັດຕັ້ງດີ ມີລະບຽບວິໄນ. ພວກເຮົາຖືກສັ່ງສອນໃຫ້ຢູ່ຮ່ວມກັນ ແລະ ໃຫ້ຮັກແພງກັນ ເຖິງວ່າຈະຢູ່ບ່ອນໃດ ບ່ວ່າຈະແມ່ນໃຜກໍຕາມ ເມື່ອມີການເຈັບເປັນ ພວກເຮົາຕ້ອງໄດ້ເບິ່ງແຍງກັນ. ແຕ່ລະວັນເສົາ ຈະມີຈັດຕັ້ງເປັນຄືນສິລະປະ ແລະ ແຕ່ລະໝວດກໍຈະອອກມາສະແດງ. ພວກເຮົາຕັ້ງໃຈເຮັດດ້ວຍຄວາມພໍອົກພໍໃຈ ພວກເຮົາບ່ໄດ້ຫຍຸ້ງກ່ຽວ ແລະ ຄິດກັບວຽກອື່ນໃດອີກ.

ສຸດທ້າຍການສຶກສາພວກເຮົາກໍສິ້ນສຸດລົງ ພາຍຫຼັງ 6 ເດືອນ ພວກເຮົາກໍສາມາດປິ່ນປົວພະຍາດ ແລະ ເບິ່ງແຍງຄົນເຈັບໄດ້ແລ້ວ. ຈາກນັ້ນ ພວກເຮົາກໍລົງຝຶກຫັດໃນສິ່ງທີ່ໄດ້ຮຽນມາ ແບ່ງກັນອອກໄປໃນ

ແຕ່ລະບ້ານ. ພວກເພິ່ນບອກໃຫ້ພວກເຮົາຢູ່ກິນນຳປະຊາຊົນ ໜ້າທີ່ພວກເຮົາຄື ເບິ່ງແຍງການເຈັບໄຂ້ ເຮັດແນວໃດໃຫ້ປະຊາຊົນມີຄວາມເຊື່ອໝັ້ນນຳແນວລາວ.

ໃນຕອນນັ້ນ ພວກເຮົາບໍ່ມີເຄື່ອງມືການແພດພຽງພໍ ແຕ່ປະຊາຊົນກໍ່ຕ້ອງການພວກເຮົາ ເພາະຜ່ານມາ ຢູ່ຊົນນະບົດແມ່ນມີໜ້ອຍຄົນ ທີ່ຈະໄດ້ຮັບການປິ່ນປົວແບບນີ້. ປະຊາຊົນເຊື່ອຜີສາງນາງໄມ້ ແລະ ບໍ່ເຄີຍໄດ້ຮັບການປິ່ນປົວແບບໃໝ່. ນອກນັ້ນ ພວກເຮົາປິ່ນປົວໃຫ້ລ້ຳໆ ໂດຍບໍ່ເອົາເງິນຄຳ ດັ່ງນັ້ນ ວຽກງານຂອງພວກເຮົາຈຶ່ງດຳເນີນເດີນສະດວກ. ບ່ອ່າບ່ອນໃດທີ່ພວກເຮົາໄປຮອດ ປະຊາຊົນກໍ່ຈະອອກມາສະແດງຄວາມຮັກແພງ ຄືກັບວ່າ ພວກເຮົາເປັນລູກຫຼານຂອງພວກເພິ່ນ.

ຈາກນັ້ນມາບໍ່ດົນ ຄືມາຮອດປີ 1968 ຫາ 1969 ສະພາບການແມ່ນມີຄວາມອັນຕະລາຍຫຼາຍ ເຮັດໃຫ້ພວກເຮົາບໍ່ສາມາດປະຕິບັດໜ້າທີ່ໄດ້ຕາມຈຸດປະສົງຄືແຕ່ກ່ອນ. ແຕ່ລະເວັນ ແຕ່ລະຄືນ ຕ້ອງໄດ້ລີ້ໄພຈາກອັນຕະລາຍທາງອາກາດ. ການຮັກສາຊີວິດແມ່ນມີຄວາມສຳຄັນກວ່າສິ່ງອື່ນໃດ. ໜ້າທີ່ອັນຕົ້ນຕໍຂອງພວກເຮົາໄດ້ປ່ຽນຈາກການປິ່ນປົວມາເປັນການປົກປ້ອງຊີວິດ ແລະ ຊັບສົມບັດຂອງປະຊາຊົນ. ພວກເຮົາຈະມີວຽກຫຼາຍຂຶ້ນ ເມື່ອມີຄົນໄດ້ຮັບບາດເຈັບຈາກລູກປືນ ຫຼື ລະເບີດ ເພາະມັນແມ່ນໜ້າທີ່ຂອງພວກເຮົາ ໃນການເບິ່ງແຍງດູແລພວກເຂົາ. ເນື່ອງຈາກວ່າ ພວກເຮົາຂາດເຂີນເຄື່ອງມືທາງການແພດ ຈຶ່ງເຮັດໃຫ້ພວກເຮົາເມື່ອຍອ່ອນ ແລະ ມີຄວາມກະວົນກະວາຍຫຼາຍ.

ຕໍ່ມາສະພາບການໄດ້ປ່ຽນແປງໄປ ເມື່ອພວກທະຫານຂອງລັດຖະບານເຂົ້າມາບ້ານ ທີ່ພວກຂ້ອຍກຳລັງປະຕິບັດງານຢູ່. ເມື່ອພວກເຂົາຮູ້ວ່າ ພວກຂ້ອຍກຳລັງເຮັດຫຍັງຢູ່ ພວກເຂົາຈຶ່ງເອົາພວກຂ້ອຍໄປນຳເຂົາເວົ້າວ່າ ມີຄວາມສົງສານທີ່ພວກເຮົາຢູ່ພາຍໃຕ້ການປົກຄອງຂອງແນວລາວ. ພວກເຂົາຍັງບອກວ່າ ພວກເຮົາຍັງໜຸ່ມນ້ອຍ ແລະ ໄຮ້ດຽງສາ ແລະ ພວກເຂົາໃຫ້ໂອກາດແກ່ຂ້ອຍເພື່ອປ່ຽນໃຈ. ພວກເຂົາບອກວ່າ ຈະໃຫ້ການຄຸ້ມຄອງ ແລະ ໃຫ້ໂອກາດໄປຕັ້ງຊີວິດໃໝ່ໃນເຂດແດນໃໝ່.

ຜ່ານມາຊີວິດຂ້ອຍກໍເປັນແນວນັ້ນ ຖ້າຫາກບໍ່ມີແນວລາວ ຂ້ອຍ ອາດຍັງໄຮ້ດ່ຽງສາຢູ່ກັບບ້ານຈົນແກ່ເຖົ້າ ແລະ ບ້ານຂອງຂ້ອຍກໍຄົງບໍ່ໄດ້ ຮັບຜົນປະໂຫຍດ ຈາກຄວາມກ້າວໜ້າແຕ່ຢ່າງໃດ. ແລະ ຖ້າຫາກວ່າ ຝ່າຍລັດຖະບານບໍ່ເອົາພວກເຮົາອອກມາ ຂ້ອຍຍັງຈະເຮັດວຽກຢ່າງບໍ່ ຢຸດບໍ່ເຊົາໃຫ້ຝ່າຍແນວລາວ.

ປະເທດລາວກຳລັງກ້າວໜ້າ ເປັນຫຍັງຄົນລາວຈຶ່ງຍັງສືບຕໍ່ເຂັ່ນ ຂ້າຮາວີກັນບໍ່ຢຸດບໍ່ເຊົາຈັກເທື່ອ?

ພວກເຂົາບໍ່ຮູ້ບໍ່ວ່າ ປະຊາຊົນມີຄວາມເຈັບປວດ? ພວກເຂົາບໍ່ຮູ້ວ່າ ປະຊາຊົນ ຜູ້ຊຶ່ງເບື່ອໜ່າຍສົງຄາມນັ້ນ ທົນທຸກທໍລະມານ ແລະ ຕົກລະ ກຳລຳບາກຫຼາຍສ່ຳໃດ? ມີໃຜແດ່ທີ່ເຫັນໃຈພວກເຂົາ? ມີໃຜແດ່ ມາໃຫ້ ການຊ່ວຍເຫຼືອພວກເຂົາໄດ້?

ອະດີດໄດ້ຈາງຫາຍໄປແລ້ວ ຊີວິດຂອງພວກເຮົາຜ່ານໄປຄືຄວາມ ຝັນ. ບໍ່ມີຫຍັງຈະມາທົດແທນຄວາມໂສກເສົ້າເສຍໃຈ. ອະດີດແມ່ນສິ້ນ ສຸດລົງແລ້ວ. ຂໍລາກ່ອນທຸກສິ່ງທຸກຢ່າງ. ຂໍໃຫ້ດວງວິນຍານຂອງ ນາງ ແພດ ຈາກຊ່ຽງຂວາງໄປສູ່ສຸຄະຕິເທີ້ນ.


ເຮືອນ ແລະ ບ້ານຂອງຂ້ອຍແມ່ນຖືກທຳລາຍໃນເດືອນ 11 ປີ 1968. ມີຍົນ ແອບ 4 ບິນຂ້າມຫົວ ແລະ ຖິ້ມລະເບີດລົງມາໃສ່ບ້ານຂອງ ຂ້ອຍເປັນເວລາ 45 ນາທີ ເຮັດໃຫ້ເຮືອນພາຍໃນບ້ານຫຼາຍຫຼັງເສຍຫາຍ. ຂ້ອຍກາຍເປັນຄົນທຸກໃນທັນທີ ສິ່ງຂອງພາຍໃນເຮືອນເສຍຫາຍ ແລະ ເຮັດໃຫ້ຂ້ອຍພົບກັບຄວາມຫຍຸ້ງຍາກ. ເຄື່ອງນຸ່ງຂອງຖືພວກເຮົາກໍບໍ່ມີ ເຮັດໃຫ້ພວກເຮົາໝົດຫວັງ ແລະ ໄປສ້າງຕູບນ້ອຍໃນປ່າ ໃນດົງ. ຂ້ອຍ ບໍ່ມີຫຍັງຈະສ້າງຢູ່ທຳກິນ ເພາະທຸກຢ່າງແມ່ນຖືກທຳລາຍໂດຍລະເບີດ ແລ້ວ ເຮັດໃຫ້ຂ້ອຍຕ້ອງຈຳຈາກບ້ານດ້ວຍຄວາມໂສກເສົ້າທີ່ສຸດ.

ເມື່ອສອງປີກ່ອນ ຊີວິດຂອງຂ້ອຍແມ່ນຫຍຸ້ງຍາກເປັນແສນທົບ ກວ່າທຸກວັນນີ້ ເພາະວ່າ ຍົນມາຖິ້ມລະເບີດໃສ່ທັງເວັນ ທັງຄືນ ຄືດັ່ງໃນ ຮູບນີ້. ພວກເຮົາຈຳເປັນຕ້ອງໄດ້ຂຸດຂຸມລີ້ໄພຢູ່ໃກ້ກັບພູ ຫຼື ປ່າໄມ້ ຈົນ ໝູ່ງບໍ່ເຫັນແສງແດດ. ມີມື້ໜຶ່ງ ຕອນນັ້ນ ຂ້ອຍໄດ້ຍິນສຽງຍົນມາ ແລ້ວ



ແຕ້ມໂດຍ: ຊາຍອາຍຸ 16 ປີ

ຂ້ອຍກໍແລ່ນລົງຂຸມ ພໍໄປຮອດປາກຂຸມ ພວກເຂົາກໍຖິ້ມລະເບີດລົງມາ ເວລານັ້ນຂ້ອຍຢ້ານຕາຍທີ່ສຸດ.



ແຕ້ມໂດຍ: ຊາຍໄວ 26 ປີ.

ແຕ່ກ່ອນກີ ບ້ານຂອງຂ້ອຍແມ່ນອຸດົມສົມບູນ ມີເຮືອນຊານງາມໆ ຫຼາຍຫຼັງ ທົ່ງນາກວ້າງຂວາງ. ສຳລັບຊາວນາລາວແລ້ວ ສິ່ງນີ້ຖືວ່າ ແມ່ນ ຄວາມກ້າວໜ້າ. ແຕ່ມາຕອນນີ້ ທົ່ງໄຮ່ ທົ່ງນາກໍຖືກຍິນຍິງ ແລະ ໄຟໄໝ້ ເຮືອນຊານພວກເຮົາຖືກໄຟໄໝ້ບໍ່ມີຫຍັງເຫຼືອ ແມ່ນແຕ່ສິ່ງຂອງກໍບໍ່ມີ ຫຍັງອີກ. ເມື່ອຫວນຄິດຄືນຫຼັງ ກໍເຮັດໃຫ້ນ້ຳຕາຕົກ ເທົ່ານີ້ຍັງບໍ່ພໍ ຂ້ອຍ ຍັງຈຳຕ້ອງໄດ້ພັດພາກຈາກບ້ານເກີດເມືອງນອນມາ.



ແຕ້ມໂດຍ: ຊາຍອາຍຸ 21 ປີ

ເປັນຫຍັງຍິນຈີ່ງມາຖິ້ມລະເບີດໃສ່ພວກເຮົາ?

ຈາກຊາວນາໄວ 39 ປີ

ຂ້ອຍມີອາຍຸ 39 ປີ ບ້ານເກີດເມືອງນອນຂອງຂ້ອຍແມ່ນຢູ່ທີ່ ບ້ານແສນນ້ອຍ ເມືອງຄູນ ແຂວງ ຊຽງຂວາງ. ຂ້ອຍກາຍເປັນຊາວນາ ນັບແຕ່ຂ້ອຍເລີ່ມເຮັດວຽກໄດ້ ແລະ ຂ້ອຍກໍເຮັດນາມາໄດ້ 23 ປີ ແລ້ວ. ຂ້ອຍເຮັດນາຂອງພໍ່ແມ່ຕັ້ງແຕ່ຕົ້ນຈົນຮອດປະຈຸບັນ. ພໍ່ແມ່ຂອງຂ້ອຍໄດ້

ສະສົມຊັບສົມບັດຫຼາຍຢ່າງ ນັບທັ້ງທົ່ງນາ ສັດສາວາສິ່ງຫຼາຍປະເພດ, ມີຕົ້ນໝາກກ້ຽງໃຫຍ່, ໝາກກ້ຽງນ້ອຍ, ກໍໄຜ່, ກໍສ້າງໄພ ແລະ ຫຼາຍສິ່ງຫຼາຍຢ່າງຕື່ມອີກ. ຂ້ອຍເປັນເຈົ້າຂອງຮັກສາຊັບສົນເຫຼົ່ານີ້ ແລະ ເພີ່ມພູນໃຫ້ມີຫຼາຍຂຶ້ນກວ່າເກົ່າ ຄືກັບວ່າ ພວກເຮົາມີຄົບທຸກຢ່າງທີ່ຕ້ອງການຢູ່ແລ້ວ ເພາະສິ່ງໃດທີ່ຕ້ອງການກໍແມ່ນມີຄົບ. ຂ້ອຍມີຝາຍກັ້ນນ້ຳເພື່ອລະບາຍນ້ຳເຂົ້າທົ່ງນາ ເປັນເວລາຫຼາຍປີມາແລ້ວ ພ້ອມດຽວກັນນັ້ນ ພີ່ນ້ອງບ້ານໃກ້ເຮືອນຄຽງ ກໍໄດ້ນຳໃຊ້ນ້ຳເຫຼົ່ານີ້ນຳຂ້ອຍຫຼາຍຄອບຄົວ. ທົ່ງນາຂອງຂ້ອຍກວ້າງຂວາງ ຮາບພຽງ ແລະ ເປັນສີ່ຫຼ່ຽມພໍດີ. ອ້ອມຮອບບ້ານກໍມີທົ່ງນາຮາບພຽງດີ ແລະ ມີພູຜາສູງຊັນອ້ອມຮອບ ພ້ອມກັນນັ້ນ ກໍຍັງມີຕົ້ນໄມ້ແປກທີ່ສວຍງາມ ຢາຍຕາມພູຜາ ແລະ ສາມາດນຳມາເຮັດເຮືອນຊານໄດ້.

ການໄປມາຫາສູ່ລະຫວ່າງບ້ານຕໍ່ບ້ານກໍສະດວກສະບາຍ ເພາະມີບ້ານຫຼາຍບ້ານຕັ້ງລຽງລາຍຢາຍໃກ້ກັນຢ່າງເປັນລະບຽບ. ຍາມຄ່ຳມາ ພວກຜູ້ບ່າວກໍອອກທ່ຽວລົມສາວໂດຍມີການເປົ່າຂຸ່ຍ ແລະ ເປົ່າແຄນ ແລະ ມີຄວາມເບີກບານມ່ວນຊື່ນທີ່ສຸດ. ໃນຕອນເຊົ້າ ພວກຜູ້ສາວຈະພາກັນຕັກນ້ຳຫົດຜັກໃນສວນ ແລະ ມີການຕ່ຳແຜ່ນແພ. ສວາຍມາຈັກໜ້ອຍກໍພາກັນໄປຫາເກັບຜັກ ຫັກໜໍ່ ຫາອາຫານຕາມ ຫ້ວຍຮ່ອງ ຄອງນາ ຕາມທົ່ງໄຮ່ ທົ່ງນາ ແລະ ຕາມທົ່ງຫຍ້າອັນຊຽວງາມ ໝາຍຄວາມວ່າ ໃຜກໍໄປໃສມາໃສໄດ້ສະດວກຕາມອຳເພີໃຈ. ຮອດຍາມບຸນບັ້ງໄຟ ພວກຊາວໜຸ່ມກໍພາກັນໄປເຕົ້າໂຮມກັນເຮັດບຸນ ຕາມຮີດຄອງປະເພນີ. ໃນຕອນແລງມາ ກໍມີການຄົບງັນກັນຢ່າງຄຶກຄື້ນມ່ວນຊື່ນ ຮ້ອງລຳທຳເພງກັນຕະຫຼອດປີ ຕະຫຼອດເດືອນ ເໝືອນກັບວ່າ ໂລກນີ້ມີແຕ່ຄວາມສຸກຄວາມມ່ວນຊື່ນທີ່ສຸດໃນໂລກ. ໃນປາງບຸນບັ້ງໄຟ ກໍມີການແຂ່ງຂັນກັນຈູດບັ້ງໄຟຢູ່ຕີນບ້ານ ແລະ ມີການດື່ມເຫຼົ້າ ແລະ ກິນຕົ້ມໄກ່ກັນ.

ເມື່ອຮອດລະດູເຮັດນາ ພວກເຮົາກໍພາກັນໄປເຮັດວຽກໄຮ່ການນາມຳກັນ ຢ່າງເປັນຂະບວນຟົດຟື້ນ. ພວກຊາວໜຸ່ມມີການຊ່ວຍແຮງກັນເຮັດວຽກ. ເມື່ອວຽກໄຮ່ການນາຫາກສຳເລັດແລ້ວ ພວກເຮົາກໍພາກັນ

ມ່ວນຊື່ນກັບການເຮັດບຸນສົນກິນທານ ດ້ວຍບັນຍາກາດເບີກບານມ່ວນຊື່ນ ຮ້ອງລຳທຳເພງ ແລະ ຫຼິ້ນກິນກັນ ເວົ້ານິວທ໊ອມ່ວນຢ່າງມີຄວາມສຸກ. ນອກນີ້ ກໍປູກຕົ້ນໄມ້ກິນໝາກ ແລະ ຖາງປ່າຂະຫຍາຍພື້ນທີ່ເພື່ອໃຫ້ພຽງພໍກັບຄວາມຕ້ອງການຂອງເດັກນ້ອຍ ທີ່ກຳລັງເກີດໃໝ່ໃຫຍ່ມານຳຫຼັງ. ໃນການບ້ານ ກໍມີຕະຫຼາດນ້ອຍ ເພື່ອເປັນບ່ອນຊື້ຂາຍຂອງຄົນພາຍໃນບ້ານ ຊຶ່ງເຮັດໃຫ້ຊີວິດການເປັນຢູ່ສະດວກສະບາຍກວ່າເກົ່າ, ມີນາອັນກວ້າງຂວາງ ແລະ ທົ່ງຫຍ້າອັນຂຽວງາມ ທີ່ເຕັມໄປດ້ວຍສັດສາວາສິ່ງ. ທຸກຄອບຄົວ ກໍ່ມີສັດລ້ຽງຫຼາຍຊະນິດ ເຊັ່ນ: ມີເປັດ, ມີໄກ່ ມີໝູ, ມີໝາ ແລະ ບ້ານເມືອງກໍຈະເລີນເຕີບໂຕມາເປັນກ້າວໆ. ຄວາມທຸກຍາກໃນເມື່ອກ່ອນ ແມ່ນຜ່ານການໄປແລ້ວ. ມາດຽວນີ້ມີແຕ່ຄວາມສະໜຸກສະໜານ ໃນວັດວາອາຮາມກໍມີຄູບາອາຈານ, ອາຮາມ ກໍມີການປະດັບປະດາຢ່າງສວຍສົດງົດງາມໄປດ້ວຍຮູບພາບ ສິ່ງຂອງສະໄໝບູຮານ ດ້ວຍວິຈິດຕະກຳທີ່ສີມີດີ ໃນການຄວັດແກະ ຈາກຄູບາພາຍໃນວັດ. ຕາມເສັ້ນທາງທີ່ເຊື່ອມໂຍງ ແລະ ຜ່ານບ້ານກໍມີກິດຈະກຳໃນການສ້າງສາພັດທະນາບ້ານເຮືອນຢ່າງຄຶກຄື້ນ.

ແຕ່ຢູ່ມາບໍ່ດົນ ການປ່ຽນແປງຂອງຊີວິດໃນທາງກົງກັນຂ້າມ ສຳລັບຂ້ອຍ ແລະ ຊາວບ້ານກໍເກີດຂຶ້ນ. ພວກເຮົາບໍ່ເຄີຍໄດ້ກໍ່ກຳທຳເຂັ່ນເຊັ່ນຂ້າໃຜມາກ່ອນ ແລະ ບໍ່ເຄີຍແມ່ນແຕ່ຈະຄິດເຊັ່ນນັ້ນ ພວກເຮົາພຽງແຕ່ສ້າງເຕີມ ໃນສິ່ງທີ່ພວກເຮົາໄດ້ສືບທອດມໍລະດົກຕົກທອດມາ ເພາະພວກເຮົາບໍ່ເຄີຍມີສິ່ງໃດມາລົບກວນພວກເຮົາມາເປັນເວລາຫຼາຍປີມາແລ້ວ ແລະ ພວກເຮົາກໍດຳເນີນການສ້າງສາພັດທະນາເລື້ອຍໆ ມາເປັນປົກກະຕິ. ແຕ່ເມື່ອມາຮອດ ປີ 1964 ຄວາມສັບສົນວຸ່ນວາຍກໍມາຮອດບ້ານເກີດຂອງພວກເຮົາ. ທຸກມື້ ພວກເຮົາໄດ້ຍິນແຕ່ສຽງປືນໃຫຍ່ ແລະ ປືນນ້ອຍ ດັງອຶກກະທຶກຄຶກໂຄມຢ່າງບໍ່ຂາດສາຍ. ສຽງປືນດັງກ້ອງກັງວານໄປທົ່ວພູຜາປ່າດົງ ຄືກັບວ່າ ບ້ານຂອງພວກເຮົາກຳລັງຖືກພາຍຸໃຫຍ່ ພັດຮຸນແຮງຢ່າງບໍ່ປານີ. ແຕ່ພວກເຮົາກໍພຽງແຕ່ຄິດວ່າ ມັນບໍ່ເປັນບັນຫາແກ່ພວກເຮົາ ແລະ ປະຊາຊົນ ກໍຍັງສືບຕໍ່ດຳເນີນຊີວິດ

ຕາມປົກກະຕິ ເພາະພວກເຮົາຖືວ່າ ພວກເຮົາເປັນກາງ ແລະ ບໍ່ເຂົ້າ ຂ້າງອອກຂາກັບໃຜ. ພວກເຮົາມີແຕ່ໄຫອ້ອນໃຫ້ເທວະດາຊ່ວຍໃຫ້ມີ ຄວາມສະຫງົບສຸກ. ບາງຄັ້ງກໍມີລູກປືນໃຫຍ່ມາຕົກລົງໃສ່ບ້ານ ແຕ່ພວກ ເຮົາຄິດວ່າ ເປັນພຽງຄວາມບັງເອີນ.

ແຕ່ຕໍ່ມາ ສິ່ງຕ່າງໆ ເຫຼົ່ານີ້ ກໍມີການປ່ຽນແປງໄປໃນທາງທີ່ຫຍຸ້ງ ຍາກສັບສົນ ເພາະມີຍົນສົງຄາມ ຊະນິດ ເຕ 28, ຍົນເອດີ 6, ຍົນ ແອຟ 105 ແລະ ບັນດາຍົນສີ່ໝາກປີ່ນ ແລະ ຍົນຫຼາຍຊະນິດ ທີ່ຂ້ອຍບໍ່ສາ ມາດຈື່ໄດ້ໝົດ ບິນກາຍບ້ານພວກເຮົາ ຊຶ່ງໃນຊີວິດພວກເຮົາຍັງບໍ່ເຄີຍ ເຫັນພາບແບບນີ້ມາກ່ອນໃນຊີວິດ. ເບື້ອງຕົ້ນ ພວກເຮົາກໍພາກັນອອກ ມາຈາກເຮືອນ ແລະ ຢືນເບິ່ງຢ່າງບໍ່ໜ້າເຊື່ອ. ໃນຊີວິດຂອງພວກເຮົາ ເຄີຍໄດ້ຍິນແຕ່ຊື່ຍົນ ແຕ່ຍັງບໍ່ເຄີຍເຫັນຕົວຈິງມາກ່ອນ.

ໃນເບື້ອງຕົ້ນ ບັນດາຍົນເຫຼົ່ານີ້ກໍບິນໄປຍິງແຕ່ແຖບພູຜາທີ່ຢູ່ ອ້ອມແອ້ມ ແລະ ພວກເຮົາກໍຄິດວ່າ ຈະບໍ່ມີຫຍັງກ່ຽວຂ້ອງກັບພວກເຮົາ ທີ່ເປັນປະຊາຊົນທຳມະດາ ພວກເຮົາພາກັນເບິ່ງ ແລ້ວກໍທຳມາຫາກິນ ຕາມທີ່ເຄີຍເປັນມາ.

ຕໍ່ມາບໍ່ດົນ ພວກເຂົາກໍເລີ່ມຍິງຕາມເສັ້ນທາງ ທີ່ເຂົ້າມາຫາບ້ານ ພວກເຮົາ ແລະ ພວກຊາວບ້ານກໍບໍ່ພໍໃຈ ເພາະພວກມັນຍິງແບບຊະຊາຍ ແບບບໍ່ມີຈຸດ ແລະ ທຸກຄົນກໍພາກັນຢ້ານກົວ ແລະ ແລ່ນໜີໄປລີ້ຢູ່ຕາມ ທົ່ງໄຮ່ ທົ່ງນາ ຈົນມາຮອດກາງຄືນ ພວກເຮົາຈຶ່ງພາກັນກັບມາບ້ານ ແລະ ເຫດການເຫຼົ່ານີ້ກໍສືບຕໍ່ມາເລື້ອຍໆ ຈົນຮອດວັນທີ 14 ພຶດສະພາ 1967. ບ້ານພວກເຮົາໄດ້ກາຍເປັນເປົ້າໝາຍທຳອິດໃນເຂດນີ້. ໃນມື້ນັ້ນ ມີຍົນອາຍພົ່ນສີ່ລຳ ໄດ້ຖິ້ມລະເບີດລົງທຳລາຍບ້ານພວກເຮົາ ແລະ ຕໍ່ມາ ກໍກັບມາຖະຫຼົ່ມຍິງອີກຕື່ມສອງຖ້ຽວໃນມື້ດຽວກັນ. ໃນມື້ນັ້ນ ພວກເຂົາໄດ້ ຖິ້ມລູກລະເບີດນາປາມ 8 ລູກ ເຮັດໃຫ້ເກີດໄຟໄໝ້ຢ່າງຮ້າຍແຮງໄໝ້ ທຸກສິ່ງທຸກຢ່າງຂອງຂ້ອຍ ໃນນີ້ ມີເຮືອນ 16 ຫຼັງຖືກໄໝ້ກ້ຽງ ພ້ອມ ທັງສິ່ງຂອງຕ່າງໆ ນອກນັ້ນ ກໍເຮັດໃຫ້ສັດສາວາສິ່ງເຈັບໂຊ. ໃນຈຳນວນ ຜູ້ເຄາະຮ້າຍແມ່ນ ພວກທີ່ໜີປົບຕາຍເຂົ້າປ່າບໍ່ທັນແມ່ນຖືກລະເບີດ ແລະ

ລົ້ມຕາຍຢ່າງອາໜາດ ແລະ ທໍລະມານ. ເມື່ອໄຟເລີ່ມມອດລົງ ກໍຕົກ ຄ່ຳພໍດີ ພວກທີ່ເຫຼືອຕາຍກໍພາກັນອອກມາຈາກຂຸມລີ້ໄພ ແລະ ເຫັນແຕ່ ເຖົ່າຖ່ານຈາກຊາກເຮືອນທີ່ໄໝ້ ນອກນີ້ ແມ່ນແຕ່ເຂົ້າໃນນາກໍຖືກໄຟໄໝ້ ຈົນກ້ຽງ. ເຫັນສະພາບເຊັ່ນນີ້ ທຸກຄົນພາກັນຮ້ອງໄຫ້ ແລະ ຕີໂພຍ ຕີພາຍຢ່າງເສຍອົກເສຍໃຈຫຼາຍ ມີບາງຄອບຄົວກໍຖືກບາດເຈັບສາຫັດ. ໃນສະພາບແບບນີ້ ໃຜໆກໍພາກັນເສຍອົກເສຍໃຈ ແລະ ຮ້ອງໄຫ້ອາໄລ ກັບການສູນເສຍຈົນຈະພາກັນເປັນບ້າໄປໃນຕົວ.

ຂ້ອຍ ແລະ ພວກຊາວບ້ານຂ້ອຍພາກັນມາລວມກັນ ແລະ ປຶກສາ ຫາລືກ່ຽວກັບເລື່ອງດັ່ງກ່າວ. ພວກເຮົາບໍ່ເຄີຍໄດ້ເຮັດຫຍັງຜິດຫຼື ທຳຮ້າຍ ຜູ້ໃດມາກ່ອນ ພວກເຮົາກໍພາກັນທຳມາຫາກິນ, ມ່ວນຊື່ນ ໃນງານບຸນ ຕ່າງໆ ແລະ ປົກປັກຮັກສາບ້ານເຮືອນຂອງພວກເຮົາມາເປັນເວລາຫຼາຍ ປີ. ແຕ່ມາບັດນີ້ ເປັນຫຍັງຍີ່ນຈຶ່ງພາກັນມາຍິງຖະຫຼົ່ມໃສ່ພວກເຮົາ ແລະ ເຮັດໃຫ້ພວກເຮົາທຸກຈົນຄືແນວນີ້?

ຫຼາຍຄົນກໍສະແດງອາການຕ່າງໆນາໆແບບບໍ່ເຄີຍຄາດຄິດມາ ກ່ອນ. ຫຼາຍຄົນຮ້ອງໄຫ້ແບບບໍ່ເຊົາ ຍ້ອນບໍ່ມີເຂົ້ານ້ຳກິນໃສ່ປາກທ້ອງ. ພວກຊາວບ້ານອ້ອມຂ້າງກໍພາກັນມາເປັນຈຳນວນຫຼາຍ ເພື່ອຊ່ວຍເບິ່ງ ແຍງຜູ້ເຈັບເປັນ ແລະ ບາດເຈັບ. ພວກເຂົາພາກັນຖືເຂົ້ານ້ຳມາຊ່ວຍເຫຼືອ ແລະ ຊ່ວຍສ້ອມແຊມທີ່ຢູ່ອາໄສຊົ່ວຄາວໃຫ້ຜູ້ທີ່ໄດ້ຮັບເຄາະກຳ. ມີຫຼາຍ ຄົນຈາກບັນດາບ້ານໃກ້ຄຽງ ຕ່າງກໍພາກັນມາຊ່ວຍເຫຼືອຜູ້ລະໄມ້ລະມື ຕາມຄວາມສາມາດ ເພື່ອໃຫ້ພວກເຮົາບັນເທົາຈາກຄວາມສູນເສຍ. ເຫດທີ່ ເກີດຂຶ້ນນີ້ ແມ່ນປ່ຽນສະພາບຈາກຊີວິດທີ່ມີແຕ່ຄວາມມ່ວນຊື່ນ ກາຍມາ ເປັນຄວາມທຸກທໍລະມານ ແລະ ຄວາມທຸກຈົນໃນທັນທີທັນໃດ.

ເມື່ອເວລາຜ່ານໄປ ບັນດາຍີ່ນຕ່າງໆ ກໍພາກັນມາຍິງຖະຫຼົ່ມບັນ ດາບ້ານຕ່າງໆ ຄືທີ່ໄດ້ເຮັດກັບບ້ານພວກເຮົາໃນເບື້ອງຕົ້ນ. ຈາກນັ້ນ ຍີ່ນກໍລະດົມຍິງແບບຊະຊາຍ ແບບບໍ່ເລືອກສະຖານທີ່ ແມ່ນແຕ່ປ່າດົງ ພົງໄພ ທຸກບ່ອນທີ່ມີສິ່ງມີຊີວິດອາໄສຢູ່ ເຊິ່ງເປັນການບີບບັງຄັບໃຫ້ພວກ ເຮົາຕ້ອງໄປລີ້ຊ່ອນໃນຖ້ຳ ໃນຮູ ຫຼື ຂຸດຂຸມຄອງເລິກ ເພື່ອລີ້ຕາຍ.

ການແຕ່ງຢູ່ຄົວກິນນຳກັນ ແມ່ນບໍ່ມີອີກແລ້ວ ແມ່ນແຕ່ວັດວາອາຮາມ ກໍບໍ່ຍົກເວັ້ນ ເຮັດໃຫ້ຄູບາອາຈານ ຕ້ອງໄດ້ໄປລີ້ຊ່ອນນຳຖ້ຳ ນຳພູ ແລະ ຂຸມຄອງຕ່າງໆ ເພື່ອຫຼົບໄພ. ຄວາມທຸກທໍລະມານຈາກການທຳລາຍຂອງ ຍົນອາກາດແມ່ນເຫຼືອຈະພັນລະນາ ເພາະລູກລະເບີດແມ່ນໃຫຍ່ ແລະ ເມື່ອຕົກໃສ່ບ່ອນໃດແລ້ວ ແມ່ນທຳລາຍກ້ຽງບໍ່ມີຫຍັງເຫຼືອເລີຍ.

ສະພາບການອັນແສນທໍລະມານແມ່ນດຳເນີນສືບຕໍ່ມາຕະຫຼອດ ຈົນຮອດ ປີ 1969. ຈາກນັ້ນ ກອງທັບຝ່າຍລັດຖະບານກໍມາເອົາພວກ ເຮົາມາວຽງຈັນ ເພື່ອເປັນການປ້ອງກັນຕົວ ແຕ່ໃນໃຈຂ້ອຍແລ້ວ ແມ່ນ ບໍ່ຢາກຈາກບ້ານເກີດເມືອງນອນຈັກດີ. ເມື່ອຮອດເວລາຕ້ອງຈາກລາ ຂ້ອຍກໍຕ້ອງຈຳຈາກ ດ້ວຍຄວາມອາໄລອາວອນກັບຊັບສົມບັດ ແລະ ສິ່ງ ທີ່ຫຼົງເຫຼືອຈາກໄຟໄໝ້. ຂ້ອຍຢ້ານ ແລະ ບໍ່ຮູ້ວ່າ ຈະປະເຊີນກັບຫຍັງ ອີກໃນເມື່ອມາວຽງຈັນ. ຖ້າວ່າ ຝ່າຍລັດຖະບານບໍ່ເອົາໃຈໃສ່ພວກເຮົາ ແມ່ນຈະເຫັນການລົ້ມຕາຍຫຼາຍຂຶ້ນ ເພາະທີ່ວຽງຈັນ ການສ້າງສາແມ່ນ ຫຍຸ້ງຍາກຫຼາຍ ເພາະເຮົາບໍ່ມີທີ່ດິນປຸກສ້າງ ຫຼື ທີ່ທຳກິນ ແລະ ບໍ່ມີສັດ ລາກແກ່ ເພື່ອເຮັດນາ ຄືດັ່ງທີ່ພວກເຮົາເຄີຍມີມາແຕ່ກ່ອນ.



ໃນສ້ຽງວວິນາທີ ທີ່ເທວະດາຍັງບ່ປານີ ມີເຫດການເກີດຂຶ້ນທີ່ເກີນກວ່າຈະພັນລະນາໄດ້ ຊຶ່ງເປັນເຫດການທີ່ພາໃຫ້ປະຊາຊົນສູນເສຍຊີວິດ. ນີ້ເປັນເຫດການນອງເລືອດອັນໜຶ່ງຂອງປະຊາຊົນ ຈາກການຖິ້ມລະເບີດ. ປະຊາຊົນເຫຼົ່ານີ້ ກຳລັງພາກັນເຂົ້າໃນຖ້ຳ ແຕ່ບ່ຮູ້ວ່າ ລະເບີດບິນມາຈາກ ບ່ອນໃດ ມັນເໝືອນກັບພະລັງອາພອນໂລຈາກເບ້ືອງບົນທີ່ສ່ົງມາທຳລາຍຊີວິດມະນຸດ ທີ່ບໍລິສຸດຈຳນວນນັບບ່ຖ້ວນ ໂດຍບ່ມີການກ່າວເຕືອນ ບາງຄົນຖືກລະເບີດທຳລາຍແຕກກະຈາຍຈົນບ່ເຫຼືອພໍຕ່ອນ.

ບ່ມີອັນທີ່ຈະບ່ມີອັນລືມລົງໄດ້

ໂດຍ: ນັກກະວີລາວ

ບັດນີ້ ຂ້ອຍຈະຂໍກ່າວເລ່ືອງ
ຕອນທີ່ຂ້ອຍອອກປາກຕ້ານ

ເພ່ືອເປັນການແຕ່ງແຕ້ມ
ດັ່ງທ່ານຈະເຫັນຄວາມຈິງ
ໃຫ້ຄິດເຖິງຊຸມຂ້ອຍ
ຕອນຍັງນອນຢູ່ກ້ຳ

ຍາມຕ່ືນມາເມ່ືອເຊ້ົາ
ຊອກຫາຮູປານໜູ
ຖ້າບ່ທຳແນວນ້ີ
ບ່ຫວັງເຫັນຮອດບ້ານ

ເຮົາຈ່ຶງແປງແຕ່ງສ້າງ
ເປັນບ່ອນອາໄສເຊ້ົາ

ເມ່ືອງລາວແຕ່ຄາວກ່ອນ
ຂານເລ່ືອງເລ່ົານິທານ

ຄວາມເກ່ົາປາງຫຼັງ
ທ່ີຂຸນລົງໄວ້
ຄາວຫຼັງຄ້ັງກ່ອນ
ຊຸງຂວາງພຸ້ນຖ່ິນເຮົາ

ພາກັນແລ່ນປົບຕາຍ
ຢູ່ເນ́ົາໃນຖ້ຳ
ບ່ຫວັງມີຊີວິດຢູ່
ຊຸງຂວາງຂ້ອຍອີກເລີຍ

ຮ້ັງຮ່ອມຮູຜາ
ຢູ່ເນ́ົານອນລ້ີ

ມີມີດແດງດຳນ້ອຍ
ໄຕ່ແຕ່ຫົວຮອດກົ້ນ

ຍ້ອນຜິນບຸນທີ່ໄດ້
ເທອະດາແນມເຫັນ
ບໍ່ຫວັງຄອຍໜີມື້ມ
ຄົງຈັກຕາຍມອດມ້ວຍ

ແຕ່ວ່າ ບຸນທີ່ສ້າງ
ມາຊູເອົາເຮົາລຸກ
ຄິດເຖິງຍາມຍັງຄ້າງ
ເອົາດົງໜາເປັນທີ່ກັ້ງ

ກາງຄືນມາເອົາງ່ຳໄມ້
ຟຸ່ມຕ່ຳເອົາຮອງນອນ
ເອົາແສງເດືອນດາວໄຕ້
ຫາກິນຕາມແມ່ນ້ຳ

ຈັ່ງໃຮເປັນໝູ່
ກໍຫວັ່ງໝົ້ນໃຫ້ລອດຕາຍ

ສ້າງກໍ່ທຳມາ
ເວດທະນາມຳຂ້ອຍ
ໄກກົ່ງໄປລອດ
ບໍ່ຫວັ່ງໄດ້ອອກມາ

ມາຊ່ວຍບັນເທົາ
ອອກຮູເທວຖ້ຳ
ກາງໄພໃນປ່າ
ບັ່ງໃຫ້ລອດຕາຍ

ສູງໃຫຍ່ເປັນຫຼັ່ງຄາ
ທົ່ມໜາວຊາມແຈ້ງ
ແຍງທາງພໍໄດ້ເພິ່ງ
ພໍກຸ້ມແຕ່ລະວັນ

ເຖິງຈະລີ້ຢູ່ໃນຖ້ຳໃນຮູ ກໍແສນຈະກົວຢ້ານຢ່າງອີກສັ່ນຂວັນຫາຍ ພວກເຮົາໄດ້ຍ້າຍໄປລີ້ຢູ່ແຖວພູສາ ພາເອົາມ້າ, ເອົາງົວ ແລະ ຄວາຍ ໄປພ້ອມ ແຕ່ປະໃຫ້ພວກມັນອຶດຫຍ້າ ເພາະບໍ່ກ້າເອົາໄປລ້ຽງ ຢ້ານຍົນ ອາກາດຍິງພວກມັນຕາຍ. ຕໍ່ມາພວກທະຫານພາກັນມາຕັ້ງຄ້າຍຢູ່ໃກ້ ພວກເຮົາຢ້ານຫຼາຍ ຈຶ່ງພາກັນຍ້າຍກັບມາຢູ່ແຖວບ້ານເດີມ ໂດຍຕັ້ງ ຕູບຕັ້ງຜາມນ້ອຍໆຢາຍຕາມແຄມແມ່ນ້ຳແສນທັ້ງສອງຟາກ. ພວກເຮົາ ພາກັນຂຸດຂຸມລຽບຕາມແຄມນ້ຳ ແລະ ຕັ້ງຕູບນ້ອຍໆອ້ອມ. ພວກຍົນ ອາກາດກໍມາຍິງທຳລາຍ ນ້ຳຕົ້ມ ຊຶ່ງເປັນບ້ານໃຫຍ່ທີ່ຢູ່ໃກ້ບ່ອນພວກ ເຮົາຢູ່.

ພວກເຮົາຈຳເປັນຕ້ອງພາກັນຍ່າງອອກຈາກບ່ອນຢູ່ເກົ່າໄປຫາ ແສນເມືອງ ຊຶ່ງຢູ່ເລາະລຽບກັບແມ່ນ້ຳໂຂ ແລະ ສ້າງຕູບເລາະລຽບ ຕາມແມ່ນ້ຳດັ່ງກ່າວ. ຈາກນັ້ນ ພວກຍິນອາກາດກໍມາຍິງຖະຫຼົ່ມ ພູສາ ຈົນຮາບກ້ຽງ ພວກເຮົາຈຶ່ງຕ້ອງຍ້າຍໄປຫາ ວ້ຽງຄວາຍ. ຍິ່ງນານວັນເຂົ້າ ເທົ່າໃດ ກໍມີເລື່ອງໂສກເສົ້າເພີ່ມຂຶ້ນທຸກວັນ. ພວກເຮົາມີຄວາມລັ່ງເລໃຈ ເມື່ອພວກທະຫານບອກໃຫ້ພວກເຮົາໄປຮຽນວິທີຕໍ່ສູ້ກັບພວກເຂົາ. ພວກເຮົາອອກເຮືອນແຕ່ເຊົ້າ ແລະ ພາກັນຫໍ່ເຂົ້າທ່ຽງ. ເມື່ອອອກເດີນ ທາງໄປໄດ້ໄລຍະໜຶ່ງ ພວກເຮົາກໍຢຸດພັກ ແລະ ນັ່ງອ້ອມເປັນວົງ. ພວກ ເຮົາຈັບຄູ່ກັນ ໂດຍຜູ້ໜຶ່ງເປັນນັກຮຽນ ແລະ ຜູ້ໜຶ່ງເປັນອາຈານ ແຕ່ລະ ຄົນຕ່າງກໍມີອາຈານຂອງໃຜລາວ. ຫຼັງຈາກລົມກັນແລ້ວ ພວກເພິ່ນກໍຂໍ ຮ້ອງໃຫ້ພວກເຮົາຊ່ວຍສະໜັບສະໜູນເຂົ້າກິນ ແລະ ຜັກ ເພື່ອດຳເນີນ ການຕໍ່ສູ້ຕໍ່ໄປ. ເມື່ອພວກເຮົາກັບມາຮອດທີ່ພັກ ກໍພາກັນດຳເນີນໜ້າວຽກ ຕາມພາລະຂອງໃຜມັນ ພວກເຮົາພາກັນເຮັດເຂົ້າຕົ້ມ ເພື່ອໄປຊ່ວຍອ້າຍ ນ້ອງທະຫານ. ການຮຽນແມ່ນບໍ່ມີການຍົກເວັ້ນ ບໍ່ວ່າ ເຖົ້າ ຫຼື ໜຸ່ມ ກໍຕ້ອງ ໄດ້ພາກັນຮຽນໃຫ້ໝົດ. ພວກເດັກນ້ອຍ ມີໜ້າທີ່ອອກໄປຂໍແຜ່ປາແຫ້ງ, ໝາກເຜັດ ແລະ ຢາສູບ ຕາມແຕ່ລະເຮືອນ. ຖ້າມີເປັດ ມີໄກ່ ກໍຂໍມາປະ ກອບສ່ວນ ນອກຈາກນີ້ ພວກເຮົາຍັງຕ້ອງໄດ້ສ້ອມແປງທາງທີ່ເປ່ເພ ຈາກຍິນຍິງ ໝາຍຄວາມວ່າ ກາງເວັນ ແລະ ກາງຄືນ ກໍແມ່ນພາກັນເຮັດ ວຽກບໍ່ໄດ້ຢູ່ໄດ້ເຊົາ.

ຮອດຕອນຄ່ຳແລງມາ ພວກຜູ້ສາວພາກັນເກັບດອກໄມ້ມາຮ້ອຍ ເປັນພວງມາໄລ ແລະ ພາກັນໄປທີ່ຄ້າຍທະຫານ. ພວກເຂົາພາກັນ ຊອກຄູ່ຟ້ອນ ຟ້ອນລຳວົງຊຶ່ ໄຜ່ງາມ ແລະ ພວກຜູ້ຊາຍຈຳນວນໜຶ່ງກໍ ພາກັນຕີກອງຈົ່ມເດີກດິ່ນ. ຫຼັງຈາກກັບຈາກການມ່ວນຊື່ນ ພວກຜູ້ຍິງກໍ ພາກັນຕຳເຂົ້າໃສ່ຄົກ ພວກຜູ້ເຖົ້າ ພາກັນຂຸດດິນເພື່ອປູກສາຄູ ແລະ ມັນດ້າງໃຫ້ໄດ້ຫ້າຫາຫົກໜານ. ພວກຜູ້ຍິງຈຳນວນໜຶ່ງ ພາກັນໄປຜັດ ປືນໃຫຍ່ທີ່ຄ້າຍຊ່ວຍທະຫານ. ນີ້ແມ່ນໂສກນາດຕະກຳທີ່ແສນທໍລະມານ ຈາກການຖິ້ມລະເບີດເຮັດໃຫ້ຫົວໃຈເຈັບແສບຈົນປານຕາຍ ຜູ້ທີ່ຍັງກໍ

ເໝືອນຖືກໄຟເຜົາໄໝ້. ພວກເຮົາຕ້ອງໄດ້ເບິ່ງແຍງເດັກນ້ອຍ ແລະ ບໍ່ມີເວລາຫາອາຫານໄປຫານໃຫ້ວັດ. ດັ່ງນັ້ນ ພວກເພິ່ນກໍຕ້ອງເຂົ້າປ່າ ເຂົ້າດົງ ເພື່ອຖາງໄຮ່ ປູກເຂົ້າ ແຕ່ບັນດາລີງກໍມາກິນ ແຕ່ພວກເພິ່ນກໍ ອົດທົນສູ້ຊົນຜະລິດເຂົ້າ ເພື່ອປະກອບສ່ວນແກ່ການຕໍ່ສູ້. ຄູບາອາຈານ ກໍພາກັນເຮັດວຽກຢ່າງບໍ່ຢຸດເຊົາ ຜ້າສະບົງສີເຫຼືອງຈົນປ່ຽນສີ ແລະ ຂາດ ສ້ອຍເຕັມໄປດ້ວຍເຫື່ອໄຄ. ພວກເພິ່ນທັງເຮັດວຽກ ແລະ ລີ້ຊ່ອນຢູ່ຕາມ ປ່າດົງ ຜ້າຄຸມທີ່ເຄີຍເປັນສີເຫຼືອງ ກໍກາຍມາເປັນສີດຳ ເໝືອນແຊມດ້ວຍ ຮາກໄມ້. ຕາມປົກກະຕິແລ້ວ ແຕ່ລະເຊົ້າເພິ່ນກໍພາກັນອອກບິນທະບາດ ຕາມບ້ານ ມາຕອນນີ້ ຕ້ອງພາກັນລີ້ຊ່ອນ ແລະ ພາວະນາ ແຕ່ອະນິຈາ ທ້ອງມັນກໍໂຂ່ງ ເພາະອາຫານຈະກິນກໍບໍ່ມີພໍປະທັງໄສ້. ມາຮອດຍາມນີ້ ບໍ່ມີໃຜເອົາຫຍັງໄປຫານທີ່ວັດ ແລະ ບໍ່ມີໂອກາດໄປຟັງເທສະນາຂອງ ພະພຸດທະເຈົ້າໄດ້ອີກ ເພາະບັນດາແມ່ອອກກໍ່ພາກັນໄປລີ້ຢູ່ໃນຮູກາງປ່າ ກາງດົງ. ດ້ວຍຄວາມທຸກທໍລະມານ ນ້ຳຕາຍ້ອຍລົງອາບໜອນ ແລະ ຂົດໂຕລີ້ຊ່ອນຢູ່ໃນຖ້ຳ ໃນຮູ ເໝືອນໆ ຈັ່ງແມ່ນເວນກຳແທ້ໆ.

ພວກເຮົາເວດທະນາບັນດາແມ່ລູກອ່ອນ ທີ່ບໍ່ມີໂອກາດຢູ່ກຳຕາມ ປະເພນີໃນການນອນຂາງໄຟ ເພາະຖ້າຫາກກໍ່ກອງໄຟຍາມໃດ ຍົນກໍ ມາຍິງທັນທີ ດັ່ງນັ້ນ ຈຶ່ງພາໃຫ້ພວກເຮົາຄິດແລ້ວຄິດອີກ ຕະຫຼອດເວ ລາວ່າ ຈະເຮັດແນວໃດ ແຕ່ກໍບໍ່ມີທາງອອກໄດ້ເລີຍ.

ເປັນເວລາຫຼາຍວັນ ທີ່ຍົນນ້ອຍບິນສອດແນມ ບິນໄປບິນມາວົນ ວຽນຢູ່ແຖວບ້ານ ຫຼັງຈາກນັ້ນ ກໍຮ້ອງແຮ້ງດຳ (ຍົນອາຍພົ່ນ) ມາຍິງ ແລະ ຖິ້ມລະເບີດລົງໃສ່ ເຮັດໃຫ້ພື້ນດິນມຸ່ນທະລາຍ ເຮັດໃຫ້ໂນນພູ ກາຍເປັນຂຸມ ເປັນບວກ ເປັນທີ່ອາໄສຂອງ ປູປາ ແລະ ງູສາລອຍຫຼົ້ນ. ບັນດາຍົນຮົບມາສະແດງ ແສນຍານຸພາບຂອງປະເທດຂອງພວກມັນ. ເມື່ອແຮ້ງດຳເຮັດວຽກແລ້ວ ກໍຕາມມາດ້ວຍຍົນນ້ອຍມາກອາດລ້າງ ແລະ ຍົນສອດແນມກໍປະຕິບັດໜ້າທີ່ຕະຫຼອດເວລາຢ່າງບໍ່ຢຸດເຊົາ. ພວກຍົນ ໃຫຍ່ຖິ້ມລະເບີດຈາກກາງຫາວໃນລະດັບສູງຫ່າລະເບີດທີ່ຖອກເທລົງມາ ແຕກອອກເປັນໄຟກອງໃຫຍ່ ໄໝ້ພື້ນດິນ ເຮືອນຊານ ແລະ ທົ່ງໄຮ່

ທີ່ງນາຢ່າງບໍ່ປານີ. ບ້ານເຮືອນຖືກລະເບີດຟັ້ງກະຈັດກະຈາຍ ພາໃຫ້ກາຍເປັນບອກ ເປັນຂຸມ ເຕັມໄປທົ່ວ ມີແຕ່ປູ ປາ ງູສາ ສາມາດລ້ຽງຢູ່ໃນນ້ຳທີ່ເຢັນແນວນີ້ໄດ້.

ເມື່ອຍິນຍິງແຮງຂຶ້ນ ພວກເຮົາກໍພາກັນຍ້າຍໄປຫາ ບ້ານ ສົມງາມ ທີ່ມີປ່າຫຍ້າສູງໃຫຍ່ຍັງຫຼວງຫຼາຍ ແລະ ໃນບ່ອນນີ້ ພວກເຮົາກໍພາກັນຂຸດຂຸມຄອງເພື່ອລີ້ຊ່ອນ. ຢູ່ບ່ອນນີ້ບໍ່ໄດ້ດົນ ບັນດາຍິນນ້ອຍກໍມາຢ່າງໄວວາ ພາໃຫ້ພວກເຮົາຕ້ອງປົບຕາຍແລ່ນລ້ຽງຂຸມ ຂຸມກໍບໍ່ໃຫຍ່ ພໍຫຼີມແຕ່ໂຕ ອີກບໍ່ດົນຍິນສອດແນມກໍບິນເຂົ້າມາໃກ້ໆ ແລະ ບິນອ້ອມວຽນບໍ່ຍອມໜີ ແລະ ບໍ່ດົນ ອິນຊີດຳກໍແຫ່ກັນມາຖິ້ມລະເບີດຢ່າງໃຫຍ່ ພາໃຫ້ທຸກສິ່ງຖືກທຳລາຍເປັນເຖົ່າຖ່ານ ຕອນນີ້ພວກເຮົາເກືອບພາກັນຕາຍໝົດ ເພາະມັນຮ້າຍແຮງແທ້ໆ. ພວກເຮົາຈຳເປັນຕ້ອງພາກັນຍ້າຍໄປອ້ງຄວາຍ. ຕົກມາຕອນກາງຄືນກໍມີພະນັກງານຂອງລັດມາບອກວ່າ ຄວນຍ້າຍໄປເມືອງຄູນ ເພື່ອຄວາມປອດໄພທັນທີ ແລະ ພວກເຮົາຂໍຮ້ອງນຳເພີ່ນວ່າ ຂໍໃຫ້ຮອດຕອນເຊົ້າຈຶ່ງຈະຍ້າຍ ເພາະມັນຄ່ຳແລ້ວ ເຮັດຫຍັງກໍບໍ່ທັນ. ເມື່ອພວກເພີ່ນໄປແລ້ວ ພວກເຮົາກໍພາກັນແລ່ນກັບຄືນໄປທາງເກົ່າ. ພວກເຮົາເດີນທາງຜ່ານກາງແສນ ຊຶ່ງເຄີຍເປັນບ້ານທີ່ພວກເຮົາຢູ່. ຈາກນັ້ນ ພວກເຮົາກໍເດີນທາງໄປພູທົ່ງຟ້າ ເຊິ່ງເປັນບ່ອນກອງທະຫານແມ້ວອອກມາຮັບພວກເຮົາ. ພວກເຂົາຖາມເຖິງສະພາບການຂອງພວກເຮົາ ແລະ ເລ່ົງໃຫ້ພວກເຮົາຮີບເດີນທາງຕໍ່ໄປໃຫ້ໄວຂຶ້ນ. ພວກເຮົາເດີນທາງຢ່າງບໍ່ຢຸດພັກ ຜ່ານດົງໜາ ແລະ ພູຜາ ຜ່ານຮ່ອມຫ້ວຍ ແລະ ປີນພູຕໍ່ໄປເລື້ອຍໆ. ໃນເວລາເດີນທາງ ຕາເວັນກໍຮ້ອນເຈີດຈ້າ ເຜົາໄໝ້ແຮງ ເຫື່ອໄຫຼໄຄຍ້ອຍ ແມງໄມ້ກໍ່ແມ່ນຫຼາຍ ແລະ ກັດຕ່ອຍ ຈະຫາຫ້ວຍນ້ຳພໍລ້າງອາບກໍບໍ່ມີເລີຍ. ພວກເຮົາຈຳເປັນຕ້ອງປີນພູສູງຊັນ ດ້ວຍຄວາມອິດເມື່ອຍ ຈົນສຸດທ້າຍ ຈຶ່ງມາຮອດຄ້າຍທະຫານໃຫຍ່ ພວກເຮົາຈຶ່ງໄດ້ຢຸດພັກ. ທະຫານແມ້ວອອກມາອ້ອມລ້ອມພວກເຮົາ ແລະ ຖາມພວກເຮົາວ່າ ພວກພໍ່ແມ່ເອີຍ ພວກທ່ານໂຊກດີແລ້ວ ທີ່ມາຮອດດ້ວຍຄວາມປອດໄພ. ພວກເຈົ້າພາກັນມາໝົດທຸກຄົນກັນແລ້ວບໍ່ ຫຼື ຍັງມີຄົນ

ຕິດຄ້າງຢູ່ພຸ້ນ? ຄອບຄົວພວກເຈົ້າເດເປັນແນວໃດ?

ພວກເຮົາຕອບເຂົາວ່າ ຍັງມີຫຼາຍຄົນສູນຫາຍທ່ານເອີຍ. ຈາກນັ້ນ ທະຫານແມ້ວ ກໍໄດ້ເອົາເຂົ້າປາອາຫານມາແຈກຈ່າຍໃຫ້ພວກເຮົາກິນ ໂດຍທົ່ວໜ້າ. ພາຍຫຼັງກິນເຂົ້າແລ້ວ ຂ້ອຍຈຶ່ງຄິດເຖິງຄວາມທຸກຍາກ. ຫຼຽວກັບຄືນໄປບ້ານເກີດ ເຫັນແຕ່ຄວັນໄຟສີດຳຊຶ່ງຖືກຍົນຍິງ ບ້ານເຮືອນ ໄໝ້ປານທຽນໄຂ ເຮືອນຊານບ້ານຊ່ອງ, ທົ່ງໄຮ່ ທົ່ງນາ, ວັດວາອາຮາມ ຖືກລະເບີດແຫຼກເປັນຜົງ ມີແຕ່ຄວັນລະເບີດໜາທຶບປົວຂຶ້ນ ສູ່ທ້ອງຟ້າ ສຽງລະເບີດກຶກກ້ອງນອງຟ້າ ແລະ ດິນ ຢ່າງອຶກສັ່ນຂວັນຫາຍ ແມ່ນແຕ່ ເທວະດາກໍອາດໜີພ່າຍ. ແມ່ນແຕ່ງົ້ງອກໍພາກັນຢ້ານກົວກັນໝົດທຸກ ຢ່າງ. ຍົນຖິ້ມລະເບີດ ແລະ ຍົນອາຍພົ່ນ ໄດ້ທຳລາຍພູຜາໃຫ້ກາຍ ເປັນບອກໜອງ, ທຳລາຍບ້ານເມືອງຢ່າງຣາບກ້ຽງ ແລະ ປ່ຽນສະພາບ ພື້ນດິນໃຫ້ ເປັນຂີ້ຝຸ່ນຜົງ. ມາຮອດຕອນນີ້ ເມືອງຊຽງຄູນເກີດບັນຫາໃຫຍ່ ແລະ ພວກເຮົາຈຳເປັນຕ້ອງໄດ້ພັດພາກຈາກບ້ານເກີດເມືອງນອນຂອງ ພວກເຮົາ. ຈັ່ງແມ່ນໜ້າເວດທະນາແທ້ເດ ທີ່ພວກເຮົາບໍ່ສາມາດເອົາ ງົວ ຄວາຍ, ມ້າ, ໝູ, ໝາ, ເປັດ, ໄກ່ ໄປນຳໄດ້ ໄປກໍໄປແຕ່ໂຕລ້ອນຈ້ອນ. ຈັ່ງແມ່ນໜ້າເວດທະນາແທ້ເດ. ຊັບສົມບັດສິ່ງຂອງພາຍໃນເຮືອນ ບໍ່ສາ ມາດເອົາໄປນຳໄດ້ຈັກຢ່າງ. ຄິດຮອດເຮືອນຊານ, ໄຮ່ນາທີ່ເຄີຍປົວແປງ. ຄິດຮອດສວນດອກໄມ້ທີ່ພວກເຮົາເຄີຍເດັດໄປບູຊາພະ ພ້ອມດ້ວຍກ້ວຍ, ອ້ອຍ ເຊິ່ງຈະບໍ່ມີໂອກາດໄດ້ເຮັດອີກ. ຂໍໃຫ້ທົ່ງນາທີ່ແສນຈົບງາມ ພ້ອມ ກໍໄຜ່ ແລະ ກໍສາງໄພ ຈົ່ງພາກັນຢູ່ດີເນີ. ຄິດຮອດໜອງ ທີ່ເຕັມໄປດ້ວຍ ດອກບົວ ຊຶ່ງພວກເຮົາເຄີຍລົງອາບ ລົງກິນ ຕໍ່ໄປນີ້ຈະບໍ່ມີໃຜມາໃຊ້ມາ ອາບຄືແຕ່ກ່ອນອີກ. ຂໍໃຫ້ຕົ້ນໝາກໄມ້ຈົ່ງຢູ່ດີເນີ ຕໍ່ໄປນີ້ພວກເຮົາຕ້ອງ ຈາກກັນ ຍ້ອນມີມານຈາກຕ່າງແດນມາຮຸກຮານປະເທດຊາດພວກເຮົາ. ພວກເຮົາຕ້ອງພັດພາກຈາກບ້ານເກີດເມືອງນອນ ຍ້ອນສົງຄາມເຂົ້າມາ ພາໃຫ້ພວກເຮົາຕ້ອງປົບໜີຈາກຖິ່ນກຳເນີດໄປແສນໄກບໍ່ຮູ້ວ່າ ຈະໄປຕົກ ຢູ່ກ້ຳແດນໃດ ແລ້ວແຕ່ເພິ່ນຈະສົ່ງໄປ. ຂໍອຳລາທຸກຢ່າງເດີຊຽງຂວາງ ບາດນີ້ຈະເຂົ້າວຽງຈັນແລ້ວ.

ພວກເຮົາໜີຈາກບ້ານ ໃນວັນທີ 13 ມາຮອດເດີ່ນບິນ ໃນວັນທີ 15 ແລະ ໄດ້ພັກເຊົາຢູ່ຖ້ຳຕຳລິງ ເປັນເວລາ 2 ວັນ. ຈາກນັ້ນ ຍົນກໍເອົາພວກເຮົາໄປໄວ້ທີ່ຄູນນາ. ຕອນນີ້ ພວກເຮົາສຸດທີ່ທຸກຍາກ. ພວກເຮົາມາຂໍພັກເຊົານຳເພິ່ນ. ການຂໍພັກເຊົາຖືວ່າ ເປັນເລື່ອງໜ້າອັບອາຍຂາຍໜ້າ. ພວກເຮົາໄດ້ພາກັນປຸກຕູບນ້ອຍດ້ວຍຫຍ້າ ແລະ ໃບໄມ້ພໍໄດ້ພາ ລູກເຕົ້າພັກນອນໃຕ້ຮິ່ມເງົາມັນ.

ລູກສຸດຕາເອີຍ ພໍ່ສຸດແສນຄິດຮອດ ລູກເອີຍ ແມ່ເຈົ້າໄດ້ໜີຈາກເຈົ້າໄປແລ້ວ ພວກເຮົາມີເວນກຳ ຕ້ອງຈຳຈາກັນໄປຄົນລະທິດຄົນລະທາງ. ລູກໄປຢູ່ກັບຝ່າຍສຸພານຸວົງ ສ່ວນແມ່ໄປຢູ່ຝ່າຍສຸວັນນະພູມມາ ແມ່ໜີຈາກລາໄປແລ້ວລູກເອີຍ.


ໂຊກດີບໍ່ມີນຳເພິ່ນພາໃຫ້ແມ່ຕ້ອງໂສກເສົ້າລູກເອີຍ ລູກພັດພາກຈາກແມ່ແລ້ວ ພັດມາພາກຈາກພໍ່ໄປອີກ ພວກເຮົາຕ່າງພັດພາກຈາກັນໄປຄົນລະທິດລະທາງຫ່າງກັນຄົນລະເບື້ອງ. ມີກ້ວຍອ້ອຍ ແລະ ຕຳໝາກຫຸ່ງ ກໍແບ່ງໄປໃຫ້ກັນບໍ່ໄດ້ ເຮັດໃຫ້ພໍ່ສຸດແສນໂສກເສົ້າ ອຸກໃຈຫຼາຍກ້ອນຄຳຂອງພໍ່.

ຄິດຮອດຫຼາຍ ນ້ຳຕາກໍໄຫຼລົງອາບໜອນ. ຢູ່ໃນຕູບນ້ອຍໆ ມີແຕ່ຄວາມທຸກຈົນ ບຶດໜຶ່ງກໍມີຂ່າວວ່າ ມີຄົນເຈັບ, ຄົນຕາຍ, ຫຼາຍຄົນກໍລົ້ມຕາຍໄປ ຈົນເກືອບບໍ່ມີເດັກນ້ອຍເຫຼືອຢູ່.

ພວກເຮົາຍ້າຍຈາກຄູນນາໄປທາງເຂດນອກຕົວເມືອງ ເມື່ອໄປຮອດ ພວກເຮົາກໍພາກັນເຮັດຕູບ ເຮັດຜາມໃສ່ດິນແຂງແກ່ນ. ບ່ອນນີ້ຈະຫານ້ຳອາບກໍບໍ່ມີ ຈັ່ງແມ່ນແຫ້ງແລ້ງ ຈັ່ງແມ່ນແສນທຸກທໍລະມານມານານປີ. ອາຫານກໍບໍ່ມີລິດຊາດ ພໍພວກເຮົາໄປຫາປາໜອງໃດກໍມີເຈົ້າມີຈອມຊອມແຕ່ຈະປັບໃໝ ເປັນໝື່ນເປັນແສນກີບ. ມີແຕ່ທີ່ເມືອງຈ້າທີ່ພວກເຮົາສາມາດຫາອາຫານຈາກສະຖານທີ່ສາທາລະນະ ໂດຍບໍ່ຖືກປັບໃໝ ແຕ່ໜອງກໍແມ່ນເລີກເອົາແທ້ເອົາວ່າ ຈົນຫາປາບໍ່ໄດ້. ດັ່ງນັ້ນ ຈຶ່ງພາກັນເຂົ້າປ່າ ເຂົ້າດົງ ເພື່ອຊອກຫາອາຫານຕາມຮ່ອມ, ຫ້ວຍ ແລະ ຕາມຫ່ວງພູຜາຊັນ ແຕ່ຫາຫຍັງກໍບໍ່ໄດ້ ຈຳເປັນຕ້ອງໄດ້ເກັບຜັກຫັກ

ໜ່ໄມ້ ແລະ ໄດ້ປານ້ອຍພຽງໜ້ອຍດຽວ ເມື່ອມາຮອດກໍໄປຊື້ເອົາຜັກກາດ ເພື່ອມາເຮັດແກງ. ຕອນນີ້ເງິນກໍບໍ່ຄ່ອຍມີ ພວກເຮົາມີແຕ່ປາແດກກິ້ນໄຫ, ເກືອ ແລະ ໝາກເຜັດ ພວກເຮົາບໍ່ມີຫຍັງເປັນຕາກິນ ນອກຈາກນ້ຳມັນໝູ ບໍ່ຢາກກໍຕ້ອງໄດ້ກິນຕາມຍະຖາກຳນັ້ນລະ.

ຂໍໃຫ້ຟັງເລື່ອງທີ່ຂ້ອຍຈະເລົ່າໃຫ້ຟັງ ເພິ່ນຢາກໃຫ້ພວກເຮົາມີ ອາຫານການກິນ ແຕ່ຕ້ອງພາກັນຖີຈົກ ຖີຂວ້ານ ແລະ ເຮັດຮ້ວເຮັດ ສວນຄົວເອົາເອງ ພວກເຮົາກໍສຸມເຫື່ອແຮງເຮັດດ້ວຍຄວາມຕັ້ງໃຈ. ນອກ ຈາກນີ້ ກໍພາກັນໄປຫາປູ ຫາປາ ແລະ ເກັບຜັກຈາກສວນຄົວ ແຕມັນ ຍັງນ້ອຍຢູ່ ພວກເຮົາຮັກມັນຫຼາຍ ເພາະຢາກໃຫ້ມັນແກ່ ເພື່ອຈະໄດ້ແນວ ມັນໄວ້ປູກປີຕໍ່ໄປ ເພາະແນວພັນແມ່ນເພິ່ນເປັນຜູ້ເອົາມາໃຫ້. ພາຍຫຼັງ ສອງເດືອນ ສິ່ງເຫຼົ່ານີ້ກໍເໝືອນເອົາໜີໄກຈາກພວກເຮົາ ເພາະພວກເຮົາ ຕ້ອງໄປເປັນທະຫານຫຼວງແລ້ວ. ມື້ອື່ນເຊົ້ານີ້ ເພິ່ນຈະມາເອົາພວກເຮົາ ໄປ. ພາຍໃນບ້ານຈະແມ່ນງົວ ຄວາຍຜູ້ໃດກໍຕາມ ແມ່ນຈະຕ້ອງເອົາມາ ແບ່ງປັນກັນ ເຮືອນຊານບ້ານຊ່ອງທີ່ເຄີຍປຸກສ້າງກໍຈະບໍ່ໄດ້ຢູ່. ພວກ ເຮົາພາກັນຮ້ອງໄຫ້ໝົດຄືນ. ຄວາມທຸກຈົນ ແລະ ຄວາມທຸກທໍລະມານ ມາຢາມພວກເຮົາຄັ້ງແລ້ວຄັ້ງອີກ. ມາຕອນນີ້ ກໍເຖິງຍາມຈຳຈາກບ້ານ ເມືອງຈະເປັນບ່ອນຊົ້ນຮົ່ມຂອງງົວ ຄວາຍທີ່ຍັງເຫຼືອ. ໜ້າເວດທະນາ ແທ້ໆ ທີ່ພວກເຮົາຕ້ອງໄດ້ຈາກເຮືອນຊານ, ໄຮ່ນາ ແລະ ມູນມໍລະດົກ ຂອງພວກເຮົາໄປ. ທົ່ງນາແສນງາມ ຈະຮົກເຮື້ອກາຍເປັນປ່າເຫຼົ່າ ທົ່ງ ນາຈະຮົກເຮື້ອເປັນປ່າຊ້າງທາງເສືອ ໜ້າສົງສານທີ່ດິນດອນຕອນຫຍ້າ, ບວກໜອງທີ່ເຄີຍມີປູ ປາ ຊຶ່ງຄົນພາກັນມາລ້າງອາບກິນ ກໍຈະບໍ່ມີໃຜ ມາໃຊ້ອີກແລ້ວ. ສົງສານເດ ປູ ປາ ໜ່ໄມ້ ຊຶ່ງເຄີຍເກັບມາເປັນອາຫານ ກໍຈະບໍ່ມີໃຜຊອກຫາ. ສົງສານຕົ້ນໄມ້ກິນໝາກໃນສວນ ກໍໄຜ່ ກໍສ້າງ ໄພໃຫຍ່ ທີ່ລຽງລາຍອ້ອມບ້ານ. ເມື່ອຕາເວັນເຊົ້າວັນໃໝ່ຂຶ້ນມາ ຂ້າຕ້ອງ ໄດ້ຈາກລາທາງເທິນໄປໄກແສນໄກ. ມື້ໜ້າ ເພິ່ນຈະມາຮັບພວກເຮົາທີ່ ລາດແສນ ຂໍລາເດີ ບ້ານຊຽງດີ. ພວກເຮົາຈະບໍ່ມີວັນລືມເຈົ້າ ຕໍ່ໄປນີ້ ຂໍລາເດີ ເມືອງຊຽງຂວາງເອີຍ.



ແຕ້ມໂດຍ: ເດັກຍິງ ອາຍຸ 18 ປີ.

ໃນປີ 1967 ບ້ານພວກເຮົາໄດ້ສ້າງຕູບຢູ່ໃນປ່າ ແລະ ມີຂຸມຫຼົບໄພ ໃກ້ກັບເຫງົ້າກໍໄຜ່ເທິງພູ ຊຶ່ງເປັນບ່ອນທີ່ພວກເຮົາ ຈະສາມາດປົບໜີທັນ. ແຕ່ມາບໍ່ດົນ ສອງອ້າຍນ້ອງຂອງຄອບຄົວໜຶ່ງ ອອກໄປຕັດຟືນໃນປ່າ ແລະ ຖືກຍິນຍິງຕາຍພາບກັນທັນທີ. ພໍ່ແມ່ມີແຕ່ລູກຊາຍພຽງແຕ່ສອງຄົນນີ້ ແລະ ພວກເພິ່ນລ້ຽງໃນຂຸມດຽວກັບພວກເຮົາ. ຈັ່ງເປັນໜ້າສົງສານພວກເພິ່ນ ເພາະເພິ່ນເສຍໃຈຫຼາຍຈົນຄືກັບຄົນບ້າ ຍ້ອນວ່າ ລູກຊາຍທັ້ງສອງຄົນກໍມາຕາຍຈາກໄປຄືແນວນີ້.

ຍິນອາຍພິ່ນສາມລໍາມາຖິ້ມລະເບີດ

ອະດີດຄູບາ ອາຍຸ 69 ພັນສາ

ຂ້ອຍອາຍຸ 69 ປີແລ້ວ ແລະ ຢາກຢູ່ຢ່າງມີຄວາມສຸກ ແລະ ມີຈິດໃຈກວ້າງຂວາງ. ຮູບນີ້ ແມ່ນວັດຢູ່ ບ້ານຂ້ອຍສະໄໝກ່ອນ ຂ້ອຍເຄີຍໄດ້

ຊ່ວຍສ້າງວັດນີ້ແຕ່ຕອນອາຍຸ 16 ປີ ແລະ ຕອນນັ້ນ ກໍຍັງເປັນຈິວ ນ້ອຍຂອງວັດນີ້. ພາຍຫຼັງທີ່ຂ້ອຍສິກອອກມາ ຂ້ອຍກໍຍັງສືບຕໍ່ຊ່ວຍສ້າງ ວັດນີ້ຕໍ່ມາຕາມເຄີຍ. ການສ້າງວັດນີ້ ເລີ່ມແຕ່ປີ 1916 ແລະ ແລ້ວສຳ ເລັດໃນປີ 1930. ວັດນີ້ ຕັ້ງຢູ່ບ້ານກາງ, ເມືອງແປກ, ແຂວງຊຽງຂວາງ. ມັນເປັນວັດທີ່ໃຫຍ່ສົມຄວນ ພ້ອມທັງມີພະພຸດທະຮູບອົງໃຫຍ່ ແລະ ມີ ຄູບາອາຈານຈຳນວນຫຼາຍອາໄສຢູ່. ແຕ່ລະປີ ພວກເຮົາເຄີຍພາກັນຈັດ ງານບຸນຢ່າງນ້ອມຊື່ນຫຼາຍຄັ້ງ. ວັດນີ້ ໄດ້ສ້າງຄຸນງາມ ຄວາມດີ ແລະ ມີໂຮງຮຽນສອນພາສາປາລີ ຈັດຕັ້ງຂຶ້ນພາຍໃນວັດ.

ແຕ່ລະປີພວກເຮົາກໍມີການບູລະນະວັດໃນບ່ອນທີ່ເປ່ເພ ປົກກະຕິ ແມ່ນແຕ່ພາຍຫຼັງປີ 1962 ທີ່ວັດ ມີການເປ່ເພເປັນບາງສ່ວນ. ຕໍ່ມາກໍມີ ຍິນມາຖິ້ມລະເບີດໃສ່ບ້ານພວກເຮົາ ຕອນທຳອິດກໍຖິ້ມລຽບຕາມຖະໜົນ ແລະ ພວກເຮົາກໍຍັງສາມາດເຂົ້າໄປເຮັດບຸນຢູ່ວັດໄດ້ຢູ່ ເພາະບໍ່ຢາກພາ ກັນຊຸມນຸມກາງບ່ອນແປນ ຢ້ານຍິນເຫັນ ດັ່ງນັ້ນ ພວກເຮົາກໍພາກັນຂຸດ ຂຸມລີ້ໄພອ້ອມວັດ ເພື່ອເຮັດໃຫ້ພວກຜູ້ຍິງທີ່ນຳເຂົ້າປາອາຫານມາເຄມ ຄູບາສາມາດແລ່ນໄປລີ້ທັນເມື່ອຍິນມາຍິງ. ພວກເຮົາຍັງຂຸດຂຸມລຽບຕາມ ແຄມທາງ ຈາກບ້ານໄປຫາວັດ ເພື່ອໃຫ້ຊາວບ້ານລີ້ທັນເວລາສຸກເສີນ. ນີ້ແມ່ນແນວຄວາມຄິດອັນສະຫຼາດຂອງຄູບາອາຈານ.



ເຖິງຈະເຮັດແນວນັ້ນ ກໍ່ຍັງບໍ່ທັນປອດໄພເທື່ອ ເມື່ອມາຮອດເດືອນ 4 ຂອງປີ 1968 ພວກເຮົາສັງເກດເຫັນຍົນນ້ອຍແບບ L19 ມັນເຫັນຄູບາເອົາຜ້າຫົ່ມອອກຕາກແດດ ມັນກໍບິນມາຈົ້ງເບິ່ງດົນເຕີບ ແລ້ວມັນກໍສັ່ງຍົນມາຖິ້ມລະເບີດໃສ່. ຍົນອາຍພົ່ນ 3 ລຳ ມາພ້ອມກັນ ແລ້ວກໍຖິ້ມລະເບີດລົງໃສ່ວັດທັນທີ. ພວກເຮົາພາກັນຫຸບເຄື່ອງຂອງຈຳນວນໜຶ່ງແລ່ນລົງຂຸມ ເມື່ອໄປຮອດຂຸມ ລະເບີດກໍແຕກຢ່າງແຮງໃນເດີ່ນວັດ. ໃນຕອນນັ້ນມີເດັກນ້ອຍ 2 ຄົນ ກຳລັງຫາບອາຫານໄປວັດ. ພໍເຫັນຍົນຖິ້ມລະເບີດ ພວກເຂົາກໍຖິ້ມຫາບ ແລ້ວກໍແລ່ນລົງຂຸມທີ່ຢູ່ໃກ້ກັບວັດ ປານນັ້ນພວກເຂົາກໍເກືອບຕາຍ ເພາະມີຝຸ່ນ ແລະ ຄວັນລະເບີດທະລຸເຂົ້າໄປໃນຂຸມພວກເຂົາ ເຮັດໃຫ້ພວກເຂົາວິນຫົວ ແລະ ເຈັບໄຂ້. ຍົນຍັງສືບຕໍ່ຖິ້ມລະເບີດລຸ່ນຕິດ ເປັນເວລາໜຶ່ງຊົ່ວໂມງເຄິ່ງ ຈົນແນ່ໃຈວ່າ ວັດຖືກໄໝ້ກາຍເປັນກອງໄຟໃຫຍ່ພວກມັນຈຶ່ງເຊົາ ແລະ ບິນກັບຄືນ. ພວກເຮົາພາກັນຊ່ວຍຄູບາໃນການຂົນຍ້າຍເອົາສິ່ງຂອງອອກຈາກວັດ ແຕ່ໄຟຍັງແຮງຫຼາຍ ພວກເຮົາຈຶ່ງຊ່ວຍດຶງຄູບາອອກຈາກຂຸມລີ້ໄພໄດ້ຈຳນວນໜຶ່ງ.

ພວກເຮົາຈຳເປັນຕ້ອງໄດ້ປະວັດ ທີ່ພວກເຮົາໄດ້ສ້າງ ແລະ ຮັກສາມາເປັນເວລາຫຼາຍປີໃຫ້ເປັນຮ້າງ. ພວກເຮົາສຸດທີ່ໂສກເສົ້າເສຍໃຈ. ຫຼັງຈາກນັ້ນ ພວກເຮົາກໍ່ໄດ້ສ້າງວັດຢູ່ໃນປ່າ ພໍໃຫ້ຄູບາໄດ້ອາໄສຢູ່ຊົ່ວຄາວ. ເມື່ອນັບເບິ່ງຈຳນວນຂຸມລະເບີດ ລວມແລ້ວມີ 28 ຂຸມ ພາຍໃນວັດພ້ອມທັ້ງລູກປືນອີກຈຳນວນຫຼາຍ ເຊິ່ງເຮັດໃຫ້ວັດເສຍຫາຍເກືອບທັ້ງໝົດທັນທີ ມີແຕ່ເສດຊາກຈຳນວນໜຶ່ງທີ່ເຫຼືອຢູ່.


ພວກຊາວບ້ານທຸກຄົນແມ່ນເສຽໃຈຫຼາຍ ເພາະພວກເພິ່ນພາກັນສ້າງມາຫຼາຍປີ ຫຼັງຈາກນີ້ພວກເຮົາກໍລັ່ງເລໃຈວ່າ ຈະສ້າງວັດໃໝ່ ຫຼືບໍ່ ເພາະຖ້າສ້າງຂຶ້ນມາກໍຢ້ານຍົນມາຖິ້ມລະເບີດໃສ່ອີກ.

ພາບນີ້ແມ່ນກ່ຽວກັບຊີວິດຂອງຄູບາໃນເຂດຊຽງຂວາງ ຊຶ່ງເປັນເຂດສົງຄາມ. ຂ້ອຍເຫັນກັບຕາຕົນເອງ ມີຄູບາແກ່ອົງໜຶ່ງ ຊຶ່ງຖືກລະເບີດ ແລະ ບາດເຈັບໜັກ ເລືອດໄຫຼອອກມາເປື້ອນເຕັມຜ້າ ຄຸມຂອງເພິ່ນແດງເຕັມໄປໝົດ. ເພິ່ນຍັງຢູ່ໃນວັດ ແລະ ເຂົ້າຂຸມລີ້ໄພບໍ່ທັນ ເພາະຕອນນັ້ນ



ນັກແຕ້ມ : ແມ່ຍິງອາຍຸ 22 ປີ.

ຍິນມາຖິ້ມລະເບີດລົງໃສ່ ຖືກເພິ່ນພໍດີ ນອກນີ້ ກໍມີຊາວບ້ານຜູ້ໜຶ່ງ ທີ່ນັ່ງ ເຝົ້າຄູບາອົງນີ້ຢູ່. ບັນດາພວກຜູ້ເຖົ້າຜູ້ແກ່ ກໍມາສອດມືນ ໃຫ້ເພິ່ນກາມມໍ ລະນະພາບຂອງເພິ່ນພາໃຫ້ຊາວບ້ານມີຄວາມໂສກເສົ້ານຳເພິ່ນຫຼາຍ.



ແຕ້ມໂດຍ : ຍິງອາຍຸ 22 ປີ

ຢູ່ບ້ານຂອງຂ້ອຍມີຊາຍໜຸ່ມກຳລັງອອກໄປລ້ຽງຄວາຍໃນປ່າ. ຍິນພາກັນມາຖິ້ມລະເບີດລົງໃສ່ຖືກຄວາຍຕາຍທັນທີ ຊາຍໜຸ່ມແລ່ນໜີ ແຕ່ໄປບໍ່ທັນ ລະເບີດແຕກໃສ່ລາວຂາດເຄິ່ງ ເພາະຖືກທ່ອນແອວ ສົບຂອງ ລາວຖືກປະໄວ້ໃນສະພາບນີ້ ເປັນເວລາສອງວັນ.



ແຕ້ມໂດຍ : ຄົນອາຍຸ 27 ປີ

ໃນເຂດຊຽງຂວາງແມ່ນເຕັມໄປດ້ວຍບວກເລືອດ ແລະ ຄວາມ ເສຍຫາຍ. ຍິນມາຍິງ ແລະ ຖິ້ມລະເບີດ ທົ່ວທ້ອງຟ້າ ແລະ ພູຜາ ສົ່ງສຽງ ອຶກກະທຶກກ້ອງກັງວານຕະຫຼອດເວລາ. ພວກເຮົາຈຳເປັນຕ້ອງໄດ້ລີ້ຢູ່ ແຕ່ໃນຂຸມລີ້ໄພ. ມື້ໜຶ່ງ ຂ້ອຍໄດ້ເຫັນຄົນບາດເຈັບໃກ້ກັບປາກຂຸມ ແຕ ລາວເຈັບໜັກລຸກບໍ່ໄດ້ ຂ້ອຍຈຶ່ງໄປຊ່ວຍລາວ ແລະ ພາລາວໄປໂຮງໝໍ. ລາວຖືກສະເກັດລະເບີດທີ່ຂ້າງ ແລະ ເສຍເລືອດຫຼາຍ.



ນັກແຕ້ມ : ນິລະນາມ

ທ້ຽສາມຄົນນີ້ເປັນຫ່ວງນຳສິ່ງຂອງໆພວກເຂົາ ເພາະຖ້າຖືກໄຟໄໝ້ແລ້ວ ໃນອະນາຄົດຈະຢູ່ກິນແນວໃດ ຖ້າບໍ່ມີເຂົ້າກິນ. ແມ່ ແລະ ລູກຊາຍທ້ຽສາມແລ່ນອອກຈາກປາກຖ້ຳ ຊຶ່ງພວກເຂົາລີ້ຢູ່ ຈຸດໝາຍພວກເຂົາແມ່ນຈະແລ່ນໄປຫາເຮືອນທີ່ກຳລັງຖືກໄໝ້ ເພື່ອຍາດເອົາເຄື່ອງຂອງທີ່ຍັງເຫຼືອ ແຕ່ຊາຕາກຳພວກເຂົາກໍມາຈົບລົງຢ່າງອາໜາດ ເມື່ອຍົນກັບມາຖິ້ມລະເບີດລູກໃຫຍ່ລົງໃສ່ພວກເຂົາ ເຖິງວ່າພວກເຂົາຈະລະມັດລະວັງທີ່ສຸດແລ້ວ ແຕ່ສະເກັດລະເບີດໃຫຍ່ຖືກພວກເຂົາທ້ຽສາມຄົນ ຈຶ່ງມາເສຍຊີວິດລົງສັງເວີຍ ໃຫ້ກັບຄວາມກະຫາຍຂອງສົງຄາມຈົນໄດ້. ນີ້ແມ່ນໝາກຜົນຂອງສົງຄາມທຳລາຍ ພາໃຫ້ຄົນລົ້ມຕາຍ ໂດຍບໍ່ມີເຫດຜົນຫຍັງເລີຍ.



ນັກແຕ້ມ : ນິລະນາມ

ນີ້ແມ່ນພາບແມ່ຍິງແກ່ຄົນໜຶ່ງ ຊຶ່ງກຳລັງເຂົ້າໄປໃນບ້ານ ເພື່ອໄປເອົາເຂົ້າມາລ້ຽງລູກ ແລະ ຄອບຄົວໃນຖ້ຳ ແຕ່ໃນມື້ນັ້ນຍົນມາຖິ້ມລະເບີດລົງ ເຮັດໃຫ້ເພິ່ນຕ້ອງຈາກຄອບຄົວໄປຢ່າງບໍ່ມີວັນຈະຫວນກັບຄືນມາໄດ້.

ທັງສອງຜົວເມຍຕາຍພ້ອມກັນໃນທີ່ງນາຍ້ອນຍິນມາຍິງ

ໂດຍ ແມ່ຍິງໄວ 22 ປີ

ເຂດຊຽງຂວາງເປັນດິນແດນທີ່ອຸດົມສົມບູນໄປດ້ວຍພູຜາ ປ່າດົງ ໄຮ່ນາ ຮ້ອສວນ ແລະ ມີອາກາດທີ່ບໍລິສຸດ. ປະຊາຊົນລາວພາກັນຢູ່ກິນໃນທີ່ນີ້ມາເປັນເວລາຍາວນານ. ປະຊາຊົນທຸກຄົນ ລ້ວນແຕ່ເປັນຊາວນາ ແຕ່ເຂດນີ້ ການພັດທະນາບໍ່ຄືບ່ອນອື່ນ ເພາະດິນແດນແຫ່ງນີ້ບໍ່ມີສິ່ງອື່ນ ນອກຈາກສົງຄາມ ທີ່ພາໃຫ້ປະຊາຊົນລາວພາກັນທຸກທໍລະມານ ແລະ ທຸກຍາກປາກໝອງ. ເມື່ອຄິດເຖິງອະດີດ ຂ້ອຍບໍ່ເຄີຍລືມດິນແດນແຫ່ງນີ້ ຍ້ອນແນວນັ້ນ ຂ້ອຍຈະຂໍພັນລະນາຊີວິດເກົ່າຄາວຫຼັງ ແລະ ສາເຫດທີ່ພາໃຫ້ຊີວິດການເປັນຢູ່ມີການປ່ຽນໄປຕາມການເວລາ.

ຂ້ອຍຍັງຈື່ຈຳໄດ້ວ່າ ໃນປີ 1957 ໃນຄາວທີ່ລັດຖະບານວຽງຈັນ ຍັງປົກຄອງຊຽງຂວາງ ຊຶ່ງໃນຕອນນັ້ນ ປະຊາຊົນໃຜກໍມີແຕ່ຄວາມສຸກ ເພາະຍັງບໍ່ທັນມີສົງຄາມໃດໆເທື່ອ ພວກເຮົາບໍ່ມີເຄື່ອງຈັກ ເຄື່ອງລາງ ແລະ ສິ່ງໃດທີ່ທັນສະໄໝເທື່ອ ເພາະພວກເຮົາໃຜໆກໍເປັນຊາວນາ. ຄອບຄົວຂອງຂ້ອຍ ແລະ ເພື່ອນຊາວນາ ໄດ້ອາໄສໃນດິນແດນແຫ່ງນີ້ ແລະ ທຳມາຫາກິນດ້ວຍເຫື່ອແຮງຂອງພວກເຮົາເອງ. ສະນັ້ນ ເຖິງວ່າຈະບໍ່ມີເຄື່ອງຈັກເຄື່ອງລາງ, ໂຮງຈັກໂຮງງານ ກໍບໍ່ເປັນຫຍັງ ເພາະພວກເຮົາເປັນພຽງຊາວໄຮ່ຊາວນາ ຫາລ້ຽງຊີບຂອງພວກເຮົາເອງຕະຫຼອດຊີວິດ ແຕ່ມັນເໝືອນມີສິ່ງດົນບັນດານ ເມື່ອເຖິງເວລາທີ່ພາໃຫ້ຊີວິດຂອງພວກເຮົາກ້າວໄປສູ່ຄວາມອັບຈົນ.

ໃນປີ 1958 ມີການຄ້າຂາຍກັນຢ່າງຄຶກຄື້ນ ຊຶ່ງສ່ວນຫຼາຍສິນຄ້າແມ່ນມາຈາກວຽງຈັນ ເຖິງວ່າ ພາຍໃນທ້ອງຖິ່ນຈະມີການຜະລິດເຂົ້າປາອາຫານເອົາເອງກໍຕາມ. ຄົນລາວເຮົາພາກັນເຮັດໄຮ່ ເຮັດນາ ແລະ ປູກຜັກ ເພື່ອລ້ຽງຊີບ ໃນຈຳນວນນີ້ກໍມີໜ້ອຍຄົນ ທີ່ຈະບໍ່ມີໄຮ່ນາເປັນຂອງຕົນເອງ.

ພ້ອມດຽວກັນກັບບັນດາສິ່ງດີໆທັງຫຼາຍ ກໍຍັງມີສິ່ງບໍ່ດີຫຼາຍຢ່າງຕາມມາ. ໃນເມືອງນີ້ ບໍ່ມີໂຮງຈັກ ໂຮງງານ, ບໍ່ມີເຄື່ອງຈັກເຄື່ອງລາງ

ເຮືອນຊານບ້ານຊ່ອງກໍສ້າງຂຶ້ນມາແບບບູຮານ. ຊາວນາຮັ່ງມີຈຳນວນໜຶ່ງ ມີນາຫຼາຍແຫ່ງ ແລະ ຈ້າງຄົນເຮັດໃຫ້ພວກເຂົາ. ພວກຄົນລວຍຄິດຫາແຕ່ຜົນປະໂຫຍດໃສ່ຕົນເອງ ໃນການສ້າງຄວາມລ້ຳລວຍ ແລະ ຫາວິທີການບັງຄັບໃຫ້ຊາວນາປະດົນໄຮ່ ດິນນາຕົນເອງ ແລ້ວກາຍມາເປັນລູກນາຂອງພວກເຂົາ. ໃນປີ 1957 ແລະ 1958 ພວກຊາວຈີນທີ່ຮັ່ງມີຮວມຫົວກັບຂ້າລາຊະການຊັ້ນຜູ້ໃຫຍ່ ໃນການອອກຄຳສັ່ງໃຫ້ເອົາສິນຄ້າຈາກວຽງຈັນໄປຂາຍໃຫ້ປະຊາຊົນ. ໃນເມື່ອເຫັນວ່າມີສິນຄ້າມາຫຼາຍ ກໍມີຫຼາຍຄົນປະທົ່ງໄຮ່ ທົ່ງນາມາຮ່ວມຫົວກັນຄ້າຂາຍ ໂດຍສະເພາະແມ່ນຜູ້ທີ່ເຂົ້າໃຈຜິດກັບສິ່ງຫຼອກລວງເຫຼົ່ານີ້ ດັ່ງນັ້ນ ຊາວນາພວກນີ້ ຈຶ່ງພາກັນປະທົ່ງໄຮ່ ທົ່ງນາ ແລະ ສວນໝາກໄມ້ ໄປເຮັດທຸລະກິດແບບໃໝ່.

ໃນໄລຍະນີ້ ມີຫຼາຍຄົນຕິດຢາຝິ່ນ ເພາະໂຮງໝໍກໍຢູ່ໄກຈາກເຂດບ້ານນອກ ອັນທີສອງແມ່ນຍ້ອນວ່າ ພວກເຂົາບໍ່ມີເງິນພໍຈະຈ່າຍຄ່າປິ່ນປົວມັນເມື່ອເຂົ້າໂຮງໝໍປິ່ນປົວ. ມີຄົນທີ່ຂ້ອຍຮູ້ຈັກຈຳນວນໜຶ່ງ ທີ່ໄປເຂົ້າໂຮງໝໍເປັນເດືອນ ຫຼື ສອງເດືອນ ເມື່ອອອກໂຮງໝໍມາກໍບໍ່ມີເງິນຈ່າຍຄ່າປິ່ນປົວ ຈຳເປັນຕ້ອງໄດ້ຂາຍງົວ ຂາຍຄວາຍ ເພື່ອຈ່າຍຄ່າປິ່ນປົວໃນເວລາຢູ່ໂຮງໝໍ ດັ່ງນັ້ນ ໃນປີຕໍ່ມາ ກໍບໍ່ສາມາດເຮັດໄຮ່ ທຳນາ ເພາະບໍ່ມີສັດລາກແກ່. ຂ້ອຍໄດ້ເຫັນສະພາບການເຫຼົ່ານີ້ດ້ວຍຕາຕົນເອງແທ້ໆ ດັ່ງນັ້ນ ຈຶ່ງພາໃຫ້ມີການລັກເລັກຂະໂມຍນ້ອຍ, ມີການປຸ້ນຈີ້, ມີການສໍ້ໂກງ, ມີຄົນຂີ້ຄ້ານມັກງ່າຍ ແລະ ມີແມ່ຈ້າງນາງເລງຈຳນວນຫຼວງຫຼາຍເກີດຂຶ້ນຕາມມາ. ຍ້ອນມີການອະນຸຍາດໃຫ້ຫຼິ້ນການພະນັນ ແລະ ມີການຊື້ເລກຂາຍເບີເຖື່ອນ ກໍພາໃຫ້ມີຄວາມວຸ່ນວາຍເກີດຂຶ້ນ. ເມື່ອເສຍເງິນຈາກການຫຼິ້ນການພະນັນ, ການຊື້ເລກ ຊື້ຫວຍ ກໍເຮັດໃຫ້ມີບັນຫາເກີດຂຶ້ນໃນຄອບຄົວ. ເມື່ອກັບມາເຮືອນກໍມີການຕົບລູກ ຕີເມຍ ແລະ ມີການປະຮ້າງຫຼາຍຂຶ້ນຍ້ອນທຶນຕ່ຳກັນບໍ່ໄດ້ ແລະ ພວກຜູ້ຍິງກໍບໍ່ມີສິດອຳນາດ ເທົ່າທຽມກັບຜູ້ຊາຍ.

ໃນ 1960 ທ່ານ ກອງແລ ໄດ້ເຂົ້າໄປປົດປ່ອຍເມືອງຊຽງຂວາງ ແລະ ເຮັດໃຫ້ຊີວິດການເປັນຢູ່ມີການປ່ຽນແປງໄປຈຳນວນໜຶ່ງ. ຫຼືອາດ

ຈະເວົ້າວ່າ ເກືອບບໍ່ຕ່າງເກົ່າຫຼາຍປານໃດ. ແຕ່ເຖິງຢ່າງໃດກໍມີການປ່ຽນແປງໄປຢູ່ດີ. ສິ່ງທີ່ເຫັນຈະແຈ້ງກໍແມ່ນວ່າ ພວກເຮົາບໍ່ຈຳເປັນຕ້ອງມີການເສຍພາສີ ແລະ ມີຄວາມສະດວກໃນການໃຊ້ຊີວິດຕາມໃຈມັກ. ພັກການເມືອງຂອງກອງແລ ໄດ້ມີການສ້າງສາໂຮງໝໍຈຳນວນຫຼວງຫຼາຍຂຶ້ນ. ໃນດ້ານກະສິກຳ ແມ່ນມີການສົ່ງເສີມໃຫ້ມີການຜະລິດຫຼາຍຂຶ້ນ. ພວກເຂົາພາກັນກໍ່ສ້າງທາງຫຼາຍເສັ້ນ, ສ້າງເມືອງຄັງໄຂ, ນອກນີ້ ກໍມີການນຳເອົາໄຟຟ້າເຂົ້າເມືອງຄັງໄຂ ແລະ ເມືອງຊຽງຂວາງ. ໃນເວລາດຽວກັນກໍມີຍານພາຫະນະທີ່ໄປມາຫຼາຍຂຶ້ນ ແລະ ຫຼາຍຄົນກໍບໍ່ຈຳເປັນຕ້ອງຈ່າຍຄ່າລົດລາງພາຫະນະຄືແຕ່ກ່ອນ. ໃນເມື່ອກ່ອນຖ້າຂີ່ລົດກໍຕ້ອງຈ່າຍ ແລະ ຖ້າຢູ່ເຮືອນເຂົາ ກໍຕ້ອງໄດ້ເຊົ່າ ແຕ່ຕອນນີ້ ບໍ່ມີແລ້ວ. ນີ້ລະຄືການປ່ຽນແປງທີ່ເຫັນໄດ້ຈະແຈ້ງ. ສິນຄ້າກໍມີມາຈາກຫຼາຍບ່ອນຫຼາຍທີ່ ແລະ ປະຊາຊົນກໍມີເສລີພາບ ໃນການໄປມາຫາສູ່ກັນຢ່າງເສລີພາຍໃນທົ່ງໄຫຫີນ ໂດຍບໍ່ມີການຈຳກັດຮັດແຄບ. ພວກຜູ້ເຖົ້າຜູ້ແກ່ ແລະ ຊາຍໜຸ່ມຍິງສາວກໍພາກັນມ່ວນຊື່ນໃນການຫຼິ້ນບຸນ ແລະ ມີເສລີພາບໃນການເຂົ້າວັດຟັງທຳ. ນີ້ແມ່ນການປ່ຽນແປງ ເຖິງວ່າ ຈະບໍ່ຕ່າງກັບແຕ່ກ່ອນເມື່ອຫຼັງຫຼາຍປານໃດກໍຕາມ.

ໃນເດືອນສີ່ ປີ 1963 ຊີວິດການເປັນຢູ່ຂອງພວກເຮົາກໍມີການປ່ຽນແປງອີກ ເມື່ອເກີດມີໄພມາສູ່ປະຊາຊົນໃນແຂວງຊຽງຂວາງ. ພັກຂອງ ທ່ານ ກອງແລ ແລະ ພັກແນວລາວຮັກຊາດແຍກກັນອີກ ແລະ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການເດີນທາງຈາກແຂວງຊຽງຂວາງ ແລະ ເຂດຄັງໄຂ ເພາະທັງສອງຝ່າຍບໍ່ລົງລອຍກັນ. ເຂດທົ່ງໄຫຫີນ, ນັບແຕ່ເມືອງສຸຍ, ເມືອງຄູນ ແມ່ນກອງແລເປັນຜູ້ຄວບຄຸມ ສ່ວນເຂດ ຊຽງຂວາງ, ເມືອງຄັງໄຂ ແລະ ໂພນສະຫວັນ ແມ່ນຝ່າຍແນວລາວຮັກຊາດເປັນຜູ້ຄວບຄຸມ. ໃນຕອນນີ້ ພວກປະຊາຊົນຕ່າງກໍແຍກຍ້າຍກັນໄປຄົນລະທິດລະທາງ. ຈຳນວນໜຶ່ງກໍໄປຂຶ້ນກັບກອງແລ ແລະ ສ່ວນໃຫຍ່ກໍຍັງຢູ່ກັບບ້ານເກົ່າເມືອງເດີມຂອງຕົນ ເພາະພວກເຂົາບໍ່ຢາກປະທີ່ງໄຮ່ທີ່ງນາ, ງົວ, ຄວາຍ ແລະ ຖິ່ນຖານ ທີ່ພວກເຂົາພາກັນທຳມາຫາກິນ

ມາຫຼາຍຟ້າຫຼາຍປີ.

ໃນປີ 1964 ພັກຂອງທ່ານ ກອງແລ ໄດ້ໜີຈາກທົ່ງໄຫຫີນ ແລະ ພັກແນວລາວຮັກຊາດເຂົ້າມາປົກຄອງແທນ ພວກເພິ່ນໄດ້ມີການນຳສະເໜີວິທີການປົກຄອງແບບໃໝ່ ແລະ ມີແນວທາງໃນການພັດທະນາເສດຖະກິດ, ການສຶກສາ, ສາທາລະນະສຸກ ແລະ ສັງຄົມແບບໃໝ່. ໃນຕອນນັ້ນ ຂ້ອຍຍັງເປັນສາວ ນ້ອຍຂົ້ນໃໝ່ ສັງເກດວ່າ ທີ່ຜ່ານມາແມ່ນມີອັນບໍ່ດີ ເພາະພວກຜູ້ຊາຍແມ່ນມີການດູຖູກເພດຍິງ ວ່າເປັນເພດອ່ອນແອ. ແຕ່ພາຍຫຼັງທີ່ພວກແນວລາວຮັກຊາດມາປົກຄອງ, ຖ້າຜູ້ໃດຫາກຍັງມີການຈຳແນກແມ່ນຈະໄດ້ຮັບໂທດ.

ປະເດັນໜຶ່ງກ່ຽວກັບແມ່ຍິງແມ່ນ: ພາຍໃຕ້ການປົກຄອງຂອງແນວລາວຮັກຊາດ ແມ່ນມີການປ່ຽນແປງທາງດ້ານຈິດຕະສາດ ເຊັ່ນ: ເພິ່ນສອນວ່າ ຜູ້ຍິງກໍມີຄວາມເກັ່ງກ້າສາມາດທຽມທັນກັບເພດຊາຍ ຕົວຢ່າງ: ໃນເມື່ອກ່ອນທີ່ຂ້ອຍໄປໂຮງຮຽນ ພວກຜູ້ເຖົ້າກໍບໍ່ເຫັນດີນຳ ພວກເພິ່ນເວົ້າວ່າ ຈະຮຽນໄປເຮັດຫຍັງ ຮຽນໄປແລ້ວກໍບໍ່ໄດ້ເປັນເຈົ້າໃຫຍ່ນາຍໂຕ ພວກທີ່ຈະເປັນເພິ່ນມີແລ້ວ ສ່ວນໃຫຍ່ກໍ່ແມ່ນລູກຫຼານພວກຂຸນນາງ ແລະ ຜູ້ທີ່ຮັ່ງມີເທົ່ານັ້ນ.

ແຕ່ພວກແນວລາວຮັກຊາດເວົ້າວ່າ ເພດຍິງກໍຕ້ອງມີການສຶກສາເທົ່າທຽມກັບເພດຊາຍ ແລະ ເພດຍິງ ກໍມີສິດພິເສດເທົ່າທຽມກັນທຸກຢ່າງ ບໍ່ອະນຸຍາດໃຫ້ເພດຊາຍດູຖູກເພດຍິງຄືແຕ່ກ່ອນ. ເພດຍິງ ກໍສາມາດອອກແຮງງານຄືກັບເພດຊາຍໄດ້ ຕົວຢ່າງ: ໃນເມື່ອກ່ອນ ຂ້ອຍກໍໄດ້ຊ່ວຍພໍ່ແມ່ຄາດໄຮ່ ໄຖນາ ປູກຜັກ ປູກຫຍ້າ ຄືກັບຜູ້ຊາຍ. ບໍ່ໃຫ້ຜິວປະຮ້າງເມຍ. ແຕ່ສິ່ງທີ່ຂ້ອຍມັກທີ່ສຸດແມ່ນ ບໍ່ອະນຸຍາດໃຫ້ຜູ້ຍິງ ເປັນແມ່ຈ້າງນາງເລາ ບໍ່ໃຫ້ເປັນຄົນຂີ້ລັກນັກປຸ້ນ ຫຼື ເປັນຄົນຂີ້ຄ້ານມັກງ່າຍນັ່ງຢູ່ນອນກິນ. ພວກແນວລາວຮັກຊາດ ສອນໃຫ້ທຸກຄົນເປັນຄົນດີ. ແຕ່ກ່ອນກໍ ມີຄົນຂໍທານ ແລະ ມີຜູ້ທຸກຍາກ ແຕ່ມາຕອນນີ້ ແມ່ນບໍ່ມີອີກແລ້ວ. ພວກເພິ່ນໄດ້ຊຸກຍູ້ໃຫ້ຜົວເມຍຮັກແພງກັນ ຜູ້ຍິງກໍສາມາດຊ່ວຍວຽກເພດຊາຍ ແລະ ຜູ້ຊາຍກໍຊ່ວຍວຽກເພດຍິງໄດ້ສະເໝີກັນ. ເທົ່າທີ່ຂ້ອຍເຫັນມາ

ຕອນນີ້ ຜົວເມຍກໍບໍ່ໄດ້ວິວາດຜິດຖຽງກັນອີກ. ພວກແມວລາວເຮັດໃຫ້ເພດຍິງ ແລະ ເພດຊາຍເທົ່າທຽມກັນ.

ມາຕອນນີ້ ສັງຄົມມີການປ່ຽນແປງຈາກແບບເກົ່າ ມາເປັນແບບໃໝ່ ດັ່ງຈະເຫັນໄດ້ວ່າ ພວກນາຍຄູ, ນາຍໝໍໃໝ່ ທີ່ຝຶກອົບຮົມມາແມ່ນມີແຕ່ເພດຍິງ ພວກເພິ່ນໄດ້ຫັນປ່ຽນຈາກລະບົບເກົ່າທີ່ມີຄວາມທຸກຍາກມາເປັນລະບົບໃໝ່ ດັ່ງຈະເຫັນໄດ້ວ່າ ເພິ່ນໄດ້ເຮັດໃຫ້ຜູ້ທີ່ມີນາຫຼາຍ ກໍແບ່ງໃຫ້ຜູ້ບໍ່ມີໄດ້ເຮັດ.

ມີຕົວຢ່າງໜຶ່ງ ຊຶ່ງມີຜົວເມຍເຖົ້າຄູ່ໜຶ່ງ ຊຶ່ງບໍ່ມີລູກຢູ່ນຳ ເຂົາເຈົ້າເປັນຄົນຂໍທານ ແລະ ບໍ່ມີເຮືອນຊານຢູ່. ພາຍຫຼັງທີ່ແມວລາວຮັກຊາດເຂົ້າມາ ເພິ່ນໄດ້ມີການຊ່ວຍເຫຼືອ. ໃນປີ 1965 ພວກເຮົາພາກັນສ້າງເຮືອນໃຫ້ຄູ່ຜົວເມຍນີ້ຢູ່ ແລະ ຊ່ວຍໃນການປູກເຂົ້າ ເພາະພວກເພິ່ນບໍ່ສາມາດຊ່ວຍຕົນເອງໄດ້. ຫຼັງຈາກນັ້ນ ທ່ານໝໍໄດ້ເອົາຜູ້ເປັນຜົວໄປປິ່ນປົວຢູ່ໂຮງໝໍເປັນເວລາ 4 ເດືອນ ເພື່ອໃຫ້ລາວເລີກການຕິດຢາຝິ່ນ ເມື່ອລາວກັບມາ ລາວກໍມີຄວາມເບີກບານມ່ວນຊື່ນ.

ຜູ້ເຖົ້າຜູ້ນີ້ເລົ່າໃຫ້ພວກເຮົາຟັງວ່າ ໃນເມື່ອກ່ອນລາວກໍມີລູກຊາຍຜູ້ໜຶ່ງ. ໃນຕອນອາຍຸປະມານ 45 ປີ ລາວໄດ້ລົ້ມເຈັບ ຕ້ອງໄດ້ໄປນອນໂຮງໝໍ. ຫຼັງຈາກຢູ່ໂຮງໝໍເປັນເວລາ 6 ເດືອນ ລາວກໍບໍ່ທັນຫາຍດີຈາກການເຈັບເປັນ ແຕ່ກໍຕ້ອງໄດ້ອອກ. ຈາກນັ້ນລາວຕ້ອງໄດ້ຂາຍງົວ, ຄວາຍ 4 ໂຕ ເພື່ອຈ່າຍຄ່າປິ່ນປົວ ແຕ່ຍັງບໍ່ພໍ ລາວຈຶ່ງໄດ້ສົ່ງລູກໄປເຮັດວຽກນຳຝະລັ່ງ ເພື່ອຫາເງິນຕື່ມ. ແຕ່ທາງການໄດ້ສົ່ງລູກຂອງລາວເຂົ້າເປັນທະຫານ. ຈາກນັ້ນມາ ລາວກໍບໍ່ໄດ້ຮັບຂ່າວຄາວຈາກລູກລາວເລີຍ ລາວສູນເສຍລູກໄປແບບບໍ່ມີວີ່ແວວ. ຕໍ່ມາລາວກໍກາຍເປັນຄົນຂໍທານ ເພື່ອຫາກິນລ້ຽງປາກທ້ອງ. ເຖິງວ່າລາວຈະມີນາ ແຕ່ກໍບໍ່ມີເຫື່ອແຮງຈະສັບຊ່າວມັນໄດ້ ເພາະຍັງບໍ່ຫາຍດີ ລາວຕ້ອງກິນຢາຝິ່ນເພື່ອໃຫ້ພໍຢູ່ໄດ້ ແຕ່ເມື່ອກິນໄປດົນກໍຕິດຢາ. ໃນປີ 1966 ລາວໄດ້ເລີ່ມຊີວິດໃໝ່ ເພາະພວກຊາວນາໄດ້ມີແນວຄິດໃໝ່ໄປສູ່ຍຸກໃໝ່. ພວກເຂົາໄດ້ສ້າງເຮືອນ ເຮັດນາຊ່ວຍ ເພື່ອໃຫ້ມີຜົນສຳເລັດ ແລະ ບໍ່ໃຫ້ລາວອຶດຫິວ ແລະ ອອກຫາຂໍ

ທານອີກ. ຕອນນີ້ ລາວກໍທາຍຈາກການເຈັບເປັນແລ້ວ. ລາວສຸດທີ່ດີໃຈ ແຕ່ວ່າລາວຍັງກິນແໜງຢູ່ຢ່າງໜຶ່ງ ຖ້າລາວທາກທັນປ່ຽນຊີວິດໄດ້ກ່ອນໜ້ານີ້ ລາວກໍຄົງບໍ່ສູນເສຍລູກຊາຍຂອງລາວໄປ.

ເລື່ອງນີ້ ເປັນແບບຢ່າງໃຫ້ພວກເຮົາໄດ້ຮຽນຮູ້ ໃຜໆກໍຮູ້ເລື່ອງກ່ຽວກັບຄູ່ຜົວເມຍຄູ່ນີ້ດີ ເພາະມັນເປັນເລື່ອງຈິງ ທີ່ເຮັດໃຫ້ຊີວິດທີ່ທຸກຍາກ ກາຍມາມີຄວາມສຸກ ແລະ ຂ້ອຍເອງກໍໄດ້ເຫັນກັບຕາ. ແຕ່ເລື່ອງລາວ ແສນເສົ້າກໍຍັງເຂົ້າມາຈົນໄດ້. ມີມື້ໜຶ່ງຍິນມາຍິງ ແລະ ເຮັດໃຫ້ສອງ ຜົວເມຍແກ່ຄູ່ນີ້ຕ້ອງມາຕາຍໄປພ້ອມໆກັນ. ທັງຜົວ ແລະ ເມຍມາຕາຍ ແບບອາໜາດໃນກາງທົ່ງນາ ຍ້ອນຍິນຍິງ. ຂ້ອຍເສຍໃຈຮ້ອງໄຫ້ດ້ວຍ ຄວາມອາໄລນຳພວກເພິ່ນ ຖ້າວ່າ ພວກເພິ່ນຍັງບໍ່ຕາຍກໍຄົງໄດ້ມາພ້ອມກັບພວກເຮົາ.

ຜູ້ຜົວມີອາຍຸປະມານ 53 ປີ ແລະ ເມຍລາວກໍປະມານ 48 ປີ ເຮືອນຂອງລາວຕັ້ງຢູ່ແຄມທາງເລກ 7, ບ້ານໄຂ ແລະ ຢູ່ຕົມພູສັນ ລາວ ເສຍຊີວິດໃນເດືອນກັນຍາ 1968.

ບັດນີ້ ຂ້ອຍຂໍເລົ່າຊີວິດໃນອະດີດຂອງຂ້ອຍເອງ. ຕອນຂ້ອຍຍັງຢູ່ບ້ານ ແມ່ນມີຂໍ້ຫຍຸ້ງຍາກຫຼາຍໃນການຮຽນ ເພາະວ່າ ຂ້ອຍເປັນຜູ້ຍິງ ແລະ ຕ້ອງທົນທຸກທໍລະມານຫຼາຍປະການ. ຕອນນັ້ນ ໃນເວລາໄປໂຮງຮຽນ ຂ້ອຍກໍຕ້ອງມີຄວາມອົດທົນຢ່າງສູງ ເພາະເປັນລູກຊາວນາຊົນນະບົດທຳມະດາ ແຕ່ຂ້ອຍສາມາດໄປໂຮງຮຽນໄດ້ແຕ່ບາງຄັ້ງຄາວ ເພາະຂ້ອຍເປັນເອື້ອຍກົກຂອງຄອບຄົວ ແລະ ຈຳເປັນຕ້ອງໄດ້ຊ່ວຍງານພໍ່ແມ່ນຳອີກ.

ໂຮງຮຽນຂອງຂ້ອຍຕັ້ງຢູ່ໃກ້ກັບເຮືອນນາຍບ້ານ ມັນເປັນໂຮງຮຽນນ້ອຍໆ ຂ້ອຍເຂົ້າຮຽນໃນປີ 1957. ໃນຕອນນັ້ນ ມີນັກຮຽນຜູ້ຊາຍຫຼາຍກວ່າຜູ້ຍິງ, ມີຜູ້ຊາຍປະມານ 40 ຄົນ ສ່ວນຜູ້ຍິງມີແຕ່ 6 ຄົນ. ໃນຕອນນັ້ນຜູ້ຍິງແມ່ນເກືອບບໍ່ມີສິດໄດ້ເຂົ້າຮຽນ ແຕ່ຂ້ອຍກໍຕັດສິນໃຈຮຽນໃຫ້ໄດ້.

ຫຼັງຈາກຂ້ອຍຮຽນມາໄດ້ 4 ປີ ກອງແລກໍເຂົ້າມາຕີ ແລະ ຢຶດເອົາ

ບ້ານພວກເຮົາ ດັ່ງນັ້ນ ຂ້ອຍຈຳຕ້ອງເຊົາຮຽນເປັນເວລາ 2 ປີ ຈົນກວ່າ ຝ່າຍປະເທດລາວເຂົ້າມາປົດປ່ອຍບ້ານຂອງພວກເຮົາອີກຄັ້ງໜຶ່ງ. ຫຼັງຈາກນັ້ນ 6 ເດືອນ ນາຍບ້ານຄິດວ່າ ຖ້າຂ້ອຍໄປຮຽນເປັນຄູຢູ່ຄັງໄຂຄົງຈະດີກວ່າ. ການຮຽນແມ່ນໄປຮຽນທີ່ໂຮງຮຽນປະຊາສຶກສາ ໝາຍຄວາມວ່າ ໄປເປັນຄູສອນພວກຜູ້ເຖົ້າ ຜູ້ແກ່ ໃຫ້ສາມາດອ່ານອອກ ຂຽນໄດ້. ຂ້ອຍໄປຮຽນຢູ່ຄັງໄຂ ເປັນເວລາປີເຄິ່ງ. ແຕ່ກ່ອນນີ້ ການຮຽນທຸກຢ່າງກໍຮຽນເປັນພາສາຝະລັ່ງ. ຂ້ອຍຄິດວ່າ ການຮຽນປີປາຍທີ່ເປັນພາສາລາວ ແມ່ນໄດ້ດີກວ່າການຮຽນເປັນພາສາຝະລັ່ງຕັ້ງ 3 ປີ. ຂ້ອຍເອງກໍ່ບໍ່ມີບັນຫາກັບຄອບຄົວໃນເວລາຮຽນຢູ່ຄັງໄຂ ເພາະພີ່ນ້ອງພາກັນຊ່ວຍຄອບຄົວໃນການເຮັດນາ ເພື່ອວ່າຢາກໃຫ້ຂ້ອຍໄດ້ເປັນນາຍຄູສອນ. ການຮຽນໃນເທື່ອນີ້ ແມ່ນມີຄວາມສະດວກສະບາຍກວ່າແຕ່ກ່ອນ ເພາະບໍ່ຈຳເປັນຕ້ອງຮຽນເປັນພາສາຝະລັ່ງ. ໃນລະບົບໃໝ່ນີ້ ພວກເຮົາພາກັນຮຽນເປັນພາສາລາວ ພາຍຫຼັງທີ່ຮຽນຈົບ ຂ້ອຍກໍກັບມາຢາມບ້ານ. ໃນໄລຍະພັກແລ້ງ 15 ວັນ ພວກຂ້ອຍ ແລະ ຜູ້ຊ່ວຍໄດ້ຈັດຕັ້ງກຸ່ມຮຽນໜັງສືຂຶ້ນ ມີໜ່ວຍຜູ້ຊາຍ 18 ຄົນ ແລະ ໜ່ວຍຜູ້ຍິງ 24 ຄົນ. ຜູ້ຊ່ວຍຂ້ອຍເປັນຜູ້ຊາຍ ຂ້ອຍຈຶ່ງໃຫ້ລາວສອນຜູ້ຍິງ ສ່ວນຂ້ອຍແມ່ນສອນຜູ້ຊາຍ. ໃນຕອນຕົ້ນ ການສອນກໍມີຄວາມຫຍຸ້ງຍາກ ເພາະບໍ່ມີໂຮງຮຽນປົກກະຕິ ບາງຄັ້ງກໍສອນຢູ່ກັບເຮືອນ ຫຼື ເວລາອອກໄປເຮັດນາ ຕອນພັກຜ່ອນກໍຈັດຕັ້ງສອນໜັງສື.

ປີ 1968 ການຮຽນແມ່ນຍິ່ງຫຍຸ້ງຍາກຂຶ້ນ ເພາະຍົນຖິ້ມລະເບີດໃສ່ບ້ານຂອງຂ້ອຍຢ່າງໜັກ ພ້ອມດຽວກັນ ກໍຖິ້ມລະເບີດລົງໃສ່ປ່າດົງແຖວໆອ້ອມແອ້ມບ້ານນຳອີກ. ຂ້ອຍຕ້ອງບັງຄັບຕົນເອງໃຫ້ມີຄວາມທ້າວທັນໃນການສຶດສອນ ເພື່ອຊ່ວຍໃຫ້ຫຼາຍຄົນໄດ້ຮຽນຮູ້. ພວກເພິ່ນຮຽນຢ່າງເອົາຈິງເອົາຈັງ ຖ້າວ່າ ຢຸດເຊົາການຮຽນຈະເຮັດໃຫ້ພວກເພິ່ນເສຍໂອກາດໃນການຊອກສະແຫວງຫາຄວາມຮູ້. ແຕ່ຕົກມາປີ 1969 ການສຶດສອນແມ່ນຕ້ອງຢຸດສະຫງັດລົງ ເພາະບໍ່ສາມາດອອກຈາກຂຸມຄອງ ຫຼື ຈາກຖ້ຳໄດ້ ຍ້ອນຍົນມາຍິງບ້ານຂອງຂ້ອຍທຸກໆວັນ. ຍົນຍິງທຸກຢ່າງ

ຍິງບ້ານເຮືອນ ທົ່ງໄຮ່ ທົ່ງນາ ຈົນບໍ່ຮູ້ວ່າ ຂອງໃຜເປັນຂອງໃຜ. ແຕ່ກ່ອນບ້ານຂ້ອຍມີປ່າດົງໃຫຍ່ ແຕ່ຕອນນີ້ ບໍ່ມີຮອດປ່າເລີຍ ມີແຕ່ດິນແດງຈາກແຮງລະເບີດທີ່ປະໄວ້ໃຫ້ເຫັນ.


ສິ່ງທີ່ສຳຄັນແມ່ນວ່າ ຂ້ອຍມາຢູ່ວຽງຈັນ ແລະ ມີຊີວິດການເປັນຢູ່ທີ່ດີກວ່າ ແຕ່ກໍບໍ່ເຄີຍລືມບ້ານເກີດເມືອງນອນໄດ້ເລີຍ. ອາກາດບ້ານເດີມແມ່ນສົດຊື່ນ ແລະ ມີສຸຂະພາບດີ. ເວລາໃດທີ່ຂ້ອຍຄິດເຖິງບ້ານເກົ່າ ພາໃຫ້ຂ້ອຍຄິດຫຼາຍຈົນນອນບໍ່ຫຼັບ. ຖ້າຫາກຍິນບໍ່ມາຍິງພວກເຮົາ ຂ້ອຍອາດຈະຍັງບໍ່ໄດ້ຈາກບ້ານມາເທື່ອ ຖ້າບໍ່ມີສົງຄາມ ຂ້ອຍຄົງຈະມີຊີວິດທີ່ສົດໃສທີ່ບ້ານເກີດ ນີ້ລະຄືຊີວິດຈິງໃນຄັ້ງອະດີດຂອງຂ້ອຍ.



ນັກແຕ້ມ: ນິລະນາມ

ຍິງຜູ້ນີ້ເປັນຄົນມີນິໄສໃຈຄໍດີ ລາວເວົ້າຈາອ່ອນຫວານ ແລະ ບໍ່ເຮັດໃຫ້ຜູ້ໃດເສຍໃຈ. ເປັນຫຍັງລາວຈຶ່ງຕ້ອງມາຈົບຊີວິດລົງຢ່າງໜ້າສົງສານແບບນີ້? ລາວເສຍຊີວິດໃກ້ກັບງົວທີ່ລາວເອົາອອກໄປລ້ຽງ ລາວຕາຍແບບອາໜາດ ແລະ ໜ້າສົງສານທີ່ສຸດ. ພວກຍິນມາຍິງທຳລາຍແບບຜິດ

ກົດໝາຍ. ມັນມາສ້າງບາບສ້າງກຳກັບພວກເຮົາແບບບໍ່ເຄີຍມີມາກ່ອນ. ຍິນມາຂ້າຄົນທີ່ບໍ່ຮູ້ວ່າ ມີຫຍັງເກີດຂຶ້ນ. ເປັນຫຍັງພວກມັນຈຶ່ງມາເຮັດແບບນີ້? ຖ້າຫາກທ່ານເຫັນພາບນີ້ແລ້ວ ຈະຄິດວ່າແນວໃດ ຖ້າຫາກເປັນອ້າຍເອື້ອຍນ້ອງ ຫຼື ພີ່ນ້ອງຂອງທ່ານເດຈະຄິດແນວໃດ? ເຈົ້າຈະບໍ່ຄຽດແຄ້ນບໍ? ເຈົ້າຈະບໍ່ສົນໃຈບໍ່ ຖ້າຫາກເກີດເຫດການແບບນີ້? ຈົ່ງ ລອງເອົາຫົວໃຈພວກຂ້ອຍໄປສົມທຽບກັບຫົວໃຈເຈົ້າເບິ່ງ? ແລະ ຈະໃຫ້ພວກຂ້ອຍເຮັດແນວໃດ?



ແຕ້ມໂດຍ: ຊາຍໄວ 12 ປີ

ໝູ່ຂອງຂ້ອຍຄົນໜຶ່ງເຂົ້າໄປເອົາເຂົ້າເພື່ອມາສູ່ພໍ່ແມ່ກິນ ໃນເວລາທີ່ລາວກຳລັງຍ່າງຂ້າມທົ່ງນາ ເພື່ອຂຶ້ນໄປຫາພູ ຍິນແນມເຫັນ ແລະ ຍິງສຸມໃສ່ລາວຈົນມຸ່ນແຫຼກເປັນຕ່ອນໆ ບໍ່ສາມາດເກັບໄດ້ ເພາະມັນຟີ້ງ ກະຈັດກະຈາຍໄປທົ່ວທ້ອງທົ່ງນາ.

ພວກເຮົາພາກັນຮ້ອງເພງດ້ວຍຄວາມກ້າຫານ

ໂດຍ: ຊາຍໄວ 14 ປີ

ໃນເມື່ອມີສະພາບການປ່ຽນແປງ ຂ້ອຍກໍຕ້ອງຈຳຈາກພັດພາກ ຈາກຖິ່ນກຳເນີດ ຊຶ່ງຂ້ອຍເຄີຍໄດ້ໃຊ້ຊີວິດມາຕະຫຼອດ. ຂ້ອຍຍັງຈື່ຈຳ ບ້ານເກີດຂອງຂ້ອຍໄດ້ດ້ວຍຄວາມໂສກເສົ້າອາໄລ ເພາະຖິ່ນນີ້ ເປັນດິນ ແດນທີ່ອຸດົມສົມບູນ ຫຼໍ່ລ້ຽງຊີວິດຂອງຂ້ອຍໃນຍາມຍັງເຍົາໄວ ຈົນໃຫຍ່ ກ້າຂຶ້ນມາ. ທົ່ງນາ, ທ້ອງຟ້າ ແລະ ອາກາດໃນແດນນີ້ສຸດທີ່ເຢືອກເຢັນ ແລະ ຊຸ່ມຊື່ນພາໃຫ້ມີຄວາມສຸກ ແລະ ມີຄວາມພໍໃຈ ຫາອັນປຽບບໍ່ໄດ້. ດັ່ງນັ້ນ ຈຶ່ງພາໃຫ້ຂ້ອຍຫວນຄິດເຖິງຕອນທີ່ຍັງຢູ່ບ້ານເກົ່າ ທີ່ເຄີຍໄດ້ ເຮັດນາ ແລະ ຊອກຫາອາຫານຕາມປ່າດົງ ທີ່ຢູ່ອ້ອມບ້ານຂອງພວກ ເຮົາ. ສຳລັບຂ້ອຍແລ້ວ ແມ່ນບໍ່ມີບ່ອນໃດຈະມາທຽບໄດ້. ພູ ຜາ ປ່າດົງ ພົງໄພອັນໃຫຍ່ຫຼວງ ເຕັມໄປດ້ວຍສັດສາວາສິ່ງ ນົກໜູຫຼາຍຊະນິດ. ດິນ ແດນແຫ່ງນີ້ບໍ່ມີຫຍັງ ທີ່ຊາວບ້ານຈະເຮັດບໍ່ໄດ້ ແມ່ນແຕ່ການເຮັດນາ, ສ້າງສາບ້ານເຮືອນ ກໍພາກັນຊ່ວຍວຸ້ກຊ່ວຍງານກັນ ແລະ ເຮັດໃຫ້ຊີວິດ ຕອນຍັງນ້ອຍສຸດທີ່ສົດໃສ ແລະ ມ່ວນຊື່ນຕາມພາສາຊາວຊົນນະບົດ. ດິນແດນແຫ່ງນີ້ ເຖິງຈະເປັນເຂດຊົນນະບົດມີປ່າດົງ ແລະ ທົ່ງນາກໍຍັງ ເປັນສະຫວັນສຳລັບຂ້ອຍ.

ພວກເຮົາພາກັນນັບຖືຮີດຄອງປະເພນີອັນດີງາມຂອງພວກເຮົາ ສ່ວນເດັກນ້ອຍຊາຍ ຍິງ ແລະ ຜູ້ເຖົ້າ ຜູ້ແກ່ ກໍພາກັນເຮັດບຸນເຮັດງານ ຕາມປະເພນີທີ່ວັດບ້ານເຮົາ.

ຈາກນັ້ນມາ ຍີ່ນກໍມາຖົ່ມລະເບີດທຳລາຍບ້ານເກີດເມືອງນອນ ອັນແສນຮັກຂອງພວກເຮົາ ເຮັດໃຫ້ງົວ ຄວາຍ ທົ່ງໄຮ່ ທົ່ງນາ ພັງທະລາຍ ຢ່າງບໍ່ມີເຫຼືອ.

ຂ້ອຍ ແລະ ໝູ່ເພື່ອນບໍ່ໄດ້ຢ້ານກົວຄວາມໂຫດຮ້າຍທຳລາຍຂອງ ຍີ່ນອາກາດແຕ່ຢ່າງໃດ. ພວກຂ້ອຍພາກັນຮ້ອງເພງຂອງປະເທລາວ ແຕ່ງຂຶ້ນ ໂດຍກອງປ້ອງກັນອາກາດຂອງແນວລາວຮັກຊາດ ຊຶ່ງພວກເຮົາ

ມັກຮ້ອງເພງນີ້ພ້ອມກັນໃນທ່ຽງນາໃນຍາມຝົນຕົກ. ພວກຂ້ອຍຮ້ອງເພງນີ້ຢ່າງອົງອາດກ້າຫານ ເພື່ອໃຫ້ກຳລັງໃຈພວກຍິງສາວໃຫ້ມີຄວາມບຸກບືນ ແລະ ເຮັດໃຫ້ຈິດໃຈມ່ວນຊື່ນ ໃນການເຮັດວຽກງານໃຫ້ສຳເລັດ.

ໃນຄວາມຄິດຂອງຂ້ອຍຕອນນັ້ນ ເຖິງຈະຕາຍກໍບ່ຢ້ານ ແລະ ຕ້ອງມີຈິດໃຈມ່ວນຊື່ນໃນທ່າມກາງຂອງສົງຄາມ ແລະ ການຖິ້ມລະເບີດທຳລາຍຂອງຍົນອາກາດ ທີ່ສົ່ງສຽງດັງສະໜັ່ນທ່ວທ້ອງຟ້າ ຫຼື ທວນໄຟຈາກປືນປ້ອງກັນອາກາດທີ່ຍິງຍົນສັດຕູ. ພວກເຮົາພາກັນຮ້ອງເພງຢ່າງກ້າຫານ ແລະ ຕໍ່ສູ້ດ້ວຍໃຈເດັດດ່ຽວ.

ເພງນີ້ມີຊື່ວ່າ ຊິມເຊີຍກອງປ້ອງກັນອາກາດ

ຊິມເຊີຍ
ທີ່ມີຄວາມສາມາດ
ເຖິງວ່າໂຈມ
ເວີ່ນຕາມເວຫາ
ມັນສະແດງ
ກອງປ້ອງກັນເວຫາ

ກອງປ້ອງກັນອາກາດ
ອາດຫານຍິງຍົນ
ອາກາດອາເມລິກາ (2)
ຢູ່ໃນທ້ອງຟ້າທຸກແຫ່ງ
ແຝງກຳລັງບິນໄປບິນມາ
ໄດ້ຍິງລົງມາຈົນມຸ່ນ

ຟ້ງສຽງປືນເຮົາ
ປຕອ ຍິງຕ້ານ
ບິນມາແອຟ 105 ບິນມາ
ກູຈະຍິງຟັນຂ້າ

ດັງກ້ອງກັງວານ (2)
ພວກໂຈມອາກາດໃຫ້ຖອຍໜີ
ບິນມາເຕ 28 ບິນມາ
ບ່ໃຫ້ມີໆຢູ່ຄ້າງ

ເພງນີ້ໄດ້ຖືກປະພັນຂຶ້ນໃນປີ 1966 ແລະ ມັນໄດ້ເຮັດໃຫ້ຂ້ອຍນຶກເຖິງຄວາມຫຼັງອັນແສນເສົ້າບ່ເຊົາ. ເມື່ອມາຢູ່ທີ່ວຽງຈັນ ອາກາດກໍຮ້ອນ ແລະ ການດຳລົງຊີວິດກໍແສນຫຍຸ້ງຍາກລຳບາກ ເພາະບ່ລ້ຽງກັບອາກາດ. ຂ້ອຍບ່ໄດ້ຜ່ານການຝຶກອົບຮົມເພື່ອເຂົ້າເຮັດວຽກເປັນພະນັກງານຂອງ

ລັດ ດັ່ງນັ້ນ ຈຶ່ງພາໃຫ້ຂ້ອຍຄິດຮອດແຕ່ບ້ານເກີດເມືອງນອນຕະຫຼອດເວລາ.

ຂ້ອຍຕັດສິນໃຈເດັດດ່ຽວວ່າ ແນວໃດກໍຕາມ ຕ້ອງກັບຄືນໄປຫາບ້ານເກີດເມືອງນອນໃຫ້ໄດ້.


ຍົນແອຟ 105 ກວາດລ້າງ ແລະ ຖິ້ມລະເບີດ 150 ກິໂລ ໃສ່ບ້ານ ແລະ ປະຊາຊົນຢ່າງບໍ່ຢຸດບໍ່ເຊົາ.

ໂດຍ : ຜູ້ຊາຍໄວ 28 ປີ

ຮູບນີ້ສະແດງໃຫ້ເຫັນຍົນມາຖິ້ມລະເບີດໃສ່ເມືອງໂພນສະຫວັນ ໃນ ວັນພຸດ ວັນທີ 13 ກໍລະກົດ (7) 1969. ຍົນແອຟ 105 ໄດ້ມາຖິ້ມລະເບີດລົງໃສ່ບ້ານພວກເຮົາເປັນເວລາໜຶ່ງຊົ່ວໂມງ ຄືຖິ້ມລະເບີດຕັ້ງແຕ່ 6 ໂມງເຊົ້າ. ບັນດາຍົນເຫຼົ່ານີ້ ບິນເວີ່ນຢູ່ເທິງທ້ອງຟ້າກັບໄປກັບມາຖ້ຽວແລ້ວຖ້ຽວອີກ. ຕອນໜຶ່ງມີຍົນອານ 19 ມາຖິ້ມລູກຄວັນລົງໃສ່ບ້ານ ເພື່ອຊີ້ເປົ້າໃຫ້ຍົນມາຖິ້ມລະເບີດ. ຈາກນັ້ນ ຍົນແອຟ 105 ກໍແຫ່ກັນມາຍິງລູກສອນໄຟ, ຖິ້ມລະເບີດ 150 ກິໂລ ໃສ່ບ້ານ ແລະ ໃສ່ຄົນ ຢ່າງບໍ່ຢຸດບໍ່ເຊົາ.

ເຮືອນຊານຂອງປະຊາຊົນຖືກເຜົາໄໝ້ ແລະ ຖືກທຳລາຍກ້ຽງບໍ່ມີຫຍັງເຫຼືອໃຫ້ເຫັນ. ມີຄົນຈຳນວນໜຶ່ງຕາຍ ແລະ ບາດເຈັບກວ່າ 30 ຄົນ. ຍ້ອນວ່າຍົນມາຖິ້ມລະເບີດແບບບໍ່ຢຸດເຊົາ ປະຊາຊົນກໍ່ບໍ່ຮູ້ວ່າ ຈະໜີໄປລີ້ຢ່ບ່ອນໃດທັນ ເພາະໃຜກໍບໍ່ເຄີຍມີປະສົບການແບບນີ້ມາກ່ອນ. ການຖິ້ມລະເບີດທຳລາຍແບບນີ້ ພາໃຫ້ລູກຕາຍຈາກພໍ່ແມ່ ພໍ່ແມ່ຕາຍຈາກລູກ ເປັນຈຳນວນຫຼາຍ ແລະ ສ້າງຄວາມທຸກທໍລະມານໃຫ້ປະຊາຊົນຫຼັ່ງໄຫຼນ້ຳຕາຢ່າງບໍ່ມີວັນລືມໄດ້. ຍ້ອນວ່າ ຍົນຖິ້ມລະເບີດລົງໃສ່ໄຮ່ ນາ ປະຊາຊົນ ພວກເຂົາຈຶ່ງບໍ່ສາມາດທົນເຫັນຄວາມເສຍຫາຍແບບນີ້ ພວກເຂົາຈຶ່ງພາກັນໄປລີ້ຊ່ອນຢູ່ຕາມປ່າດົງ ຕາມສາຍຫ້ວຍ ແລະ ແລ່ນເຂົ້າລີ້ໃນຖ້ຳໃນພູ.

ພວກເຮົາເຫັນວ່າ ເຫດການແບບນີ້ຈະບໍ່ມີວັນສ້ຽງສຸດງ່າຍໆ ດັ່ງ



ນັ້ນ ພວກເຮົາຈຶ່ງໜີໄປເພິ່ງຝ່າຍລັດຖະບານ ຊຶ່ງມີເຈົ້າ ສຸວັນນະພູມມາ ເປັນນາຍົກໃນສະໄໝນັ້ນ. ເນື່ອງຈາກວ່າ ສົງຄາມຮ້າຍແຮງຂຶ້ນເລື້ອຍໆ ພວກເຮົາຈຶ່ງຕ້ອງໄດ້ປົບໜີ ຈາກເຮືອນຊານທີ່ອາໄສ ຈາກທ້ອງໄຮ່ ທ້ອງນາ ປະງົວ ປະຄວາຍ ແລ້ວຍ້າຍມາຢູ່ທີ່ນີ້ດ້ວຍຄວາມທຸກຍາກທີ່ສຸດ.

"... ລະເບີດຕົກລົງມາຫ່າງບ່ອນທີ່ພໍ່ຂ້ອຍກຳລັງໄຖນາ ປະມານ 15 ແມັດ..."

ໂດຍ: ນັກຮຽນ ໄວ 16 ປີ

ຂ້ອຍຈະຂໍເລົ່າຊີວິດໃນຄັ້ງອະດີດຂອງຂ້ອຍ ສະໄໝທີ່ຍັງຢູ່ຊຽງຂວາງ ຊຶ່ງມີພູຜາສູງຊັນ ແລະ ມີທົ່ງນາກວ້າງຂວາງກະແຈກກະຈາຍໄປທົ່ວ. ເຂດນີ້ມີທຳມະຊາດທີ່ສວຍງາມ ແລະ ມີອາກາດເຢັນສະບາຍ ແລະ ມີໝອກເຢັນ. ໃນຕອນເຊົ້າ ຈະມີໝອກປົກກົ້ວທົ່ວທັ້ງພູຜາ ພໍຕົກຕອນຄ່ຳມາ ຈະມີລັດສະໝີຂອງຕາເວັນສ່ອງແສງສີເງິນສາດສ່ອງໄປທົ່ວທັ້ງພູຜາ ພາໃຫ້ເກີດມີຮູບພາບທີ່ມີມົນສະເໜ່ອັນສວຍງາມແທ້. ຫຼ່ວ

ໄປຕາມແຄມຜາ ຈະເຫັນນ້ຳເຢັນໃສຕົກຕາດຈາກຈອມພູສູງລົງມາ.

ຂ້ອຍຢູ່ຊຽງຂວາງ ຂ້ອຍຢູ່ທີ່ບ້ານບຸນ, ເມືອງຄູນ, ແຂວງຊຽງຂວາງ. ບ້ານຂອງຂ້ອຍຢູ່ໃກ້ກັບໜ້າຜາສູງຊັນ ໃນຕອນກາງຄືນ ຂ້ອຍມັກໄປປີນພູ ໂດຍໃສ່ໝວກແງັບ ແລະ ຖືປືນລູກຊອງໄປເປັນເພື່ອນທຸກຍາມ.

ຕອນນັ້ນຂ້ອຍອາຍຸ 16 ປີ ແລະ ຍັງເປັນນັກຮຽນຢູ່ ຂ້ອຍຊ່ວຍວຽກງານພໍ່ແມ່ໃນການເຮັດໄຮ່ໄຖນາ ນອກນັ້ນ ກໍມີການຊ່ວຍວຽກເຮືອນການຊານ ສົມເປັນເດັກທີ່ດີ ເພາະໃນເຮືອນບໍ່ມີໃຜນອກຈາກຂ້ອຍ ແລະ ເອື້ອຍອີກຜູ້ໜຶ່ງ ຈຶ່ງຈຳເປັນຕ້ອງໄດ້ຊ່ວຍວຽກນາ ແລະ ວຽກທຸກຢ່າງເທົ່າທີ່ເຮັດໄດ້.

ເອື້ອຍຂ້ອຍບໍ່ມີໂອກາດໄດ້ຮຽນຄືຂ້ອຍ ຂ້ອຍເຂົ້າໂຮງຮຽນຕອນອາຍຸ 7 ປີ ໃນແຕ່ລະປີ ຂ້ອຍກໍຮຽນໄດ້ດີ ແລະ ໝູ່ເພື່ອນຫຼາຍຄົນກໍຮັກແພງຂ້ອຍ ເພາະຂ້ອຍເປັນນັກຮຽນດີ ແລະ ບໍ່ມັກສ້າງບັນຫາໃດໃຫ້ເພີ່ນຫຍຸ້ງຍາກ. ພາຍໃນຄອບຄົວກໍມີເຂົ້າປາອາຫານ ແລະ ມີເຄື່ອງນຸ່ງພຽງພໍ. ໃນຕອນເຊົ້າ ຂ້ອຍກໍໄປໂຮງຮຽນ ຕອນຄ່ຳຂ້ອຍກໍກັບມາເຮືອນ ແລະ ໄປຊອກຕ້ອນງົວກັບມາຄອກ ຊຶ່ງສ້າງໄວ້ໃນຮ່ອມພູ. ເຂດບ້ານຂ້ອຍບໍ່ມີຄວາມກັງວົນຫຍັງ ເພາະປາກົດວ່າ ມີທຸກຢ່າງທີ່ຕ້ອງການ ແລະ ຊີວິດດຳເນີນໄປຢ່າງມ່ວນຊື່ນບໍ່ມີການປ່ຽນແປງ.

ເມື່ອຮອດຍາມເກັບກ່ຽວເຂົ້ານາ ຂ້ອຍກໍໄດ້ເຂົ້າຫຼາຍສົມຄວນ. ພາຍຫຼັງເກັບກ່ຽວແລ້ວ ກໍມີການຟາດເຂົ້າ ແລະ ເກັບຂຶ້ນໃສ່ເລົ້າດ້ວຍຄວາມມ່ວນຊື່ນ. ຍ້ອນວ່າຂ້ອຍຢູ່ໃກ້ກັບໂຮງຮຽນ ມັນຈຶ່ງເປັນການງ່າຍໃນການມາຊ່ວຍວຽກຄອບຄົວ ແລະ ເອື້ອຍຂ້ອຍ. ຂ້ອຍມັກທິວທັດອັນສວຍງາມຂອງທຳມະຊາດອ້ອມແອ້ມບ້ານຂອງຂ້ອຍ, ມີນ້ຳໃສໄຫຼຜ່ານບ້ານ ແລະ ມີປູປາຫຼາຍ ຫາກິນກໍ່ງ່າຍ ພວກເຮົາບໍ່ຈຳເປັນຕ້ອງໃຊ້ຈ່າຍເງິນຄຳໃນການຊື້ຫາ ເພາະຢາກໄດ້ຫຍັງກໍມີຫຼວງຫຼາຍ ຍົກເວັ້ນແຕ່ເສື້ອຜ້າທີ່ຕ້ອງໄດ້ຊື້ເອົາ. ຂ້ອຍມັກຫຼຽວເບິ່ງຕົ້ນແປກທີ່ຢູ່ເໜືອບ້ານຂອງພວກເຮົາ ພາຍໃນບ້ານມີເຮືອນຢູ່ 6 ຫຼັງ.

ແຕ່ມາໃນປີ 1964 ເຫດການອັນແປກໃໝ່ກໍເຂົ້າມາກໍ່ກວນບ້ານ

ເກີດ ທີ່ເຄີຍມີແຕ່ຄວາມສະຫງົບສຸກ ດັ່ງທີ່ຂ້ອຍໄດ້ບັນຍາຍມາຂ້າງເທິງ. ຍົນເຕ 28 ແລະ ຍົນອາຍພົ່ນສິ່ງສຽງດັງຄຶກໂຄມທຸກວັນ ເຮັດໃຫ້ຂ້ອຍອີກສັ່ນຂວັນເສຍ ແລະ ເຮັດໃຫ້ຂ້ອຍຢ້ານຫຼາຍ ເພາະໃນຊີວິດບໍ່ເຄີຍເຫັນແບບນີ້ມາກ່ອນ. ພໍ່ຂອງຂ້ອຍເພິ່ນບໍ່ຢ້ານ ແລະ ເພິ່ນກໍອອກໄປເຮັດວຽກນາ ວຽກສວນຕາມເຄີຍ.

ມີມື້ໜຶ່ງໄດ້ຍິນສຽງລະເບີດແຕກ ໝາຍຄວາມວ່າ ຍົນກຳລັງຍິງຕາມເສັ້ນທາງ ເມື່ອໜຽວໄປກໍພົບວ່າ ຍົນມາຍິງຕົວເມືອງ ເຮັດໃຫ້ຂ້ອຍຢ້ານທີ່ສຸດ ແຕ່ກໍຕ້ອງສືບຕໍ່ເຮັດວຽກຕໍ່ໄປ. ຂ້ອຍໄປໂຮງຮຽນທຸກວັນ ແຕ່ມາວັນໜຶ່ງ ຍົນກໍມາຍິງບ້ານທີ່ຢູ່ໃກ້ບ້ານຂ້ອຍ ບ້ານນັ້ນແມ່ນບ້ານເຮັດໄຫ ຊຶ່ງຢູ່ໃກ້ກັບຕົນປ່າ. ເຮັດໃຫ້ທັ້ງບ້ານຖືກໄໝ້ໝົດ ມີຄົນ ແລະ ສັດຈຳນວນຫຼາຍລົ້ມຕາຍໃນຕອນນັ້ນ. ນັກຮຽນທັ້ງໝົດພາກັນອີກສັ່ນຂວັນເສຍດ້ວຍຄວາມຢ້ານ. ພວກນັກຮຽນບໍ່ຢາກໄປໂຮງຮຽນ ເພາະນາຍຄູອາຈາຍແຜນການຂຸດຂຸມໃກ້ກັບໂຮງຮຽນ. ພວກຂ້ອຍພາກັນຮຽນໃນຕອນເຊົ້າ ແລະ ຂຸດຂຸມໃນຕອນບ່າຍ ເມື່ອຂຸດຂຸມແລ້ວ ພວກຂ້ອຍກໍໄປໂຮງຮຽນຕາມເຄີຍ.

ຈາກນັ້ນ ບັນດາຍົນກໍພາກັນບິນມາຕະຫຼອດເວລາ ເຮັດໃຫ້ຊີວິດການເປັນຢູ່ມີຄວາມຫຍຸ້ງຍາກ. ຍົນມາຖິ້ມລະເບີດຍາມໃດກໍທຳລາຍໄຮ່ນາ ຮົ້ວສວນ ເລົ້າເຂົ້າ ແລະ ເຮືອນຊານ ເຮັດໃຫ້ຊີວິດເພີ່ມຄວາມຫຍຸ້ງຍາກຫຼາຍ ຈະດັ່ງໄຟເພື່ອແຕ່ງກິນກໍບໍ່ໄດ້ ເພາະຖ້າຍົນເຫັນຄວັນໄຟບ່ອນໃດແມ່ນຖິ້ມລະເບີດລົງມາທັນທີ. ຂ້ອຍລົ້ມເຈັບ ແລະ ຮູ້ສຶກມີຄວາມເສຍໃຈຫຼາຍ ເພາະໂຮງຮຽນຖືກປິດຍ້ອນລູກລະເບີດຕົກໃສ່ເດີ່ນໂຮງຮຽນ ແລະ ເຮັດໃຫ້ທັ້ງເດີ່ນຖືກທຳລາຍ. ເອື້ອຍ ແລະ ຂ້ອຍພາກັນຂຸດຂຸມເລິກລົງ ເພື່ອໃຫ້ຮັບປະກັນວ່າ ພວກເຮົາຕ້ອງປອດໄພຈາກການຖິ້ມລະເບີດ. ຕໍ່ມາບໍ່ດົນໂຮງຮຽນກໍເປີດໄດ້ອີກ ແຕ່ການຮຽນແມ່ນຈຳກັດເວລາລົງ ເພາະຖ້າຕາເວັນຂຶ້ນແລ້ວ ກໍຕ້ອງພາກັນເຂົ້າໄປລີ້ໃນຂຸມຫຼົບໄພ. ພໍ່ຂອງຂ້ອຍເປັນຄົນທີ່ມີຄວາມປະຢັດ ແລະ ເປັນຄົນດຸໝັ່ນ ແລະ ອົດທົນໃນການເຮັດວຽກງານ. ເວລາຍົນມາ ເພິ່ນໝູບກັບຂ້າງຄັນນາ ເມື່ອຍົນບິນກາຍ ເພິ່ນກໍອອກມາເຮັດວຽກອີກ ເພິ່ນມັກເຮັດແນວນີ້ເປັນປະຈຳ

ເຖິງວ່າຍິນຈະສືບຕໍ່ມາຖະຫຼົ່ມ ທັງກາງເວັນ ແລະ ກາງຄືນກໍຕາມ. ໃນຕອນກາງຄືນ ພວກເຂົາກໍຖິ້ມລູກຈ້ອງເພື່ອຊອກຫາຈຸດຖິ້ມລະເບີດ ຖ້າວ່າເຫັນຄົນກໍຍິງປືນລົມມາໃສ່. ໃນຕອນນັ້ນ ພວກຂ້ອຍຈຳເປັນຕ້ອງໜີຈາກບ້ານໄປ ແລະ ໄປເຮັດຕູບນ້ອຍຢູ່ໃກ້ກັບຕີນພາ. ໃນສະພາບແບບນີ້ ຂ້ອຍຢ້ານແຕ່ຈະເຈັບໄຂ້ ເພາະຍາມໃດກໍມີແຕ່ໂສກເສົ້າ. ສະຖານທີ່ ທີ່ຂ້ອຍເຄີຍແລ່ນຫຼິ້ນ ແລະ ບ່ອນທີ່ເຄີຍໄປລ້ຽງງົວ ຄວາຍ ແລະ ຕອນກາງຄືນຕ້ອນຄວາຍມາແຫລ່ງ ແມ່ນເຕັມໄປດ້ວຍຂຸມລະເບີດ ຂ້ອຍບໍ່ສາມາດໄປປ່າໄດ້ອີກ ເພາະພວກມານຖິ້ມລະເບີດແບບທຳລາຍຄົນເຕັມໄປໝົດ ແລະ ຈຳນວນຫຼາຍຍັງບໍ່ທັນແຕກ ຖ້າຫາກສັດໄປຢຽບເອົາມັນກໍຈະແຕກຂຶ້ນທັນທີ. ຈະໄປທາງໃດກໍຕ້ອງຍ່າງຕາມແລວທາງແຄບໆ ທີ່ມີຄວາມປອດໄພ ຖ້າອອກແລວທາງແມ່ນມີໂອກາດຢຽບລະເບີດແນ່ນອນ. ຕອນກາງເວັນ ຂ້ອຍກໍຕຳເຂົ້າ ແລະ ກັບໄປລີ້ຢູ່ກັບຂຸມຄອງ ແຕ່ພໍ່ຂອງຂ້ອຍແມ່ນເປັນຫ່ວງສັດຂອງເພິ່ນ ເພິ່ນຈະນອນໃນບ້ານ ແລະ ພະຍາຍາມໄຖນາໃນຕອນເຊົ້າໆ. ເພິ່ນຢ້ານລູກເຕົ້າຕາຍ ຍ້ອນຄວາມອຶດຢາກໃນປີຕໍ່ມາ ຖ້າຫາກບໍ່ເຮັດນາ. ເມື່ອຕາເວັນຂຶ້ນເພິ່ນກໍກັບມາລີ້ໃນຂຸມຄອງ.

ວັນໜຶ່ງ ໃນຂະນະທີ່ພໍ່ກຳລັງໄຖນາ ບຶດຸງອໝອກທີ່ກ້ອຕາມພູກໍເພີກອອກທັນທີທັນໃດ ແລະ ເຫັນຍົນບິນຜ່ານມາ ເບິ່ງແລ້ວຄືມັນຈະບໍ່ຍິງ. ພໍ່ຈຶ່ງຢືນກັບທີ່ກາງທົ່ງນາຫຼຽວເບິ່ງຍົນຜ່ານໄປ ເພື່ອວ່າເພິ່ນຈະໄດ້ແກ້ຄວາຍອອກຈາກໄຖ. ຄາວດຽວຍົນ ແອຟ 4 ສີ່ລຳ ກໍບິນມາຖິ້ມລະເບີດລົງມາໃສ່. ລະເບີດໄດ້ທຳລາຍໝົດທັງບ້ານ. ເຮືອນ 6 ຫຼັງ ຖືກໄຟໄໝ້ ແລະ ລະເບີດລູກໜຶ່ງຕົກລົງມາແຕກຫ່າງພໍ່ພຽງ 15 ແມັດ ຈາກບ່ອນທີ່ພໍ່ກຳລັງໄຖນາ ແຮງລະເບີດ ແລະ ສະເກັດຂອງມັນເຮັດໃຫ້ພໍ່ ແລະ ຄວາຍຕາຍກັບທີ່ພ້ອມໆກັນ. ຂ້ອຍບໍ່ຮູ້ວ່າ ມີຫຍັງເກີດຂຶ້ນກັບພໍ່ ເພາະແນມບໍ່ເຫັນຫຍັງ. ຂ້ອຍລີ້ຢູ່ຂຸມແຄມຫ້ວຍ. ເມື່ອຍົນບິນກາຍໄປແລ້ວ ພວກຂ້ອຍ ແລະ ເອື້ອຍຄິດເປັນຫ່ວງນຳພໍ່ ຢ້ານເພິ່ນໄດ້ຮັບບາດເຈັບ ດັ່ງນັ້ນ ຈຶ່ງພາກັນອອກມາຈາກຂຸມ. ເມື່ອຫຼຽວໄປທາງບ້ານກໍເຫັນຄວັນໄຟ

ໄໝ້ເຮືອນທຸກຫຼັງ ແລະ ສັດຈຳນວນໜຶ່ງກໍຕາຍ ເພາະຖືກໄຟລວກ. ພວກ ຂ້ອຍໜຽວໄປເຫັນພໍ່ນອນຟຸບໃກ້ກັບຄວາຍໄຖນາ ເອື້ອຍ ແລະ ຂ້ອຍພາ ກັນແລ່ນໄປຫາເພິ່ນ ແຕ່ເມື່ອໄປຮອດເພິ່ນໄດ້ຕາຍໄປແລ້ວ. ພວກຂ້ອຍ ພາກັນໄຫ້ດ້ວຍຄວາມເສຍໃຈຫຼາຍ ແລະ ຫາມເອົາພໍ່ອອກໜີຈາກທົ່ງນາ.

ຈາກນັ້ນ ກໍພາກັນໄປບ້ານເພື່ອຫາຄົນມາຊ່ວຍມ້ຽນຄາບ ສົ່ງສະ ການ ເມື່ອສຳເລັດແລ້ວ ຍິນກໍຍັງພາກັນມາອີກ. ຕອນກາງຄືນ ພວກ ມັນໄດ້ຖິ້ມຈ້ອງໄຟໃຫຍ່ ແລະ ລະດົມຍິງກວາດໃສ່ຂົງເຂດນັ້ນຕະຫຼອດ ເວລາ ຈົນເກືອບເດັດຊີວິດຂ້ອຍໄປ. ພວກຂ້ອຍບໍ່ມີຫຍັງເຫຼືອອີກແລ້ວ ເພາະທຸກຢ່າງຖືກທຳລາຍ ຄົງຍັງເຫຼືອແຕ່ຊີວິດທີ່ແສນເສົ້າເທົ່ານັ້ນ.

ປີ 1969 ພວກທະຫານລັດຖະບານວຽງຈັນ ໄດ້ມາເອົາພວກ ເຮົາມາວຽງຈັນ. ຂ້ອຍສຸດທີ່ເສົ້າໃຈເພາະຄິດຮອດບ້ານເກົ່າ. ຂ້ອຍຍັງ ຄິດຮອດຕອນທີ່ໄປຊອກຢູ່ຫາກິນ ແລະ ຊອກຫາທີ່ຢູ່ອາໄສໄດ້ຕາມໃຈ ມັກ. ແຕ່ທີ່ວຽງຈັນ ລັດຖະບານເອົາໃຈໃສ່ເບິ່ງແຍງຄອບຄົວພວກຂ້ອຍ ແຕ່ພວກຂ້ອຍບໍ່ສາມາດສ້າງສາຫຍັງ ເພາະທຸກບ່ອນເປັນຂອງລັດຖະ ບານໝົດ. ຢາກເຮັດຮົ້ວ ເຮັດສວນກໍບໍ່ມີບ່ອນເຮັດ. ຈະໄປຊອກທີ່ຢູ່ ອາໄສ, ອາຫານການກິນກໍມີແຕ່ຄົນທ້ອງຖິ່ນອິດສາ ແລະ ບໍ່ໃຫ້ຊອກຫາ ຈີ່ງພາກັນອຶດຫິວ. ພວກເຮົາຈຳເປັນຕ້ອງໄດ້ຊື້ຢູ່ຊື້ກິນ ຈົນບໍ່ມີຫຍັງຕິດ ຕົວ. ຂ້ອຍຈະເຮັດແນວໃດ ? ຂ້ອຍສຸດທີ່ໂສກເສົ້າ ສະດວກແຕ່ຢາກໄປ ໃສມາໃສ ຍ້ອນວ່າບໍ່ມີຍິນມາຍິງ. ຖ້າວ່າ ລັດຖະບານຫາກມີດິນໃຫ້ສ້າງ ຢູ່ທຳກິນ ຂ້ອຍຄືຈະບໍ່ມີຄວາມເສົ້າໝອງຄືແນວນີ້ ເພາະຂ້ອຍຄົງສາມາດ ຊອກຢູ່ທຳກິນໄດ້ຢ່າງສະດວກສະບາຍຄືດັ່ງທີ່ຂ້ອຍເຄີຍກະທຳມາ. ຂ້ອຍ ພຽງແຕ່ຢາກມີນາເພື່ອທຳກິນ ແລະ ເຮືອນຊານພໍໄດ້ຢູ່ກໍແມ່ນພຽງພໍແລ້ວ ເພາະຂ້ອຍອາດຈະບໍ່ມີໂອກາດກັບຄືນໄປບ້ານເກົ່າໄດ້ອີກ. ມີຫຍັງພຽງ ເລັກນ້ອຍກໍຄົງພຽງພໍ ເພາະຂ້ອຍເຄີຍຜ່ານຄວາມທຸກຍາກມາຫຼາຍຟ້າ ຫຼາຍປີ. ຂ້ອຍພຽງແຕ່ຢາກມີຄວາມສະຫງົບ ມີຄວາມສຸກ ແລະ ຄວາມ ກ້າວໜ້າໃນບັ້ນປາຍຂອງຊີວິດ. ການເລົ່າເລື່ອງຊີວິດຂ້ອຍກໍໝົດເທົ່ານີ້.

ເຂດຊຽງຂວາງ ຊຶ່ງເປັນຖິ່ນກຳເນີດຂອງຂ້ອຍມີແຕ່ຄວາມສະ



ແຕ້ມໂດຍ : ຊາຍອາຍຸ 33 ປີ

ໜຸກ ດິນກໍອຸດົມສົມບູນ ແລະ ອາກາດກໍສົດຊື່ນ. ແຕ່ຕໍ່ມາຍົນກໍມາຖິ້ມ ລະເບີດໃສ່ທົ່ງໄຮ່ ທົ່ງນາ ປ່າດົງ ແລະ ເຮັດໃຫ້ພວກເຮົາຕ້ອງໄດ້ໜີ ຈາກດິນແດນທີ່ແສນຮັກ ທົ່ງນາທີ່ອຸດົມສົມບູນ ດ້ວຍຄວາມໂສກເສົ້າ. ວັນໜຶ່ງຍົນກໍມາທຳລາຍທົ່ງນາຂອງຂ້ອຍ ແລະ ບ້ານເຮືອນປະຊາຊົນ. ຕອນນັ້ນຂ້ອຍກຳລັງໄປຊ່າວນາໃນຕອນເຊົ້າ. ຂ້ອຍຄິດວ່າຂ້ອຍເປັນໝູ່ ຊາວນາທຳມະດາ ແລະ ຍົນຈະບໍ່ຍິງຂ້ອຍ. ແຕ່ໃນມື້ນັ້ນ ຍົນກໍມາແທ້ ແລະ ຍິງທຳລາຍຂ້ອຍ ເຮັດໃຫ້ຂ້ອຍ ແລະ ຄວາຍໄຖນາບາດເຈັບ ຊຶ່ງ ເປັນສິ່ງທີ່ຂ້ອຍແສນຮັກ ແສນແພງ ເຮັດໃຫ້ຂ້ອຍເປັນຫ່ວງເປັນໃຍບໍ່ແລ້ວ ຈັກເທື່ອ.





ແຕ້ມໂດຍ : ຊາວໜຸ່ມ ໄວ 19 ປີ

ມີຍິງຜູ້ໜຶ່ງ ຊຶ່ງມີລູກຊາຍດຽວ ລາວຮັກປານແກ່ນຕາ ລູກຊາຍລາວບໍ່ເຄີຍໄຫ້ແອ່ວ ແລະ ເຮັດໃຫ້ແມ່ເສຍໃຈ ເຮັດໃຫ້ແມ່ສຸດທີ່ຮັກແພງຕະຫຼອດເວລາ. ວັນໜຶ່ງ ບັນດາຍົນມາທຳລາຍ ແລະ ເຮັດໃຫ້ຍິງຜູ້ນີ້

ສຸດທີ່ໂສກເສົ້າ ເພາະຍິນມາຍິງເຮັດໃຫ້ຂາຂອງລູກຊາຍລາວຫັກ ແລະ ແຂນກໍ່ຂາດ ເຮັດໃຫ້ລາວຮ້ອງໄຫ້ດ້ວຍຄວາມເຈັບປວດ ແລະ ເສົ້າໃຈ. ເດັກທຸກຄົນທີ່ເກີດມາບົນໂລກນີ້ຕ້ອງມີຄວາມລຳບາກ ແຕ່ມັນບໍ່ຄືແນວນີ້.

ຈາກນັ້ນພວກເຂົາກໍມາຖິ້ມລະເບີດລົງໃສ່ບ້ານໃສ່ເຮືອນ ໃສ່ວັດວາອາຮາມ ໂຮງຮຽນ ແລະ ທຳລາຍທົ່ງໄຮ່ ທົ່ງນາ ແລະ ເຮັດໃຫ້ງົວ ຄວາຍລົ້ມຕາຍ.

ໂດຍ : ຊາຍໜຸ່ມອາຍຸ 17 ປີ

ບ້ານທີ່ຂ້ອຍເກີດແມ່ນເປັນບ່ອນທີ່ເຮັດໃຫ້ຂ້ອຍສຸດພາກພູມໃຈ ເພາະມີອາກາດທີ່ບໍລິສຸດສົດຊື່ນ ເພາະມີພູຜາປ່າໄມ້ທີ່ອຸດົມສົມບູນ. ນອກນີ້ ທົ່ງນາກໍກວ້າງຂວາງ ແລະ ມີທົ່ງຫຍ້າສຳລັບລ້ຽງສັດທີ່ຂຽວງາມ. ຫຼາຍປີຜ່ານມາແລ້ວ ທີ່ຂ້ອຍໄດ້ລ້ຽງງົວ ລ້ຽງຄວາຍຕາມທີ່ພໍ່ແມ່ພາເຮັດມາ. ຂ້ອຍເຫັນວ່າສຸດທີ່ມີຜົນປະໂຫຍດ ແລະ ມີຄວາມສຸກ ສຳລັບຄົນທີ່ຢູ່ໃນຊົນນະບົດ ຊຶ່ງເປັນຜູ້ທີ່ຢູ່ກັບພູຜາປ່າໄມ້ມາແຕ່ເກີດ.

ໃນປີ 1957 ຂ້ອຍໄດ້ໄປລ້ຽງງົວ ກັບໝູ່ ແລະ ເຮັດວຽກໄຮ່ການາຊ່ວຍຄອບຄົວ. ບ້ານຂອງຂ້ອຍຢູ່ໃກ້ກັບນ້ຳງື່ມ ແລະ ເບື້ອງໜຶ່ງແມ່ນໃກ້ກັບພູກູດ. ເຂດນີ້ແມ່ນອຸດົມສົມບູນ ທັງຮາບພຽງ ແລະ ບາງບ່ອນກໍມີປ່າແປກ. ແຕ່ລະວັນ ຂ້ອຍໄດ້ອອກໄປລ້ຽງງົວ ລ້ຽງຄວາຍ. ພາຍຫຼັງອາຫານເຊົ້າແລ້ວ ກໍເອົາຫໍ່ເຂົ້າໄປນຳ ເພື່ອອອກໄປລ້ຽງສັດ ກັບໝູ່. ຕອນທຳອິດຄອບຄົວຂ້ອຍກໍມີງົວ ຄວາຍ ສິບປາຍໂຕ ຕໍ່ມາມັນກໍອອກແມ່ແພ່ລູກ ແລະ ເພີ່ມຈຳນວນເປັນ 50 ກວ່າໂຕ. ຂ້ອຍດຸໝັ່ນຫ້າວຫັນ ເພາະເຫັນວ່າການລ້ຽງງົວຄວາຍແມ່ນມີຄວາມສຸກຫຼາຍ. ແຕ່ລະວັນ ຂ້ອຍຕ້ອງອອກຈາກບ້ານແຕ່ເຊົ້າ ໃນຕອນຄ່ຳກໍກັບມາບ້ານ ແລະ ເຮັດວຽກຊ່ວຍພໍ່ແມ່ໃນການຄາດໄຮ່ໄຖນາ. ໃນຕອນນັ້ນ ຂ້ອຍບໍ່ໄດ້ຮຽນໜັງສື ເພາະທົ່ງນາຢູ່ໄກບ້ານ. ແຕ່ລະປີເຂົ້ານາກໍຂຽວງາມ ແລະ ຂ້ອຍສຸດທີ່

ດີໃຈເມື່ອເຂົ້າອອກຮວງ ແລະ ກາຍເປັນສີເຫຼືອງງາມ. ແຕ່ລະປີ ຄອບຄົວຂ້ອຍມີເຂົ້າເຫຼືອກິນ ບາງຄັ້ງແມ່ກໍເອົາເຂົ້າໄປຂາຍທີ່ຕະຫຼາດ ແຕ່ມັນກໍຍາກເພາະບໍ່ມີຫົນທາງ ມີແຕ່ທາງຮ່ອມນ້ອຍເລາະລຽບໄປຕາມປ່າເທົ່ານັ້ນ. ຢາກເວົ້າວ່າ ບໍ່ມີຄວາມຈະເລີນເລີຍໃນເຂດນີ້ ດັ່ງນັ້ນ ຂ້ອຍຈຳເປັນຕ້ອງລຸກແຕ່ 3 ໂມງເຊົ້າ ເພື່ອໃຫ້ໄປຮອດຕະຫຼາດຕອນ 6 ໂມງ. ຕະຫຼາດແມ່ນຢູ່ໂພນສະຫວັນ ໃກ້ກັບເດີ່ນຍົນທົ່ງໄຫຫີນ. ໃນທຸກ 5 ວັນ ໃດກໍມີການລ້ຽງຕະຫຼາດເທື່ອໜຶ່ງ. ສິນຄ້າທີ່ນຳໄປຂາຍແມ່ນຜົນຜະລິດທີ່ໄດ້ຈາກທ້ອງຖິ່ນ ດັ່ງໝາກໄມ້, ຜັກ, ເປັດ, ໄກ່ ແລະ ເມື່ອຂາຍແລ້ວ ກໍຊື້ເຄື່ອງນຸ່ງຫົ່ມ ເພາະອາຫານການກິນພວກເຮົາສາມາດຜະລິດໄດ້ເອງ.

ໂຮງຮຽນແມ່ນຕັ້ງຢູ່ແຕ່ບ່ອນທີ່ມີຄົນອາໄສຢູ່ຫຼາຍເທົ່ານັ້ນ ດັ່ງນັ້ນ ບ້ານຂ້ອຍນ້ອຍຈຶ່ງບໍ່ມີໂຮງຮຽນ. ຖ້າຢາກເຂົ້າໂຮງຮຽນກໍຕ້ອງໄດ້ລຸກແຕ່ເຊົ້າ ເອົາເຂົ້າໄປກິນນຳ ເພາະມັນໄກແທ້ໆ. ຍ້ອນເຫດນີ້ ເດັກນ້ອຍ ອາຍຸ 6 ປີ ແມ່ນບໍ່ສາມາດເຂົ້າຮຽນໄດ້ ມີແຕ່ຜູ້ທີ່ມີອາຍຸ 10 ປີຂຶ້ນໄປ ຈຶ່ງສາມາດໄປໄດ້. ດັ່ງນັ້ນ ຈຶ່ງເຮັດໃຫ້ເກືອບບໍ່ມີໃຜໄປໂຮງຮຽນ ແລະ ທຸກຄົນກໍເຮັດຕາມຮີດຄອງປະເພນີເດີມ. ສະເພາະຂ້ອຍແລ້ວ ແມ່ນຮຽນບໍ່ເກັ່ງປານໃດ ເພາະບາງມື້ກໍ່ໄປ ແລະ ບາງມື້ກໍບໍ່ໄດ້ໄປໂຮງຮຽນ.

ໃນປີ 1961 ຝ່າຍ ກອງແລ ໄດ້ເຂົ້າມາປົດປ່ອຍບ້ານຂອງຂ້ອຍ ແຕ່ກໍບໍ່ມີຫຍັງປ່ຽນແປງ, ບໍ່ມີສິ່ງທີ່ຕ້ອງຢ້ານກົວ ແລະ ຊີວິດກໍດຳເນີນໄປຕາມເດີມທີ່ເຄີຍປະຕິບັດມາ. ຕອນນັ້ນ ຄອບຄົວຂ້ອຍຕ້ອງໄດ້ຂາຍໝູໃຫ້ທະຫານກອງແລ ເພາະບໍ່ມີເງິນຊື້ຢາຝິ່ນ. ພໍ່ຂອງຂ້ອຍເພິ່ນກິນຢາຝິ່ນມາແຕ່ສະໄໝພູມີ. ໃນຕອນນັ້ນ ແມ່ນບໍ່ມີໂຮງໝໍຢູ່ໃກ້ ເມື່ອພໍ່ເຈັບມາກໍບໍ່ມີໃຜປິ່ນປົວລາວ ສິ່ງທີ່ສາມາດຊ່ວຍໄດ້ ແມ່ນການກິນຢາຝິ່ນຈຶ່ງຄ່ອຍທຸເລົາລົງ. ໃຜຈະໄປໂຮງໝໍ ກໍຕ້ອງມີເງິນມີຄຳ ແລະ ໂຮງໝໍກໍ່ຢູ່ໄກ.

ພາຍຫຼັງທີ່ ກອງແລ ເຂົ້າມາບ້ານຂອງຂ້ອຍ ທະຫານກອງແລ ກໍພາກັນສ້າງໂຮງຮຽນ ເມື່ອໂຮງຮຽນແລ້ວ ໃຜໆກໍພາກັນໄປເຂົ້າໂຮງຮຽນ ເພາະມັນຢູ່ໃກ້. ຂ້ອຍ ແລະ ໝູ່ກໍ່ໄປໂຮງຮຽນ. ແຕ່ຂ້ອຍບໍ່ຄ່ອຍດີໃຈປານໃດ ເພາະຄິດຮອດງົວ ຄວາຍ ເພາະຢາກລ້ຽງສັດຫຼາຍກວ່າ. ເວລາ

ທີ່ຂ້ອຍໄປໂຮງຮຽນ ກໍມີແຕ່ພໍ່ແມ່ລ້ຽງງົວ ລ້ຽງຄວາຍ. ຫຼັງຈາກເລີກໂຮງຮຽນຕອນແລງແລ້ວ ກໍໄປຕ້ອນງົວມາເຮືອນ. ໃນເດືອນ 3 ປີ 1965 ກອງແລ ກໍຖອຍອອກຈາກບ້ານພວກເຮົາ ເພາະຝ່າຍແນວລາວເຂົ້າມາປົດປ່ອຍ. ນັກຮຽນຕ້ອງໄດ້ເຊົາຮຽນອີກ ເພາະນາຍຄູໄປກັບກອງແລ. ພວກເຮົາບໍ່ເຄີຍເຫັນພວກແນວລາວມາກ່ອນ ຈຶ່ງພາກັນຢ້ານ ແລະ ແລ່ນໄປລີ້ໃນປ່າ. ຜ່ານມາຝ່າຍລັດຖະບານບອກວ່າ ພວກແນວລາວກິນຄົນ ເມື່ອພວກເຂົ້າເຂົ້າບ້ານໃດ ພວກເຂົາຈະເອົາງົວ ເອົາຄວາຍຊາວບ້ານໄປກິນ. ເຂົາເລົ່າວ່າ ຖ້າໃຜບໍ່ໃຫ້ ພວກເຂົາກໍຈະຂ້າຖິ້ມ ຍ້ອນເຫດນີ້ ພວກເຮົາຈຶ່ງໄລ່ຄວາຍເຂົ້າປ່າ ເຂົ້າດົງ ພວກເຮົາພາກັນຢ້ານປືນໃຫຍ່ທີ່ຍິງຂ້າມຫົວມາຈາກເມືອງສຸຍ. ຍ້ອນແນວນີ້ໃຜໆກໍຢ້ານຕາຍ.

ຢູ່ມາບໍ່ດົນ ພວກປະເທດລາວ ກໍສັ່ງໃຫ້ຄົນອອກມາຈາກປ່າ ພວກເຮົາພາກັນຢ້ານ ແລະ ຕ້ອງເຊື່ອຟັງເຂົາ ດັ່ງນັ້ນ ພວກເຮົາຈຶ່ງອອກມາຢູ່ບ້ານຄືເກົ່າ. ພວກເພິ່ນບໍ່ໃຫ້ພວກເຮົາເຮັດນາຄືເກົ່າ ແຕ່ພວກເພິ່ນບໍ່ໄດ້ເອົາສິ່ງຂອງພວກເຮົາໄປ. ມີຄົນຈຳນວນໜຶ່ງແມ່ນຢ້ານພວກທະຫານປະເທດລາວ ໂດຍສະເພາະແມ່ນພວກທີ່ມີເງິນມີຄຳ. ພວກເຂົາເອົາງົວຄວາຍໃຫ້ພວກປະເທດລາວກິນລ້ຳໆ ແຕ່ພວກເພິ່ນບໍ່ຮັບ ຖ້າພວກເພິ່ນເອົາ ພວກເພິ່ນກໍຈ່າຍໃຫ້ດ້ວຍລາຄາທີ່ເປັນທຳ. ໃນຄວາມເປັນຈິງແລ້ວ ແມ່ນພວກເພິ່ນເຮັດໃຫ້ພວກເຮົາທ້າທາຍ ແລະ ບໍ່ໃຫ້ຢ້ານໃຜອີກ.

ຕໍ່ມາພວກເພິ່ນໄດ້ມີການຈັດຕັ້ງໃຫ້ມີການເລືອກນາຍບ້ານໃໝ່ ແລະ ມີແຕ່ປະຊາຊົນເປັນຜູ້ເລືອກເອງ. ພວກເພິ່ນບໍ່ອະນຸຍາດໃຫ້ເລືອກຜູ້ທີ່ເຄີຍຂູດຮີດປະຊາຊົນມາກ່ອນ ຈາກນັ້ນ ພວກເພິ່ນກໍຈັດຕັ້ງອົງການຊາວໜຸ່ມ, ສະມາຄົມແມ່ຍິງ ແລະ ກຸ່ມສະຫະກອນ. ຈະເຮັດຫຍັງພວກເຮົາກໍຕ້ອງໄດ້ຊ່ວຍກັນເຮັດ. ພວກເພິ່ນບໍ່ອະນຸຍາດໃຫ້ມີຄວາມທຸກຍາກຕໍ່ໄປ ທຸກຄົນຕ້ອງຊ່ວຍກັນໃນທຸກດ້ານ ນີ້ຄືມີການປ່ຽນແປງ. ນອກນີ້ກໍມີການປ່ຽນແປງດ້ານການເມືອງ. ພວກເພິ່ນຕັ້ງໂຮງຮຽນ ແລະ ສອນໜັງສືແບບໃໝ່ ແລະ ບໍ່ສິດສອນແບບທີ່ເຄີຍປະຕິບັດມາ. ພວກເພິ່ນເອົາໃຈໃສ່ໃນການສອນໜັງສືລາວ. ໃນເມື່ອກ່ອນມີລູກສິດແຕ່ 10 ຄົນ ສ່ວນ

ຫຼາຍມີແຕ່ຜູ້ໃຫຍ່ແລ້ວ ມາຮອດສະໄໝກອງແລ ມີ 30 ຄົນ ມີທັງຜູ້ນ້ອຍ ແລະ ຜູ້ໃຫຍ່. ມາຮອດສະໄໝປະເທດລາວ ມີນັກຮຽນ 42 ຄົນ ມີທັງ ຜູ້ນ້ອຍ ແລະ ຜູ້ໃຫຍ່. ນອກຈາກນີ້ ເພິ່ນຍັງຕັ້ງໂຮງຮຽນປະຊາສຶກສາ ເພື່ອເຮັດໃຫ້ຜູ້ທີ່ມີອາຍຸແກ່ສາມາດອ່ານອອກຂຽນໄດ້ ແລະ ຮຽນການ ເມືອງ. ໃນຕອນທຳອິດມີຫຼາຍຄົນຢາກຮຽນ ແລະ ອີກຫຼາຍຄົນກໍລັ່ງເລ ໃຈບໍ່ຢາກຮຽນ ແຕ່ຕໍ່ມາພວກເຂົາກໍເຫັນຈະແຈ້ງວ່າ ຜູ້ທີ່ໄປຮຽນກໍແມ່ນ ອ່ານອອກຂຽນໄດ້ແທ້. ເຮັດໃຫ້ໃຜໆກໍມີຈິດໃຈຢາກຮຽນ.

ໃນສະໄໝເກົ່າ ພາສາຝະລັ່ງແມ່ນມີສິດເໜືອກວ່າພາສາລາວ ສ່ວນມາຮອດສະໄໝປະເທດລາວ ແມ່ນຕ້ອງຮຽນພາສາລາວເທົ່ານັ້ນ. ໃນຕອນນັ້ນ ສົງຄາມຍັງກຳລັງດຳເນີນໄປໃນເຂດຂອງພວກເຮົາ ຊຶ່ງເຮັດ ໃຫ້ຊີວິດການເປັນຢູ່ຫຍຸ້ງຍາກຫຼາຍ ການເຮັດນາກໍບໍ່ງ່າຍຄືເກົ່າ ເພາະ ວ່າ ບ້ານພວກເຮົາແມ່ນຢູ່ລະຫວ່າງ ເມືອງສຸຍ ແລະ ທົ່ງໄຫຫີນ ລູກປືນ ໃຫຍ່ມັກມາຕົກໃສ່ທົ່ງນາ ແລະ ເຮັດໃຫ້ງົວ ຄວາຍຕາຍ. ໃນລະຫວ່າງປີ 1967-1968 ມີຍົນມາຍິງ ແລະ ຖິ້ມລະເບີດໃສ່ພູຜາ ແລະ ປ່າໄມ້ ຈາກນັ້ນ ກໍມາຖິ້ມລະເບີດໃສ່ບ້ານ ໃສ່ເຮືອນ ໃສ່ວັດ ແລະ ໂຮງຮຽນ ພາໃຫ້ມີການເສຍຫາຍໜັກ ທົ່ງນາກໍຖືກທຳລາຍ ງົວ ຄວາຍ ກໍຕາຍ ຍ້ອນລະເບີດ ຈັ່ງແມ່ນໂຫດຫ້ຽມສາມານ. ຕອນນັ້ນ ທົ່ງນາກວ່າ 60% ເສຍຫາຍ ແລະ ບໍ່ມີເຮືອນຈັກຫຼັງເຫຼືອໃຫ້ເຫັນ. ມີຕອນໜຶ່ງຍົນມາຍິງ 3 ມື້ລຸ່ນຕິດແບບບໍ່ຢຸດບໍ່ເຊົາ.

ຈາກນັ້ນພວກເຮົາກໍໄປລີ້ຢູ່ປ່າອີກ ເພາະບໍ່ມີເຮືອນເຫຼືອຈັກຫຼັງ ພວກເຮົາບໍ່ສາມາດຢູ່ໃນຂຸມຄອງທີ່ຂຸດໄວ້ໃນບ້ານອີກຕໍ່ໄປ ເນື່ອງຈາກ ບາງບ່ອນມີຍົນມາຍິງ ເຮັດໃຫ້ພວກເຮົາຢ້ານ ແລະ ກໍ່ບໍ່ກ້າຢູ່ອີກ. ໃນ ບ້ານຂ້ອຍ ມີຄອບຄົວໜຶ່ງພາກັນຕາຍໝົດ ໃນຂຸມຄອງຍ້ອນລະເບີດຕົກ ແຕກໃສ່. ເມື່ອພວກເຮົາໄປຢູ່ປ່າ ຍົນກໍຍັງສືບຕໍ່ໄປຍິງທຳລາຍອີກ ເພາະ ພວກເຂົາສົງໄສວ່າ ຈະມີທະຫານຫວຽດນາມຢູ່ແຖວນັ້ນ ແຕ່ຄວາມຈິງ ແລ້ວແມ່ນບໍ່ມີ. ຜົນຂອງການຖິ້ມລະເບີດ ເຮັດໃຫ້ເດັກນ້ອຍສອງຄົນຕາຍ ເພາະລີ້ເຂົ້າຮູບໍ່ທັນ ແລະ ຊັບສິນກໍ່ເສຍຫາຍເຊັ່ນກັນ.

ຊີວິດການເປັນຢູ່ ໃນເຂດທີ່ພວກເຮົາອາໄສຢູ່ ແມ່ນສຸດທີ່ຫຍຸ້ງຍາກ. ພວກຄົນຕິດຢູ່ກັບປ່າດົງ ແລະ ໃນບ້ານ. ຄວາມຈິງແລ້ວ ພວກເຮົາບໍ່ເຫັນວ່າ ມີຍິນຖິ້ມລະເບີດໃສ່ທະຫານ. ເຖິງພວກເຂົາຖິ້ມລະເບີດໃສ່ທະຫານ ພວກເຮົາກໍ່ບໍ່ເຄີຍໄດ້ຍິນ. ນອກຈາກນີ້ ຍິນຍັງມາຖິ້ມຢາພິດ ເຮັດໃຫ້ງົວ ຄວາຍຕາຍ ເພາະເມື່ອເຂົາຖິ້ມລົງໃສ່ປ່າດົງ ແລະ ສັດກໍ່ບໍ່ຮູ້ວ່າມັນແມ່ນຫຍັງ. ງົວ ຄວາຍຈະໄປກິນຫຍ້າທີ່ມີສານພິດ ເມື່ອມາຮອດເຮືອນກໍຕາຍ. ບາງຄັ້ງກໍເຫັນເຂົາຖິ້ມເຄມີໃສ່ຫ້ວຍນ້ຳ ແລະ ທົ່ງນາ ເຮັດໃຫ້ ເປັດ ໄກ່ ແລະ ໝູ ຕາຍຍ້ອນຢາພິດນີ້.

ຈາກນັ້ນມາ ໃນເດືອນ 9 ປີ 1968 ພວກເຮົາຈຳເປັນຕ້ອງໜີຈາກບ້ານໄປຢູ່ແຫ່ງໃໝ່ ຊຶ່ງໄກຈາກບ່ອນເກົ່າ 6 ຫຼັກ. ບ່ອນນີ້ໃກ້ກັບຕີນພູ ໃກ້ກັບປ່າດົງໃຫຍ່. ພວກເຮົາເຮັດບ່ອນພັກ ແລະ ຂຸດຂຸມລີ້ໄພຢູ່ນຳກັນ. ພໍຕົກຮອດຍາມຝົນມາ ຂຸມກໍເຕັມໄປດ້ວຍຂີ້ຕົມ ພວກຜູ້ເຖົ້າ ແລະ ເດັກນ້ອຍກໍຕາຍ ເພາະປ່ຽກຂຸມດ້ວຍຂີ້ຕົມ ແລະ ບໍ່ມີເວລາອອກມາຕາກແດດ. ງົວ ຄວາຍຈຳນວນຫຼາຍຕາຍໝົດ ຍ້ອນຍິນຍິງ ມີແຕ່ສັດຈຳນວນໜ້ອຍດຽວທີ່ບໍ່ຖືກລະເບີດ ແລະ ບໍ່ຮູ້ວ່າພວກມັນແລ່ນໄປທາງໃດ. ຂ້ອຍເສຍໃຈຫຼາຍທີ່ສຸດທີ່ງົວ ຄວາຍທີ່ຂ້ອຍລ້ຽງມາຫຼາຍປີ ຕ້ອງມາຕາຍໝົດ. ຍ້ອນສົງຄາມ ຈຶ່ງເຮັດໃຫ້ຂ້ອຍຕ້ອງສູນເສຍໝົດທຸກຢ່າງບໍ່ວ່າແຕ່ເຮືອນຊານ ໄຮ່ນາ ແລະ ສັດລ້ຽງທີ່ມີຢູ່.

ນອກຈາກນີ້ ຍັງມີຊາວບ້ານຈຳນວນຫຼວງຫຼາຍທີ່ເສຍຊີວິດ. ກ່ອນຈາກມາອາໄສຢູ່ທີ່ນີ້ ຂ້ອຍຖືໂອກາດໄປຢາມບ້ານເດີມ ສິ່ງທີ່ຍັງຫຼົງເຫຼືອຢູ່ກໍ່ມີແຕ່ກະດູກງົວ ຄວາຍເທົ່ານັ້ນ.

ໃນເດືອນ 9 ປີ 1969 ຝ່າຍລັດຖະບານຕີຢຶດເອົາເຂດບ້ານຂ້ອຍ ແລະ ໄດ້ກວາດຕ້ອນເອົາພວກເຮົາໃສ່ຍິນມາຢູ່ລ່ອງແຈ້ງ. ສຳລັບຂ້ອຍແລ້ວ ແມ່ນບໍ່ຢາກຈາກລາມາເລີຍ ແຕ່ມັນຈຳເປັນ ເພາະຖ້າຢູ່ກໍ່ບໍ່ມີຫຍັງເຫຼືອອີກແລ້ວ. ຍ້ອນເຫດນີ້ ຂ້ອຍ ແລະ ເພື່ອນບ້ານຈຳໃຈຕ້ອງຈາກບ້ານເກີດເມືອງນອນມາ.

ນັບແຕ່ມາຢູ່ວຽງຈັນ ສິ່ງທີ່ດີກໍມີພຽງແຕ່ວ່າ ບໍ່ຢ້ານຍິນມາຍິງຄື

ເກົ່າອີກ. ຖ້າຫາກບໍ່ມີສົງຄາມ ກໍຄົງບໍ່ຢາກຢູ່ບ່ອນນີ້ອີກ. ເຖິງວ່າລັດຖະບານຈະຄວບຄຸມເຮົາປານໃດກໍຕາມ ແຕ່ຂ້ອຍກໍຍັງບໍ່ເຄີຍລືມໄຮ່ນາ ພູຜາ ແລະ ປ່າດົງທີ່ເຄີຍໃຊ້ຊີວິດມາກ່ອນ. ບ້ານເກີດຂ້ອຍເຖິງຈະເປັນບ້ານນອກ ບໍ່ມີການພັດທະນາ ແຕ່ມັນກໍບໍ່ເປັນຫຍັງ ເພາະມັນແມ່ນບ່ອນທີ່ລ້ຽງເກືອໃຫ້ຊີວິດຂ້ອຍມາ ແລະ ມັນເປັນຖິ່ນກຳເນີດຂອງບັນພະບູລຸດທີ່ເຄີຍຢູ່ມາເປັນເວລາຍາວນານ. ຖິ່ນນີ້ແມ່ນມີແຕ່ອັດອາອາຮາມ ແລະ ມີແຕ່ຄວາມອຸດົມສົມບູນ ທັງອາກາດກໍບໍລິສຸດ ແລະ ເປັນສະຖານທີ່ສວຍງາມອີກນຳ.

ນັບແຕ່ຂ້ອຍມາຢູ່ວຽງຈັນ ຂ້ອຍເຈັບປ່ວຍເລື້ອຍໆ ເພາະອາກາດມັນຮ້ອນເອົ້າ ແລະ ຂ້ອຍກໍແພ້ອາກາດ. ມີພວກເດັກນ້ອຍຫຼາຍຄົນຕາຍຍ້ອນພະຍາດ. ນອກນັ້ນ ຍັງບໍ່ມີໄມ້ສຳລັບເຮັດເຮືອນ ແລະ ພວກເຮົາກໍບໍ່ມີເຮືອນເປັນຫຼັກເປັນຖານຢູ່. ເມື່ອໃດສົງຄາມສະຫງົບລົງ ຂ້ອຍຈະກັບຄືນໄປມື້ນັ້ນທັນທີ ຖ້າວ່າບໍ່ມີຍີນ ໃຫ້ຍ່າງກັບໄປຂ້ອຍກໍຈະຍ່າງ.

ສານພິດທີ່ປ່ອຍລົງມາຈາກຍົນ




ແຕ້ມໂດຍ : ຊາຍໜຸ່ມ ໄວ 16 ປີ

ນີ້ແມ່ນຮູບສະພາບຄົນຕາຍ ທີ່ຂ້ອຍເຫັນ. ວັນໜຶ່ງໃນຂະນະທີ່ພວກຂ້ອຍແລ່ນລົງຂຸມແລ້ວ ແຕ່ຍັງມີຄົນຈຳນວນໜຶ່ງຍັງຢູ່ນອກ ແລະ ບໍ່ຮູ້ວ່າຍົນມາຖິ້ມລະເບີດ. ມີຜູ້ຊາຍຜູ້ໜຶ່ງຖືກລະເບີດແຫກທ້ອງໄສ້ໄຫຼອອກມາ ພ້ອມມີເລືອດໄຫຼອອກມາຢ່າງຫຼວງຫຼາຍ. ຈັ່ງແມ່ນເປັນຕາຢ້ານ. ເມື່ອມີຊາຍຜູ້ໜຶ່ງອອກໄປຊ່ວຍລາວ ແຕ່ເມື່ອໄປເຫັນສະພາບແລ້ວ ລາວກໍຢ້ານຫຼາຍ ແລະ ບໍ່ກ້າເຂົ້າໄປຊ່ວຍ. ເລື່ອງນີ້ ແມ່ນໝູ່ຂອງຂ້ອຍ ຊຶ່ງຢູ່ບ້ານດຽວກັນເລົ່າສູ່ຟັງ.



ພາບໂດຍ : ຊາຍອາຍຸ 28 ປີ

ກ. ຢູ່ບ້ານຂ້ອຍມີແຕ່ເຮັດໄຮ່ທຳນາຫາລ້ຽງຊີບຕາມທີ່ເຄີຍເຮັດມາ ແຕ່ຄວາມອຸດົມສົມບູນກໍ່ຖືກທຳລາຍຈາກຍົນຖິ້ມລະເບີດ ເຮັດໃຫ້ມີແຕ່ບອກ ແຕ່ຂຸມເຕັມໄປທົ່ວ. ນອກຈາກນີ້ ພັດຍັງມີສານພິດຫຼາຍຊະນິດທີ່ຖືກຖອກເທລົງມາ. ມີລະເບີດນາປານ (ລະເບີດເຄມີໄຟ) ທີ່ສາມາດໄໝ້ທັ້ງຄົນ ແລະ ເຮືອນຊານ ນອກນີ້ ກໍມີຢາພິດແບບເປັນໃບ ແລະ ເປັນເຈ້ຍທີ່ປົວຕາມລົມ ເມື່ອມີຄົນໄປຈັບກໍຈະໄໝ້ມື ຄືດັ່ງທີ່ເຫັນໃນຮູບພາບ. ນອກນີ້ກໍມີວັດຖຸຫຼາຍຢ່າງທີ່ພາໃຫ້ຄົນຕາຍໄດ້ ເຮັດໃຫ້ພວກເຮົາຢ້ານກົວທີ່ສຸດ ຈະໄປທາງໃດກໍຕ້ອງໄດ້ລະມັດລະວັງ.



ພາບໂດຍ : ຊາຍອາຍຸ 37 ປີ

ຂ. ຂ້ອຍຈະອະທິບາຍກ່ຽວກັບຢາພິດທີ່ຂ້ອຍຮູ້ ແລະ ເຫັນ ດັ່ງນີ້:

ຢາພິດຊະນິດນີ້ເປັນເສັ້ນແບບຍາວໆ. ຍິນຈະຖິ້ມລົງໃສ່ຕາມປ່າ ຕາມພູ ຕາມທົ່ງໄຮ່ ທົ່ງນາ. ຖ້າຫາກຖິ້ມລົງໃສ່ທົ່ງນາ ແລະ ຖືກຕົ້ນເຂົ້າ ເຂົ້າກໍຈະຕາຍ. ຖ້າຄົນໄປຈັບບາຍເຂົ້າກໍຈະອອກຮ້ອນຢ່າງຮຸນແຮງ. ຖ້າ ວ່າ ມັນຕົກໃສ່ຄົນທີ່ບໍ່ຮູ້ວ່າມັນແມ່ນຫຍັງ ຄົນນັ້ນກໍຈະຕາຍ. ສ່ວນຫຼາຍ ແມ່ນເດັກນ້ອຍອາຍຸ ລະຫວ່າງ 8-10 ທີ່ບໍ່ຮູ້ຈັກຫຍັງ.

ພາບໂດຍ : ຍິງອາຍຸ 22 ປີ

ຄ. ໃນປີ 1968 ມີຍົນຫຼາຍຊະນິດມາຂ້າຄົນ. ໃນສົງຄາມຊຽງຂວາງ ຂ້ອຍເຫັນຢາພິດຄ້າຍຄືຂະໜົມອົມໃນຫໍ່. ພວກເຮົາບໍ່ຮູ້ວ່າກິນໄດ້ຫຼືບໍ່ ແຕ່ບາງຄັ້ງຜູ້ບໍ່ຮູ້ກໍກິນ ຫຼັງຈາກກິນແລ້ວກໍມີອາການມືນເມົາ ແລະ ເລືອດ ແຕກປາກ ແຕກດັງ ແລະ ມີຄວາມທໍລະມານຫຼາຍອັນກ່ອນຕາຍ. ແຕ່ລະ ວັນ ຍົນບິນມາຖິ້ມລະເບີດບໍ່ຂາດສາຍ ທຸກຄົນມີແຕ່ຄອຍຖ້າວ່າ ວັນໃດ ຈະຕາຍເທົ່ານັ້ນ. ນອກນີ້ ຍົນຍັງຖິ້ມຢາພິດ ແລະ ລະເບີດນາປານໃສ່ ບ້ານເຮືອນ ແລະ ພູຜາ ປ່າດົງ ທຸກບ່ອນທີ່ມີປະຊາຊົນອາໄສຢູ່.

ພວກເຮົາພາກັນລີ້ຢູ່ໃນຂຸມຄອງຕະຫຼອດເວລາ

ຊາວນາ ໄວ 51 ປີ

ຂ້ອຍເປັນຄົນລາວ ຕອນນີ້ອາຍຸຂ້ອຍໄດ້ 51 ປີ. ຂ້ອຍເກີດ ແລະ ເຕີບໃຫຍ່ຢູ່ນາລ້ອງນ້ອຍ, ບ້ານເກົ່ງ, ເມືອງແປກ, ແຂວງຊຽງຂວາງ. ບ້ານເກົ່າຂອງຂ້ອຍມີຄວາມສວຍງາມ ແລະ ອຸດົມສົມບູນ ຢາກໄດ້ຫຍັງ ກໍມີໝົດຕາມຄວາມຕ້ອງການ. ຂ້ອຍມີເຮືອນໄມ້, ມຸງຫຍ້າ, ອ້ອມຮອບ ແມ່ນມີພູຜາ ແລະ ທົ່ງນາທີ່ສວຍງາມ. ຢູ່ໃກ້ບ້ານກໍມີນ້ຳງື່ມ. ຂ້ອຍເປັນ ຄົນມັກເຮັດວຽກ ແລະ ໃຊ້ຊີວິດຕາມແບບດັ້ງເດີມ ເຊັ່ນ : ປູກຕົ້ນໄມ້ ແລະ ຂຸດໜອງປາ. ນັບແຕ່ຂ້ອຍຮູ້ຄວາມມາ ພໍ່ແມ່ຂອງຂ້ອຍພາສ້າງສາ ຫຼາຍຢ່າງ ແຕ່ສິ່ງທີ່ຂ້ອຍມັກແມ່ນການສ້າງຄວາມອຸດົມພູນສຸກ. ບໍ່ມີສິ່ງ ໃດມາສັ່ນຄອນເຈດຕະນາລົມຂອງຂ້ອຍ ໃນການສ້າງສາຄວາມກ້າວໜ້າ. ອາກາດແຖວບ້ານຂ້ອຍເຢັນສະບາຍ ແລະ ເຕັມໄປດ້ວຍໝອກກົ້ວທົ່ວດົນ ແດນ. ໃນລະດູການເຮັດໄຮ່ທຳນາ ພວກເຮົາກໍພາກັນໄປເຮັດວຽກໄຮ່ ການນາພ້ອມກັນ, ຍາມເຮັດສວນພວກເຮົາກໍເຮັດນຳກັນ. ມັນແມ່ນຄວາມ ປາຖະໜາຂອງຂ້ອຍ ທີ່ຄິດຢາກສ້າງສາໃຫ້ໄດ້ຫຼາຍກວ່າ ໃນສິ່ງທີ່ຂ້ອຍ ສາມາດເຮັດໄດ້. ຂ້ອຍເອງກໍມີເຮືອນງາມ ແລະ ມີສັດແປດສິບ ຫາ ເກົ້າສິບໂຕ ເຊັ່ນ: ງົວ, ຄວາຍ, ມ້າ ຢູ່ຕາມບ້ານ ແລະ ຕາມທົ່ງກໍມີສັດ ນ້ອຍເປັນຈຳນວນຫຼວງຫຼາຍ. ຂ້ອຍໃຊ້ຊີວິດຢ່າງສຸກສະບາຍ, ເພິ່ງພໍໃຈ

ແລະ ມີຄວາມສຸກກັບຄວາມໂຊກດີຂອງຂ້ອຍ. ຂ້ອຍມີທຸກສິ່ງທີ່ຂ້ອຍຕ້ອງການ ແລະ ບໍ່ເຄີຍຂໍຫຍັງຈາກຄົນອື່ນ. ຂ້ອຍມີນາຫຼາຍທົ່ງ ແຕ່ລະປີກໍໄດ້ເຂົ້າຈຳນວນຫຼວງຫຼາຍ. ໃນຄອບຄົວມີສະມາຊິກຢູ່ 13 ຄົນ ແຕ່ລະຄົນກໍມີແຕ່ຄວາມເບີກບານມ່ວນຊື່ນ ເພາະວ່າ ຢູ່ເຂດນີ້ອຸດົມສົມບູນ ແລະ ສວຍງາມ. ໃນຕອນຄ່ຳ ກໍຈະເຫັນຝູງສັດແຫ່ກັນມາເຂົ້າຄອກຢ່າງບໍ່ຂາດສາຍ ຫຼັງຈາກອອກໄປກິນຫຍ້າມາໝົດມື້. ເມື່ອເຫັນແລ້ວ ຂ້ອຍຮູ້ສຶກວ່າດີອີກດີໃຈ ເພາະບັນດາສັດເຫຼົ່ານີ້ ຂ້ອຍຮັກແພງພວກມັນຫຼາຍ ຄືແກ້ວຕາ ດວງໃຈ. ຖ້າຈຳເປັນຢາກໄດ້ເງິນຂ້ອຍກໍຂາຍສັດ ຫຼື ສົມບັດອື່ນໆອອກໄດ້.

ເມື່ອກ່າວເຖິງງານບຸນຕ່າງໆແລ້ວ ຂ້ອຍກໍໄດ້ຮ່ວມໃນງານບຸນກອງຫົດ ດ້ວຍຄວາມມ່ວນຊື່ນ. ໃນງານບຸນບັ້ງໄຟ ໃຜໆກໍພາກັນມ່ວນຊື່ນ ແລະ ນັບຖືຮີດເກົ່າຄອງເດີມສືບທອດມາ. ໃນງານບຸນນີ້ ຈະມີຄົນປະມານເຈັດແປດຮ້ອຍຄົນມາຮ່ວມ, ພວກຜູ້ບ່າວ, ຜູ້ສາວຈະພາກັນມ່ວນຊື່ນຢອກໄຍກັນກິນເຫຼົ້ານຳກັນ ແລະ ພາກັນໄປຢາມແຕ່ລະເຮືອນ. ງານບຸນເຫຼົ່ານີ້ ແມ່ນຈັດຂຶ້ນພາຍຫຼັງລະດູການເກັບກ່ຽວ ແລະ ເມື່ອເອົາເຂົ້າຂຶ້ນເລົ້າແລ້ວ. ໃນແຕ່ລະປີກໍມີງານບຸນທ້າຫາຫົກເທື່ອກໍມີ.

ການສ້າງສາວັດເປັນວຽກທີ່ບໍ່ສິ້ນສຸດຈັກເທື່ອ. ຂ້ອຍເອງກໍມີຄວາມມ່ວນຊື່ນໃນການດຳນາ, ການປຸກສ້າງເຮືອນ, ການເຮັດຮົ້ວ ເຮັດສວນ, ຟາດເຂົ້າ, ແກ່ຝຸ່ນໄປໃສ່ນາ ທຸກໆວຽກງານກໍລ້ວນແຕ່ຊ່ວຍກັນເຮັດ. ໃຜກໍພາກັນເຮັດຢ່າງບໍ່ຮູ້ອິດຮູ້ເມື່ອຍ ຊຶ່ງເຮັດໄປແລ້ວກໍເກີດດອກອອກຜົນຕາມມາ ບ່ວ່າວຽກງານໃດໃຜໆ ກໍເຮັດຕາມກຳລັງເທື່ອແຮງທີ່ມີ. ພາຍໃນບ້ານຈະເຮັດວຽກງານໃຫຍ່ ນ້ອຍກໍຊ່ວຍກັນ ແລະ ເກືອບວ່າບໍ່ຈຳເປັນຕ້ອງສົ່ນເປືອງເງິນຄຳໃນການຈ້າງຄົນອີກ. ນີ້ມັນສະແດງອອກວ່າພວກຊາວນາ ໃຜໆກໍມີຄວາມຮັກແພງກັນ. ຕົ້ນໄມ້ທີ່ຂ້ອຍປູກໃນບ້ານກໍຂຽວງາມດີ. ບັນດາຕົ້ນໄມ້ກິນໝາກກໍໃຫ້ໝາກດົກໜາ ແລະ ມີໝາກໄມ້ຫວານ ໝາກໄມ້ສົ້ມນາໆ ຊະນິດ ໃນເມື່ອມັນສຸກທຸກຄົນກໍໄດ້ກິນ. ໃນບ້ານຂອງຂ້ອຍຫຼາຍຄົນ ໃຜໆກໍມີເຮືອນງາມໆ ແລະ ບາງຄົນກໍ່ມີ

ການສັບຊ່າວນາໃຫ້ກວ້າງອອກໃນແຕ່ລະປີ ຈົນກະທັ້ງມາຮອດປີ 1962.

ມາຮອດຕອນນີ້ ຂ້ອຍມີແຕ່ຄວາມເຈັບແຄ້ນ ເພາະວ່າ ຄວາມສະຫງົບສຸກທີ່ເຄີຍມີມາແຕ່ກ່ອນກີ້ນັ້ນ ມາຕອນນີ້ ແມ່ນສິ່ງຄາມທຳລາຍເຂົ້າມາແທນທີ່. ຂ້ອຍບໍ່ເຄີຍໄດ້ຍິນສຽງແບບນີ້ມາກ່ອນ ໂດຍສະເພາະແມ່ນສຽງປືນໃຫຍ່ ແລະ ລູກປືນທີ່ຕົກໃກ້ເຂົ້າມາ. ຂ້ອຍຮູ້ສຶກຢ້ານກົວ ແລະ ບໍ່ກ້າອອກໄປຫາອາຫານ ຫຼື ອອກໄປເຮັດນາອີກ. ປີ 1963 ຈຳນວນລູກປືນໃຫຍ່ກໍຕົກມາໃສ່ຫຼາຍຂຶ້ນ ຈົນວ່າຂ້ອຍເອງກໍລົ້ງກັບມັນແລ້ວ ແລະ ກໍໃຊ້ຊີວິດຕາມເດີມ ເພາະມັນເປັນພຽງແຕ່ລູກປືນໃຫຍ່. ແຕ່ມັນກໍ່ເຮັດໃຫ້ສັດລ້ຽມຕາຍຫຼາຍພໍສົມຄວນ. ຂ້ອຍຕ້ອງຈຳໃຈນຳພາຄອບຄົວອອກເຮັດນາທ່າມກາງສຽງປືນໃຫຍ່. ເມື່ອສຽງປືນດັງເພີ່ມຂຶ້ນເລື້ອຍໆ ພວກເຮົາກໍພາກັນໄປລີ້ຕາມແຄມຄັນນາ ແຕກໍ່ບໍ່ລືມດຳລົງຊີວິດແບບຊາວໄຮ່ນາຕໍ່ໄປເລື້ອຍໆ. ການເຮັດບຸນສົ່ນກິນທານ ແລະ ການຊ່ວຍວຽກໃນການສ້າງສາ ແລະ ເຮັດນາກໍ່ຫຼຸດລົງ ແມ່ນແຕ່ວຽກການປູກຝັງ ກໍຈຳຕ້ອງໄດ້ຫຼຸດລົງ ເພາະມັນມີຄວາມຫຍຸ້ງຍາກຫຼາຍ. ໃນປີ 1964-1965 ບັນດາຍິນ ກໍມາຖິ້ມລະເບີດລົງໃສ່ຄ້າຍທະຫານ, ໃສ່ຂົວ ແລະ ໃສ່ຖະໜົນຫົນທາງຕ່າງໆ ພາຍໃນຕົວເມືອງ. ບ້ານຂ້ອຍ ແມ່ນເຂດຊົນນະບົດການໄປມາກໍ່ຍັງພໍເປັນໄປໄດ້ຢູ່ ແຕ່ພວກເຮົາກໍຍັງຢ້ານກົວຢູ່ບໍ່ແລ້ວ. ສ່ວນຫຼາຍເຮົາ ກໍພາກັນຢູ່ໃນບ້ານ ແລະ ບໍ່ກ້າອອກໄປຢາມພີ່ຢາມນ້ອງຄືແຕ່ກ່ອນ. ຂ້ອຍເອງກໍຍັງເຮັດນາຄືເກົ່າ ຄິດພຽງວ່າ ຍິນຈະມາຍິງແຕ່ແຖວຄ້າຍທະຫານ, ຍິງແຕ່ຕາມພູ ຕາມຜາ ແລະ ຕາມທາງເທົ່ານັ້ນ. ເຂົ້າປາອາຫານຂອງພວກເຮົາແມ່ນມີໜ້ອຍລົງເລື້ອຍໆ ຍັງເຫຼືອແຕ່ໜຶ່ງສ່ວນສາມເທົ່ານັ້ນ. ໃນບ້ານຂອງຂ້ອຍ ມີເຮືອນຫົກຫຼັງ ທີ່ຖືກໄຟໄໝ້ຈາກຍົນຍິງ ແລະ ຈາກການຖິ້ມລະເບີດ ດັ່ງນັ້ນ ພວກເຮົາຈຶ່ງພາກັນຂຸດຂຸມຄອງໃຫ້ໄກຈາກບ້ານອອກໄປ ແລະ ພາກັນນອນຢູ່ໃນຂຸມຕະຫຼອດເວລາ. ແຕ່ການຖິ້ມລະເບີດເພີ່ມຄວາມຮຸນແຮງຂຶ້ນເປັນລຳດັບ. ບໍ່ວ່າກາງເວັນ ຫຼື ກາງຄືນ ຍົນກໍມາຍິງຕະຫຼອດ ທົ່ວທ້ອງຟ້າເຕັມໄປດ້ວຍຄວັນລະເບີດ ແລະ ເຮັດໃຫ້ທົ່ວທັ້ງບ້ານມືດຄຶ້ມດ້ວຍຄວັນໄຟ. ຍາມໃດທີ່ຂ້ອຍຫຼຽວເບິ່ງ ກໍຈະເຫັນ

ແຕ່ຄວັນໄຟທີ່ໄໝ້ບັນດາບ້ານທີ່ຢູ່ໃກ້ຄຽງ. ເບິ່ງຄືວ່າ ຕ້ອງມີການບາດເຈັບລົ້ມຕາຍເປັນຈຳນວນຫຼວງຫຼາຍ ແຕ່ບໍ່ມີໃຜກ້າອອກໄປເກັບກູ້ສິ່ງຂອງພາຍໃນເຮືອນ ຫຼື ມອດໄຟ ເພາະຢ້ານລະເບີດ ແລະ ລູກປືນທີ່ຍິງມາຈາກຍົນຮົບ. ແຕ່ລະຄົນມີໃບໜ້າຈືດຈາງຄືກັບບໍ່ມີເລືອດ ເພາະຄວາມຢ້ານກົວ ແລະ ມີຄວາມຄຽດແຄ້ນ ຍ້ອນການສູນເສຍຊັບສົມບັດ ແລະ ສັດລ້ຽງພວກເຂົາ. ຂ້ອຍກໍຢູ່ໃນຂຸມທີ່ເລິກ ເພື່ອຫຼີກໜີຈາກຄວາມຕາຍ. ມັນຮ້າຍແຮງເຖິງຂັ້ນວ່າ ຈະເຮັດນາກໍຕ້ອງໄດ້ຂຸດຂຸມຢູ່ໃກ້ກັບນາ ເມື່ອໃດເຫັນຍົນມາກໍໂດດລົງຂຸມ. ຍາມຍ່າງອອກໄປກາງແຈ້ງ ກໍຕ້ອງຫັກຟົດໄມ້ກ້ຽງເປັນຝຸ່ນ ເພື່ອບໍ່ໃຫ້ຍົນເຫັນ. ການຜະລິດອາຫານແມ່ນຫຼຸດລົງຫຼາຍ ແລະ ການຫາອາຫານກໍຍາກຂຶ້ນກວ່າເກົ່າ. ພວກເຮົາກິນເຂົ້າລ້າ ບໍ່ມີອາຫານ ເຮັດໃຫ້ເມື່ອຍບໍ່ມີແຮງ. ພວກເຮົາຮູ້ວ່າ ໃນອະນາຄົດອັນໃກ້ ພວກເຮົາຈະຕ້ອງຂາດເຂີນອາຫານ ແລະ ສັດລ້ຽງກໍຈະຕາຍ. ສິ່ງທີ່ເຫຼືອກໍມີແຕ່ຂີ້ດິນເປັນບ່ອນອາໄສຢູ່. ຄວາມທຸກຈົນກຳລັງມາຢາມ ເພາະເລົ້າເຂົ້າ ແລະ ພືດທີ່ກຳລັງສຸກເຫຼືອງກໍຖືກທຳລາຍກ້ຽງບໍ່ມີຫຍັງເຫຼືອ.

ໃນໄລຍະສາມປີ ແຕ່ປີ 1967 ຮອດປີ 1969 ການຖິ້ມລະເບີດແມ່ນຮ້າຍແຮງຫຼາຍ ຍົນກໍມາຍິງບ້ານຖີ່ເຂົ້າກວ່າເກົ່າ. ເຮືອນຂ້ອຍຖືກລະເບີດນາປານ ແລະ ໄໝ້ກ້ຽງ ແມ່ນແຕ່ກໍໄຜ່ທີ່ປູກອ້ອມເຮືອນກໍມຸ່ນທະລາຍໝົດ. ທົ່ງນາແມ່ນຖືກລະເບີດລູກໃຫຍ່ທຳລາຍ ເຮືອນຫ້າຫຼັງ, ໄຮ່ ແລະ ນາ ພ້ອມກັບງົວຫ້າໂຕແມ່ນຖືກລະເບີດຕາຍ. ຂ້ອຍມາເສຍໃຈເຈັບແສບຫຼາຍ ເພາະແມ່ນແຕ່ເຮືອນກໍຍັງບໍ່ມີ. ຂ້ອຍສູ້ຊົນກັບຄວາມທຸກທໍລະມານ ຍາມນອນກໍນອນໃນກະຕູບໄມ້ນ້ອຍໆ. ເທົ່ານັ້ນຍັງບໍ່ພໍ ບັນດາຍົນກໍຍັງບິນຂ້າມຫົວທັງກາງເວັນ ແລະ ກາງຄືນ ເຮັດໃຫ້ມີຄວາມຢ້ານຕະຫຼອດເວລາ. ພວກເຮົາເຮັດເຮືອນຢູ່ເທິງຂຸມລີ້ ຍາມຍົນມາກໍລົງໄປລີ້ໃນຂຸມ ມີບາງຄັ້ງແມ່ນບໍ່ໄດ້ກິນອາຫານເລີຍ. ເວລາໃດລະເບີດແຕກໃກ້ກັບຂຸມຄອງ ກໍເຮັດໃຫ້ທົ່ວທຸກບ່ອນສັ່ນສະເທືອນ ແລະ ພາໃຫ້ນ້ຳຕາຕົກ. ໃນຕອນນັ້ນ ຂ້ອຍຄິດວ່າ ຍາມໃດສົງຄາມຈະສິ້ນສຸດ ຫຼື ມັນຈະແກ່ຍາວອອກໄປ. ໃນຊີວິດຂ້ອຍເຄີຍມີແຕ່ຄວາມສຸກ ແລະ ໄດ້ທຳບຸນມາ

ຫຼາຍແລ້ວ. ແມ່ນອນວ່າ ບຸນທີ່ສ້າງໄວ້ຈະກັບມາຊ່ວຍຂ້ອຍ. ເມື່ອເປັນເຊັ່ນນັ້ນແລ້ວ ຈຶ່ງຄິດຢາກສືບຕໍ່ມີຊີວິດຕໍ່ໄປ.

ໃນຍາມໂສກເສົ້າ ແລະ ເຈັບແຄ້ນແໜ້ນໃຈແນວນີ້ ກໍບໍ່ມີຈິດໃຈຢາກສ້າງສາຫຍັງຕື່ມ ເພາະຖ້າເຮັດໄປກໍຈະຖືກຍຶນມາທຳລາຍຄືເກົ່າ. ໃນເມື່ອກ່ອນ ຊີວິດສຸດແສນສະບາຍ ແລະ ມີແຕ່ຄວາມມ່ວນຊື່ນ ມາບັດນີ້ມີແຕ່ຄວາມໂສກເສົ້າເຂົ້າມາແທນທີ່ ຈະໄປທາງໃດກໍ່ໄປບໍ່ໄດ້. ຕື່ນມາມື້ເຊົ້າ ພໍແຕ່ໄດ້ປ່ອນຫົວອອກມາຈາກຂຸມ ພໍຍຶນມາກໍຫຼົບເຂົ້າຂຸມຄືນ. ພວກເຮົາຖືກບັງຄັບໃຫ້ປະຖົ້ມໄຮ່ ນາ ຮົ້ວສວນ ພວກເຮົາບໍ່ກ້າອອກມາຍ້ອນຢ້ານຍຶນຍິງ. ຂ້ອຍສຸມເຫື່ອແຮງໃສ່ໃນການຂຸດຂຸມສີ່ບ່ອນໄວ້ ແຕ່ລະຈຸດທີ່ຕ່າງກັນ.

ຂ້ອຍພະຍາຍາມຂຸດຂຸມໃຫ້ເລິກ ແລະ ຢູ່ແຕ່ໃນຂຸມຕະຫຼອດເວລາ. ໃນຕອນນັ້ນ ຊີວິດທີ່ເຄີຍຜາສຸກ ແມ່ນຈາງຫາຍໄປບໍ່ມີເຫຼືອ ທຸກຢ່າງມີແຕ່ຄວາມມິດງຽບ. ຄວາມທຸກຍາກ ແລະ ຄວາມຕ້ອງການເພີ່ມຂຶ້ນໃນແຕ່ລະວັນ ເພາະຂາດທັງນ້ຳກິນ, ຂາດເຂົ້າ ແລະ ຂາດປາ.

ເຫດການແນວນີ້ສືບຕໍ່ມາຈົນຮອດ ວັນທີ 8 ເດືອນ ມັງກອນ ປີ 1969 ເມື່ອກອງທັບແຫ່ງ ລາຊະອານາຈັກລາວ ຢຶດເອົາທົ່ງໄຫຫີນ ພວກເພິ່ນຈຶ່ງເອົາພວກເຮົາມາວຽງຈັນ ເພື່ອໃຫ້ປອດໄພຈາກອັນຕະລາຍ ແລະ ມີສຸຂະພາບທີ່ດີກວ່າ. ຂ້ອຍບໍ່ຢາກມາວຽງຈັນ ເພາະຄິດຮອດບ້ານເດີມ. ຂ້ອຍຄິດຮອດງົວ ຄວາຍ ແລະ ສັດຕ່າງໆຢູ່ທີ່ນັ້ນ. ອີກໃຈໜຶ່ງກໍຍ້ານສຽງປືນ ທີ່ຍິງບໍ່ຂາດໄລຍະ ດັ່ງນັ້ນ ຈຶ່ງຈຳໃຈໜີຈາກທົ່ງນາ, ຮົ້ວສວນ, ສັດ, ຕົ້ນໄມ້ ໜີມາແຕ່ໂຕລ້ອມຈ້ອມ. ເມື່ອຍິນບິນຂຶ້ນທ້ອງຟ້າ ແນມລົງມາເບື້ອງລຸ່ມ ເຮັດໃຫ້ຂ້ອຍຄິດຮອດບ້ານເດີມພໍໃຈຈະຂາດ ຄິດຮອດຊີວິດທີ່ເຄີຍຢູ່ດິນແດນແຫ່ງນີ້ ມາຕັ້ງແຕ່ເກີດຕະຫຼອດຊີວິດ.

ຂ້ອຍໜີມາດ້ວຍຄວາມໂສກເສົ້າ ຄິດຮອດງົວ ຄວາຍ ຊຶ່ງຂ້ອຍເຄີຍລ້ຽງເກືອມາດ້ວຍເຫື່ອແຮງທຸກໆ ວັນ. ຕໍ່ໄປນີ້ຈະມີໃຜເດຈະມາປົກປັກຮັກສາລ້ຽງເກືອມັນອີກ? ເມື່ອຫວນຄິດເຖິງສິ່ງເຫຼົ່ານີ້ແລ້ວ ກໍກັ້ນນ້ຳຕາໄວ້ບໍ່ໄດ້ ມັນໄຫຼອອກມາຕະຫຼອດຈົນຍຶນມາຮອດວຽງຈັນ. ຝ່າຍ

ລັດຖະບານໄດ້ຮັບຟັງການລາຍງານຂອງຂ້ອຍ ແລະ ຈັດການອຳນວຍຄວາມສະດວກໃຫ້ຂ້ອຍຢ່າງໄວວາ ເຮັດໃຫ້ຂ້ອຍວາງໃຈໄດ້. ເມື່ອຂ້ອຍຈະສັບຊ່າວນາ ຫຼື ຖາງໄຮ່ບ່ອນໃດກໍ່ພັດວ່າ ມີເຈົ້າຂອງໝົດແລ້ວ ແຕ່ວ່າທີ່ດິນທັງໝົດເປັນຂອງລັດຖະບານ. ດັ່ງນັ້ນ ຈຶ່ງເຮັດໃຫ້ຂ້ອຍບໍ່ຮູ້ຈັກຈະເຮັດແນວໃດ ເພາະບໍ່ມີດິນທຳກິນ. ໃນອະນາຄົດ ຖ້າລັດຖະບານຫາກມອບດິນໃຫ້ ຂ້ອຍກໍຈະຊ່າວ ແລະ ຫາລ້ຽງຊີບຕົນເອງໃຫ້ໄດ້. ໃນອະນາຄົດຂ້າງໜ້າ ຖ້າຫາກວ່າຂ້ອຍໂຊກດີ ຂ້ອຍຈະຂໍກັບຄືນໄປຫາບ້ານເກີດເມືອງນອນເກົ່າຂອງຂ້ອຍໃຫ້ໄດ້.



ແຕ້ມໂດຍ : ຊາຍອາຍຸ 38 ປີ


ນີ້ແມ່ນຕອນຍົນມາຍິງທຳລາຍບ້ານເຮືອນພວກເຮົາທັງໝົດ. ເຖິງວ່າ ພວກເຮົາເຮັດສຸດຄວາມສາມາດ ເພື່ອສັບຊ່າວນາຄືນໃໝ່ ມັນກໍຍາກຫຼາຍ ເພາະພວກເຮົາຕ້ອງໄປລີ້ຢູ່ປ່າ ຢູ່ພູຕະຫຼອດ ຈົນບໍ່ເຫັນຮອດແສງຕາເວັນ ແລະ ເຮັດໃຫ້ລູກຂອງພວກເຮົາມີຮ່າງກາຍຫຼ່າເຫຼືອງລີ້ງ. ຕອນທີ່ລຳບາກທີ່ສຸດ ແມ່ນຕອນທີ່ໄປລີ້ຢູ່ຂຸມຄອງໃຫຍ່ ທີ່ມີຄົນຫຼາຍຄົນຢູ່ນຳກັນ ແລະ ມີມື້ໜຶ່ງ ຍົນມາຖິ້ມລະເບີດຄວັນລົງໃສ່ຂຸມຂອງພວກເຮົາ

ເຮັດໃຫ້ພວກເຮົາພາກັນວິນຫົວ ແລະ ຮາກອອກເລືອດ ຈົ່ງເຮັດໃຫ້ພວກເຮົາແລ່ນໜີບໍ່ໄດ້. ຕ່າງຄົນພາກັນຮ້ອງຂໍຄວາມຊ່ວຍເຫຼືອນຳພີ່ນ້ອງ ຫຼື ໃຜທີ່ໄດ້ຍິນສຽງ. ນີ້ແມ່ນເຫດການທີ່ເກີດຂຶ້ນໃນບ້ານຂ້ອຍ.



ແຕ້ມໂດຍ : ຊາຍອາຍຸ 32 ປີ

ໃນເມື່ອກ່ອນ ບ້ານຂອງຂ້ອຍແມ່ນອຸດົມສົມບູນ ບໍ່ໄດ້ຢ້ານຫຍັງ ເພາະບໍ່ມີອັນຕະລາຍ ຄືກັບບ່ອນອື່ນ ໃນເມືອງລາວ. ແຕ່ພໍຮອດປີ 1965 ຍິນໄດ້ມາຖິ້ມລະເບີດລົງໃສ່ປະຊາຊົນຊຸງຂວາງ ແລະ ເຮັດໃຫ້ມີຄົນເຈັບຄົນຕາຍເປັນຈຳນວນຫຼວງຫຼາຍ. ໃນຮູບນີ້ຈະເຫັນວ່າ ມີຄົນຕາຍຫຼາຍຄົນໃນຂຸມຄອງ ເພາະເຂົາເຈົ້າອອກມາບໍ່ໄດ້. ຈະເຫັນແຕ່ຫົວ ຫຼື ແຂນຂາທີ່ພົ້ນອອກມາ. ຕໍ່ມາມີຊາຍຜູ້ໜຶ່ງມາຂຸດເອົາພວກເຂົາອອກມາ ເພາະຢູ່ໃນຂຸມຍັງມີເມຍ ແລະ ລູກຂອງລາວຖືກຝັງຢູ່ທາງໃນ.



ແຕ້ມໂດຍ : ຊາຍອາຍຸ 24 ປີ

ຄືນສອງຄືນນີ້ ແມ່ນພໍ່ກັບລູກຊາຍ ທີ່ບໍ່ມີແຂນ ບໍ່ມີຂາ ຍ້ອນລູກ ລະເບີດທີ່ຍິນຖິ້ມລົງມາ ແຕ່ຍັງບໍ່ທັນແຕກ. ພວກເຂົາຄິດວ່າ ມັນຈະບໍ່ແຕກ ແລະ ພາກັນຈັບຂຶ້ນມາເບິ່ງ ພໍມັນແຕກກໍເຮັດໃຫ້ພວກເຂົາຢູ່ໃນສະພາບ ທີ່ເຫັນນີ້. ຕອນນີ້ ພວກເຂົາເຮັດຫຍັງບໍ່ໄດ້. ພໍ່ ແລະ ລູກຊາຍ ຕັດສິນ ໃຈບໍ່ອອກມາກັບພວກເຮົາ. ຜູ້ເປັນພໍ່ກ່າວວ່າ ຈະບໍ່ໜີໄປໃສ ເຖິງວ່າ ຈະ ຕາຍກໍຕາມ ເພາະລາວເສົ້າໃຈໃນການສູນເສຍດິນນາ ແລະ ງົວ ຄວາຍ ໄປແລ້ວ. ເຖິງແມ່ນວ່າ ພວກເຂົາຈະບໍ່ສາມາດເຮັດວຽກໄດ້ ແຕ່ພວກເຂົາ ກໍຍັງເບິ່ງເຫັນຢູ່ ດັ່ງນັ້ນ ພວກເຂົາຈຶ່ງປະຕິເສດທີ່ຈະໜີໄປນຳພວກເຮົາ ແລະ ພວກເຂົາຍັງກ່າວວ່າ ເຖິງຈະໜີໄປໃສ ກໍບໍ່ພາໃຫ້ດີຂຶ້ນ. ດີທີ່ສຸດ ແມ່ນຂໍຕາຍຢູ່ບ້ານເກີດ ຊຶ່ງເປັນການຕັດສິນຂອງພໍ່ ແລະ ລູກຊາຍຄູ່ນີ້.



ແຕ້ມໂດຍ ຊາຍອາຍຸ 32 ປີ

ທຸກສິ່ງທຸກຢ່າງທີ່ພວກເຮົາເຫັນນີ້ ແມ່ນໄຟທີ່ມາຈາກລະເບີດໄຟ ເຕັມໄປໝົດທົ່ວທຸກບ່ອນ. ມື້ໜຶ່ງ ຂ້ອຍເຫັນຍົນບິນມາ ຂ້ອຍຈຶ່ງພາລູກ ຂ້ອຍປົບໜີ ແຕ່ລູກຂ້ອຍຖືກໄຟລວກຂ້ອຍຈຶ່ງພາລາວແລ່ນໄປໃນປ່າດົງ. ມີຄົນຫຼາຍຄົນພາກັນເກັບເອົາເຄື່ອງອອກຈາກເຮືອນ ພ້ອມກັບລູກຂອງ

ພວກເຂົາ. ແຕ່ເຮືອນພັດເກົ່າ ແລະ ໃຫຍ່ຫຼາຍ. ພວກເຂົາຖືກຍິນຍິງ ແລະ ຖືກໄຟໄໝ້. ສ່ວນພວກເຮົາບໍ່ກ້າກັບເຂົ້າໄປເອົາເຄື່ອງຂອງ. ນັບແຕ່ມື້ນັ້ນມາ ພວກເຮົາມີແຕ່ລີ້ຢູ່ໃນຂຸມຢູ່ໃນປ່າດົງນັ້ນ ເພາະເຮືອນພວກເຮົາເສຍຫາຍໝົດແລ້ວ. ພວກຂ້ອຍພາກັນເຮັດບ່ອນເຊົ່າຊົ່ວຄາວນ້ອຍໆພໍຢູ່ໄດ້.

"...ພວກເຮົາຕ້ອງຍ້າຍບ່ອນລີ້ຈາກບ່ອນໜຶ່ງຫາອີກບ່ອນໜຶ່ງເລື້ອຍໆ ຢູ່ໃນປ່າດົງ"

ຊາວນາ ອາຍຸ 39 ປີ

ເປັນຫຍັງຊາວອົບພະຍົບຈຶ່ງຈຳຕ້ອງໜີຈາກບ້ານເກີດເມືອງນອນ ທີ່ເຄີຍລ້ຽງເກືອພວກເຂົາມາເປັນເວລາຫຼາຍປີ ? ຂ້ອຍຂໍເລົ່າເລື່ອງລາວຕ່າງໆ ກ່ຽວກັບຊີວິດຂ້ອຍເອງດັ່ງນີ້.

ຂ້ອຍເກີດທີ່ບ້ານກາງແສນ ບ້ານຂອງຂ້ອຍມີທົ່ງນາກວ້າງໃຫຍ່ສຸດສາຍຫູສາຍຕາ ຍາວຢຽດຕັ້ງແຕ່ເໜືອລົງມາ. ເຮືອນຂອງຂ້ອຍຕັ້ງຢູ່ໃກ້ກັບທົ່ງນາ ຄອບຄົວຂອງຂ້ອຍເປັນຊາວນາໂດຍອາຊີບ ແລະ ອາໄສເຂົ້ານາທີ່ເກັບກ່ຽວໄດ້ແຕ່ລະປີ. ພວກເຮົາບໍ່ຈຳເປັນຕ້ອງຊື້ເຂົ້າໃຜກິນ. ຂ້ອຍເຮັດນາລ້ຽງຄອບຄົວ ແລະ ຕັ້ງໃຈທີ່ຈະເຮັດນາຕະຫຼອດໄປ. ບ້ານຂອງຂ້ອຍເປັນບ້ານທີ່ຢູ່ໃນເຂດຊົນນະບົດ ທ່າມກາງປ່າດົງ ແລະ ມີອາກາດສົດຊື່ນເຢັນສະບາຍ. ທົ່ງນາພວກຂ້ອຍແມ່ນກວ້າງຂວາງ ແລະ ງາມດີ. ນາພວກຂ້ອຍແມ່ນບໍ່ຈຳເປັນຕ້ອງໃສ່ຝຸ່ນ ເພາະມັນງາມຍ້ອນມີປ່າດົງອ້ອມຮອບ. ໃບໄມ້ທີ່ຕົກລົງມາ ກໍກາຍເປັນຝຸ່ນທີ່ດີສຳລັບນາ. ຍາມໃດຂ້ອຍກໍເຫັນເຂົ້າງອກງາມ ແລະ ພູມໃຈກັບນາເຂົ້ານີ້. ນອກຈາກນີ້ຂ້ອຍຍັງປູກຜັກ ແລະ ປູກຕົ້ນໄມ້ ເພາະເຮືອນຂອງຂ້ອຍມີສວນງາມ, ດິນກໍດີ ແລະ ສາມາດປູກໄດ້ຫຼາຍຢ່າງ. ແຕ່ລະປີຂ້ອຍກໍມີຄວາມສຸກ ເພາະຂ້ອຍເຮັດນາໄດ້ໄວກວ່າເພື່ອນບ້ານ. ໃນສວນກໍຍັງປູກໝາກຄາຍ, ໝາກຈອງ, ໝາກກ້ວຍ ແລະ ອ້ອຍ. ແຕ່ລະຊະນິດ ກໍມີປະມານ 10 ຕົ້ນ. ແຕ່ລະປີມັນກໍອອກໝາກດົກດີ ແລະ ຂ້ອຍໃຫ້ເມຍເອົາໄປຂາຍຢູ່ຕະຫຼາດ

ໃນຊຽງຂວາງ ເພາະຕອນນັ້ນ ບ້ານເມືອງກໍຍັງຢູ່ຊຸ່ມກົນເຢັນຢູ່.

ຝ່າຍລັດຖະບານກໍຍັງປົກຄອງເຂດນັ້ນຢູ່ ຖືວ່າ ທຸກຢ່າງກໍສະດວກສະບາຍດີ. ໃນຄວາມຄິດຂ້ອຍແລ້ວ ແມ່ນວ່າ ມັນຍັງບໍ່ທັນມີສິ່ງຄາມເທື່ອ ການຄ້າຂາຍກໍສະດວກສະບາຍ. ແຕ່ບ້ານຂອງຂ້ອຍພັດຢູ່ກາງປ່າ ກາງດົງເລິກເຂົ້າໄປ ແລະ ລົດກໍບໍ່ທັນໄປຮອດ ດັ່ງນັ້ນ ຈະໄປໃສມາໃສ ກໍຕ້ອງໃຊ້ມ້າ ຖ້າວ່າເດີນທາງໄກ. ແຕ່ຄອບຄົວຂ້ອຍ ແລະ ເພື່ອນບ້ານບໍ່ຈຳເປັນຕ້ອງຊື້ຫາຫຍັງຫຼາຍ ສຳຄັນກໍແມ່ນແນວມາຕ່ຳເປັນແຜ່ນຜ້າເຮັດເຄື່ອງນຸ່ງຫົ່ມ. ປະເພດອາຫານເຊັ່ນ ເຂົ້າ, ຊີ້ນ, ເປັດ, ໄກ່ ແລະ ປາ ແມ່ນພວກເຮົາລ້ຽງ ແລະ ຫາໄດ້ເອງ. ພວກເຮົາຊ່ວຍກັນເຮັດເຮືອນໂດຍມີການຕັດໄມ້ລ້ຽງແລ້ວ ກໍພາກັນເລື່ອຍ ແລະ ສ້າງເປັນເຮືອນ. ການຮ່ວມແຮງຮ່ວມໃຈແມ່ນອີງໃສ່ຄວາມສະໝັກໃຈ ແລະ ຍິນດີຊ່ວຍເຫຼືອກັນ. ເມື່ອຈະເຮັດຫຍັງ ພວກເຮົາກໍມາຊ່ວຍກັນຄືກັບວ່າ ເປັນພີ່ນ້ອງກັນ. ແຕ່ຕອນນັ້ນ ການສຶກສາແມ່ນຫາຍາກຫຼາຍ ເພາະມີໂຮງຮຽນພຽງສອງສາມຫຼັງ ແລະ ສ່ວນຫຼາຍກໍແມ່ນຕັ້ງຢູ່ໃນຕົວເມືອງ ສຳລັບຄົນເມືອງເທົ່ານັ້ນ. ບາງບ້ານກໍມີໂຮງຮຽນຫ້ອງດຽວ ແຕ່ຂ້ອຍບໍ່ສາມາດສົ່ງລູກໄປເຂົ້າຮຽນ ເພາະມັນຍັງໄກຫຼາຍ ແລະ ການໄປມາກໍບໍ່ສະດວກ. ໃນຕອນນັ້ນ ບໍ່ໄດ້ຮຽນກໍຍັງພາກັນສ້າງສາພັດທະນາໄດ້ຢູ່ ບໍ່ຮຽນກໍເຮັດນາກິນເຂົ້າໄດ້.

ຂ້ອຍຄິດວ່າ ຖ້າຫາກມີໂຮງຮຽນຢູ່ໃກ້ກໍຈະສົ່ງລູກໄປເຂົ້າຮຽນ. ໃນປີ 1958 ຂ້ອຍໄດ້ໄປເຮັດວຽກຂຸດແຮ່ທີ່ບ້ານມອນ. ຂ້ອຍເປັນລູກຈ້າງຝະລັ່ງໃຫຍ່ ເພື່ອຊອກຫາເງິນ. ຫຼັງຈາກນັ້ນ 16 ວັນ ຂ້ອຍເປັນໄຂ້ຈ່ຳກັບມາບ້ານ. ໃນປີນັ້ນ ຂ້ອຍບໍ່ສາມາດເຮັດນາໄດ້ ເພາະຍັງເຈັບໜັກ ມີພີ່ນ້ອງມາຊ່ວຍເຮັດນາ ແຕ່ແນວໃດກໍຍັງບໍ່ຄືຂ້ອຍເຮັດເອງ.

ສິ່ງທີ່ຂີ້ຮ້າຍຂອງບ້ານຂ້ອຍແມ່ນ ບໍ່ມີຢາປົວພະຍາດ ແລະ ບໍ່ມີໂຮງໝໍ ດັ່ງນັ້ນ ເມື່ອຂ້ອຍເຈັບ ຂ້ອຍຈຶ່ງຈຳເປັນຕ້ອງໄປໂຮງໝໍຢູ່ບ້ານບານ ທີ່ເມືອງຄຳ ເຊິ່ງໄກຈາກບ້ານຂ້ອຍປະມານ 90 ຫຼັກ. ຂ້ອຍຕ້ອງໄດ້ນອນໂຮງໝໍ ເພາະມັນໄກຈາກບ້ານທີ່ຈະທຽວ ສ່ວນເມຍຂ້ອຍກໍບໍ່ສາ

ມາດມາສົ່ງເຂົ້າ ເພາະບໍ່ມີໃຜເບິ່ງແຍງງົວ ຄວາຍ, ຮົ້ວສວນ ຫຼື ເບິ່ງລູກເຕົ້າ. ດັ່ງນັ້ນ ຂ້ອຍຈຶ່ງນອນໂຮງໝໍເປັນເວລາສອງເດືອນ ເສຍເງິນຄ່າປິ່ນປົວ 40.000 ກີບ. ຕອນນັ້ນ ບໍ່ມີການພັດທະນາທາງດ້ານສາທາລະນະສຸກ ຫຼື ການສຶກສາຄືທຸກວັນນີ້.

ໃນຕອນນັ້ນ ສິ່ງທີ່ມ່ວນທີ່ສຸດແມ່ນການເຮັດບຸນຢູ່ວັດ. ໃນລະດູການເກັບກ່ຽວ ພວກເຮົາກໍມາຊ່ວຍກັນເກັບກ່ຽວດ້ວຍຄວາມມ່ວນຊື່ນ ເພາະພວກຜູ້ບ່າວ ຜູ້ສາວຈະພາກັນຮ້ອງລຳ ແລະ ຟ້ອນຕາມທົ່ງນາ. ໃນຕອນນັ້ນ ພວກເຮົາບໍ່ຮູ້ຄວາມຕາຍ ແລະ ຂ້ອຍເອງກໍບໍ່ເຄີຍຄິດວ່າ ຈະຖືກຍິນຂີ້ນມາໄວ້ຢູ່ບ່ອນນີ້.

ປີ 1965 ຝ່າຍແນວລາວເຂົ້າມາປົດປ່ອຍບ້ານຂອງພວກເຮົາ ໃນບັ້ນຮົບຄັ້ງນັ້ນ ປະຊາຊົນພາກັນແຕກໜີໄປຄົນລະທິດລະທາງ ແຕ່ຂ້ອຍຕັດສິນໃຈບໍ່ໜີໄປໃສ ຈະເປັນແນວໃດກໍຊ່າງ. ຖ້າຂ້ອຍປົບໜີ ຂ້ອຍຈະບໍ່ມີໂອກາດໄດ້ເຮັດນາ ຖ້າບໍ່ເຮັດນາຈະເອົາເຂົ້າແຕ່ໃສມາກິນ ງົວ ຄວາຍ ກໍຈະເຂົ້າທຳລາຍຮົ້ວ ທຳລາຍສວນ. ຫຼັງຈາກນັ້ນ ກໍມີການປ່ຽນແປງອັນໃຫຍ່ຫຼວງໃນແບບວິທີການເຮັດນາ, ການສຶກສາ ແລະ ການເມືອງ. ຊີວິດກໍມີການປ່ຽນແປງຄັ້ງໃຫຍ່, ເຖິງແມ່ນວ່າ ຮູບການນັບຖືຮີດຄອງປະເພນີຈະຍັງຮັກສາຄືເກົ່າ, ການເຮັດນາກໍສືບຕໍ່ຄືເກົ່າ ໂດຍບໍ່ມີການຈຳກັດຮັດແຄບ. ແຕ່ກ່ອນມີການຫຼິ້ນໄພ້, ຫຼິ້ນຫວຍ, ສູບຢາຝິ່ນ ແລະ ມີຂໍ້ຫ້າມໃນຕົວເມືອງ. ມາຕອນນີ້ ແມ່ນແຕ່ໃນເຂດຊົນນະບົດ ຜູ້ທີ່ເຄີຍທຸກຍາກກໍຍັງມີຢູ່ມີກິນ ເພາະມີໄຮ່ ນາເພື່ອປູກຝັງ ແລະ ມີເຂົ້າພໍຢູ່ພໍກິນ ແລະ ບໍ່ພຽງແຕ່ມີການປ່ຽນແປງຈາກສັງຄົມແບບເກົ່າ ແຕ່ເພິ່ນຍັງປ່ຽນແນວຄວາມຄິດແບບເກົ່າຂອງພວກເຮົານຳອີກ. ເມື່ອພວກເພິ່ນເຂົ້າມາກໍມີການຈັດຕັ້ງຕ່າງໆ ແລະ ຕັ້ງສະມາຄົມຂຶ້ນຫຼາຍແບບ. ໃນບ້ານພວກເຮົາກໍຍັງມີໂຮງຮຽນ ຊຶ່ງມີນາຍຄູຈາກບ້ານພວກເຮົາເອງ ແລະ ຂ້ອຍກໍ່ສາມາດສົ່ງລູກເຂົ້າຮຽນໄດ້. ພວກເພິ່ນຕັ້ງໂຮງຮຽນປະຖົມ ແລະ ໂຮງຮຽນສຳລັບຜູ້ໃຫຍ່ ດັ່ງນັ້ນ ຂ້ອຍຈຶ່ງມີໂອກາດສືບຕໍ່ຮຽນໃນຍາມກາງຄືນ. ຕອນກາງເວັນ ຂ້ອຍກໍໄປເຮັດນາ ກັບຊາວນາຜູ້ອື່ນໆ ແລະ ເຮັດສວນ

ເພື່ອດຳເນີນຊີວິດຕາມປົກກະຕິ. ຂ້ອຍລ້ຽງໝູ, ເປັດ, ໄກ່ ແລະ ນຳໄປ ຂາຍໃຫ້ສະຫະກອນ ຫຼື ຂາຍໃຫ້ຊາວບ້ານນຳກັນ. ໝາຍຄວາມວ່າ ຊີວິດ ໃນເຂດຊົນນະບົດ ແມ່ນກຸ້ມຕົນເອງ ແລະ ສິ່ງທີ່ບໍ່ຄືແຕ່ກ່ອນແມ່ນວ່າ ວັດ ຖຸພັນແມ່ນມາຈາກວຽງຈັນທັງໝົດ ຊຶ່ງພວກພໍ່ຄ້າ ແມ່ຄ້າໃຫຍ່ນຳມາຂາຍ. ພາຍຫຼັງປີ 1965-1966 ບໍ່ມີພວກພໍ່ຄ້າໃຫຍ່ມາອີກ ຖ້າໃຜຕ້ອງການຊື້ ສິນຄ້າ ກໍຊື້ນຳສະຫະກອນ ຫຼື ນຳເອົາເຂົ້າໄປແລກປ່ຽນເຄື່ອງນຸ່ງ ແລະ ຜ້າທີ່ມນຳສະຫະກອນກໍ່ໄດ້. ໃນຕອນນັ້ນ ທຸກຄົນກໍພາກັນເຮັດໄຮ່ ເຮັດ ນາຫຼາຍຂຶ້ນ ແລະ ຂ້ອຍກໍ່ບໍ່ສາມາດຂາຍໝາກໄມ້ ແລະ ຜັກໄດ້ຫຼາຍ ຄື ແຕ່ກ່ອນ ຕອນຍັງມີໜ້ອຍຄົນພາກັນເຮັດ.

ມາຮອດ ປີ 1965 ຊີວິດພວກຂ້ອຍ ພົບກັບຄວາມທຸກທໍລະມານ ຫຼາຍທີ່ສຸດ ເພາະມີຍົນມາຍິງ ແລະ ຖິ້ມລະເບີດໃສ່ເສັ້ນທາງຕາມປ່າ ຕາມພູ ພວກເຮົາຈຳເປັນຕ້ອງໄປຂຸດຂຸມຢູ່ໃນປ່າເລິກ. ຊີວິດຄັບແຄ້ນ ແລະ ບໍ່ມີຄວາມສຸກເໝືອນແຕ່ກ່ອນ ເພາະມີຍົນມາຍິງ. ໃນຕອນທຳອິດ ທີ່ຍົນມາຍິງ ກໍບໍ່ໄດ້ຖິ້ມລະເບີດໃສ່ບ້ານ ຫຼື ວັດເທື່ອ. ເຖິງພວກເຮົາຢ້ານ ພວກເຮົາກໍ່ຍັງສາມາດເຮັດນາ ແລະ ສາມາດໄປຕະຫຼາດໄດ້ຢູ່. ຕອນນັ້ນ ພວກເຮົາຂຸດຂຸມໃກ້ກັບບ້ານ ແລະ ບໍ່ຈຳເປັນໜີໄປໄກ ເພື່ອຫຼົບລະເບີດ.

ມາວັນໜຶ່ງ ໃນປີ 1966 ໃນຂະນະທີ່ຂ້ອຍກຳລັງໄຖນາຢູ່ ປະມານ ແປດໂມງເຊົ້າ ມີຍົນສີ່ລຳ ບິນມາຖິ້ມລະເບີດໃສ່ວັດປ່າຂອງບ້ານຂ້ອຍ. ເມື່ອຂ້ອຍກັບມາບ້ານກໍ່ພົບວ່າ ວັດຖືກທຳລາຍ ແຕ່ເປັນຈັ່ງບຸນທີ່ບໍ່ມີໃຜ ຕາຍ. ຈາກວັນນັ້ນເປັນຕົ້ນມາ ພວກຂ້ອຍພາກັນຢ້ານ. ນາຍບ້ານໄດ້ ບອກໃຫ້ພວກເຮົາພາກັນຂຸດຂຸມລີ້ໄພໃນປ່າ. ຂ້ອຍຂຸດຂຸມຢູ່ຫ່າງຈາກ ບ້ານປະມານສອງກິໂລແມັດ. ຂ້ອຍໃຫ້ພວກລູກນອນໃນຂຸມ ແລະ ກັບ ມາເຝົ້າເຮືອນ. ເມື່ອໃດໄດ້ຍົນສຽງຍົນ ແມ່ນຕ້ອງແລ່ນເຂົ້າຂຸມລີ້ໄພ.

ໃນໄລຍະເດືອນແປດ ປີ 1967 ຍົນໄດ້ມາຍິງບ້ານພວກເຮົາ ຕອນນັ້ນ ຂ້ອຍກຳລັງເປ້ເຂົ້າເມືອສູ່ລູກ ສູ່ເມຍທີ່ຢູ່ໃນປ່າກິນ. ຖ້າວ່າຂ້ອຍ ຫາກຍັງຢູ່ໃນບ້ານ ຂ້ອຍອາດຖືກລະເບີດຕາຍໄປແລ້ວ. ໃນມື້ນັ້ນ ສິ່ງ ຂອງໃນເຮືອນຂອງຂ້ອຍແມ່ນເສຍຫາຍໝົດ ເຮືອນຖືກໄຟໄໝ້ກ້ຽງບໍ່ມີ

ຫຍ້ງເຫຼືອ. ໝູ, ເປັດ, ໄກ່ພາ ກັນແລ່ນເຂົ້າປ່າ ຂ້ອຍຊອກແນວໃດກໍບໍ່ເຫັນ ເພາະວ່າພວກມັນຢ້ານ.

ຈາກນັ້ນມາ ຍົນກໍມາຍິງທຸກວັນ ຫຼັງຈາກມາຖິ້ມລະເບີດໃສ່ບ້ານ ແລ້ວ ມັນຍັງຍິງ ແລະ ຖິ້ມລະເບີດຕາມເສັ້ນທາງ, ຕາມທາງຍ່າງ ແລະ ທຳລາຍໄຮ່ນາຈົນໝົດກ້ຽງ. ຫຼັງຈາກນັ້ນ ພວກເຮົາຈຳເປັນຕ້ອງຂຸດຂຸມ ໃຫ້ຢູ່ໄກອອກໄປອີກ ເພາະພວກເຮົາຢ້ານຫຼາຍ. ຍາມໃດທີ່ຍົນມາ ພວກ ເຮົາຢ້ານຫຼາຍຈົນບໍ່ພາກັນກິນເຂົ້າ. ຂ້ອຍສົງສານແຕ່ລູກຂອງຂ້ອຍ ເພາະ ເວລາທີ່ຍົນມາທຳລາຍທີ່ງນາ ພວກເຂົາພາກັນຢ້ານ ແລະ ຮ້ອງໄຫ້ ຂ້ອຍ ເອງກໍບໍ່ສາມາດຫຼັບຕານອນໄດ້.


ໃນປີ 1968 ພາຍໃນບ້ານແມ່ນບໍ່ມີເຮືອນຈັກຫຼັງເຫຼືອໃຫ້ເຫັນ ແມ່ນແຕ່ງົວ ຄວາຍຂ້ອຍກໍຖືກລະເບີດຕາຍໝົດ. ເມື່ອຂ້ອຍບໍ່ມີຄວາຍ ໄຖນາ ຂ້ອຍຈຳເປັນຕ້ອງຢືມນຳເພື່ອນບ້ານມາໄຖ. ແຕ່ກ່ອນຂ້ອຍເລີ່ມ ເຮັດນາໄວທຸກໆປີ. ຫຼັງຈາກຄວາຍຂ້ອຍຕາຍ ຂ້ອຍຕ້ອງລໍຖ້າຈົນກວ່າ ພີ່ນ້ອງຂ້ອຍໄຖແລ້ວ ຂ້ອຍຈຶ່ງຢືມຄວາຍເຂົາເຈົ້າມາໄຖນາຂ້ອຍ. ການ ເຮັດນາກໍເພື່ອເອົາຊີວິດລອດ ຖ້າບໍ່ເຮັດນາກໍຈະບໍ່ມີເຂົ້າໃຫ້ລູກກິນ. ການ ລີ້ໃນປ່າ ຂ້ອຍຕ້ອງຍ້າຍໄປບ່ອນນັ້ນບ່ອນນີ້ເລື້ອຍໆ ຈົນຈະບໍ່ມີບ່ອນ ໃຫ້ຂຸດຂຸມອີກແລ້ວ. ຄິດໄປມາກໍສັ້ງເວດຕົນເອງ ຈະມີຊີວິດສືບຕໍ່ໄປຮອດ ມື້ໃດ ອັນໃດອັນໜຶ່ງກໍຕ້ອງຕາຍແນ່ນອນ.

ໃນເດືອນ 1 ປີ 1969 ຍົນມາຍິງຫຼາຍ ຈົນບໍ່ສາມາດອົດທົນຕໍ່ ໄປໄດ້ ຈຶ່ງພາກັນໄປລີ້ຢູ່ໂພນສະຫວັນ ໄປຢູ່ພາຍໃຕ້ການຄຸ້ມຄອງຂອງ ຝ່າຍແນວລາວ. ພວກເຮົາບໍ່ສາມາດເຮັດນາໄດ້ຄືເກົ່າ. ພວກເຮົາຢູ່ບ່ອນ ນັ້ນປະມານເດືອນໜຶ່ງ ເມື່ອບໍ່ມີເຂົ້າກິນກໍຕ້ອງກັບມາບ້ານເດີມ ແຕ່ເມື່ອ ກັບມາຍົນກໍຍິງທັ້ງເວັນ ທັ້ງຄືນບໍ່ຂາດໄລຍະ ແລະ ພວກເຮົາກໍ່ບໍ່ສາມາດ ອອກມາຈາກຂຸມຄອງໄດ້ເລີຍ.

ສອງເດືອນຕໍ່ມາ ຝ່າຍລັດຖະບານໄດ້ເຂົ້າຕີບ້ານພວກຂ້ອຍ ເຮັດ ໃຫ້ຝ່າຍແນວລາວຕ້ອງຖອຍອອກໄປ. ໃນຕອນນັ້ນ ພີ່ນ້ອງຂ້ອຍຈຳນວນ ໜຶ່ງກໍອອກໄປກັບແນວລາວ ແລະ ຂ້ອຍກໍມາເຂົ້າຂ້າງຝ່າຍລັດຖະບານ

ແລະ ຍ້າຍມາຢູ່ລ່ອງແຈ້ງ. ຍາມໃດທີ່ຂ້ອຍຄິດເຖິງຄວາມຫຼັງ ກໍອິດທີ່ຈະຄິດຮອດບ້ານບໍ່ໄດ້. ຂ້ອຍມີຄວາມໂສກເສົ້າເສຍໃຈຫຼາຍ ທີ່ຕ້ອງມາສູນເສຍທັງເຮືອນ ໄຮ່ນາ ແລະ ງົວ ຄວາຍໄປໝົດທຸກຢ່າງ. ຖ້າຫາກຍິນບໍ່ມາຍິງ ຂ້ອຍຄົງຈະບໍ່ສູນເສຍສິ່ງມັດທັງຫຼາຍເຫຼົ່ານີ້ ແລະ ກໍຈະບໍ່ໄດ້ໜີຈາກບ້ານມາເຖິງຈະມີຄົນມາຊູ່ວ່າຈະຂ້າກໍຕາມ.

ໃນເມື່ອບໍ່ມີເຮືອນຢູ່ ບໍ່ມີງົວ ບໍ່ມີຄວາຍແລ້ວ ຂ້ອຍຈຳເປັນຕ້ອງຈາກລາບ້ານເກີດ ເພື່ອເອົາຊີວິດລອດ. ວັນໜຶ່ງ ເມື່ອໃດສົງຄາມສະຫງົບລົງ ຂ້ອຍຕ້ອງກັບຄືນໄປຫາບ້ານເກົ່າອີກ ຖ້າບໍ່ມີຍິນມາຮັບ ກໍຈະຂໍຍ່າງກັບໄປບ້ານເກີດເມືອງນອນຂອງຂ້ອຍເອງ.



ແຕ້ມໂດຍ: ນາຍຄູອາຍຸ 22 ປີ

ບ້ານຂອງພວກເຮົາຖືກຍິນຖິ້ມລະເບີດແບບສົງຫາມຄົນລົງມາໃສ່. ເຮືອນຂ້ອຍຖືກລະເບີດ ແລະ ຂ້ອຍກໍ່ເສຍໝົດທຸກສິ່ງທຸກຢ່າງຂ້ອຍຮູ້ວ່າສົງຄາມອັນຕະລາຍ ແລະ ເປັນຕາຢ້ານຫຼາຍ ແຕ່ບໍ່ສາມາດແລ່ນໜີໄດ້ໃນຕອນນັ້ນ ມີຍິນນ້ອຍບິນເວີ່ນ ແລະ ຍິງປືນລົງມາໃສ່ບ່ອນທີ່ພວກເຮົານອນຢູ່. ຂ້ອຍແລ່ນໄປຫາໝູ່ທີ່ຢູ່ໃນປ່າ ເມື່ອຍິນເຫັນມັນກໍຍິງສຸມລົງມາໃສ່ເຮືອນຂ້ອຍ.



ພາບເຫດການກຳລັງຫາມເອົາຄົນໄປສົ່ງສະການ ຊຶ່ງມີຜູ້ກຳລັງຂຸດຂຸມຝັງ ແລະ ຜູ້ເປັນເມຍຜູ້ຕາຍກຳລັງຮ້ອງໄຫ້ຢູ່. ຜູ້ຕາຍແມ່ນຖືກຍິນຍິງ.

ຄົນຕາຍຄືກັນກັບສັດ ຢູ່ໃນປ່າ

ຊາຍອາຍຸ 27 ປີ

1. ບ້ານຂອງຂ້ອຍເຄີຍມີໂນນພູ ປ່າໄມ້ ແລະ ມີເຮືອນຢູ່ໃກ້ກັບທົ່ງນາ. ແຕ່ລະຄົນແມ່ນມີທົ່ງນາມີງົວຄວາຍ ເປັນຂອງຕົນເອງ. ພວກເຮົາໃຜໆ ກໍດຳລົງຊີວິດຢ່າງມີຄວາມສຸກ ໃນຍາມນາກໍຊ່ວຍກັນເຮັດນາ ເຮັດໄຮ່. ຕໍ່ມາເມື່ອຍິນມາຖິ້ມລະເບີດໃສ່ເຮືອນ ທຸກຢ່າງກໍເສຍຫາຍໝົດ ແລະ ພວກເຮົາກໍບໍ່ມີບ່ອນຢູ່ ພວກເຮົາຢ້ານແທ້ໆ ເພາະຍິນມັນມາເກືອບທຸກມື້. ພວກເຮົາມີຊີວິດຄືກັນກັບຢູ່ໃນຄຸກ ເພາະໄປໃສມາໃສກໍບໍ່ໄດ້ ມີແຕ່ປ່ອນຫ້ອອກຈາກຂຸມເພື່ອຫາຍໃຈ.

2. ໃນແຕ່ລະວັນ ຈະມີຄົນຕາຍລຸງນຕິດໃນປ່າ ແລະ ໃນທົ່ງນາ. ໃນແຕ່ລະວັນຈະໄດ້ຍິນແຕ່ຂ່າວຄົນຕາຍ ພວກເຮົາເອົາສົບໃສ່ໂລງ ເພື່ອນຳໄປຝັງໃນປ່າ.

3. ໃນໄລຍະສາມພວກເຮົາບໍ່ສາມາດເອົາຄົນຕາຍໃສ່ໂລງໄດ້ອີກ ເພາະຈະຫາໄມ້ມາເຮັດໂລງກໍບໍ່ມີ. ພວກເຮົາມີແຕ່ພາກັນຂຸດຂຸມຕາມຕີນພູ

ແລະ ກໍ່ຝັງສົບໄວ້. ພວກເຂົາພາກັນຕາຍ ບໍ່ຕ່າງຫຍັງກັບສັດຕາຍ ເພາະ ຍິນມາຖິ້ມລະເບີດລົງໃສ່ທຸກວັນ ບໍ່ມີໃຜຈະເຮັດຫຍັງໄດ້ ເພາະທົ່ງຢ້ານ ຕາຍ ແລະ ບໍ່ມີຄວາມກ້າຫານທີ່ຈະອອກມາປະເຊີນໜ້າກັບເຫດການ ອັນຊົ່ວຮ້າຍນີ້ໄດ້. ຖ້າມີຄົນຕາຍ ກໍ່ມີແຕ່ນຳໄປຖິ້ມລົງຂຸມ ແລ້ວກໍພາກັນ ແລ່ນກັບຄືນຢ່າງໄວວາ. ບາງຄັ້ງ ເມື່ອມີຄົນຕາຍກໍຍັງບໍ່ທັນໄດ້ຝັງ ມີແຕ່ ໃສ່ຊູບ ແລ້ວກໍປະໄວ້ຕາມປ່າຕາມດົງ.



ແຕ້ມໂດຍ : ແມ່ຍິງອາຍຸ 33 ປີ

ຊີວິດມີຫວັງແຕ່ຕາຍຢ່າງດຽວ. ພາບນີ້ແມ່ນຂ້ອຍເຫັນທີ່ບ້ານ ເກີດຂອງຂ້ອຍ ທຸກວັນທຸກຄືນຍິນມາຍິງ ແລະ ຖິ້ມລະເບີດລົງໃສ່ພວກ ເຮົາບໍ່ໄດ້ຂາດ.ພວກເຮົາມີແຕ່ລີ້ຢູ່ໃນຂຸມຄອງຕະຫຼອດເວລາ ເພື່ອຮັກສາ ຊີວິດ. ພາບນີ້ຈະເຫັນລູກລະເບີດຫຼາຍຊະນິດ. ບັນດາລະເບີດທີ່ຖອກ ເທລົງມາຈາກຍົນ ຈັ່ງແມ່ນບໍ່ງາມ ແລະ ຄວາມອັນຕະລາຍຂອງມັນແມ່ນ ພິລຶກ ເພາະມັນເຮັດໃຫ້ມີການລົ້ມຕາຍຂອງຜູ້ຄົນ ແລະ ມີແຮງທຳລາຍ ລ້າງສູງ. ລະເບີດບາງຊະນິດແມ່ນແຕກອອກກາງອາກາດ ແລະ ມີຄວາມ ອັນຕະລາຍຮ້າຍແຮງຫຼາຍກວ່າຊະນິດອື່ນ. ຂ້ອຍໄດ້ເຫັນການຕາຍຂອງ



ແຕ້ມໂດຍ : ແມ່ຍິງອາຍຸ 33 ປີ

ພີ່ນ້ອງທີ່ຖືກລະເບີດຊະນິດນີ້ມາກັບຕາ. ເຫັນແລ້ວ ຫົວໃຈຂ້ອຍເກືອບຂາດຕາຍ ທັ້ງຮ້ອງ ແລະ ທັ້ງແລ່ນໄປຫາເຮືອນ. ຂ້ອຍເຫັນຊີວິດ ແລະ ການລົ້ມຕາຍຂອງຄົນຈຳນວນຫຼາຍຈາກສົງຄາມໃນເຂດຊຽງຂວາງ ຍ້ອນການຍິງທຳລາຍຈາກຍົນ. ຕອນນັ້ນ ເຮືອນແມ່ນບໍ່ຍັງເຫຼືອຈັກຫຼັງແລ້ວ ແລະ ງົວ ຄວາຍກໍຕາຍກັນເກືອບໝົດ. ເຫັນໄດ້ວ່າ ທຸກຢ່າງແມ່ນຖືກບົດໃຫ້ຮາບກ້ຽງໄປໝົດ ທີ່ເຫຼືອມີແຕ່ດິນແດງໃຫ້ເຫັນ ເມື່ອຫວນຄິດມາເຫັນສະພາບນີ້ແລ້ວ ຍັງຢ້ານຢູ່ບໍ່ເຊົາ.



ແຕ້ມໂດຍ : ຊາວນາອາຍຸ 49 ປີ

24/VII

“ ນີ້ແມ່ນເຮືອນຂອງຂ້ອຍທີ່ເຮັດດ້ວຍໄມ້ ປຸກມາໄດ້ 26 ປີແລ້ວ ແລະ ມັນຖືກຍິນທຳລາຍ...”

ຊາວນາ ອາຍຸ 49 ປີ

ห้ามจำหน่าย

1. ຂ້ອຍມີອາຍຸ 49 ປີ. ນີ້ແມ່ນເຮືອນຂອງຂ້ອຍ ທີ່ສ້າງດ້ວຍໄມ້ແກ່ນ ປຸກມາໄດ້ 26 ປີແລ້ວ. ມັນຖືກຍິນຍິງທຳລາຍ ດ້ວຍລູກລະເບີດແບບຂ້າຄົນ ເຮັດໃຫ້ໄຟໄໝ້ໝົດທຸກຢ່າງ. ຕອນນັ້ນມັນຍັງເຊົ້າຢູ່ ແລະ ຍັງບໍ່ທັນມີໂອກາດເອົາຫຍັງອອກມາຈາກເຮືອນໄດ້ເລີຍ ດັ່ງນັ້ນ ທຸກສິ່ງທຸກຢ່າງແມ່ນສູນເສຍໄປໃນວັນທີ 3 ເດືອນ ຕຸລາ 1968.

2. ສາຍນ້ຳກົດທີ່ໄຫຼຜ່ານຂ້າງເຮືອນຂ້ອຍມີຄວາມງົດງາມຫຼາຍ.

3. ທົ່ງນາຂອງຂ້ອຍແມ່ນຢູ່ປາກແມ່ນ້ຳສາຍນີ້ ຂ້ອຍມັກອອກໄປໄຖນາກັບຄວາຍແຕ່ເຊົ້າໆ ທຸກວັນ.

4. ຕອນກາງເວັນຈະມີຄົນເອົາອາຫານອອກມາສົ່ງຂ້ອຍທີ່ທົ່ງນາ

ໃນຕອນນັ້ນ ຂ້ອຍໄດ້ຍິນສຽງຍົນມາ ດັ່ງນັ້ນ ຂ້ອຍຈຶ່ງແລ່ນໜີປະຄວາຍ ແລະ ຍັງບໍ່ທັນປົດແອກໄດ້ເທື່ອ. ຂ້ອຍແລ່ນໄປລີ້ຢູ່ແຄມຄັນນາໃນຂະນະ ທີ່ຍົນລະດົມຍິງໃສ່ບ້ານ. ເມື່ອຍົນບິນກາຍຂ້າມໂນນພູໄປແລ້ວ ຂ້ອຍຈຶ່ງ ເງີຍຫົວຂຶ້ນ ພ້ອມທັງຕົກໃຈ ແລະ ເສຍໃຈຫຼາຍທີ່ເຫັນເຮືອນ ແລະ ເລົ້າເຂົ້າທີ່ປຸກລຽບໂນນພູຖືກໄຟໄໝ້. ຂ້ອຍພ້າວແລ່ນໄປຫາຂຸມລີ້ໄພ ເພາະຢ້ານວ່າ ຈະມີຄົນບາດເຈັບ. ເມື່ອຂ້ອຍແລ່ນໄປໄດ້ບໍ່ໄກປານໃດ ເຫັນວ່າ ມີລະເບີດແຕກຕາມເສັ້ນທາງ ແລະ ຫຼຽວໄປເຫັນນ້ອງສາວຂ້ອຍ ທີ່ກຳລັງເອົາອາຫານມາສົ່ງຂ້ອຍ. ຕອນຍົນຍິງ ລາວໄດ້ຖິ້ມກະຕ່າອາຫານ ເພື່ອປົບແລ່ນເຂົ້າປ່າ ແຕ່ໄປບໍ່ລອດ ລາວຖືກລະເບີດເວລາລາວແລ່ນ ຕາມທາງ ແລະ ໄດ້ຮັບບາດເຈັບໜັກ. ເມື່ອຂ້ອຍໄປຮອດລາວ ຂ້ອຍກໍບໍ່ ສາມາດພາລາວໄປໄດ້ ເພາະຍົນບິນກັບມາອີກ ເພື່ອຖິ້ມລະເບີດຮອບ ໃໝ່ ຂ້ອຍຈຳເປັນຕ້ອງລາກເອົາລາວເຂົ້າໄປໃນປ່າ ເພື່ອໄປຫາຂຸມ ແລະ ໃຫ້ຫວິດຈາກການຍິງຂອງຍົນ.

5. ນ້ອງສາວຂ້ອຍມີອາຍຸ 19 ປີ ຕອນນັ້ນລາວກຳລັງເກັບຜັກ ຈາກນັ້ນຍົນກໍມາ ແຕ່ລາວບໍ່ຮູ້ຈະແລ່ນໜີທາງໃດ ລາວຈຶ່ງຕັດສິນໃຈແລ່ນ ເຂົ້າປ່າ ແຕ່ມາຖືກລະເບີດລູກທຳອິດທີ່ຖິ້ມລົງມາ ພໍດີແຂນຂາລາວຂາດ ແລະ ບໍ່ສາມາດເຮັດວຽກງານຫຍັງໄດ້ອີກ.

6. ຂຸມຄອງນີ້ແມ່ນຂຸດຕາມພູສູງ ຊຶ່ງໄກຈາກບ້ານໄປປະມານ 300 ແມັດ. ຂຸມນີ້ມີທາງເຂົ້າສອງທາງ ແລະ ເລິກປະມານ 15 ແມັດ. ເພື່ອເຮັດໃຫ້ມັນປອດໄພຈາກຍົນຍິງ ແລະ ຈາກການຖິ້ມລະເບີດ, ພວກ ເຮົາຈຳເປັນຕ້ອງໃຊ້ເວລາຂຸດເປັນເວລາຍາວນານ ຢ່າງໜ້ອຍກໍໃຊ້ເວລາ ເດືອນເຄິ່ງ ຈຶ່ງສຳເລັດ.

7. ນີ້ແມ່ນຕູບສຳລັບຄວາຍນອນໃນຕອນກາງຄືນ.

8. ຕົ້ນໂຕ້ ແລະ ຕົ້ນໝາກກ້ຽງແມ່ນປູກໄວ້ເພື່ອກິນໝາກ.

9. ມີລະເບີດ 500 ກິໂລລູກໜຶ່ງ ຕົກມາໃສ່ໂນນພູທາງຫຼັງບ້ານ ເຮັດໃຫ້ມີຄວັນສີດຳ ພຸ່ງຂຶ້ນທ້ອງຟ້າ.

10. ມີລູກລະເບີດແບບສັ່ງຫານຄົນ ຊຶ່ງມີລູກໝາກບີມບີ້ປະມານ

300 ໜ່ວຍ ຕົກລົງມາ ເຮັດໃຫ້ສັດຈຳນວນຫຼາຍບາດເຈັບ ແລະ ລົ້ມຕາຍ.

11. ເມື່ອປ່າຖືກລະເບີດ ກຳພາໃຫ້ເກີດໄຟໄໝ້ຢູ່ເທິງຂຸມຂອງພວກເຮົາ.

12. ເມື່ອມີລະເບີດແຕກ ຄວາຍກຳພາກັນແລ່ນໜີ. ສັດບາງໂຕກຳຕາຍ ສ່ວນສັດນ້ອຍ ປະເພດ ໝູ, ໄກ່ ແລະ ເປັດກໍປົບໜີ ຈຳນວນໜຶ່ງກໍຕາຍ.

ໃນຕອນນັ້ນຂ້ອຍຄິດຮອດເຮືອນ ແລະ ຊັບສົມບັດທັງຫຼາຍທຸກຄົນພາຍໃນເຮືອນ ໃຜໆ ກໍຮ້ອງໄຫ້ ເຮັດໃຫ້ເສຍນ້ຳຕາ. ບໍ່ມີມື້ໃດທີ່ພວກເຮົາຕື່ນນອນມາແລ້ວ ຈະບໍ່ເຂົ້າໄປໃນຂຸມ. ພວກເຮົານອນໃນຂຸມທຸກໆມື້ ແລະ ໝົດມື້. ພວກເຮົາຈະຖືແຕ່ສິ່ງທີ່ພວກສາມາດຖືໄດ້ ເຂົ້າໄປໃນປ່າ. ພວກເຮົາບໍ່ມີຄວາມສຸກຈັກໜ້ອຍເລີຍ. ຄວາມຫຍຸ້ງຍາກ ແລະ ຄວາມຂາດແຄນ ເພີ່ມທະວີຂຶ້ນທຸກວັນ ສ່ວນເຂົ້າປາອາຫານກໍເກືອບຈະໝົດພາຍໃນເວລາບໍ່ຮອດປີ ຍ້ອນໄຟໄໝ້ ແລະ ລະເບີດທຳລາຍ. ຄວາມຫຍຸ້ງຍາກນີ້ ເພີ່ມທະວີຄວາມເຈັບປວດໃນໃຈຂຶ້ນມາເລື້ອຍໆ. ຈົນຮອດ 1969 ທີ່ທະຫານຂອງຝ່າຍລັດຖະບານເຂົ້າມາຢຶດເອົາເຂດນີ້ໄດ້ອີກ ດັ່ງນັ້ນ ຂ້ອຍຕ້ອງຈຳໃຈໜີມາດ້ວຍຄວາມເປັນຫ່ວງເປັນໃຍຢ່າງໜັກ. ເມື່ອມາຮອດວຽງຈັນແລ້ວ ລັດຖະບານກໍໄດ້ໃຫ້ການຊ່ວຍເຫຼືອຫຼາຍຢ່າງ ແລະ ບໍ່ມີຄວາມກົດດັນຫຼາຍປານໃດ. ແຕ່ເມື່ອໃດສົງຄາມສິ້ນສຸດລົງ ຂ້ອຍຈະກັບຄືນໄປສ້າງສາພັດທະນາບ້ານຂ້ອຍຄືນໃໝ່.

978-9932-01-067-7